ຊ່ວຍກັນເສີມສ້າງ ເອກະລາດຂອງເຮົາໃຫ້ສົມບູນ

ໂດຍ ສ. ບຸນຊ້ວຍ

ລົງທະບຽນເລກທີ 108
ວັນທີ 29 ມະກະຣາ ຄ.ສ. 1974
ທີ່ຫໍສມຸດແຫ່ງຊາດ ວຽງຈັນ.

400K

ຄຳ ນຳ

ຮຽນທ່ານຜູ້ອ່ານທີ່ເຄົາຣົບ ແລະຮັກແພງ, ວັດຖຸປະສົງໃນການຂຽນປຶ້ມຫົວນີ້ ກໍເພື່ອສເນີຂໍ້ຄິດເຫັນກ່ຽວກັບ ແນວທາງອັນທີ່ຈະນຳພາ ປະເທດຊາດຂອງເຮົາ ໄປສູ່ຄວາມເປັນເອກຣາດອັນສົມບູນ, ຄວາມໝັ້ນຄົງ ແລະວັທນາຖາວອນ. ໃນທາງສິດທິ ແລະກົດໝາຍລະຫວ່າງຊາດ, ຣາຊອານາຈັກລາວ ເປັນປະເທດເອກຣາດ ແລະມີອະທິປະໄຕຢ່າງເຕັມສ່ວນ ຊຶ່ງມີປະເທດຕ່າງໆທົ່ວໂລກຮັບຮູ້, ແຕ່ໃນທາງພາກປະຕິບັດຕົວຈິງແລ້ວ ,ລາວເຮົາຍັງບໍ່ທັນມີຄວາມເປັນເອກຣາດໃນທາງການເມືອງ ການທະຫານ, ເສຖກິດ, ການເງິນ, ວັທນະທັມ ແລະດ້ານອື່ນໆ. ຖ້າຈະເວົ້າກັນຢ່າງບໍ່ອຳອຽງ ແລະກົງໄປກົງມາ ກໍຄືວ່າພວກເຮົາຍັງຕົກຢູ່ໃນກ້ອງອຳນາດ ຂອງແອກຊນິດໃໝ່ ຊຶ່ງບັນດານັກຊາດນິຍົມ ທັງຫລາຍຮ້ອງວ່າ " ເປັນຫົວເມືອງຂຶ້ນແບບໃໝ່" ນັ້ນເອງ.

ເນື່ອງຈາກວ່າ ຣາຊອານາຈັກລາວ ເປັນປະເທດທີ່ຫາກໍໄດ້ຮັບເອກຣາດໃຫມ່, ບໍ່ສາມາດດຳຣົງຄວາມເປັນເອກຣາດ ຢ່າງສົມບູນໃນທຸກດ້ານ ໃນມື້ນຶ່ງຍາມດຽວ ຈຳເປັນຕ້ອງຍອມຢູ່ໃຕ້ແອກຊນິດໃຫມ່ນັ້ນຕໍ່ໄປ. ແຕ່ວ່າການຢູ່ໃຕ້ສອກຕ່າງດ້າວຕລອດໄປ ໂດຍບໍ່ຄິດຫາຊ່ອງທາງອອກນັ້ນ ເປັນການນຳເອົາເອກຣາດ ຂອງເຮົາເຂົ້າໄປຢູ່ໃຕ້ອຳນາດຄວາມເປັນທາດຜູ້ອື່ນ ໂດຍເຈດຕະນາແທ້ໆ. ທັງທີ່ພວກເຮົາໄດ້ຍອມ ເສັຽສລະຊີວິດຈົນເລືອດ

ຕ້ອງໄຫລນອງທົ່ວແຜ່ນດິນ ເພື່ອກອບກູ້ເອົາເອກຣາດຈາກໄທ ແລະຝຣັ່ງ ເສດມາແລ້ວ, ດ້ວຍຄວາມຍາກແລະລຳບາກ. ເຖິງວ່າຈະມີຄວາມຮູ້ສຶກໜັກໃຈໃນການຕໍ່ສູ້ ເພື່ອຫາຫົນທາງອອກຈາກ ພາວະການຢູ່ໃຕ້ສອກຜູ້ອື່ນ ດັ່ງກ່າວນີ້ຈັກພຽງໃດກໍຕາມ ເຮົາຈະຕ້ອງຖາກຖາງ ແລະບັກບັ່ນຕໍ່ໄປ ຈົນກວ່າຈະບັນລຸເປົ້າໝາຍອັນນີ້. ການທີ່ພວກເຮົາພາກັນ ຍອມຈຳນົນຕໍ່ຄວາມຫຍຸ້ງຍາກອັນນີ້ ແລະໃຊ້ເລ່ຫລ່ຽມ ຫລອກລວງປະຊາຊົນ ເພື່ອແກ້ຕົວແບບງ່າຍໆວ່າ ເຮົາເຮັດຫຍັງບໍ່ໄດ້ ຍ້ອນສຖານະການຂອງໂລກ, ຍ້ອນເສິກສົງຄາມ, ຍ້ອນບໍ່ມີງົບປະມານ ແລະຍ້ອນຖານະທາງພູມີສາດຂອງເຮົາບໍ່ອຳນວຍ ຄວາມຈິງແລ້ວ ບັນຫາເຫລົ່ານີ້ເປັນພຽງບັນຫາສາມັນອັນນຶ່ງ ທີ່ເຮັດໃຫ້ລາວຕ້ອງຕົກຢູ່ ໃນຖານະບໍ່ເທົ່າທຽມກັບບັນດາປະເທດເພື່ອນບ້ານ. ແຕ່ມັນບໍ່ເປັນສິ່ງກີດກັ້ນ ເສັ້ນທາງເດີນໄປສູ່ ຄວາມເປັນຊາດຂອງເຮົາຢ່າງຊົ້ນເຊີງ. ການທີ່ເຮົາມອບເນື້ອ ຖວາຍຕົວ ໃຫ້ຕ່າງດ້າວ ທ້າວຕ່າງແດນ ເປັນຜູ້ຄ້ຳປະກັນຄວາມຄົງຢູ່ຂອງຕົນ ດັ່ງທີ່ເປັນຢູ່ໃນທຸກວັນນີ້ ທຸກຄົນກໍຮູ້ດີຢູ່ແລ້ວວ່າ ເປັນທາງເດີນທີ່ຜິດ ແລະ ເດີນໄປສູ່ຄວາມຫລົ້ມຈົມ. ພວກເຮົາອາດອາສັຍການຊ່ວຍເຫລືອຂອງມິດປະເທດ ທີ່ຫວັງດີເພື່ອປູພື້ນຖານ ໃຫ້ເຮົາສາມາດເປັນຕົວຂອງເຮົາເອງໃນອະນາຄົດ. ການຄອງຖ້າໃຫ້ແຕ່ຜູ້ອື່ນ (ມິດປະເທດ) ຄອຍໃຫ້ການຊ່ວຍເຫລືອຕລອດໄປ ໂດຍທີ່ຕົນເອງບໍ່ຕ້ອງລຳບາກ ອອກເຫື່ອເສັຽແຮງນີ້ ມັນເປັນວິທີການທີ່ງ່າຍ ແລະສບາຍດີ ແຕ່ຈົ່ງຢ່າລືມວ່າ ຄວາມມັກງ່າຍ ແລະຄວາມມັກສບາຍອັນນີ້ແລ ເປັນຕົ້ນເຫດພາ

ໃຫ້ຄວາມເປັນຊາດ, ເອກຣາດ ແລະກຽດສັກສີຂອງເຮົາ ຕ້ອງເສື່ອມເສັຽລົງໄປ ໂດຍບໍ່ຮູ້ສຶກຕົວ.

ພວກເຮົາຮູ້ດີວ່າ ບໍ່ມີປະເທດໃດໃນໂລກ ທີ່ຈະດຳຣົງຄວາມເປັນເອກຣາດຂອງຕົນ ໄດ້ຢ່າງເຕັມທີ ເຖິງຮ້ອຍສ່ວນຮ້ອຍ ແຕ່ວ່າທຸກປະເທດແມ່ນຈະດ້ອຍພັທນາ ແລະຫລ້າຫລັງຈັກພຽງໃດ ກໍຕ້ອງພຍາຍາມ ຫາທຶນທາງເພິ່ງຕົວເອງ ຫລາຍກວ່າຜູ້ອື່ນ ຊຶ່ງພວກເຂົາຖືວ່າ ເປັນຫລັກສູດອັນສັກສິດໃນການດຳຣົງຊາດ.

ສຳລັບຣາຊອານາຈັກລາວເຮົາ ກໍສົມຄວນແລ້ວ ທີ່ຈະຕ້ອງລິເລີ່ມກໍ່ຮ່າງສ້າງຕົວ ອົດສາພຍາຍາມ ດຶງເອົາຄວາມຄົງຢູ່ຂອງຕົນ ເຂົ້າມາຢູ່ໃນສ່ວນຮັບຜິດຊອບຂອງຕົນ ໃຫ້ຫລາຍເທົ່າທີ່ຈະຫລາຍໄດ້. ເຖິງຈະພົບພໍ້ກັບອຸປສັກ ນາໆປະການ ກໍຕ້ອງຖືວ່າເປັນຂອງທັມມະດາ, ການທີ່ເຮົາຕ້ອງທໍ້ຖອຍ ແລະຍອມຈຳນົນ ຕໍ່ອຸປສັກເຫລົ່ານີ້ ແລ້ວຄອງຖ້າແຕ່ອາສັຍຜູ້ອື່ນຕລອດໄປ ກໍຄືການຂ້າຕົວຕາຍນັ້ນເອງ. ບັນດາມິດປະເທດ ທີ່ໃຫ້ການຊ່ວຍເຫລືອພວກເຮົາໃນອະດີດ ແລະປັດຈຸບັນ ກໍລ້ວນແຕ່ພົບພໍ້ກັບບັນຫາຫຍຸ້ງຍາກຊນິດດຽວກັບຂອງເຮົານີ້ແລ້ວ ແຕ່ເຂົາກໍຍັງສາມາດເອົາຕົວລອດໄດ້ ແລະສາມາດຊ່ວຍພວກເຮົາໄດ້ອີກ. ທັງໆທີ່ພວກເຂົາມີແຂນ ມີຂາ ແລະກຳລັງວັງຊາ ເທົ່າທຽມກັນກັບເຮົາ ແລະຍິ່ງຮ້າຍໄປກວ່າເຮົາ ກໍຄືວ່າພວກເຂົາບໍ່ໄດ້ລັບການຊ່ວຍເຫລືອ ຈາກບັນດາມິດປະເທດສ່ຳພວກເຮົາຊ້ຳ. ເພື່ອນຮ່ວມຊາດທີ່ຮັກແພງ ເຖິງເວລາແລ້ວ ທີ່ພວກເຮົາຕ້ອງຕື່ນຕົວລຸກຂຶ້ນ ສ້າງ

ຖານະຂອງພວກເຮົາ ໃຫ້ສົມກັບວ່າລາວ ເປັນປະເທດເອກຣາດ ແລະມີອະທິປະໄຕຢ່າງເຕັມສ່ວນ. ຊ່ວຍກັນສາບສູນ ປອມດ້ອຍຂອງພວກເຮົາໃຫ້ໝົດສິ້ນໄປ ແລ້ວສຖາປະນາ ແລະເສີມສ້າງ:

* ສັນຕິພາບແລະຄວາມຖືກຕ້ອງປອງດອງຊາດ ໃຫ້ໄວເທົ່າທີ່ຈະໄວໄດ້.
* ການສຶກສາຣຽນຮູ້ ແລະສົ່ງເສີມການສຶກສາ ຂອງເຮົາໃຫ້ກ້າວໜ້າ.
* ເສຖກິດ ແລະການເງິນຂອງເຮົາ ດ້ວຍການຜລິດ ແລະການປະຍັດຕໍ່ສິ່ງຟູມເຟືອຍ.
* ນະໂຍບາຍເພື່ອສາບສູນ ສິ່ງເຮີຣ້າຍ ແລະເໜົ້າເໜັນຢ່າງເດັດຂາດ.

ເຊື່ອວ່າ ຖ້າຫາກທຸກຄົນໃຫ້ການຮ່ວມໄມ້ຮ່ວມມື ໃນການເສີມສ້າງດັ່ງກ່າວນີ້ ດ້ວຍຄວາມບໍຣິສຸດໃຈ, ວັນນຶ່ງໃນອະນາຄົດອັນໃກ້ນີ້ ພວກເຮົາຄົງສາມາດເປັນຕົວ ຂອງເຮົາເອງໄດ້, ສາມາດປົກປັກຮັກສາຄວາມເປັນຊາດ, ເອກຣາດ, ເອກພາບ, ອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນ ຂອງເຮົາໄດ້ຕາມລຳພັງ. ໃນທີ່ສຸດຄວາມໝັ້ນຄົງ ແລະຄວາມວັທນາຖາວອນ ຂອງຣາຊອານາຈັກລາວ ກໍຈະເກີດຂຶ້ນເປັນເງົາຕາມຕົວ ຢ່າງບໍ່ຕ້ອງສົງສັຍ.

ສາຣະບານ

☆ ຄ່າຂອງຄວາມເປັນເອກຣາດ ຫນ້າ ໑–໔໔

☆ ບໍ່ມີໃຜຈະຮັກລາວ ເທົ່າກັບລາວຮັກລາວ ຫນ້າ ໔໕–໔໙

☆ ການພັທນາ ທາງດ້ານຈິດໃຈ ຫນ້າ ໕໐–໖໐

- ການອົບໂຮມທາງສາສນາ ຫນ້າ ໕໑
- ການສາທາຣະນະສຶກສາ ຫນ້າ ໕໑–໕໖
- ການປະຕິຮູບສັງຄົມ,ວັທນະທັມແລະການປົກຄອງ ຫນ້າ ໕໗ ໕໘
- ຂໍ້ສຣູບກ່ຽວກັບການພັທນາທາງດ້ານຈິດໃຈ ຫນ້າ ໕໙–໖໐

☆ ການພັທນາທາງດ້ານວັດຖຸ ຫນ້າ ໖໑–໙໕

- ດ້ານ ການ ສຶກ ສາ ຫນ້າ ໖໑–໖໙
- ດ້ານການເງິນ ແລະການຄ້າ ຫນ້າ ໖໙–໗໘
- ການຄົມມາຄົມ ແລະຂົນສົ່ງ ຫນ້າ ໗໙–໘໑
- ການສາທາຣະນະສຸກ ຫນ້າ ໘໑–໘໕
- ພື້ນຖານທາງເສຖກິດ ຫນ້າ ໘໕–໙໔
- ສຣູບຜົລການພັທນາ ທາງດ້ານວັດຖຸ ຫນ້າ ໙໔–໙໕

☆ ການສະສາງສ້ຽນຫນາມພາຍໃນປະເທດ ຫນ້າ ໙໖ –໑໐໖

☆ ການກູ້ຫນ້າປະເທດຊາດຂອງເຮົາ ຫນ້າ໑໐໗ – ໑໑໗

☆ ການສ້າງສັນຕິພາບແລະຄວາມຖືກຕ້ອງປອງດອງຊາດ ຫນ້າ໑໑໘–໑໕໑

ວັກ ໑

ຄ່າ ຂອງ ຄວາມ ເປັນ ເອກ ຣາດ

ກ່ອນຈະກ່າວເຖິງເຣື່ອງຄຸນຄ່າຂອງ ຄວາມເປັນເອກຣາດຂອງລາວໃນປັດຈຸບັນ, ເຫັນວ່າຄວນທົບທວນຢ່າງຫຍໍ້ໆເຖິງພົງສາວະດານ ແລະປະວັດສາດຂອງລາວບາງສມັຍເສັຽກ່ອນ ທັງນີ້ກໍ່ເພື່ອຈະໄດ້ໃຊ້ ເປັນແນວທາງສຳລັບປຽບທຽບ ແລະຊັ່ງຊາເບິ່ງຣະຫວ່າງຄວາມເປັນຊາດ ຂອງເຮົາໃນສມັຍກ່ອນ ແລະສມັຍປະຈຸບັນນີ້

ພົງສາວະດານລາວກ່ອນສັຕວັດທີ່ ໑໓ ໄດ້ຖືກຂຽນ ແລະແຕ່ງຂຶ້ນໂດຍ ຕ່າງປະເທດເປັນສ່ວນໃຫຍ່ (ຝຣັ່ງ, ອັງກິດ, ໄທ) ສ່ວນທີ່ລາວເຮົາເດົາກັນນັ້ນ ກໍມີເຫດຜົນ ແລະໃກ້ຄວາມຈິງຢູ່ບໍ່ນ້ອຍ, ແຕ່ເຖິງຢ່າງໃດກໍດີ ຈະແມ່ນຕ່າງປະເທດຫລື ລາວເຮົາເອງຂຽນໄວ້ ກໍລ້ວນແຕ່ເປັນປະວັດສາດ ທີ່ຂາດຫລັກຖານອັນແນ່ນອນ ພົງສາວະດານລາວທີ່ຖືກຕ້ອງ ແລະແນ່ນອນນັ້ນໄດ້ເຣີ່ມຂຶ້ນແຕ່ ຕົ້ນສັຕວັດທີ່ ໑໔ ຄືພາຍຫລັງການປະສູດຂອງ ພຣະເຈົ້າຟ້າງູ້ມມະຫາຣາດ (໑໓໑໖) ຣາຊໂອຣົດຂອງຂຸນຜີຟ້າ. ຊຶ່ງສມັຍນັ້ນ ກ່າວກັນວ່າເປັນຍຸກລິເລີ້ມ ໃນການຕໍ່ສູ້ເພື່ອກອບກູ້ເອກຣາດ, ເອກພາບ (ຄວາມເປັນອັນນຶ່ງອັນດຽວ) ແລະຜືນແຜ່ນດິນອານາຈັກລ້ານຊ້າງ, ເຈົ້າຟ້າງູ້ມເປັນພຣະມະຫາກະສັດອົງທຳອິດ ທີ່ໄດ້ໄຂຊ່ອງທາງແຫ່ງປະວັດສາດຂອງລາວ ໃນການກອບກູ້ເອົາຜືນແຜ່ນດິນ ຊຶ່ງ

ໃນສມັຍນັ້ນຍັງແຕກແຍກກະຈັດກະຈາຍຢູ່, ແນວຄວາມຄິດໃນການສ້າງຄວາມເປັນເອກຣາດ, ເອກພາບ, ແລະປ້ອງກັນ ອານາຈັກລ້ານຊ້າງຂອງພຣະອົງ ໄດ້ຂຍາຍອອກຢ່າງກວ້າງຂວາງ ຈົນພຣະອົງສາມາດຣວບຣວມເອົາຜືນແຜ່ນດິນລ້ານຊ້າງ ອັນກວ້າງໃຫຍ່ໄພສານໄວ້ ໄດ້ເຖິງ ໑໐ ເທົ່າຂອງພື້ນທີ່ຣາຊອານາຈັກລາວ ໃນປັດຈຸບັນ. ສິ່ງທີ່ພຣະອົງໄດ້ປະໄວ້ເປັນມໍຣະດົກ ແກ່ພວກເຮົາເທົ່າທຸກວັນນີ້ກໍຄື ຣາຊອານາຈັກລາວ. ພຣະບາງພຸທສາສນາ, ນະຄອນຫລວງວຽງຈັນ ເຫລົ່ານີ້ເປັນຕົ້ນ, ຊຶ່ງພວກລາວເຮົາທັງຊາດ ຈໍາຈາລຶກໄວ້ຢ່າງບໍ່ມີວັນລືມ. ພາຍຫລັງທີ່ພຣະອົງໄດ້ເຖິງສວັນນະຄົດເມື່ອ ໑໓໗໘, ຣາຊອານາຈັກລາວໄດ້ປົກຄອງ ຕໍ່ກັນມາພາຍໃຕ້ຮົ່ມໂພທິສົມພານ ຂອງກະສັດຫລາຍອົງ, ບາງພຣະອົງກໍໄດ້ສ້າງຄວາມເດືອດຮ້ອນ ແລະຄວາມເສື່ອມເສັຽມາສູ່ປະເທດຊາຕບ້ານເມືອງ ເຊັ່ນ: ພຣະນາງແກ້ວພິມພາ ໑໓໔໘ ຣາຊທິດາຂອງພຣະເຈົ້າສາມແສນໄທ ພຣະນາງໄດ້ຂຶ້ນຄອງຣາດ ດ້ວຍຄວາມໂຫດຮ້າຍທາຣຸນທີ່ສຸດ. ຍ້ອນຄວາມໂຫດຮ້າຍແລະເຫັນແກ່ຕົວຈົນເກີນໄປຂອງພຣະນາງ ຣາຊອານາຈັກລ້ານຊ້າງຈຶ່ງ ຊຸດໂຊມລົງຢ່າງໜ້າເສັຽດາຍ, ຄວາມແຕກແຍກແຂ່ງດີແຂ່ງເດັ່ນ ກໍເກີດຂຶ້ນຕິດຕາມມາ. ສາເຫດແຫ່ງຄວາມຫລົ້ມຈົມອັນສໍາຄັນ ທີ່ພຣະນາງໄດ້ກະທໍາຂຶ້ນນັ້ນກໍຄືພຣະນາງໄດ້ສັ່ງ ປະຫານກະສັດທີ່ເປັນວົງສານຸວົງ ຂອງພຣະນາງເອງເຖິງ ໑໐ ກວ່າພຣະອົງ ເພື່ອຍາດແຍ່ງຣາຊບັນລັງ, ພຣະນາງຍອມກະທໍາທຸກຢ່າງແມ່ນຈະທາຣຸນໂຫດຮ້າຍພຽງໃດ ເພື່ອຕົວຂອງພຣະນາງເອງ.

ໃນຣາຊການຂອງພຣະນາງລາວທັງຊາດ ຖືວ່າເປັນເປິງແຫ່ງຄວາມອຸບບາດ, ຄວາມອາຄາດບາດໝາງ, ຄວາມໂລບໂກດ—ຫລົງ ແລະມືນເມົາຈົນລືມ ປະເທດຊາດ ລືມບ່າວໄພ. ໃນທີ່ສຸດການຄອງຣາຊບັນລັງ ຂອງພຣະນາງກໍ ຢູ່ບໍ່ໄດ້ດົນ, (ທຳດີໄດ້ດີທຳຊົ່ວໄດ້ຊົ່ວ) ກັມສນອງກັມກໍປາກດເກີດເປັນຜົດ ຕາມຕົວພຣະນາງ ຢ່າງຫລີກບໍ່ພົ້ນ, ຜົນທີ່ນາງໄດ້ຮັບ ຈາກຄວາມໂຫດຮ້າຍ ປ່າເຖື່ອນກໍກັບເກີດ ໃສ່ຕົວຂອງນາງເອງ (ຄືບ່າວໄພ່ໄດ້ສັງຫານຕົວຂອງ ພຣະນາງ ເພື່ອລ້າງແຄ້ນແລະຕັດຕົ້ນຕໍແຫ່ງຄວາມໂຫດຮ້າຍທາຣຸນ ເມື່ອ ໑໘໔໐) ສິ່ງທີ່ພຣະນາງປະໄວ້ກໍຄື ຄວາມຫລົ້ມຈົມຂອງຊາດ. ກອງທັບແກວ ເຂົ້າມາບຸກລຸກລ້ານຊ້າງ, ເມືອງພວນ, ເມືອງຊົວ, ຫລວງພຣະບາງ ຖືກ ຍຶດຄອງກວ່າຈະແກ້ໄຂ ເຫດການອັນໜ້າເສົ້າໃຈ ອັນນີ້ຄືນໄດ້ ກໍຕ້ອງໃຊ້ ເວລາເກືອບ ໑ ສັຕວັທ (ປະມານສິບກວ່າຣາຊການປົກຄອງ) ຈົນມາເຖິງ ອົງພຣະເຈົ້າໄຊເສດຖາທິຣາດ ມະຫາຣາດ.

ໃນຣາຊການຂອງ ພຣະເຈົ້າໄຊເສດຖາທິຣາດ ເຖິງຈະມີເສິກສົງຄາມ ຕໍ່ເນື່ອງ ແຕ່ກະສັດອົງນີ້ກໍສາມາດສ້າງ ຄູນງາມຄວາມດີໃຫ້ແກ່ປະເທດຊາດ ໄດ້ ແລະ ສ້າງວິຣະກັມອັນທີ່ຕາຍບໍ່ເປັນ ໃຫ້ອານຸຊົນຣຸ່ນຫລັງເທີດທູນໄວ້.

ໃນຣາຊການນີ້ ພະມ້າໄດ້ລຸກລາມ ອານາຈັກລ້ານຊ້າງເຖິງ ໓ ຄັ້ງ ເພື່ອມຸ້ງຫວັງຍຶດຄອງ ເອົາອານາຈັກລ້ານຊ້າງ, ແຕ່ເດຊະບູນ ຊາຕາກັມຂອງ ລ້ານຊ້າງຍັງບໍ່ເຖິງທີ່ສຸດ, ຍ້ອນຄວາມອົງອາດກ້າຫານ, ຄວາມສລຽວສລາດ, ຄວາມຮັກຊາດຂອງພຣະອົງ ໆ ຈຶ່ງສາມາດເອົາຊັຍຊະນະພະມ້າໄດ້ ທັງສອງ

ດັ້ງຢ່າງງົດງາມ. ສິ່ງທີ່ພຣະອົງໄດ້ປະໄວ້ເປັນມູນມໍຣະດົກ ແລະເປັນທີ່ສັກຣະບູຊາ ແກ່ລາວທັງຊາດໃນປັດຈຸບັນກໍດີ, ພຣະທາດຫລວງວຽງຈັນ, ພຣະຣາຊວັງນະຄອນຫລວງພຣະບາງ, ຫໍພຣະແກ້ວທີ່ວຽງຈັນ ແລະວັດວາອາຣາມອີກຫລາຍແຫ່ງ, ພຣະອົງເປັນກະສັດຜູ້ຊົງມີສັດທາເລື້ອມໃສອັນແຮງກ້າຕໍ່ ພະພຸທສາສນາ.

ຕໍ່ມາໃນຕອນປາຍຂອງຣາຊການ ພະມ້າໄດ້ບຸກລຸກອີກເປັນຄັ້ງທີສາມ ໑໕໗໔, ສົງຄາມກັບພະມ້າຄັ້ງນີ້ ເປັນຄັ້ງທີ່ລ້ານຊ້າງໄດ້ເສັຽຊັຍ ໃຫ້ແກ່ພະມ້າ ແລະຕົກເປັນເມືອງຂຶ້ນຂອງພະມ້າ ໃນຊົ່ວຣະຍະນຶ່ງ. ທັງນີ້ກໍຍ້ອນຂາດຄວາມສາມັກຄີປອງດອງພາຍໃນຊາດ, ຍ້ອນຂາດຄວາມມານະອົດທົນ ແລະຂາດການຕັ້ງສະຕິຣະວັງຕົວ. ການທີ່ລ້ານຊ້າງເສັຽຊັຍແກ່ພະມ້າເທື່ອນີ້ ເຮົາພໍຈະເດົາໄດ້ວ່າ ໃນຕອນຕົ້ນແຫ່ງຣາຊການ ຂອງອົງໄຊເສດຖາທິຣາດ ພຣະອົງໄດ້ອົດສາບາກບັ່ນ ແລະຂຍັນຕໍ່ຣາຊການບົກຄອງ, ການທະຫານ ແລະການເມືອງ ຣາຊອານາຈັກ ຈຶ່ງມີແຕ່ຄວາມຮຸ່ງເຮືອງ ອຸດົມສົມບູນໄປເກືອບທຸກໆດ້ານ, ເມື່ອຄວາມຈະເຣີນໄດ້ຖີບຕົວຂຶ້ນສູງແລ້ວ ກໍ່ເລີ້ມຊຸດໂຊມລົງເທື່ອລະເລັກລະນ້ອຍ ໃນທີ່ສຸດກໍສລາຍຕົວ.

ລັກສນະອັນນີ້ເປັນພຍາດຮ້າຍຊນິດນຶ່ງ ທີ່ຕິດແປດຖ່າຍທອດ ມາຮອດເທົ້າທຸກວັນນີ້. ຊຶ່ງປັດຈຸບັນນີ້ກຳລັງງອກງາມຢູ່ທົ່ວທຸກແຫ່ງ ໃນຣາຊອານາຈັກລາວ. ທີ່ກ່າວນີ້ບໍ່ໄດ້ໝາຍໃສ່ຮ້າຍປ້າຍສີ ແລະເບິ່ງໝູ່ໄປໃນແງ່ຮ້າຍ ຄວາມຈິງແລ້ວນິສັຍຂອງພວກເຮົາກໍເປັນດັ່ງວ່ານີ້ແທ້ໆ ຫລັກຖານກໍຄືວ່າ ເຮົາເຄີຍ

ເຫັນຄົນລາວ ປະກອບອາຊີບຄ້າຂາຍດ້ວຍການຕັ້ງຮ້ານ ຫລືບໍຣິສັດຕ່າງໆ ຫລືເປັນຫົວໜ້າການ ໃນອົງຣາຊການຕ່າງໆ ເມື່ອເລີ້ມຕົ້ນທຳອິດກິຈການຄ້າຂາຍ ຫລືການງານສະດວກດີທຸກຢ່າງ ຕໍ່ມາພໍເມື່ອພົບກັບການ ຫລຸບທຶນແດ່ເລັກນ້ອຍ ຫລືພົບກັບຄວາມບໍ່ສຳເຣັດ ທັນໃຈກໍເກີດລັ້ງເລໃຈ, ເບື່ອງານງ່າຍ, ລົດລະໃນຄວາມພາກພຽນພຍາຍາມ. ປ່ອຍປະໜ້າທີ່ການໃນທີ່ສຸດກໍລົ້ມເລີກຄວາມຕັ້ງໃຈ ຕໍ່ມາຈະມີຫຍັງເກີດຂຶ້ນ ແນ່ນອນການລົ້ມລະລາຍກໍເກີດຂຶ້ນແທນທີ່. ນີ້ເປັນພຽງຕົວຢ່າງອັນນຶ່ງທີ່ຜູ້ຂຽນຍົກຂຶ້ນມາກ່າວໃນທີ່ນີ້ເພື່ອໃຫ້ພວກເຮົາສຳນຶກເຖິງຄວາມບົກພ່ອງຂອງຕົນ ຈະໄດ້ຊອກຫາຊ່ອງທາງແກ້ໄຂ ແລະປ່ຽນແປງໃຫ້ດີຂຶ້ນ. ເທົ່າທີ່ສັງເກດມາ ຕາມອົງການຈະເປັນທະຫານ, ຂ້າຣາຊການ ຫລືຕຳຣວດ ຫລືກິຈການຄ້າຂາຍ ຫລືໄຮ່ນາ ມີຈຳນວນນ້ອຍທີ່ສຸດ ທີ່ສາມາດດຳເນີນກິຈການຂອງຕົນ ໃຫ້ກ້າວໜ້າຈະເຣີມຂຶ້ນໄປເລື້ອຍໆ ຢ່າງສເມີຕົ້ນສເມີປາຍ. ໂດຍມາກມີແຕ່ຖອຍຫລັງໃນທີ່ສຸດກໍຈົບລົງດ້ວຍຄຳວ່າ ບໍ່ເກີດຜົນ ແລະລົ້ມເລີກໄປ. "ຄວາມບົກພ່ອງຂອງເຮົາອີກອັນນຶ່ງກໍຄືຄວາມບໍ່ຮູ້ຂໍ້ບົກພ່ອງຂອງຕົນ ຫລືການປະຕິເສດບໍ່ຍອມຮັບຮູ້ຄວາມຜິດຂອງຕົນ, ທຸກຄົນມັກຖິ້ມຄວາມຜິດ ແລະຕ້ອງຕິຜູ້ອື່ນເລື້ອຍໆໄປ ສິ່ງດຽວທີ່ເຂົາອາຈຍອມຮັບວ່າ ເປັນຂອງເຂົາກໍຄືວ່າ "ຂາດກຳລັງໃຈ" ການທີ່ຈະເຮັດໃຫ້ເກີດກຳລັງໃຈ ຫລືຂາດກຳລັງໃຈນີ້ກໍລ້ວນແຕ່ເຮົາເອງເປັນຜູ້ສ້າງຂຶ້ນ ການງານຈະຍາກຫລືງ່າຍ, ຈະໜັກຫລືເບົາກໍລ້ວນແຕ່ແມ່ນຈິດສຳນຶກຂຶ້ນເອງ. ຜູ້ທີ່ມີກຳລັງໃຈດີອາດນຶກວ່າການທຳມາ

ເປັນອຽກທີ່ງ່າຍ ແລະຜູ້ຂາດກຳລັງໃຈກໍອາດຄິດວ່າ ການຕົ້ມເຂົ້າກິນເປັນອຽກທີ່ຍາກ. ເພາະສະນັ້ນການຈະສ້າງກຳລັງໃຈກໍມີແຕ່ພຽງໃຫ້ປ່ຽນຈິດສຳນຶກແລ້ວຢຶດໝັ້ນຢ່າງເດັດດ່ຽວເພື່ອ, ປ່ຽນແປງຄວາມກຽດຄ້ານມັກງ່າຍ ມາເປັນຄວາມດຸໝັ່ນພາກພຽນ ປ່ຽນຄວາມອ່ອນແອມາເປັນຄວາມເຂັ້ມແຂງ, ປ່ຽນກຳລັງໃຈທີ່ລັ້ງເລ ມາຢຶດໝັ້ນຢູ່ໃນອຸດົມການອັນເດັດດ່ຽວ ຢ່າງສເມີຕົ້ນສເມີປາຍ. ພາຍຫລັງການຄອງຣາຊບັນລັງ ຂອງພຣະເຈົ້າໄຊເສດຖາທິຣາດ ໄດ້ຈົບລົງດ້ວຍການເສັຽຊັຍແກ່ພະມ້າ, ລ້ານຊ້າງຕົກເປັນຫົວເມືອງຂຶ້ນຂອງພະມ້າ ບ້ານເມືອງໄດ້ຖືກແບ່ງແຍກອອກເປັນຫລາຍອານາຈັກ, ຄວາມແຕກແຍກລະຫວ່າງລາວຕໍ່ລາວ, ລະຫວ່າງອານາຈັກຕໍ່ອານາຈັກກໍເລີ້ມປາກົດຕົວຄືນມາໃໝ່ອີກ. ຕ່າງຄົນຕ່າງເຂົ້າສົມຮູ້ຮ່ວມຄິດກັບ ຕ່າງດ້າວທ້າວຕ່າງແດນ ມາປະຣັບປະຫານລາວກັນເອງ ຈົນຕົກມາເຖິງ ໑໗໑໑–໑໘ ເຫດຮ້າຍອັນໜ້າເສົ້າສລົດໃຈ ກໍຍິ່ງທະວີຄວາມຮ້າຍແຮງຂຶ້ນ, ກິ່ງກິດສະຣາດຣາຊໂອຣົດຂອງ ເຈົ້າສຸຣິຍະວົງສາ ກໍແຍກຣາຊອານາຈັກຫລວງພຣະບາງອອກແລ້ວ ຄອງຣາຊບັນລັງໄປຕາມລຳພັງຂອງຕົນ.

ສ່ວນໄຊອົງເວ້ຫລານຊາຍຂອງ ສຸຣິຍະວົງສາກໍແຍກຣາຊອານາຈັກລ້ານຊ້າງ ຊິ່ງຣາຊບັນລັງຕັ້ງຢູ່ນະຄອນວຽງຈັນ ແລະເຈົ້າສ້ອຍສີສມຸດ ອ້າຍໄຊອົງເວ້ກໍແຍກນະຄອນຈຳປາສັກອອກ ແລ້ວຄອງຣາຊບັນລັງ ຕາມລຳພັງຂອງຕົນອີກຕໍ່ນຶ່ງ. ຄວາມແຕກແຍກຂອງລາວ ໃນຄາວນີ້ເປັນປວັດສາດທີ່ເຣວຮ້າຍທີ່ສຸດໃນພົງສາວະດານລາວ. ຊາຕາກັມຂອງລາວເກືອບຈະຕົກໄປຢ່າງບິ່ນໆ, ຕ່າງ

ຄົນຕ່າງບໍ່ລົງລອຍເຂົ້າຫາກັນກົງກັນຂ້າມ ຕ່າງອານາຈັກກໍ່ຕ່າງຄົບກັບຊົນຕ່າງດ້າວ ເພື່ອຂໍການສນັບສນູນຕົນໃນການປະຫັບປະຫານ ລາວດ້ວຍກັນ. ອານາຈັກວຽງຈັນຫັນໄປຄົບ ແລະຂຶ້ນກັບປະເທດອານາມ (ວຽດນາມ)ອານາຫລວງພຣະບາງຂຶ້ນກັບປະເທດໄທແລະອານາຈັກຈຳປາສັກຂຶ້ນກັບຂເມນ (ແລະອີກສ່ວນນຶ່ງຂຶ້ນກັບໄທ).ການປົກຄອງແບບສາມອານາຈັກແຕກແຍກກັນ ໄດ້ຕົກທອດມາຈົນເຖິງນຶ່ງສັຕວັດ. ການຢູ່ຮ່ວມກັນດ້ວຍການຂ້າຟັນລັນແທງ,ການອິດສາຣິດສຍາ, ການອາຄາດບາດໝາງຊິງດີຊິງເດັ່ນຕລອດມານັ້ນຍິ່ງເຮັດໃຫ້ທັງສາມອານາຈັກ ຕົກເປັນຫົວເມືອງຂຶ້ນຂອງຕ່າງດ້າວ ຢ່າງບໍ່ມີທາງພົ້ນຕົວ. ທັ້ງໆທີ່ຕົກເປັນຫົວເມືອງຂຶ້ນຂອງຕ່າງດ້າວຢູ່ແລ້ວ ແທນທີ່ຈະຫາທາງອອກດ້ວຍການສ້າງຄວາມປອງດອງຊາດ ແລ້ວສາມັກຄີກັນກູ້ຊາດ ປົດແອກອອກຈາກຄໍ ຊ້ຳພັດພາກັນສົງຫານກັນເອງ .ລາວທັງສາມອານາຈັກ ເບິ່ງກັນເປັນສັຕຣູໄປໝົດ, ເຫັນຄົນຕ່າງດ້າວທ້າວຕ່າງແດນ ດີໄປກ່ວາຄົນລາວດ້ວຍກັນ.

ຄວາມແຕກແຍກລະຫວ່າງສາມອານາຈັກ ໄດ້ຄອບງຳອານາຈັກລ້ານຊ້າງເກົ່າຕລອດມາ ຈົນເຖິງປີ ໑໘໘໔ ຊຶ່ງ ເປັນສມັຍພວກພັ້ງຂາວກຳລັງຊອກລ້າເມືອງຂຶ້ນ, ເປັນເວລາທີ່ຝຣັ່ງເສດກຳລັງເກີດຂໍ້ວິວາດກ່ຽວກັບຊາຍແດນຣະຫວ່າງອິນດູຈີນກັບໄທ, ໄທຊຶ່ງບໍ່ທັນເຄື່ອນແຂງເທົ່າຝຣັ່ງເສດ ກໍຍິນຍອມມອບຫົວເມືອງຂຶ້ນຂອງຕົນ (ປະເທດລາວໃນປັດຈຸບັນ) ບາງສ່ວນໃຫ້ເປັນເມືອງຂຶ້ນຂອງຝຣັ່ງເສດ ຊຶ່ງໃນຂນະນັ້ນສະເດັດເຈົ້າອຸ່ນຄຳ ເປັນເຈົ້າຊີວິດຫລວງພຣະບາງ (ສ່ວນຣາຊອານາຈັກວຽງຈັນນັ້ນໄດ້ຍຸບເລີກແລ້ວ ພາຍ

ຫລັງການເສັຽຊັຍຂອງເຈົ້າອານຸ) ແລະສະເດັດເຈົ້າຄຳສຸກ ຄອງນະຄອນຈຳປາສັກ. ນັບແຕ່ ໑໘໙໓ ຝຣັ່ງເສດກໍເຂົ້າຄອບຄອງຝັ່ງຊ້າຍ ຂອງແມ່ນ້ຳຂອງແລະລາວເຮົາກໍປ່ຽນມືມາ ເປັນຫົວເມືອງຂຶ້ນຂອງຝຣັ່ງເສດອີກຕໍ່ນຶ່ງ (ຣວມທັງວຽດນາມແລະຂເມນດ້ວຍ). ສົງຄາມໂລກຄັ້ງທີ ໒ ໄດ້ສິ້ນສຸດລົງໃນປີ ໑໙໔໕ ລາວເຮົາຈຶ່ງເກີດມີ ຂະບວນການກູ້ຊາດ ທີ່ໄດ້ຊື່ວ່າລາວອິສຣະລຸກຂຶ້ນຈັບອາວຸດເພື່ອກູ້ເອກຣາດ ການຕໍ່ສູ້ຂອງລາວອິສຣະບາງຕອນກໍໄດ້ລັບຊັຍຊນະມາຢ່າງໜ້າສັຣເສີນ ບາງຕອນກໍຖືກເສັຽຊັຍແກ່ຝຣັ່ງເສດຊຶ່ງກໍເປັນຂອງທັມມະດາສຳລັບກຳລັງລາວອິສຣະ ທີ່ຫາກໍ່ຕັ້ງຕົວຂຶ້ນໃໝ່. ຈົນໃນທີ່ສຸດຝຣັ່ງເສດ ກໍຍອມມອບເອກຣາດໃຫ້ແກ່ລາວໃນປີ ໑໙໔໙ ແຕ່ຍັງຢູ່ພາຍໃຕ້ສຫະພັນ ຂອງປະເທດຝຣັ່ງເສດຢູ່ (**Union** ***F*****rançaise**) ເປັນທີ່ຊາບກັນດີຢູ່ແລ້ວວ່າໃນເວລານັ້ນ ລາວເຮົາຍັງພົວພັນຢູ່ກັບເສີກສົງຄາມປົດປ່ອຍອິນດູຈີນ ອອກຈາກການປົກຄອງຂອງຝຣັ່ງເສດ. ພາຍຫລັງທີ່ຝຣັ່ງເສດໄດ້ເສັຽສົງຄາມ ທີ່ດຽນບຽນຟູປີ ໑໙໕໔ ໃນເດືອນທັນວາ ຝຣັ່ງເສດຈຶ່ງຍິນຍອມສົ່ງອິນດູຈີນທັງໝົດ ໃຫ້ເປັນເອກຣາດຢ່າງສົມບູນ ຊຶ່ງລາວເຮົາກໍມີສ່ວນໄດ້ຄວາມເປັນເອກຣາດ ສົມບູນເມື່ອວັນທີ ໑໙–໗–໑໙໕໔ ຕາມສັນຍາເຊີແນວດັ່ງດຽວກັນກັບ ວຽດນາມທີ່ຖືກແບ່ງອອກເປັນ ໒ ຣັດ ແລະຂເມນ. ເຖິງຢ່າງໃດກໍດີ, ພາຍໃຕ້ການປົກຄອງຂອງຝຣັ່ງເສດແຕ່ຕົ້ນສັຕວັດທີ ໒໐ ມາເຖິງ ໑໙໕໔ ນີ້ ສິ່ງທີ່ຝຣັ່ງເສດໄດ້ກະທຳ ເພື່ອຄວາມຄົງຢູ່ຂອງລາວກໍຄື ລາວໄດ້ພົ້ນຈາກການຄອບຄອງຂອງໄທເມື່ອ ໑໘໙໓ ແລະເມື່ອ ໑໙໔໖. ດັ່ງນີ້:

໑. ຝຣັ່ງເສດໄດ້ຕົກລົງໃຫ້ລາວເຮົາປົກຄອງກັນເອງ ໂດຍຢູ່ພາຍໃຕ້ການອາຣັກຂາຂອງຝຣັ່ງເສດ (*Sous protectorat*)

໒. ເອກພາບ ຍ້ອນການຍອມເສັຽສລະ ຂອງສະເດັດເຈົ້າບຸນອຸ້ມ ມອບນະຄອນຈຳປາສັກໃຫ້ຂຶ້ນເປັນອານາຈັກອັນນຶ່ງອັນດຽວ ໂດຍແມ່ນພຣະເຈົ້າສີສວ່າງວົງ ເປັນເຈົ້າຊີວິດແຕ່ອົງດຽວ.

໓. ຝຣັ່ງເສດໄດ້ສ້າງເງື່ອນໄຂແກ່ໄທ ໃຫ້ສົ່ງແດນດິນຝັ່ງຂວາຂອງແມ່ນ້ຳຂອງທີ່ໄທເອົາໄປເມື່ອ ໑໙໔໑ ຄືນໃຫ້ແກ່ລາວ ນັ້ນຄື ແຂວງໄຊຍະບູຣີ ແລະຈຳປາສັກໃນປັດຈຸບັນນີ້.

ບັດນີ້ເຮົາຄົງຊາບດີບໍ່ຫລາຍກໍ່ນ້ອຍວ່າ ເອກຣາດທີ່ຕົກຢູ່ໃນກຳມືຂອງພວກເຮົາໃນປັດຈຸບັນນີ້ ພວກເຮົາໄດ້ມາດ້ວຍວິທີໃດ? ຈາກໃຜ? ແລະມີຄຸນຄ່ານ້ອຍຫລາຍພຽງໃດ, ມັນສົມແລ້ວທີ່ພວກເຮົາຕ້ອງປົກປັກຮັກສາ ແລະທະນຸຖນອມເອົາໄວ້ດ້ວຍພລັງກາຍແລະໃຈທຸກສ່ວນ. ແຕ່ເປັນໜ້າເສັຽດາຍທີ່ສຸດເທົ່າເຖິງປັດຈຸບັນນີ້ ເອກຣາດທີ່ພວກເຮົາໄດ້ມາດ້ວຍຄວາມຍາກລຳບາກ ບໍ່ໄດ້ຖືກບຳຣຸງແລະບຸຣະນະໃຫ້ສົມບູນຂຶ້ນຢ່າງເຕັມທີ່. ທັງນີ້ອາດຈະເນື່ອງມາຈາກວ່າພວກເຮົາບໍ່ຮູ້ຄຸນຄ່າຂອງຄວາມເປັນເອກຣາດ ແລະຂາດຄວາມຮູ້ສຶກ ໃນຄວາມເປັນຊາດຂອງຕົນ, ດັ່ງທີ່ຈະໄດ້ອະທິບາຍຕໍ່ລົງໄປນີ້: ເອກຣາດແມ່ນຫຍັງ? ເອກຣາດກໍ່ຄືຄວາມເປັນເອກ, ບໍ່ໄດ້ເປັນທາດຫລືຫົວເມືອງຂຶ້ນຂອງຜູ້ໃດ; ການເມືອງ, ການທະຫານ, ວັທນະທັມ ເສຖກິດ ແລະສັງຄົມຖືກ

ຄອບຄູມ ແລະຮັບຜິດຊອບດ້ວຍຕົນໃນຊາດເອງ. ປະເທດນຶ່ງທີ່ເປັນເອກຣາດກໍຄື ປະເທດທີ່ເປັນຕົວຂອງຕົວເອງໄດ້, ສາມາດຢືນຕົວຢູ່ໄດ້ໃນການປົກປັກຮັກສາຊາດ, ກຽດແລະພື້ນແຜ່ນດິນຂອງຕົນ ຕາມລຳພັງ.

ເອກຣາດເປັນຂອງສັກສິດ ຂອງຈົນຊາດຕ່າງໆໃນໂລກ, ເປັນຂອງທີ່ມີຣາຄາສູງເຫລືອທີ່ຈະພັນລະນາ, ຄຸນຄ່າແລະຣາຄາຂອງມັນບໍ່ມີຂອບເຂດ ເປັນສົມບັດອັນລ້ຳຄ່າລະດັບ ທີສອງຂອງຊາດ ຖັດລົງມາຈາກ "ຊາດແລະພື້ນແຜ່ນດິນ". ຄຳວ່າເອກຣາດໝາຍເຖິງ ຄວາມສາມາດ, ກຽດແລະສັກສີ, ຄວາມແຂງເກັ່ງ ແລະຄວາມສາມາດເປັນຕົວຂອງໂຕເອງໄດ້ ໂດຍບໍ່ຕ້ອງອາສັຍການຊ່ວຍເຫລືອຂອງຜູ້ອື່ນ. ເປັນຫຍັງຈຶ່ງວ່າເອກຣາດມີຄ່າ ຢູ່ໃນລະດັບສອງ ຖັດມາຈາກຊາດແລະພື້ນແຜ່ນດິນ, ເພາະວ່າຊາດແລະພື້ນແຜ່ນດິນນັ້ນຄືອະວັຍະວະທຸກສ່ວນໃນຮ່າງກາຍ ທີ່ຊ່ວຍໃຫ້ເຮົາມີຊີວິດຢູ່ໄດ້. ສ່ວນເອກຣາດຂອງຊາດນັ້ນປຽບເໝືອນ ຄວາມສາມາດຂອງແຕ່ລະບຸກຄົນ ໃນການດຳຣົງຊີວິດຂອງຕົນ, ບຸກຄົນໃດສາມາດເປັນຕົວຂອງຕົວເອງໄດ້ ໃນການລ້ຽງຊີພແລະຄອບຄົວຕາມລຳພັງ, ມີອຸດົມຄະຕິເປັນຂອງຕົນເອງ, ແລະອາສັຍຕົວເອງເປັນທີ່ເພິ່ງຂອງຕົນເອງ ກໍນັບວ່າບຸກຄົນຜູ້ນັ້ນມີກຽດແລະສັກສີ ສາມາດອອກເອກອອກໂທນໄປຕັ້ງ ເປັນຄອບຄົວຢູ່ໄດ້ຕາມລຳພັງຂອງຕົນຢ່າງສະງ່າຜ່າເຜີຍ, ເຂົາຈະເຮັດຫຍັງທຳຫຍັງໄດ້ ຕາມຄວາມປະສົງຂອງເຂົາ, ເຂົາມີແນວທາງດຳຣົງຊີວິດເປັນຂອງຕົນເອງ, ມີສວັນວິມານເປັນຂອງເຂົາເອງ, ບຸຄົນຜູ້ນີ້ເຮົາໃຫ້ຊື່ ວ່າເປັນຄົນທີ່ສົມບູນແລ້ວ ດັ່ງກັບປະເທດນຶ່ງ ທີ່ເປັນ

ເອກຣາດສົມບູນ. ກົງກັນຂ້າມກັບບຸກຄົນໃດ ທີ່ຂາດຄວາມສາມາດໃນການດຳຣົງຊີວິດຂອງຕົນ, ຄອຍແຕ່ອາສັຍຄົນອື່ນໃຫ້ການຊ່ວຍເຫລືອ, ທັງທີ່ຕົນເອງກໍມີແຂນມີຂາແລະອະວັຍະວະຢ່າງຄົບຖ້ວນເໝືອນກັບຄົນອື່ນ ແຕ່ບໍ່ໄດ້ໃຊ້ມັນໃຫ້ເປັນປໂຍດແກ່ຕົນ ແລະມັກນອນເຕັງພລັງດັ່ງກ່າວຖິ້ມໄວ້ ໂດຍບໍ່ໄດ້ປໂຍດຫຍັງເລີຍ. ການຊ່ວຍເຫລືອທຸກສ່ວນທີ່ມາຈາກພາຍນອກ (ຄົນອື່ນ) ສຳຫລັບມາບຳຣຸງຊີວິດ ແລະຮ່າງກາຍຂອງບຸກຄົນໆນີ້ ຈະສ້າງເງື່ອນໄຂແລະຂໍຜູກມັດແກ່ເຂົາ ຢ່າງບໍ່ຕ້ອງສົງສັຍ, ຈະເປັນເຊືອກຜູກຄໍ ແລະເປັນປໍມັດສອກຂອງເຂົາໄວ້ ບໍ່ໃຫ້ມີອິສຣະພາບເລີຍ, ຈະເຮັດຫຍັງທຳຫຍັງກໍຕ້ອງຖ້າຄຳບັງການ ທີ່ມາຈາກພາຍນອກ (ໂດຍມາກແມ່ນຜູ້ໃຫ້ການຊ່ວຍເຫລືອ), ບຸກຄົນປະເພດນີ້ມັກຈະເປັນເຄື່ອງຈັກ ຫລືເຄື່ອງມືໃຫ້ແກ່ຜູ້ອື່ນຢູ່ເລື້ອຍໆ ພລັງສ່ວນຕ່າງໆພາຍໃນຮ່າງກາຍ (ຄວາມຄິດແລະເຫື່ອແຮງ) ຖືກຄົນອື່ນນຳເອົາໄປໃຊ້ ເປັນຜົນປໂຍດແກ່ເຂົາໝົດ. ບຸກຄົນຜູ້ນີ້ຈະກາຍເປັນທາດຂອງຜູ້ອື່ນ ໂດຍບໍ່ຮູ້ສຶກຕົວ ດັ່ງດຽວກັບປະເທດທີ່ເປັນຫົວເມືອງຂຶ້ນ ຂອງປະເທດອື່ນ.

ດັ່ງນີ້ເຮົາຈຶ່ງພໍສຣຸບໄດ້ວ່າ "ຊາດແລະພືນແຜ່ນດິນ" ເໝືອນກັບຊີວິດຂອງພວກເຮົາ, ສ່ວນເອກຣາດນັ້ນເໝືອນກຽດ, ສັກສີ ແລະຄວາມແຂງແກ້ງຂອງພວກເຮົາ, ເພາະສນັ້ນຊາດແລະເອກຣາດຈຶ່ງເປັນສິ່ງສັກສິດທີ່ພວກເຮົາທຸກຄົນຕ້ອງ ປ້ອງກັນດ້ວຍເລືອດແລະຊີວິດ. ຄົນໃດທີ່ບໍ່ມີເຊື້ອຊາດແລະພືນແຜ່ນດິນກໍຄືກັບຄົນຕາຍ, ເພາະຊາດທີ່ຕາຍກໍຄືຊາດ ທີ່ຖືກຊາດອື່ນ

ຕອນນີ້ ໂດຍການເປີດສາກບຸກອິສຣາແອນໃນປີ ໑໙໔໘,–໑໙໖໗ ແລະ ຕຸລາ ໑໙໗໓ ສົງຄາມແຕ່ລະຄັ້ງອິສຣາແອນ ເປັນຜູ້ໄດ້ຊັຍຊນະເລື້ອຍມາ ທັງນີ້ກໍ່ຍ້ອນຄວາມເປັນອັນນຶ່ງອັນດຽວ, ຄວາມສາມັກຄີຂອງຊາວຢິວທີ່ຕ້ອງການເປັນ ເຊື້ອຊາດທີ່ມີພື້ນແຜ່ນດິນ ແລະເອກຣາດເປັນຂອງຕົນເອງ ຊຶ່ງພວກເຮົາຄວນຈະຖືເປັນຕົວຢ່າງອັນດີ ໃນການຕໍ່ສູ້ເພື່ອຄວາມເປັນຊາດ. ຕົວຢ່າງໃນການຕໍ່ສູ້ເພື່ອຄວາມເປັນຊາດອີກອັນນຶ່ງ ທີ່ຄວນຕິດຕາມເບິ່ງໄກ້ຊິດຊຶ່ງອຸບັດຂຶ້ນໃນປັດຈຸບັນນີ້ກໍ່ຄື ການຕໍ່ສູ້ຂອງຊາວປາແລສຕິນ ນີ້ກໍ່ດັ່ງດຽວກັບຊາວຢິວກ່ອນ ໑໙໔໘, ຊາວປາແລສຕິນ (ຊາວອາຣາບທີ່ເຄີຍໄດ້ອາສັຍຢູ່ໃນດິນແດນປາແລສຕິນ) ຖືວ່າດິນແດນຕອນນີ້ ເປັນສົມບັດຂອງຕົນມາແຕ່ຄາວດຶກດຳບັນ ຊຶ່ງປັດຈຸບັນນີ້ເປັນດິນແດນຂອງອິສຣາແອນ ແລະບາງສ່ວນຂອງຈອກດານີ. ໂດຍການນຳຂອງ ຢາສເຊີອາຣາຟາຕ (*Yasser Arafat*) ຊາວປາແລສຕິນໄດ້ພາກັນຈັດຕັ້ງ ອົງການປົດປ່ອຍປາແລສຕິນຂຶ້ນ (*O.L. P. Organisation de Liberation de la Palestine*) ຕັ້ງແຕ່ປີ ໑໙໖໔ ເປັນຕົ້ນມາ ການເຄື່ອນໄຫວໃນການປົດປ່ອຍປາແລສຕິນດັ່ງກ່າວນີ້ໄດ້ຂຍາຍອອກໄປເລື້ອຍໆ ມີການຕັ້ງຖານຣົບແບບກອງໂຈນ ຢູ່ຕາມກຸ່ມປະເທດອາຣາບ ທີ່ໃຫ້ການສນັບສນູນຕົນ. ນອກຈາກນັ້ນກອງໂຈນດັ່ງກ່າວຍັງໄດ້ ແຜ່ຜາຍອອກຢູ່ທົ່ວໂລກ ໂດຍສະເພາະໃນເອີຣົບ ແລະອະເມຣິກາ, ການຕໍ່ສູ້ຂອງອົງການນີ້ໄດ້ປະຕິບັດໄປສອງແບບພ້ອມກັນ ທັງພາຍໃນແລະພາຍນອກດ້ວຍວິທີ ຫລອນໂຈມຕີແບບກອມມັງໂດ ໃສ່ເປົ້າໝາຍ

ສຳຄັນທາງຍຸທສາດຂອງອິສຣາແອນ ແລະທຳການເຄື່ອນໄຫວເພື່ອປຸກປັ້ນຊາວປາແລສຕິນ ໃຫ້ລຸກຂຶ້ນຕໍ່ສູ້ເພື່ອກອບກູ້ຜືນແຜ່ນດິນຂອງຕົນ.

ສ່ວນການຕໍ່ສູ້ທາງພາຍນອກນັ້ນ ໄດ້ເຮັດດ້ວຍວິທີຈາຣະກັມ, ລັກພາຕົວ ຈີ້ບັງຄັບ ບຸກໂຈມຕີສຖານທູດ ແລະບ້ອນທຳລາຍດ້ວຍວິທີການອື່ນ ໆ (ຈົດໝາຍຣະເບີດ, ສັງຫານໂຫດຂອງກອງໂຈນກັນຍາດຳ). ເປົ້າໝາຍຂອງເຫຼົ່າກອງໂຈນພວກນີ້ ໄດ້ແນໃສ່ພວກອິສຣາແອນເປັນສ່ວນໃຫຍ່ ແລະປະເທດທີ່ສນັບສນູນອິສຣາແອນ.

ການຕໍ່ສູ້ດ້ວຍວິທີການທັງສອງຢ່າງທີ່ກ່າວມານີ້ ບໍ່ໄດ້ໝາຍຈະສ້າງກຳລັງອັນມະຫາສານ ເປີດສາກບຸກໂຈມຕີອິສຣາແອນ ຫລືຊອກດານິ ເພື່ອຍຶດເນື້ອທີ່ດ້ວຍກຳລັງ ແຕ່ເປັນການຕໍ່ສູ້ທາງການເມືອງຫລາຍກວ່າ, ກ່າວຄືເພື່ອປະທ້ວງສິດທິຂອງຕົນ ໃນດິນແດນປາແລສຕິນ ທັງນີ້ກໍເພື່ອໃຫ້ໂລກ (ສຫະປະຊາຊາດ) ເຫັນອົກເຫັນໃຈແລ້ວຊ່ວຍແກ້ໄຂຊອກຫາ ຖິ່ນຖານລຳເນົາຂອງເຂົາເຈົ້າ. ຈະຢ່າງໃດກໍດີ ການຕໍ່ສູ້ເພື່ອຄວາມເປັນຊາດ ຂອງຊາວປາແລສຕິນໃນປັດຈຸບັນ ແລະອະນາຄົດຈະບັນລຸຜົນຫລືບໍ່ນັ້ນ ບໍ່ມີໃຜສາມາດເດົາໄດ້, ມີແຕ່ອັນແລະເວລາເທົ່ານັ້ນທີ່ຈະຕັດສິນຊີ້ຂາດ ໃນໂຊກຊາຕາຂອງເຂົາ ຈຶ່ງຂໍໃຫ້ທ່ານຜູ້ອ່ານຄອຍຕິດຕາມ ເບິ່ງບົດຕໍ່ສູ້ສາກນີ້ຕໍ່ໄປ.

ທີ່ກ່າວເປັນຕົວຢ່າງ ປະຫວັດຫຍໍ້ໃນການຕໍ່ສູ້ເພື່ອກູ້ຄວາມເປັນຊາດຂອງຊາວອິສຣາແອນ ແລະປາແລສຕິນ ນີ້ກໍເພື່ອຊີ້ໃຫ້ເຫັນວ່າ ຄຸນຄ່າຂອງຄວາມເປັນຊາດ ແລະເອກຣາດນັ້ນມີນ້ອຍຫລາຍພຽງໃດ ແລະບໍ່ມີ

ປະເທດໃດໃນໂລກທີ່ໄດ້ຄວາມເປັນຊາດ ແລະເອກຣາດຂອງຕົນໂດຍບໍ່ເສັຽ ເລືອດເນື້ອແລະຊີວິດ.

ນອກຈາກຕົວຢ່າງທັງສອງທີ່ໄດ້ກ່າວມາແລ້ວນັ້ນ ຍັງມີອີກຫລາຍໆ ປະເທດທີ່ໄດ້ເຄີຍຕໍ່ສູ້ເພື່ອຄວາມເປັນຊາດຫລືເອກຣາດຂອງຕົນມາແລ້ວ ຢ່າງໂຊກໂຊນ ເຊັ່ນປະເທດທີ່ໄດ້ເອກຣາດຈາກ ອັງກິດ ສຫະຣັດອາເມຣິກາ ໑໗໗໖, ປະເທດອຽກລັງ ໑໙໒໑, ອິນເດັຽ ໑໙໔໗ ແລະ ອື່ນໆອີກຫລາຍປະເທດ ຈາກຝຣັ່ງເສດ ມີວຽດນາມ ຂະເມນ ໑໙໕໔ ມາຣົກແລະຕູນີຊີ ໑໙໕໖ ອານເຊຣີ ໑໙໖໒ ແລະປະເທດອື່ນໆອີກ ຊຶ່ງເຮົາບໍ່ສາມາດຈະຍົກປະວັດການຕໍ່ສູ້ຂອງປະເທດເຫລົ່ານີ້ ມາບັລະຍາຍໃນທີ່ນີ້ຈົນລະອຽດ ແລະພວກເຮົາບໍ່ມີຈຸດປະສົງຢາກໃຫ້ທ່ານຜູ້ອ່ານ ໄດ້ຮຽນຮູ້ເຖິງປະວັດການຕໍ່ສູ້ເພື່ອຄວາມເປັນຊາດແລະເອກຣາດ ຂອງທຸກໆປະເທດໃນໂລກ. ຄວາມຕ້ອງການຂອງໜັງສືສບັບນີ້ ກໍເພື່ອຊັກຊວນໃຫ້ລາວທຸກໆຄົນເກີດຄວາມສົນໃຈ ແລະມີສັດທາເຫລື້ອມໃສຕໍ່ຄວາມເປັນຊາດ ແລະເອກຣາດທີ່ຕົນມັ່ງເຕັງຢູ່ທຸກວັນນີ້. ພວກເຮົາເຄີຍໄດ້ຕົກເປັນຫົວເມືອງຂຶ້ນຂອງຕ່າງດ້າວມາແລ້ວ ດ້ວຍຄວາມເຈັບແສບ ນ້ຳຕາແຫ່ງຄວາມເປັນທາດທີ່ໄຫລນອງດ້ວຍຄວາມຄຽດແຄ້ນ ຍັງບໍ່ທັນເຫັງຊຶ່ງລາວທຸກຄົນຄົງຈຳໄດ້ດີວ່າ ໃນຊົ່ວຣະຍະທີ່ພວກເຮົາຕົກເປັນຫົວເມືອງຂຶ້ນ ຂອງຕ່າງດ້າວຢູ່ນັ້ນບ້ານເມືອງບໍ່ໄດ້ຖືກບູຣະນະສ້ອມແຊມ, ຄວາມກ້າວໜ້າແລະຄວາມສີວິໄລຖືກຢຸດນິ່ງ. ກົງກັນຂ້າມມີແຕ່ການທຳລ້າຍມ້າງເພ ແລະຂົນຂວາຍເອົາສິ່ງສັກກາ

ລະບູຊາ ແລະຊັບສົມບັດອັນມີຄ່າຂອງພວກເຮົາ ໄປເປັນຂອງເຂົາຈົນບໍ່ຍັງເຫລືອຫຍັງໝົດ. ປະຊາຊົນຖືກກົດຂີ່ຂົ່ມເຫັງແລະເສັຽສ່ວຍໃຫ້ພວກເຂົາຢ່າງຫູດັບຕັບໄຫມ້ ຄົນລາວສ່ວນຫລາຍຄົງຈະປະສົບ ແລະຈົດຈຳຄວາມເຈັບແສບເຫລົ່ານີ້ບໍ່ຫລາຍກໍນ້ອຍ. ຍ້ອນການຕໍ່ສູ້ທີ່ເຕັມໄປດ້ວຍຄວາມຮັກຊາດຂອງປະຊາຊົນອິນດູຈີນ ຊຶ່ງລາວເຮົາກໍມີສ່ວນແບ່ງຢູ່ດ້ວຍນັ້ນ ເອກຣາດແລະອະທິປະໄຕຈຶ່ງໄດ້ຕົກທອດມາຢູ່ໃນກຳມືຂອງພວກເຮົາ ເຖິງເວລາແລ້ວທີ່ພວກເຮົາຕ້ອງຕື່ນຕົວ ປະຖິ້ມຊຶ່ງຄວາມເຫັນແກ່ຕົວ ແລ້ວຫັນໜ້າມາຈັບມືກັນສ້າງເອກຣາດ ຂອງລາວເຮົາໃຫ້ສົມບູນ ທັງນີ້ກໍເພາະວ່າເອກຣາດທີ່ພວກເຮົານອນເຕັງຢູ່ນີ້ບໍ່ໄດ້ຖືກປັບປຸງ ແລະບູລະນະໃຫ້ສົມບູນ ສົມກັບຖານະອັນຄວນ ພວກເຮົາຈຶ່ງມາຮ່ວມແນວຄິດກັນວ່າ ເຮັດຢ່າງໃດປະຊາຊົນລາວເຮົາ ສ່ວນໃຫຍ່ຈຶ່ງຈະມອງເຫັນວ່າ ຊາດແລະເອກຣາດຂອງຕົນເປັນ ຂອງທີ່ມີຄ່າສູງແລະຫາໄດ້ຍາກ ຖ້າຈະເວົ້າຕາມຄວາມຈິງແລ້ວເຫັນວ່າແມ່ນແຕ່ຣັຖບານກໍບໍ່ເຄີຍໄດ້ໃຫ້ຄວາມສຳຄັນ ແກ່ເອກຣາດຂອງຕົນເລີຍ ປະຈັກພຍານທີ່ເຮົາກ້າຍືນຢັນກ່ຽວກັບເຣື່ອງນີ້ໄດ້ກໍຄື ບຸນວັນຊາດທົ່ວໂລກເຂົາໄດ້ຖືເອົາວັນປົດປ່ອຍ ເພື່ອປົດແອກ ວັນປະຕິວັດ ເພື່ອປະຕິຣູບການປົກຄອງ ແລະວັນທີ່ເຂົາໄດ້ເອກຣາດຂອງເຂົາ ເປັນບຸນວັນຊາດຊຶ່ງຈະຖືກສເລີມສລອງຂຶ້ນ ຢ່າງສງ່າຜ່າເຜີຍ ແລະຖືເປັນງານອັນຍິ່ງໃຫຍ່ແລະສຳຄັນກວ່າງານໃດໆທັງສິ້ນ. ແຕ່ມັນເປັນໜ້າເສັຽດາຍ ແລະເສົ້າໃຈທີ່ສຸດ ທີ່ລາວເຮົາເມີນເສີຍຈົນເກືອບລືມວັນທີ ໑໙ ກໍຣະກະດາ (໑໙ *Juillet*)

ຊຶ່ງເປັນອັນແຫ່ງການປົດແອກຈາກຄໍ, ເປັນອັນລິເລີ້ມແຫ່ງຄວາມເປັນຊາດ ແລະເປັນຕົວຂອງຕົວເອງ.

ໃຜໆກໍ່ຄົງຊາບດີຢູ່ແລ້ວວ່າ ພວກເຮົາຖືກເຊີດໜ້າຊູຕາ ຫລືໄດ້ຮັບກຽດຈາກຊາວຕ່າງປະເທດ ໃນຂນະທີ່ເຮົາໄປຢ້ຽມຢາມເຂົາ ຫລືເຂົາມາຢ້ຽມຢາມເຮົາ ກໍຍ້ອມວ່າລາວເປັນປະເທດເອກຣາດ ແລະຖືວ່າມີກຽດອັນສູງ ມີເສຣີພາບເທົ່າທຽມກັນກັບປະເທດຂອງເຂົາ. ເຮົາລອງທວນຄຶດຄືນຫລັງໄປຫາສມັຍ ເປັນຫົວເມືອງຂຶ້ນຂອງຝຣັ່ງເບິ່ງດູ ເຮົາຄົງເຫັນໄດ້ຊັດວ່າກຽດແລະຊື່ສຽງທີ່ພວກເຮົາກຳລັງສະອອນຢູ່ໃນຂນະນີ້ ບໍ່ໄດ້ຖືກຍົກຂຶ້ນຢູ່ໃນຣະດັບສູງດັ່ງທີ່ເຮົາໄດ້ຮັບພາຍຫລັງເອກຣາດເລີຍ. ເຮົາເມີຍເສີຍຕໍ່ອັນນີ້ (ບໍ່ໃຫ້ຄວາມສຳຄັນ) ກໍເທົ່າກັບເຮົາທໍຣະຍົດຕໍ່ສິ່ງທີ່ກຳລັງຍ້ອມຕົວເຮົາໃຫ້ເປັນຄ່າ ເປັນເພັດນັ້ນເອງ, ສິ່ງນັ້ນກໍຄືເອກຣາດຂອງລາວ. ປະຊາຊົນສາມັນທີ່ໄຮ້ການສຶກສາຂອງເຮົາຍັງບໍ່ທັນມີຄວາມຮູ້ສຶກ ໃນເຣື່ອງຄວາມເປັນຊາດ ແລະເອກຣາດຂອງຕົນ ໜ້າທີ່ຂອງຜູ້ທີ່ຕື່ນຕົວແລ້ວກໍຄືເຮັດໃຫ້ເຂົາເຈົ້າເຫລົ່ານັ້ນ ຮູ້ເຖິງການແຕກຕ່າງຣະຫວ່າງການເປັນຫົວເມືອງຂຶ້ນ ກັບການເປັນເອກຣາດ ແລະຝຶກແອບໃຫ້ທຸກຄົນພາຍໃນຊາດ ໝັກແໜ້ນໃນຄວາມເປັນເອກຣາດຂອງຕົນ. ຊ້ຳບໍ່ພໍບາງຄົນຍັງຢາກກັບໄປນິຍົມ ຢູ່ໃຕ້ສອກແຫ່ງຄວາມເປັນທາດຊາດອື່ນຢູ່, ຫລືເປັນຫົວເມືອງຂຶ້ນຂອງຜູ້ອື່ນ, ເຖິງຢ່າງໃດກໍດີ ທ່ານເຫລົ່ານັ້ນອາດມີເຫດຜົນຢູ່ຄືກັນ ເພາະວ່າສມັຍຝຣັ່ງປົກຄອງພວກເຮົາ ບໍ່ສູ້ຈະເຫັນການສ້ຣາດບັງຫລວງ ງອກງາມເທົ່າຢ່າງກັບລາວປົກຄອງ

ລາວເອງ ເພາະຝຣັ່ງປ້ອງກັນເຣື້ອງນີ້ໄດ້ດີ, ອີກຢ່າງນຶ່ງສມັຍຝຣັ່ງປົກຄອງລາວບໍ່ເຄີຍໄດ້ຊື້ເຂົ້າປາອາຫານ ຈາກຝັ່ງໄທມາບໍຣິໂພກ, ນີ້ອາດຈະເປັນເຫດຜົນແງ່ນຶ່ງ ຂອງນັກນິຍົມເປັນຫົວເມືອງຂຶ້ນເທົ່ານັ້ນ, ແຕ່ມັນເປັນການກົງກັນຂ້າມ ກັບເຈຕະນາຂອງຜູ້ນິຍົມເສຣີພາບ ປະຊາທິປະໄຕ ແລະຂອງຜູ້ມັກຄວາມເປັນຊາດ ຕາມສມັຍສາກົນນິຍົມ ເຣື່ອງນີ້ເຮົາພໍຈະສຣູບໄດ້ວ່າ ຈະເປັນວັນທີ ໑໑ ພຶສພາ ຫລື ໘໙ ມີນາ ກໍ່ຕາມເອກຣາດຕ້ອງເປັນແມ່ກຳເນີດ ແຫ່ງຣັຖທັມມູນ ແລະກອງທັບແຫ່ງຊາດ ຖ້າບໍ່ມີເອກຣາດສິ່ງເຫລົ່ານີ້ກໍ່ຕົກໄປເອງ ແລ້ວເປັນຫຍັງຈຶ່ງບໍ່ໃຫ້ຄວາມສຳຄັນ ແກ່ເອກຣາດກ່ອນສິ່ງອື່ນ.

ເປັນຫຍັງຄົນລາວສ່ວນນີ້ ຈຶ່ງບໍ່ເຫລື້ອມໃສໃນຄວາມເປັນຊາດ ແລະເອກຣາດຂອງຕົນ ຄຳຕອບງ່າຍໆກໍ່ຄື: ສາຍເຫດຕົວທີ່ນຶ່ງ ບົກພ່ອງໃນດ້ານການສຶກສາ ເດັກນ້ອຍເກີດມາຂາດການອົບໂຮມ ສັ່ງສອນຈາກພໍ່ແມ່ແລະຄູ, ຢູ່ຕາມໂຮງຮຽນບໍ່ມີການອົບໂຮມ ດ້ານພົລະເມືອງດີຢ່າງເອົາຈິງເອົາຈັງ, ຂາດການໃຫ້ກຽດແກ່ພາສາ ແລະປະເພນີ. ພໍ່ແມ່ແລະຄູໃນທຸກຂັ້ນການສຶກສາ ຂາດການເປັນຕົວຢ່າງ ແລະບໍ່ມີຄູ່ມື ໃນການອົບໂຮມດ້ານພົລເມືອງດີ ຊຶ່ງກະຊວງສຶກສາທິການຄວນທີ່ຈະບົ່ງໃຫ້. ການອົບໂຮມໃນເຣື່ອງນີ້ ຄວນຈະພັກໄປໃນການໃຫ້ຕົວຢ່າງອັນດີ ຈາກພໍ່ແມ່ແລະຄູເພື່ອຝຶກແອບເດັກນ້ອຍໃຫ້ຮູ້ຈັກເຊື້ອຊາດ, ພື້ນແຜ່ນດິນຂອງຕົນ, ການສ້າງຄວາມສາມັກຄີຣະຫວ່າງ ເດັກນ້ອຍດ້ວຍກັນ ການຢູ່ຮ່ວມກັນໃນສັງຄົມ ຕລອດ

ເຖິງການທະນຸຮັກສາ ເຄື່ອງຂອງຕ່າງໆທີ່ເປັນສົມບັດຂອງຊາດ.

ສາຍເຫດຕົວທີສອງກໍຄື ຂາດການປັບປຸງສັງຄົມ ແລະການປົກຄອງ ຕໍ່ໜ້າສພາບການປັດຈຸບັນນີ້ ຖ້າບໍ່ມີການປັບປຸງວົງສັງຄົມ ແລະການປົກຄອງ ແລ້ວ ເຮົາຈະບໍ່ສາມາດສ້າງຄວາມສາມັກຄີພາຍໃນຊາດໄດ້. ວິທີການທີ່ຈະ ກ່າວຕໍ່ລົງໄປນີ້ ເປັນເຣື່ອງເກົ່າແກ່ເປັນເຣື່ອງທີ່ທຸກຄົນຮູ້ດີ ແຕ່ບໍ່ນຳມາປະຕິບັດນັ້ນກໍຄືຈັດໃຫ້ຄົນໃນຊາດຮູ້ຈັກ ຢູ່ຮ່ວມກັນໂດຍປາສຈາກຄວາມອິດສາຣິສຍາ, ກ່າວຄືໃຫ້ທຸກຄົນນັບຖືສິດທິຊຶ່ງກັນແລະກັນ, ກຳຈັດການເອົາປຽບເອົາລັດຊຶ່ງກັນແລະກັນ, ຜູ້ຮັ່ງມີຫລືຜູ້ມີອຳນາດບໍ່ໃຫ້ໃຊ້ອຳນາດ ບຽດບຽນຜູ້ທຸກຈົນ. ບັງຄັບໃຫ້ຊົນທຸກຊັ້ນຮູ້ຈັກ ຢູ່ຮ່ວມກັນໂດຍປາສຈາກການຂູດຣີດ, ການດູຖູກຢຽບຢ່ຳກັນ. ຕ່າງຄົນຕ່າງຮູ້ຈັກໃຫ້ກຽດກັນ, ຝຶກແອບໃຫ້ທຸກຄົນຮູ້ຈັກສິດເສຣີພາບ ຂອງຕົນແລະຂອງຜູ້ອື່ນ. ທີ່ກ່າວມານີ້ເປັນການກະທຳເພື່ອບໍ່ໃຫ້ຄົນໃນຊາດເກີດຄວາມເບື່ອໜ່າຍ ເຈົ້າໜ້າທີ່ຝ່າຍປົກຄອງ, ເກີດຄວາມບໍ່ພໍອົກພໍໃຈຕໍ່ສັງຄົມ ໃນທີ່ສຸດກໍເກີດຄວາມຄັຽດຊັງ ແລະໝາຍລ້າງຜານກັນ ອັນເປັນຕົ້ນສນວນລາມໄປເຖິງ ສົງຄາມກາງເມືອງ ແລະຄວາມຫລົ້ມຈົມຂອງຊາດ. ເທົ່າທີ່ໄດ້ກ່າວມານີ້ເຮົາບໍ່ໄດ້ໝາຍຄວາມວ່າ ຣັຖບານບໍ່ໄດ້ທຳສິ່ງໃດເລີຍກ່ຽວກັບ ການປັບປຸງການສຶກສາ, ສັງຄົມແລະການປົກຄອງ. ພວກເຮົາຄວນຮັບຮູ້ສິ່ງທີ່ຣັຖບານໄດ້ປັບປຸງມາແລ້ວ ແລະ ກຳລັງປັບປຸງຢູ່ໃນຂນະນີ້, ແຕ່ການກະທຳດັ່ງກ່າວນີ້ ຂາດຄວາມເດັດຂາດ ແລະເຮັດແທ້ທຳຈິງ, ຂາດຄວາມຄວບຄຸມດູແລຢ່າງໃກ້ຊິດ, ຈຶ່ງເປັນເຫດ

ໃຫ້ການແກ້ໄຂ ໃນດ້ານນີ້ໄດ້ຮັບຄວາມຜິດເຄືອງ ແລະບໍ່ໄປບໍ່ມາ, ຕ່າງຄົນຕ່າງອ້າງກັນວ່າຂາດນັ້ນຂາດນີ້ແລ້ວຖິ້ມຄວາມຜິດຕ່າງໆນາໆໃສ່ກັນ ແລະກັນ ເພາະເປັນວິທີການທີ່ງ່າຍສຳລັບແກ້ຕົວ. ຖ້າພວກເຮົາຂືນປ່ອຍປະຄວາມເຫມົ່າເຫມັນອັນນີ້ໄວ້, ມັນຈະມີອັນໃດເກີດຂຶ້ນ ແນ່ນອນປະວັດສາດອັນບໍ່ເພິ່ງປາຖນາກໍຈະເກີດ ມາຊ້ຳຮອຍອີກຢ່າງບໍ່ຕ້ອງສົງສັຍ ຄວາມຜິດພາດອັນເລັກໆນ້ອຍໆເຫລົ່ານີ້ ກໍອາດກ້າວເຂົ້າໄປເຖິງຄວາມຫາຍະນະຂອງພວກເຮົາໄດ້ດ້ວຍກັນທັງນັ້ນ. ຊາດແລະພົນແຜ່ນດິນທີ່ເຮົາອາສັຍຢູ່ທຸກວັນນີ້ ຈະຢືນຢູ່ໄດ້ກໍຕ້ອງ ອາໃສພົນງານທີ່ລອບຄອບຖີ່ຖ້ວນ ອັນເລັກນ້ອຍເຫລົ່ານີ້ ເຂົ້າປະກອບເປັນສ່ວນສຳຄັນ ແລະຢ່າລືມວ່າຕົ້ນໄມ້ ໑.໐໐໐ ປີທີ່ອະເມຣິກາສາມາດຕ້ານຢັນຕໍ່ລົມພາຍຸ, ແຜ່ນດິນໄຫວແລະໄພທັມຊາດຕ່າງໆມາໄດ້ດົນກວ່າ ໑໐ ສັຕວັດກໍຍັງດັບສິ້ນລົງ ດ້ວຍແມງມອດຕົວນ້ອຍໆ.

ນີ້ກໍສແດງໃຫ້ເຫັນແລ້ວວ່າ ເຮົາບໍ່ຄວນ ຈະປະມາດຫລືທ້າທາຍຕໍ່ຄວາມຜິດເລັກນ້ອຍ ຊຶ່ງອາດກໍຕົວຂຶ້ນເປັນແປວໄຟລາມໂລກ. ເຊັນດຽວກັບທີ່ພວກເຮົາກຳລັງເມີນເສີຍ ແລະບໍ່ເອົາຫົວຊາຕໍ່ ຄວາມຜິດພາດຕ່າງ ໆ ທີ່ເປັນເຣື່ອງເລັກນ້ອຍໃນວົງການເມືອງ ແລະ ສັງຄົມຢູ່ໃນຂນະນີ້ ຊຶ່ງອາດສາມາດນຳພາປະເທດຊາດບ້ານເມືອງຂອງເຮົາ ໄປສູ່ຄວາມເປັນທາດແບບໃຫມ່ອີກ ດັ່ງນີ້ຈຶ່ງສຣູບໄດ້ວ່າ ເອກຣາດທີ່ພວກເຮົານອນເຕັ່ງຢູ່ໃນປັດຈຸບັນນີ້ ກຳລັງຕົກຢູ່ໃນຂັ້ນຈະສລາຍຕົວ ດັ່ງກັບກ້ອນນ້ຳແຂງທີ່ກຳລັງເປື່ອຍອອກ ທີລະເລັກທີລະນ້ອຍ ໂດຍບໍ່ມີໃຜຮູ້ສຶກຕົວ ທັງນີ້ກະ

ຍ້ອນວ່າ ພວກເຮົາບໍ່ໄດ້ສ້າງຄວາມອູ່ມເຢັນພຽງພໍ ສຳລັບຄຸ່ມຄອງມັນໃຫ້ແຂງແກ່ນແລະແໜ້ນໜາ ນອກຈາກທີ່ພວກເຮົາປະປ່ອຍເອກຣາດ ໃຫ້ເປັນໄປຕາມບຸນຕາມກັມແລ້ວ ສິ່ງທີ່ຮ້າຍໄປກວ່ານັ້ນກໍຄືວ່າ ຍັງມີຜູ້ສ້າງຄວາມເດືອດຮ້ອນໃຫ້ເອກຣາດຂອງເຮົາເປື່ອຍລະລາຍໂດຍເຈຕນາ

ດັ່ງທີ່ໄດ້ກ່າວມາແລ້ວຢ່າງຍືດຍາວວ່າ ເອກຣາດຂອງເຮົາເປັນຂອງທີ່ແພງ ແລະຫາມາໄດ້ຍາກ, ເພາະສນັ້ນລາວທຸກຄົນຄວນອຸທິດພລັງທຸກສ່ວນ ເພື່ອຫວງແຫນຖນຸຖນອມ ແລະປ້ອງກັນເອກຣາດຂອງເຮົາໄວ້ບໍ່ໃຫ້ສລ່າຍໄປດັ່ງທີ່ເຄີຍເປັນມາແລ້ວ.

ວັກ ໒

ບໍ່ມີໃຜຈະຮັກລາວເທົ່າກັບລາວຮັກລາວ

ດັ່ງທີ່ໄດ້ກ່າວມາແລ້ວໃນວັກຕົ້ນ, ຣາຊອານາຈັກລາວເຮົາ ໄດ້ຕົກເປັນຫົວເມືອງຂຶ້ນຂອງຕ່າງດ້າວ ຕໍ່ເນື່ອງກັນມາສອງສມັຍຕິດຕໍ່ກັນ ຄືເປັນຫົວເມືອງຂຶ້ນຂອງໄທ ໃນສມັຍທີ່ລາວແຕກແຍກອອກເປັນສາມອານາຈັກ ແລະເປັນຫົວເມືອງຂຶ້ນຂອງຝຣັ່ງເສດໃນປີ ໑໘໙໓–໑໙໕໓ ໃນຊົ່ວຣະຍະເວລາທີ່ຕົກເປັນຫົວເມືອງຂຶ້ນຢູ່ນັ້ນ, ປະເທດທີ່ເປັນນາຍບໍ່ໄດ້ທຳສິ່ງໃດເລີຍທີ່ເປັນການກໍ່ສ້າງພື້ນຖານອັນຖາວອນ (*INFRASTRUCTURE*) ແກ່ພວກເຮົາ, ມີແຕ່ການຂົນຂວາຍເອົາສົມບັດ ແລະຊັບໃນດິນສິນໃນນ້ຳຂອງພວກເຮົາ ໄປສ້າງບ້ານແປງເມືອງຂອງພວກເຂົາ. ນະໂຍບາຍຂອງໄທຕໍ່ລ້ານຊ້າງຄາວນັ້ນກໍຄື ທຳລາຍລ້ານຊ້າງໃນທຸກໆດ້ານ (ເສຖກິດ, ການເມືອງ ວັທນະທັມ, ຄວາມຈເຣີນຮຸ່ງເຮືອງແລະອື່ນໆ) ເພື່ອບໍ່ໃຫ້ລ້ານຊ້າງມີກຳລັງເຂື່ອນແຂງ ແລະແຂ່ງຄໍ່ຕໍ່ຕົນ ສ່ວນທີ່ເຈັບແສບທີ່ສຸດກໍຄືເມື່ອ ປີ ໑໗໗໘ ໃນຣາຊການຂອງອົງບູນ ຣາຊໂອຣົດຂອງອົງເວ້. ພວກສຍາມໄດ້ບຸກທຸກຣາຊອານາຈັກວຽງຈັນ ຍຶດຄອງນະຄອນຫລວງ, ພຣະແກ້ວ ແລະພຣະບາງມິ່ງຂວັນຂອງລາວ ໃນສມັຍນັ້ນຖືກສຍາມຍຶດເອົາແລ້ວ ສົ່ງໄປ

24/VII

ມ້ຽນໄວ້ທີ່ບາງກອກ, ພວກທະຫານໄທໄດ້ປຸ້ນຣະດົມເອົາສົມບັດ ອັນມີຄ່າຈາກປະຊາຊົນ, ຈາກທາດ, ວັດວາອາຣາມ ແລະຈາກໂບຣານສະຖານຕ່າງໆ ຈົນວຽງຈັນກາຍເປັນເມືອງຮ້າງ. ພວກສັຕຣູຜູ້ລຸກລາມໄດ້ຕັ້ງກອງບັນຊາການ ໃສ່ກັບຕົວພຣະຣາຊວັງ ແລະຈັບພຣະວົງສານຸວົງ ຂອງອົງບູນໄວ້ທັງໝົດ. ສ່ວນຕົວອົງບູນເອງ ໄດ້ເອົາຕົວຫລົບໜີລອດໄປຢ່າງຫວຸດຫວິດ.

ນອກຈາກນີ້ແລ້ວຍັງມີອີກສມັຍນຶ່ງ ຊຶ່ງເປັນບັ້ນທ້າຍຂອງຣາຊການເຈົ້າອະນຸ, ພາຍຫລັງທີ່ພຣະອົງໄດ້ເສັຽເສິກ ເພື່ອກູ້ເອກຣາຊຈາກໄທ ເມື່ອປີ ໑໘໒໘ ພວກສຍາມໄດ້ໄລ່ຕິດຕາມກຳລັງທັບ ຂອງພຣະອົງຈົນເຖິງນະຄອນຫລວງວຽງຈັນ. ການເຜົາຜານແລະປຸ້ນຣະດົມນະຄອນວຽງຈັນຂອງເຮົາດ້ວຍນ້ຳມືຂອງທະຫານໄທເທື່ອນີ້ ຍິ່ງຮ້າຍແຮງກວ່າຄາວທີ່ແລ້ວ. ອາຄານບ້ານຊ່ອງ ແລະເຄຫະສະຖານທີ່ສວຍງາມ ຖືກສັຕຣູເຜົາຖິ້ມຢ່າງກັບເສດເຈັ້ຽ ສິ່ງຂອງອັນມີຄ່າຖືກປຸ້ນຣະດົມຍຶດຂ້າມຝັ່ງຂອງ, ປະຊາຊົນລາວຖືກບີບບັງຄັບໃຫ້ອົພຍົກໜີຈາກວຽງຈັນ ໄປຢູ່ຝັ່ງຂວາຂອງແມ່ນ້ຳຂອງດ້ວຍຄວາມຂົມຂືນແລະອາໄລອາວອນ. ຄວາມໂຫດຮ້າຍທາຣຸນຂອງທະຫານໄທໃນການບຸກນະຄອນວຽງຈັນຄັ້ງນີ້ ນັບວ່າປ່າເຖື່ອນທີ່ສຸດ. ທະຫານໄທທີ່ໄດ້ຮັບຄຳສັ່ງຈາກບາງກອກ ໃຫ້ເຜົາວຽງຈັນເປັນເຖົ່າຖ່ານໄດ້ທຳການກວດລ້າງ ນະຄອນຫລວງຂອງເຮົາດ້ວຍໄຟນັດຈຸຣາດ ຢ່າງບໍ່ເມດຕາປານີລາວເລີຍ. ສິ່ງທີ່ໄຟໄໝ້ບໍ່ເປັນເຊັ່ນຕົ້ນໄມ້ ທີ່ໃຫ້ໝາກໃຫ້ຜົນ ພວກສັຕຣູກໍໄດ້ຣະດົມປະຊາຊົນຂຸດກົ່ນ ແລະປ່າຖິ້ມຢ່າງໜ້າເສັ້ຽດາຍ. ແລະໃນທີ່ສຸດວຽງຈັນກໍກາຍເປັນເມືອງຮ້າງອີກ ເທື່ອທີ່ສອງ.

ສ່ວນຝຣັ່ງເສດນັ້ນບໍ່ເຄີຍໃຫ້ຄວາມສຳຄັນ ແກ່ແຜ່ນດິນຕອນນີ້ພໍປະມານ ເພາະຖືວ່າເປັນເມືອງຂຶ້ນ ທີ່ນຳຜົນປະໂຍດແກ່ຕົນນ້ອຍ, ລາວເຮົາຈຶ່ງຕົກຢູ່ໃນຖານະ ເໝືອນກັບເປັນລູກນ້າ ຊຶ່ງຂນະນັ້ນຊາວວຽດນາມ (ແກວເປັນລູກທົວແກ້ວທົວແທວນ) ທີ່ຮ້າຍໄປກວ່ານີ້ກໍຄືພວກເຂົາໄດ້ສົມຮູ້ຮ່ວມຄິດກັນ ແບ່ງປັນເອົາດິນແດນຂອງລາວບາງສ່ວນ ໃຫ້ພວກປະເທດອານາມິດົນດ້ວຍກັນ (ວຽດນາມ–ຂເມນ) ຢ່າງໜ້າເລືອດ ຊຶ່ງລາວເຮົາຈະລືມຄວາມຂົມຂື່ນອັນນີ້ໄປບໍ່ໄດ້ເດັດຂາດ. ໃນຖານະລາວເປັນຄົນບໍ່ຮຸນແຮງ ແລະບໍ່ມີຄວາມທະເຍີທະຍານ, ຝຣັ່ງເສດຈຶ່ງຖືວ່າລາວເປັນຄົນໂງ່ ແລະຂາດຄວາມສາມາດໃນການປົກຄອງ ຈຶ່ງໄດ້ສົ່ງແກວເຂົ້າມາເປັນຜູ້ຄອບຄຸມລາວຢ່າງນາຍກັບທາດ. ດ້ວຍເຫດຜົນທີ່ກ່າວມານີ້ ຝຣັ່ງເສດຈຶ່ງບໍ່ໄດ້ສ້າງຮາກຖານອັນໃດໃນດ້ານເສຖກິດ. ວັທນະທັມ ແລະຄວາມກ້າວໜ້າໃຫ້ແກ່ລາວດັ່ງກັບວຽດນາມ ແລະຂເມນ.

ສົມບັດທີ່ຝຣັ່ງເສດໄດ້ສ້າງໄວ້ເປັນຮ່ອງຮອຍໃຫ້ລາວ ກໍຄືຖນົນເລກທີ ໑໓ ຕິດຕໍ່ວຽດນາມໄຕ້ຂເມນແລະລາວ, ສ່ວນທີ່ຕົກຢູ່ໃນດິນລາວມີປະມານ ໑.໐໐໐ ກິໂລແມດ ແລະຖນົນເລກທີ ໙ ແຕ່ສວັນນະເຂດເຖິງເວ້ (ວຽດນາມພາກກາງ) ໑໔໐ ກ.ມ. ຖນົນທັງສອງສາຍນີ້ ເຫັນວ່າເປັນສາຍສຳຄັນທີ່ຝຣັ່ງໄດ້ສ້າງໃຫ້, ເປັນຖນົນທີ່ຄັບແຄບປະມານ ໔ ຫາ ໕ ແມດ ປູຫີນ ແລະລາດຢາງເປັນບາງຕອນ ຖນົນສາຍນີ້ຝຣັ່ງເສດໄດ້ໃຊ້ໄປໃນທາງຍຸທະສາດ ຫລາຍກວ່າໃນທາງເສຖກິດ ຂໍ້ຕ່າງໆຢູ່ຕາມຖນົນ

ທັງສອງສາຍນີ້ ກໍເປັນຂົວນ້ອຍລັບນໍ້າໜັກໄດ້ບໍ່ເກີນ ໑໐ ໂຕນ ໂດຍມາກ ເປັນຂົວເຫລັກສຳລັບຂ້າມນໍ້າເຊ, ເປຕົງສຳລັບຂ້າມຫ້ວຍ, ຈະເປັນເຫລັກ ຫລືເບຕົງກໍລ້ວນເປັນຂົວທີ່ເດີນໄດ້ທາງດຽວ.

● ດ້ານການສຶກສາໃນປີ ໑໙໔໔ ຝຣັ່ງເສດມີໂຮງຮຽນປະຖົມສຶກສາ ຢູ່ໃນດິນລາວທັງໝົດ (ໝວດປະຖົມສຶກສາ) ບໍ່ເຖິງ ໔໐ ແຫ່ງ ແລະ ມີນັກຮຽນປະມານ ໑໐.໐໐໐ ຄົນ ແລະໂຮງຮຽນແຂວງລະຫມວດ ຊຶ່ງ ໃນເວລານັ້ນການປົກຄອງ ໄດ້ແບ່ງອອກເປັນ ໑໑ ແຂວງ ແລະໂຮງຮຽນ ຂັ້ນມັທຍົມ (ແຕ່ ມ.ສ. ໑ ເຖິງ ມ.ສ. ໔) ມຽງແຫ່ງດຽວ ຄືວິທະຍາໄລປາວີ ທີ່ວຽງຈັນ ຕັ້ງຂຶ້ນເມື່ອປີ ໑໙໔໗ ມີນັກຮຽນປະມານ ໔໐໐ ຄົນ.

● ຖ້າມາປຽບໃສ່ ກັບປະຊາຊົນໃນເວລານັ້ນ ກໍມີເຖິງ ໒,໕ ລ້ານ (ສອງລ້ານຫ້າແສນຄົນ) ເປັນອັນວ່າ ເທົ່າກັບນໍ້າຢົດດຽວ ໃນຈຳນວນນໍ້າທີ່ມີຢູ່ໃນນໍ້າຂອງ ແລ້ວເຮັດຢ່າງໃດຈຶ່ງຈະບໍ່ໃຫ້ຄົນລາວເປັນຄົນໂງ່ ແລະບໍ່ຮູ້ໜັງສື.

ເທົ່າທີ່ພວກເຮົາຮູ້ຈັກ (ໃນຍຸກປັດຈຸບັນນີ້ເອງ) ວ່າໃນສມັຍຝຣັ່ງປົກຄອງ ການສຶກສາໃນລາວເມື່ອ ໑໙໔໕ ໃນຈຳນວນໂຮງຮຽນມັທຍົມແຫ່ງດຽວທີ່ຢູ່ໃນລາວ ການສອບເສັງເອົາປະກາສນິຍະບັດມັທຍົມພາກຕົ້ນ (*DEPC - BEPC*) ຕ້ອງໄດ້ໄປສອບເສັງທີ່ໄຊງ່ອນຫລືຮາໂນຍ. ແຕ່ປີ ໑໙໔໕ ຈົນເຖິງ ໑໙໕໔ ການສອບເສັງປະກາສນິຍະບັດມັທຍົມ

ມາກປາຍ (*Baccalaureat*) ກໍ່ຍັງຕ້ອງໄດ້ໄປເສັງທີ່ໄຊງ່ອນຫລື ຮາໂນຍເຊັ່ນດຽວ.

ເປັນອັນວ່າພົດທັງອິນດູຈີນ ຊຶ່ງມີປະຊາຊົນທັງໝົດ ໓໐ ລ້ານ, ໃນເວລານັ້ນຝຣັ່ງເສດ ມີໂຮງຮຽນຂັ້ນມັທຍົມປີທີ ໔ ແລະປີທີ ໕ ຢູ່ພຽງ ໘ ແຫ່ງ ຄືທີ່ຮາໂນຍ ແລະໄຊງ່ອນ, ດັ່ງນີ້ເຮົາຈຶ່ງພໍສຣຸບໄດ້ວ່າ ປະເທດທີ່ເປັນນາຍບໍ່ໄດ້ເອົາຫົວຊາ ຕໍ່ການສຶກສາ ແລະສວັດດີການຂອງ ພວກປະຊາຊົນຕາມຫົວເມືອງຂຶ້ນຂອງຕົນ, ເທົ່າທີ່ພວກເຂົາໄດ້ເຮັດບາງຢ່າງ ໄວ້ພໍເຂົ້າວັດບໍ່ຕາຍນັ້ນ ກໍ່ເພື່ອຝຶກແອບຄົນກຸ່ມນ້ອຍ ເພື່ອໄວ້ຮັບໃຊ້ແຜນ ການຄອບຄອງຂອງເຂົາ ແລະເປັນເຈຕນາເພື່ອອັດຫູອັດຕາມວນຊົນໄວ້ ບໍ່ ໃຫ້ຮູ້ແຈ້ງເຫັນຈິງ ເຖິງຣະບົບລ້າເມືອງຂຶ້ນຂອງພວກເຂົາ ບໍ່ດັ່ງນັ້ນປະຊາ ຊົນສ່ວນນີ້ກໍ່ຈະຕື່ນຕົວລຸກຂຶ້ນຕໍ່ສູ້.

● ສ່ວນການສ້າງສາດ້ານອື່ນໆ ເຊັ່ນໂຮງໝໍກໍ່ຍິ່ງເປັນໜ້າສັງເວດ ກວ່າການສຶກສາອີກ ທີ່ພໍວ່າເປັນໂຮງໝໍໄດ້ນັ້ນ ກໍ່ມີພຽງໂຮງໝໍມະໄຫສົດ ແຫ່ງດຽວ ຕັ້ງຂຶ້ນເມື່ອປີ ໑໙໓໐ ສ່ວນທີ່ຢູ່ຕາມແຂວງຕ່າງໆນັ້ນ ເປັນ ພຽງໂຮງໝໍນ້ອຍ (*INFIRMERIE*) ແລະບາງແຂວງຫລືບາງກິ່ງ ກໍ່ ເປັນພຽງບ່ອນແຈກຢາເທົ່ານັ້ນ (*dispensaire*) ຊຶ່ງທັງພົດມີບໍ່ເກີນ ໘໐ ແຫ່ງ ໃນປີ ໑໙໔໔, ໃນສມັຍນັ້ນປະຊາຊົນຜູ້ຢູ່ຕາມຊົນບົດ ຫລື ຕາມພູຜາປ່າດົງຖືກໂຣກອະຫິວາ ແລະໝາກສຸກຮາບາດຕາຍໄປຢ່າງໜ້າເວທະ ນາ, ທັງນີ້ກໍ່ຍ້ອນຄວາມໂງ່ງ່າວ, ຂາດຄວາມຮູ້ ໃນດ້ານອະນາມັຍ ແລະ

ຍັງເນົານົວແຕ່ນຳການເຊື່ອຜີສາງນາງຮ້າຍ. ຢູ່ຕາມທ້ອງຖິ່ນ ບໍ່ມີເຈົ້າໜ້າທີ່ທີ່ກ່ຽວຂ້ອງຄອຍໃຫ້ການແນະນຳ ແລະຊ່ວຍເຫລືອໃນດ້ານນີ້ເລີຍ.

ທີ່ກ່າວມານີ້ ບໍ່ໄດ້ໝາຍໂຈມຕີຫລືປັກປ້ຳ ເພື່ອມຸ້ງຫວັງເກາະຜິດກັບຝຣັ່ງ ແຕ່ເປັນການທວນຄືນຫລັງ ເພື່ອເບິ່ງການປະຕິບັດຂອງປະເທດ ທີ່ເປັນນາຍຕໍ່ຫົວເມືອງຂຶ້ນຂອງຕົນ ແລະເພື່ອຊີ້ໃຫ້ເຫັນວ່າ ພວກເຂົາຮັກເຮົາ ແລະເປັນຫ່ວງນຳເຮົານ້ອຍຫລາຍປານໃດ. ບາງຄົນອາດຈະອ້າງວ່າ ຄວາມກ້າວໜ້າໃນທາງວິທະຍາສາຕໃນສມັຍນັ້ນຍັງບໍ່ທັນອຳນວຍໃຫ້ ຈິງຢູ່ຄວາມຈເຣີນໃນທາງວິທຍາສາຕມີສ່ວນພົວພັນກັບການພັທນາຢ່າງຫລວງຫລາຍ ແຕ່ກໍຢ່າລືມວ່າເຖິງວ່າວິທະຍາສາຕຈະກ້າວໜ້າໄປຈັກພຽງໃດ ຖ້າຫາກຂາດຄວາມຈິງໃຈ ທີ່ຈະເຮັດແທ້ທຳຈິງ ແນ່ນອນຈະບໍ່ມີຫຍັງດີຂຶ້ນດັ່ງກັບທີ່ເປັນມາແລ້ວ.

ເຮົາເຫັນວ່າມັນບໍ່ແມ່ນເຣື່ອງ ຂອງວິທະຍາສາຕຫລືຄວາມຮັ່ງຄວາມມີແຕ່ຢ່າງໃດ ແຕ່ເປັນເຣື່ອງຄວາມຈິງໃຈ ຣະຫວ່າງນາຍກັບທາດ ຫລືຣະຫວ່າງເຈົ້າຂອງກັບຫົວເມືອງຂຶ້ນ ແລະກໍເປັນຂອງທັມມະດາທີ່ມະນຸດທຸກຄົນ ທຸກສັນຊາດຕ້ອງຮັກຕົວເອງຫລາຍກວ່າຜູ້ອື່ນ.

ເຖິງຢ່າງໃດກໍດີ ທີ່ໄດ້ບັນຍາຍມານີ້ ລ້ວນແຕ່ເປັນເຣື່ອງທີ່ຜ່ານໄປແລ້ວ. ພວກເຮົາໄດ້ເສັຽເວລາຍ້ອນ ເປັນຫົວເມືອງຂຶ້ນຂອງຕ່າງດ້າວ ເຖິງສັຕວັດເຄິ່ງ (ຂອງໄທເກືອບ ໑ ສັຕວັດ ແລະຂອງຝຣັ່ງເສດ ໔໐ ກວ່າປີ) ມັນເຮັດໃຫ້ລາວເຮົາຕ້ອງຫລ້າຫລັງ ຈົນເຫລືອທີ່ຈະພັລະນາ

ສິ່ງດຽວທີ່ພໍຈະທົດແທນເວລາທີ່ເສັຽໄປແລ້ວກໍ່ຄື "ລາວທຸກຄົນຕ້ອງຕື່ນຕົວ ຕ້ອງມີຄວາມຄຽດແຄ້ນຕໍ່ການກົດຂີ່ຂົ່ມເຫັງ ຂອງຄົນຕ່າງດ້າວໃນສມັຍອະດີດ ແລະຕ້ອງມີມານະທີ່ຈະປ້ອງກັນເອກຣາດແລະຜົນປະໂຍດຂອງລາວດ້ວຍ ຄົນລາວເຮົາເອງ.

ປັດຈຸບັນນີ້ ຄວາມຮັບຜິດຊອບຕ່າງໆ ໃນໂຊກຊາຕາຂອງບ້ານເມືອງໄດ້ຕົກມາຢູ່ໃນກຳມືຂອງເຮົາແລ້ວ. ພວກເຮົາຄວນຈະທຳທຸກຢ່າງເພື່ອຄວາມດີຂອງຊາດ ໂດຍຖືເອົາບົດຮຽນອັນດີໃນອະດີດມາປະຕິບັດໃນປັດຈຸບັນ ແລະປ່ອຍປະຄວາມສມຽດຈັງໄຮໄວ້ໃຫ້ມີແຕ່ຢູ່ເບື້ອງຫລັງ. ຈຶ່ງມາຊ່ວຍກັນຟື້ນຟູ ປະເທດຊາດບ້ານເມືອງຂອງເຮົາໃໝ່ ຕາມແບບລັດທິສາກົນນິຍົມ. ການທີ່ຈະອາສັຍແຕ່ຜູ້ອື່ນມາອຸ້ມຊູ ເພື່ອຄວາມຄົງຢູ່ ແລະຄວາມກ້າວໜ້າຂອງເຮົານັ້ນ ເປັນຄວາມຄິດທີ່ຜິດພາດຢ່າງຮ້າຍແຮງ ແລະຈະບໍ່ບັນລຸຜົນໄດ້ເດັດຂາດ ດັ່ງທີ່ລາວເຮົາເຄີຍໄດ້ປະສົບມາແລ້ວຫລາຍສມັຍ ເຮົາຍິນດີຮັບເອົາການຊ່ວຍເຫລືອ ທີ່ຫວັງດີຈາກມິດປະເທດທຸກປະເທດເພື່ອມາບູຣະນະພື້ນຖານທາງເສຖກິດ. ສັງຄົມ ແລະວັທນະທັມ ແຕ່ເຮົາປະຕິເສດຢ່າງເດັດດ່ຽວຕໍ່ການຊ່ວຍເຫລືອອັນມີເລ້ຫລ່ຽມ ໃນການແຜ່ອຳນາດ, ລ້າຫົວເມືອງຂຶ້ນແບບໃໝ່ ແລະເຊື່ອງເອົາປຽບໃນທາງເສຖກິດ, ການເມືອງ, ວັທນະທັມ ແລະສັງຄົມ.

ນອກຈາກນີ້ແລ້ວ ການຊ່ວຍເຫລືອດັ່ງກ່າວຈະສ້າງເງື່ອນໄຂອັນທີ່ຈະເຮັດໃຫ້ຄວາມຄົງຢູ່ຂອງເຮົາເຊື່ອມລົງ. ດັ່ງນີ້ ຈຶ່ງຂໍຊັກຊວນທ່ານເຂົ້າສູ່ການພັທນາຍຸກໃໝ່ ທາງຈິດໃຈແລະວັດຖຸ ດັ່ງຕໍ່ໄປນີ້ :

ວັກ ໒

ການພັທນາທາງດ້ານຈິດໃຈ

ຈົນເທົ້າເຖິງທຸກວັນນີ້, ການວາງແຜນພັທນາຊາດ ໄດ້ເນັ້ນໜັກໄປແຕ່ໃນທາງດ້ານວັດຖຸ ຈົນລືມການພັທນາທາງດ້ານຈິດໃຈ. ການທີ່ຈະພັທນາໄປ ແຕ່ໃນທາງດ້ານວັດຖຸຢ່າງດຽວນັ້ນ ເຫັນວ່າເປັນການບໍ່ພຽງພໍ ແລະ ຈະບໍ່ບັນລຸເຖິງເປົ້າໝາຍຢ່າງແນ່ນອນ. ທັງນີ້ ກໍເພາະວ່າລຳພັງແຕ່ຈະສ້າງ ໂຮງຮຽນ, ໂຮງໝໍ, ຖນົນຫົນທາງ ແລະພື້ນຖານທາງເສຖກິດ ເພື່ອໃຫ້ພຽງພໍກັບຄວາມຕ້ອງການຂອງປະເທດແຕ່ຢ່າງດຽວ ໂດຍບໍ່ຄຳນຶງເຖິງຄວາມຮູ້ສຶກ, ຄວາມນຶກຄິດ ແລະຈິດໃຈຂອງກຸ່ມຄົນຜູ້ຮັບໃຊ້ ຫລືຜູ້ທີ່ມີສ່ວນພົວພັນຢູ່ກັບໂຄງການນັ້ນໆ ແນ່ນອນເຮົາຈະຕ້ອງພົບກັບຄຳວ່າ "ບໍ່ໄດ້ຜົນ" ແລະຈະປະສົບກັບຄຳວ່າລິງໄດ້ໝາກພ້າວນັ້ນເອງ.

ຕົວຢ່າງວ່າຣັຖບານຕິດຕັ້ງດອກໄຟຟ້າ ໃສ່ຕາມຖນົນຫົນທາງ ແລ້ວມີຄົນໃຈໂຫດແບ່ນກ້ອນຫີນ ຫລືຍິງໝາກກະຖຸນໃສ່ ຖືວ່າເປັນຄວາມສຸຂຫລືແນວໃດກໍບໍ່ຊາບ, ຫລືບໍ່ດັ່ງນັ້ນກໍລັກຕໍ່ ຫລືຕັດສາຍໄຟໂດຍບໍ່ຄຳນຶງເຖິງວ່າ ຣັຖບານໄດ້ອອກເງິນໃຊ້ຈ່າຍຄ່າຊື້ ແລະຄ່າຕິດຕັ້ງເຄື່ອງໄຟຟ້າເຫລົ່ານັ້ນຕົກເປັນເງິນລ້ານໆ ເພື່ອໃຫ້ມີຄວາມສວຍງາມ, ໃຫ້ຄວາມສວ່າງແກ່ທຸກຄົນທີ່ຖ່ອງທ່ຽວໄປມາ, ປະກັນຄວາມປອດໄພແກ່ຜູ້ຮ້າຍຊາຍໂຈນ, ໃນການ

ສົມຈອນ ແລະຜົນປະໂຍດໃນທາງອື່ນໆອີກ. ເມື່ອສິ່ງຂອງເຫລົ່ານີ້ຖືກທຳລາຍຖົມລົງໄປຢ່າງໄຮ້ເຫດຜົນ ຣັຖບານກໍຕ້ອງທົດແທນສິ່ງນີ້ດ້ວຍເງິນອີກ, ແທນທີ່ຈະໃຊ້ເງິນກ້ອນນີ້ໄປສ້າງແນວອື່ນຕໍ່ໄປ ແລະຖ້າເປັນກັນດັ່ງນີ້ຕລອດໄປ ທຸກດ້ານແລະທຸກມູມ. ການພັທນາຈະຕົກໄປໃນຮູບໃດ ນອກຈາກຄວາມຊັກຊ້າ, ຢຸດສະງັກຫລືລົ້ມລະລາຍ ນີ້ແຫລະຄືອຸປສັກຕົວສຳຄັນຂອງການພັທນາຊາດໃນທາງດ້ານວັດຖຸ. ເຫດນີ້ເຮົາຈຶ່ງພໍຈະວາງເປັນສູດໄດ້ແລ້ວວ່າ "**ການພັທນາໃນດ້ານວັດຖຸ ແລະຈິດໃຈຈະຕ້ອງເດີນຄຽງຄູ່ກັນໄປສເມີ**" ຜູ້ສ້າງສາກັບຜູ້ຮັບຜົນປະໂຍດ ຫລືຜູ້ໃຊ້ຈະຕ້ອງຮ່ວມໄມ້ຮ່ວມມືກັນ ໃນການປ້ອງກັນ ແລະທະນຸຮັກສາດ້ວຍຄວາມສມັກໃຈ ຈາກທັງສອງກ້າສອງຝ່າຍ,

ນີ້ເປັນພຽງຄວາມຂີ້ລ້າຍຢ່າງນຶ່ງ ທີ່ເຮົາກ່າວອະທິບາຍເປັນຕົວຢ່າງເພື່ອໃຫ້ເຫັນຄວາມຈຳເປັນ ໃນການຝຶກຫັດອົບໂຮມຈິດໃຈ ແກ່ປະຊາຊົນພາຍໃນຊາດ ໄປພ້ອມໆກັນກັບການພັທນາໃນທາງດ້ານວັດຖຸ. ກ່ອນຈະກ້າວໄປເຖິງວິທີການພັທນາ ໃນດ້ານຈິດໃຈ ເຮົາໃຄ່ຢາກຂໍຊັກຊວນທ່ານຜູ້ອ່ານໄປຫາປອມດ້ອຍ ໃນທາງຈິດໃຈຂອງພວກເຮົາ ທີ່ຍັງຄ້າງຢູ່ຕາມຮົ້ວບ້ານ ແລະວົງການທົ່ວໄປອີກບາງປະການ. ຄວາມນຶກຄິດອັນຊົ່ວຊ້າ, ລ້າສມັຍ ແລະປ່າເຖື່ອນທີ່ຝັງຢູ່ໃນຈິດໃຈຂອງຄົນບາງຄົນ ແລະບາງກຸ່ມບາງພວກນັ້ນ ເປັນມານສັງຄົມຕົວຮ້າຍກາດ ແລະເປັນອຸປສັກຕໍ່ການພັທນາເຫລືອທີ່ສຸດ. ຕາມທັມະຊາດແລ້ວຄົນເຮົາເກີດມາກໍຕ້ອງມີຜູ້ດີ ແລະຜູ້ຊົ່ວ, ຄົນຊົ່ວ

ໄປຕົກຢູ່ທີ່ໃດ ທີ່ນັ້ນກໍຈະໄດ້ຮັບແຕ່ຄວາມອຸ້ມອາຍ. ບຸກຄົນປະເພດນີ້ໄດ້ແກ່ໂຈນ, ນັກປຸ້ນ, ຂີ້ລັກ, ແກ້ງທຳຕໍ່ສິ່ງທີ່ເຫັນວ່າຜິດ, ຄາຕກອນໄປໃນເຊີງຕ່າງໆ ແລະອື່ນໆຊຶ່ງເຮົາໃຫ້ຊື່ພວກນີ້ວ່າ "ກຸ່ມມານ"

ນອກຈາກຄົນຊົ່ວກຸ່ມນີ້ແລ້ວ ຍັງມີຄົນຢູ່ອີກປະເພດນຶ່ງ ທີ່ເຮົາໃຫ້ຊື່ວ່າ "ຜູ້ຫລ້າຫລັງ" ຄົນຈຳພວກນີ້ບໍ່ແມ່ນຄົນຊົ່ວດັ່ງຄົນປະເພດທີ່ນຶ່ງທີ່ກ່າວມານີ້ ແຕ່ເປັນຄົນທີ່ຕົກຢູ່ໃນຄວາມມືດມົນ, ຄົນບໍ່ຮູ້ຈັກໃຊ້ຊີວິດແຫ່ງການເປັນຢູ່, ບໍ່ຮູ້ຈັກຈະປະຕິບັດຕົນຢູ່ໃນສັງຄົມ ເພາະອາຄົນກຸ່ມນີ້ ບໍ່ໄດ້ຮັບການສຶກສາ, ສິ່ງທີ່ຕົນກະທຳໄປນັ້ນ ລ້ວນແຕ່ເປັນເຣື່ອງຮູ້ເທົ່າບໍ່ເຖິງການ. **ການກະທຳຜິດຂອງກຸ່ມມານປະເພດທີ່ນຶ່ງນັ້ນ ເຮົາພໍຈະຈຳແນກອອກໄດ້ດັ່ງນີ້ :**

- ການລັກເລັກຂໂມຍນ້ອຍ ຊຶ່ງກຳລັງຣະບາດຢ່າງດົກໜາ ໂດຍສະເພາະຢູ່ຕາມຫົວເມືອງໃຫຍ່ຕ່າງໆ ທົ່ວພຣະຣາຊອານາຈັກ (ທຸກມື້ນີ້ຖ້າໃຜເຜີຕ້ອງຖືກລັກ , ທາງສຖິຕິມີຕົວເລກຜູ້ກະທຳຜິດປະເພດນີ້ ຂຶ້ນຕັດສິນຢູ່ສານປະມານປີລະບໍ່ຕ່ຳກວ່າພັນຄະດີ)
- ການປຸ້ນຈີ້ ຂ້າເຈົ້າເອົາຂອງ ຫລືຂ້າເພື່ອລ້າງແຄ້ນ
- ການຂົ່ມຂືນເພື່ອທຳສຳເລົາ
- ການຄາຕກັມດ້ວຍສາເຫດອື່ນໆ
- ການສໍ້ໂກງເພື່ອຫວັງຕົ້ນຫວັງແກງ
- ການລໍ້ຣາຊບັງຫລວງ

* ການຝ່າຝືນຕໍ່ກົດໝາຍ ແລະກົດຈຣາຈອນ
* ການຊື້ຂອງເຖື່ອນ ແລະການຄ້າເຄື່ອງໜີພາສີ
* ການໃຊ້ສິດແລະອໍານາດເພື່ອຜົນປໂຍດສ່ວນຕົວ
* ການເອົາປຽບເອົາລັດ ແບບຂົ່ມເພີ່ນຍໍໂຕຕລອດເຖິງການຫລັກໂລບເອົາຂອງຫລວງມາເປັນຂອງສ່ວນຕົວ.

ຣວມຄະດີທີ່ບັນທຶກໄວ້ທີ່ຕໍາຣວດຍຸຕິທັມ ແລະຕາມສານຕ່າງໆໄດ້ເຖິງ ໔໐໐໐ ຫາ ໔໖໐໐ ຕໍ່ປີ ກຸ່ມມານປະເພດນີ້ ສຖິຕິຂອງກະຊວງຍຸຕິທັມໄດ້ບອກໄວ້ວ່າ ໃນປີນີ້ງໆ ມີຜູ້ກະທໍາຜິດ ຫລືມີຄະດີອາຈຍາ ແລະຄະດີແພ່ງທີ່ຂຶ້ນສູ່ສານດັ່ງຕໍ່ລົງໄປນີ້:

* ຄະດີແພ່ງ . . . . ໖໗໔ ຄະດີ
* ຄະດີອາຈຍາ . . . . ໕໔໕ ຄະດີ

(ຣວມ ໑໑໕໙ ຄະດີ)

● ອຸປຕິເຫດບົນຖນົນຫລວງ ທີ່ໄດ້ບັນທຶກໄວ້ປະມານ ໑໔໐໐ ລາຍ ສ່ວນອຸປຕິເຫດທີ່ບໍ່ໄດ້ບັນທຶກໄວ້ນັ້ນ ຄາດວ່າຄົງຈະມີ ໔ ເທົ່າກ່າວຄື ກວ່າ ໔໐໐໐ ລາຍ. ລວມທັງໝົດກໍຄົງຈະມີຜູ້ຣະເມີດ ຫລືຜິດກົດຈຣາຈອນປະມານ ໗໐໐໐ ລາຍຕໍ່ປີ.

ຈໍານວນຄະດີທັງໝົດທີ່ໄດ້ກ່າວມາແລ້ວນີ້ ເປັນຕົວເລກທີ່ສູງພໍສົມຄວນ ສໍາລັບປະເທດນ້ອຍທີ່ມີພົລເມືອງ ໗ ລ້ານຄົນ ແລະນັບໄດ້ວ່າປະເທດຂອງເຮົາຍັງບໍ່ ນ້ອຍໜ້າກວ່າປະເທດໃກ້ຄຽງ ຫລືອາເມຣິກາ.

ສ່ວນການກະທຳຂອງ " ຜູ້ຫລ້າຫລັງ " ປະເພດທີສອງນີ້ຍັງບໍ່ມີໃຜສາມາດບອກເປັນສຖິຕິອັນແນ່ນອນໄດ້. ເພາະວ່າຈະຖືວ່າເປັນຄວາມຜິດກໍ່ບໍ່ຖືກ ແລະຖ້າຈະບໍ່ຖືກໍ່ຄົງບໍ່ຖືກຄືກັນ.

ຕົວຢ່າງ : ໃນກາງປີ ໑໙໖໑ ຣັຖບານລາວໄດ້ຮັບການຊ່ວຍເຫລືອຈາກສຫະຣັຖອະເມຣິກາ ໃນດ້ານປຸກສ້າງ ໂຮງໝໍສົງເຄາະແມ່ແລະເດັກ (P. M. I.) ຫລັງໃໝ່ທີ່ນະຄອນວຽງຈັນ ຊຶ່ງເປັນໂຮງພະຍາບານທີ່ທັນສມັຍຂອງລາວ ; ເປັນຕຶກທີ່ພຽງພ້ອມດ້ວຍ ເຄື່ອງອຸປກອນການແພດ ອັນມີຣາຄາສູງ ມີຄວາມສອາດສອາງດີ ແລະເປັນທີ່ສວຍງາມແກ່ຜູ້ທີ່ພົບເຫັນ. ຕາມທັມມະດາແລ້ວ ຈະມີເຈົ້າໜ້າທີ່ຝ່າຍອະເມຣິກາ ຄອຍເຝົ້າໃຫ້ການຊ່ວຍເຫລືອ ໃນທາງດ້ານວັດຖຸ ມີເຈົ້າໜ້າທີ່ຝຣັ່ງເສດ ຊຶ່ງເປັນພນັກງານແພດແລະຄຸມແມ່ຄອຍດູແລ, ສ້ອມແປງແລະທະນຸຮັກສາ ໂຮງພະຍາບານແຫ່ງນີ້ຊ່ວຍ ແຕ່ໃນບາງຄັ້ງບາງຄາວ ເຮົາສັງເກດເຫັນວ່າ ເຈົ້າໜ້າທີ່ຕ່າງດ້າວດັ່ງກ່າວນີ້ ໄດ້ສແດງປະຕິກິຍາຮຸນແຮງ ເພື່ອຂອດຂ້ຽວວິໃນຂອງເຈົ້າໜ້າທີ່ຝ່າຍລາວ ແລະຂອງຄົນເຈັບທີ່ພະຍາບານຕົວ ຢູ່ທີ່ນັ້ນຢ່າງນອງນັນ. ທັງໆທີ່ວ່າລາວເຮົາກໍ່ມີຣອດຂັ້ນດອກເຕີ ທີ່ມີຄວາມຮູ້ ຄວາມສາມາດພຽງພໍເປັນຜູ້ອຳນວຍການຢູ່. ເຫັນວ່າບໍ່ຈຳເປັນຕ້ອງໃຫ້ຊາວຕ່າງດ້າວ ດັ່ງກ່າວມາໂອຍອາຍນຳ.

ກ. ການບັງຄັບ ຄົນເຈັບ. ພີ່ນ້ອງຜູ້ເຝົ້າຮັກສາ ແລະຜູ້ມາຢ້ຽມຢາມຄົນເຈັບ ບໍ່ໃຫ້ທຳຄວາມເປິະເປື້ອນ ເຊັ່ນຖິ້ມນ້ຳລາຍຄາຍຂີ້ມູກ. ຖິ້ມນ້ຳ

ຫມາກ ຖິ້ມເສດກະດາດ ຫລືໃບຕອງ ຖິ້ມເສດອາຫານ ປູສາດນອນຕາມພື້ນ ຢ້ຽມຢາມຄົນເຈັບບໍ່ຖືກເວລາ ທຳສຽງດົງດັງອັນເປັນການຣົບກວນ ໃຊ້ຫ້ອງນ້າດ້ວຍການຖິ້ມໃມ້ ຫລືເຈ້ຽແຂງລົງຮູ ຖິ້ມກິດກອກຢາໃສ່ຕາມພື້ນແລະສິ່ງເປື້ອນເປິະອື່ນໆ ຮ້ອຍແປດພັນປະການ ອັນທີ່ຂັດຂ້ອງຕໍ່ຫລັກອະນາມັຍຂອງໂຮງໝຍາບານທົ່ວໆໄປ.

ຂ. ການຄວບຄຸມດູແລ ວິນັຍຂອງນາງໝຍາບານ ແລະພນັກງານທີ່ຮັບໃຊ້ໃນໂຮງໝຍາບານແຫ່ງນີ້ ໃນການດູລ່າຄ່າຄອຍ ປະຄັບປະຄອງແລະໃຫ້ຄວາມສດວກແກ່ຄົນເຈັບປ່ວຍ. ໃນການທະນຸຮັກສາເຄື່ອງໃຊ້ທາງການແພດແລະເຄື່ອງພັສດຸປະຈຳອາຄານທຸກຢ່າງ.

ດັ່ງນີ້ ເຮົາຈຶ່ງເຫັນໄດ້ວ່າ ໃນກຸ່ມນອນຊົນຂອງເຮົາ ປັດຈຸບັນຍັງມີຄວາມຂີ້ລ້າຍ ໃນທາງຊິວິດ ແຫ່ງຄວາມເປັນຢູ່ຢ່າງປະຕິເສດບໍ່ໄດ້ ຈົນຣັຖບານຕ້ອງໃຊ້ທີ່ປຶກສາຕ່າງດ້າວ ເຂົ້າມາຊ່ວຍຄວບຄຸມຂ້ບົກຜ່ອງເຫລົ່ານີ້ຊຶ່ງເຮົາເຫັນວ່າຖ້າຫາກປ່ອຍປະລະເລີຍ ຕໍ່ເຣື່ອງເລັກເຣື່ອງນ້ອຍເຊັ່ນນີ້ຕລອດໄປ ໂດຍບໍ່ຊອກຫາຫົນທາງອອກ (ຈັດໃຫ້ມີການສາທາຣະນະສຶກສາ ແລະ ຄວບຄຸມຣະບຽບວິນັຍຂອງຂ້າຣາຊການຢ່າງເຄັ່ງຄັດ) ພວກເຮົາກໍຈະຕົກເປັນທາດ ທີ່ຕ້ອງອາສັຍຕ່າງດ້າວຕລອດໄປ ຄວາມຂີ້ລ້າຍຂອງພວກເຮົາທີ່ກ່າວມາໃນຂ້ ກ ແລະ ຂ ຂ້າງເທິງນີ້ ເຫັນວ່າບໍ່ຈຳເປັນຕ້ອງໃຊ້ຕ່າງດ້າວ ມາຄວບຄຸມເພາະບໍ່ແມ່ນເຣື່ອງຍາກຊາ ທີ່ຕ້ອງໃຊ້ຫົວຄິດ, ປັນຍາ,

ຫລືບັງສູດເທັກນິກ ເອເລັກໂຕຣນິກ ມີສຖານຢ່າງໃດ ເຊື່ອແນ່ວ່າຄົນລາວເຮົາຕ້ອງຮັບພາຣະອັນນີ້ໄດ້.

ຂໍແຕ່ວ່າຕ້ອງໃຊ້ຄວາມເດັດຂາດຢູ່ທຸກໆຂັ້ນການປົກຄອງ ດ້ານນຶ່ງເພື່ອຄອບຄຸມພນັກງານ ຫລືຂ້າຣາຊການຂອງຣັຖ ແລະອີກດ້ານນຶ່ງ ເພື່ອໃຫ້ການສຶກສາ ແລະຄອບຄຸມສາທາຣະນະຊົນ. ສ່ວນທີ່ປຶກສາ ຫລືຜູ້ຊ່ຽວຊານຕ່າງດ້າວນັ້ນ ຄວນສງວນໄວ້ໃຊ້ແຕ່ໃນເຣື່ອງເທັກນິກ. ຄວາມຂີ້ລ້າຍອີກອັນນຶ່ງ ທີ່ພວກເຮົາຄວນຮັບຮູ້ ແລະສຳນຶກຜິດກໍຄື: ນິສັຍທຳລາຍ ແລະອິດສາບັງບຽດຄົນອື່ນ ດັ່ງທີ່ຈະໄດ້ອ້າງຫລັກຖານຕໍ່ລົງໄປນີ້:

ຣັຖບານຝຣັ່ງເສດ ໄດ້ໃຫ້ການຊ່ວຍເຫລືອທາງເສຖກິດແກ່ລາວໂດຍປຸກສ້າງວິທຍາລັຍກະເສດ (*College Agro-Sylvo pastorale*) ທີ່ບ້ານໃຫມ່ອົມພຍົກ ຢູ່ທາງທິດຕາເວັນຕົກສຽງເຫນືອ ຂອງທ່າງ່ອນປະມານ ໑ ຫລັກກວ່າ ເປັນການກໍ່ສ້າງທີ່ທັນສມັຍ, ສວຍງາມ ແລະແຫນ້ນຫນາຖາວອນ ໃຊ້ເງິນກໍ່ສ້າງທັງຫມົດບໍ່ຕ່ຳກວ່າ ໖໐ ລ້ານກີບ ເປັນອາຄານໃຫຍ່ສອງຫລັງ ສຳຣັບໃຊ້ເປັນຫ້ອງຮຽນ, ຫ້ອງພັກເຊົາ ແລະສູບລຽງ ແລະອີກນຶ່ງຫລັງສຳລັບການປົກຄອງ. ໂຮງຮຽນແຫ່ງນີ້ ເມື່ອປຸກສ້າງສຳເຣັດຮຽບຮ້ອຍແລ້ວບັງເອີນເກີດເຫດຮ້າຍໂດຍບໍ່ຄາດຝັນ. ເມື່ອ ໑໙໖໘ ໂຮງຮຽນແຫ່ງນີ້ຈຶ່ງຖືກປະຖິ້ມໄວ້ ແລ້ວຍ້າຍວິທຍາລັຍດັ່ງກ່າວມາທີ່ດົງໂດກ, ນຶ່ງປີຕໍ່ມາຜູ້ຂຽນໄດ້ເລາະທ່ຽວໄປແຖວນັ້ນ ໂດຍບັງເອີນ (ໃນຕົ້ນປີ ໑໙໗໐) ແລະໄດ້ເຫັນສະພາບຂອງສຖາບັນດັ່ງກ່າວນີ້ ຊູໂຊມລົງຢ່າງຫນ້າເສັຽດາຍ: ແກ້ວແວ່ນອັນ

ສອຍງາມທີ່ເອ້ໄອ້ໜ້າຕ່າງ ຖືກທັບແຕກຫລາຍກວ່າ ໔໐ ເປີເຊັນ, ຈະເປັນການທັບຫລົ້ມ ເພື່ອຄວາມສນຸກເລັ່ນເລີງ ຂອງພວກກຸ່ມມານຊນິດໃດບໍ່ຊາບ ຖ້າຈະກ່າວວ່າ ເປັນການແຕກຫັກດ້ວຍພັຍທັມມະຊາດກໍບໍ່ເຫັນປາກົດເກີດມີລົມພາຍຸໃຫຍ່ ແຜ່ນດິນໄຫວ ແລະພູໄຟຣະເບີດທາງໃດເກີດຂຶ້ນໃນຍຸກນີ້ເລີຍ (ເສດສ່ວນແກ້ວ. ຫລອດໄຟ ແລະກະເບື້ອງຈີນັ້ງ ຖືກທັບຕີໃຫ້ແຕກເພ ຕາໜ່າງລວດບາງບ່ອນຖືກມ້າງເພ ແລະລຸຫັກດ້ວຍນ້ຳມືຂອງ ກຸ່ມມານຊນິດທີ່ມີນິສັຍທຳລ້າຍ ເພື່ອອິດສາແລະບັງບຽດ ຢ່າງປ່າເຖື່ອນທີ່ສຸດ) ສຳລັບບານປ່ອງຢ້ຽມແລະປະຕູ ໄລປະຕູແລະປ່ອງຢ້ຽມ ແລະເຄື່ອງປະກອບຂອງອາຄານ ທີ່ຖືກລັກໄປໃຊ້ເປັນພົນປໂຍດສ່ວນຕົວນັ້ນ ກໍຍັງພໍອະໂຫສີໃຫ້ໄດ້ຢູ່ເພາະຜູ້ລັກກໍອາດມີເຫດຜົນໃນທາງຄອບຄົວ, ຊຶ່ງນັບວ່າເປັນຂອງທັມມະດາຂອງສມັຍບ້ານອຶດເມືອງຢາກ ຄ່າຄອງຊີບແພງ ເສຖກິດຕົກຕ່ຳ. ແຕ່ເຖິງຢ່າໃດກໍດີ ຈະເປັນສ່ວນທີ່ຖືກລັກໄປໃຊ້ ເປັນພົນປໂຍດສ່ວນຕົວຫລືຈະເປັນສ່ວນທີ່ຖືກທຳລາຍ ເພື່ອອິດສາບັງບຽດ ຫລືເພື່ອຄວາມສນຸກສນານກໍຕ້ອງຖືວ່າເປັນການກະທຳທີ່ໄຮ້ ຄວາມເປັນມະນຸດສທັມທັງນັ້ນ ແລະສົມຄວນແລ້ວທີ່ຈະຕ້ອງ ລົງໂທສມານກຸ່ມນີ້ໃຫ້ສະສົມ.

* ກ່ຽວກັບເຣື່ອງທີ່ກ່າວມານີ້ ມັນເປັນຄວາມຜິດຂອງໃຜ ? ມັນຄວາມຜິດຂອງພວກມານກຸ່ມນີ້ ຢ່າງເຕັມສ່ວນ. ແຕ່ກໍຢ່າລືມອີກວ່າ ມັນເປັນຄວາມຜິດ ຂອງເຈົ້າໜ້າທີ່ຣັບຜິດຊອບຢູ່ດີກັນ. ຫລັງຈາກທີ່ໄດ້ປະສຖານທີ່ອັນມີຄ່າສູງອັນນີ້ໄວ້ລ້າໆ ເປັນຫຍັງຈຶ່ງບໍ່ມອບອາຄານເຫລົ່ານີ້ ໄປໃຫ້ກະຊວງ

ຫລືແນກການອື່ນໆ ທີ່ຍັງຕ້ອງການໃຊ້ເປັນປໂຍດ. ທັງໆທີ່ປັດຈຸບັນນີ້ທຸກໆ ກະຊວງທະບວງກົມຍັງຂາດເຂີນພາຫານະດ້ານນີ້ຢູ່. ນີ້ແລະຄືຕົ້ນເຫດແຫ່ງຄວາມບໍ່ຮູ້ຄຸນຄ່າຣາຄາຂອງການຊ່ວຍເຫລືອຈາກຕ່າງປະເທດໂດຍທີ່ເຈົ້າຂອງປະເທດບໍ່ໄດ້ຮ່ວມທຶນ ຮ່ວມແຮງໃນການກໍ່ສ້າງ, ເປັນຂອງທີ່ໄດ້ລ້າໆ ຄືກັບຂອງບໍ່ມີຄ່າ ກໍເລີຍພາກັນເສັຍ ດັ່ງກັບລິງໄດ້ຫມາກພ້າວອີກ

ພາຍຫລັງທີ່ໄດ້ອະທິບາຍເຖິງປ່ອນດ້ອຍ (ຄວາມຂີ້ລ້າຍ) ຂອງພວກເຮົາຢ່າງຍືດຍາວມານີ້ ມັນເປັນພຽງປ່ອນດ້ອຍສ່ວນດຽວ ໃນຈຳນວນພັນ. ຊຶ່ງທ່ານຜູ້ອ່ານອາດເກີດຄວາມລຳຄານໃຈນຳ ເຣື່ອງສົກກະປົກເລັກໆນ້ອຍໆ ທີ່ນຳມາກ່າວໃນທີ່ນີ້ ແລະຖືວ່າເປັນເຣື່ອງທີ່ຂາດ ຄວາມສຸພາບຮຽບຮ້ອຍ ຜູ້ຂຽນຂໍຍອມລັບ ແຕ່ເຫດຜົນມັນມີຢູ່ວ່າ ທຸກຄົນຕ້ອງການອ່ານ ແລະຟັງຄວາມຈິງ ທີ່ກ່າວມາແລ້ວນັ້ນມັນຈິງຫລືບໍ່ ? ຖ້າຈິງແລ້ວກໍສົມຄວນແລ້ວທີ່ພວກເຮົາຕ້ອງປັດຊັບມືອັນຂາວສອາດ ອອກຈາກມືອັນສົກກະປົກແລະເປື້ອນເປິະ ແລ້ວນຳມາລ້າງສ່ວຍ ໃຫ້ຂາວສອາດເຊັ່ນດຽວ ແລະສົມຄວນແລ້ວທີ່ເຮົາຕ້ອງປະຖິ້ມນິສັຍ "ບ້ອນກົວໃຫ້ເປັນຄ່ຳ" ດ້ວຍການເຊື່ອງຄວາມຜິດໄວ້ ແລະນຳເອົາແຕ່ສິ່ງດີໆທີ່ ພວກເຮົາອຸປໂຫລກຂຶ້ນມາເວົ້າ ເພື່ອຕົວະຕົວເອງເຊັ່ນວ່າ :

໑ * **ກອງທັບມີຣະບຽບວິນັຍດີ** (ແຕ່ຍັງມີທະຫານບາງຄົນໃຊ້ມຸ້ງໄປສ້ອນປາ, ໃຊ້ຫມວກເລັກທຸງຕົ້ມ, ບໍ່ຟັງຄຳສັ່ງຂອງຜູ້ເປັນນາຍແລະອື່ນໆ)

໔ * **ຕຳຣວດພິທັກສັນຕິຣາດເຂັ້ມແຂງ** (ແຕ່ເບື້ອງຫລັງຍັງມີການ ລ່ວມມືຕັ້ງໂຮງພະນັນເຖື່ອນ ຊໍ້ຣົດຖຸຝຸ່ນມາຂາຍ,ໂກງຕໍ່ຣາຊການແລະປະຊາຊົນແລະອື່ນໆ).

໓. **ພາສີເກັບຫາເງິນເຂົ້າຄັງໄດ້ເກີນຄາດ** (ແຕ່ຍັງມີການສົ່ງສິນຄ້າເຂົ້າເມືອງ ໂດຍບໍ່ເສັຽຄ່າທຳນຽບແລະອື່ນ...)

໔. **ສ່ວຍສາອາກອນກ້າວໜ້າຫລາຍ** (ແຕ່ຍັງມີການເສັຽສ່ວຍ ແລະປາຕັງເຂົ້າຖົງຕົວເອງຢູ່ແລະອື່ນໆ...)

໕. **ເທສບານກຳແພງນະຄອນບຸຣະນະໃຫຍ່** (ແຕ່ຖນົນຫົນທາງມີແຕ່ຂຸມ ຮ່ອງນ້ຳເໝັນສເອືອນ ແລະຂີ້ຝຸ່ນໃນນະຄອນໃງ່ ຂຶ້ນກຸ້ມຟ້າຢູ່ແລະອື່ນໆ...)

໖. **ການຄົມນາຄົມສດວກແລະທັນສມັຍ** (ແຕ່ວ່າເສັ້ນທາງຫລວງຂອງເຮົາຕົກຢູ່ໃນພາວະນ້ຳຕາຕົກ ທັງທາງຄຸມພາບແລະປະຣິມານແລະອື່ນ.ໆ)

໗. **ການຄັງຫຸ່ນທ່ຽງດີ** (ແຕ່ຣາຄາເງິນກີບຕົກປີນຶ່ງເຖິງ ໔ ຄັ້ງ ລາຍຈ່າຍເກີນລາຍໄດ້ ປະມານປີລະ ໑໐ ກວ່າໂກດແລະອື່ນໆ..)

໘. **ເສຖກິດກ້າວໜ້າຫລາຍ** (ແຕ່ຕ້ອງຊື້ເຂົ້າປາອາຫານຈາກຝັ່ງໄທມາບໍຣິໂພກ ສົ່ງສິນຄ້າອອກ ໑ ສ່ວນ ແຕ່ສັ່ງເຂົ້າມາ ໔໐ ສ່ວນແລະອື່ນໆ...)

໙. **ໄປສນີດີແລະຮວດເຣວ** (ແຕ່ໂທຣະເລກຫາກັນ ກວ່າຈະເຖິງກໍຕ້ອງອາທິດ ຫລືດົນກວ່າແລະອື່ນໆ)

໑໐. **ການສຶກສາປັບປຸງກວ້າງຂວາງດີ** (ແຕ່ຍັງມີຄົນອ່ານໜັງສືບໍ່ເປັນເຕັມບ້ານ, ເດັກນ້ອຍຄ້າງບໍ່ໄດ້ ເຂົ້າຊັ້ນມັທຍົມບໍ່ຕ່ຳກວ່າປີ ໑໐

ຫາ ໔໐ ພັນຄົນ, ຄົນໃນຊາດສ່ວນໃຫຍ່ດ້ອຍພັທນາ ຍ້ອນບໍ່ໄດ້ລັບການສຶກສາເຫລົ່ານີ້ເປັນຕົ້ນ,)

໑໑. ແລະສິ່ງອື່ນໆອີກ ຣ້ອຍອັນພັນແນວ ອັນເປັນການກະທຳທີ່ຊາດຂອງເຮົາບໍ່ເພິ່ງປາຖນາ ໂດຍສະເພາະໃນເວລາທີ່ຊາດຕົກຢູ່ໃນ ພາວະຫົວລ້ຽວຫົວຕໍ່.

ທີ່ວ່າ ການອຸປໂຫລກເອົ້າແຕ່ສິ່ງທີ່ດີໆງາມໆນັ້ນ ເປັນການປອບໃຈຕົວເອງ ແລະເພື່ອເວັ້ນຈາກການສ້າງຄວາມແຕກແຍກກໍດີ ແຕ່ວ່າເຮົາກໍຄວນເອົ້າ ຢູ່ໃນຂອບເຂດພໍດີພໍງາມ ແລະຕ້ອງຮັບຮູ້ເອົາສິ່ງເປື້ອນເປິະຢູ່ເບື້ອງຫລັງ ເຊັ່ນດຽວ ບໍ່ດັ່ງນັ້ນເຮົາກໍຈະກາຍເປັນຄົນວິເສດ ວິໂສໄປຫມົດທຸກຄົນ ຄົນທີ່ບໍ່ຮູ້ຄວາມຜິດຂອງຕົນ ກໍຄືຄົນທີ່ໂງ່ທີ່ສຸດ ດັ່ງສຸພາສິດຝຣັ່ງກ່າວວ່າ "**ບໍ່ມີຄວາມໂງ່ອັນໃດ ທີ່ຈະຮ້າຍໄປກວ່າຄວາມບໍ່ຮູ້ຂໍ້ບົກພ່ອງຂອງຕົນ**" ຄວາມບົກພ່ອງທັງຫມົດທີ່ ໄດ້ກ່າວມາແລ້ວໆນີ້ ໄດ້ກຳເນີດເກີດຂຶ້ນມາໃນທາງ ຄວາມສຳນຶກ. ຄວາມຄິດຝັນ ແລະມະໂນພາບ ທີ່ຫົວໃຈໄດ້ບົ່ງອອກມາ ໃຫ້ທາງຮ່າງກາຍ ສແດງອອກມາເປັນ ການກະທຳດີ ແລະທຳຊົ່ວ. ມີທາງດຽວທີ່ເຮົາຈະປ່ຽນແປງການກະທຳຊົ່ວ ມາເປັນການກະທຳດີກໍດີ "**ການພັທນາທາງດ້ານຈິດໃຈ**"

ວິທີການພັທນາທາງດ້ານຈິດໃຈທີ່ ຈະນຳມາສເນີໃນທີ່ນີ້ ກໍເປັນຫລັກການອັນດຽວ ກັບທີ່ໄດ້ກ່າວຢ່າງຫຍໍ້ໆໃນຕອນປາຍຂອງວັກ ໔ (ຄ່າຂອງຄວາມເປັນເອກຣາດ) ຄືອຳນາດການປົກຄອງຈະຕ້ອງ ອຸທິດແນວຄວາມ

ຄິດ ພາຫານະ ແລະການປະຕິບັດ ນະໂຍບາຍອັນເດັດຂາດ ຕໍ່ແຜນການທາງສາສນາ ສາທາຣະນະສຶກສາແລະການປະຕິຮູບສັງຄົມ. ວັທນະທັມແລະການປົກຄອງ.

໑. ການອົບຮົມທາງສາສນາ

ພຸທສາສນາຂອງເຮົາເປັນສາສນາທີ່ ສາມາດດູດດຶງຈິດໃຈປະຊາຊົນລາວ ສ່ວນໃຫຍ່ໃຫ້ເປັນຜູ້ຈເຣີນຢູ່ໃນຫລັກສິນທັມ, ມີຄວາມເມດຕາກະຣຸນາ, ມີນ້ຳໃຈເພື່ອແຜ່ແລະນິສັຍໃຈຄໍກວ້າງຂວາງ. ຄວາມດີເຫລົ່ານີ້ໄດ້ສທ້ອນມາຈາກ ຄຳສອນຂອງອົງສັມມາສັມພຸທເຈົ້າ ຫລາຍກວ່າມາຈາກສິ່ງອື່ນ (ໃນທາງຄອບຄົວແລະການສຶກສາ) ໂດຍສເພາະຢ່າງຍິ່ງ ແມ່ນພວກຜູ້ເຖົ້າຜູ້ແກ່ ຫລືຜູ້ໃຫຍ່ທີ່ມີອາຍຸເຄິ່ງຄົນຂຶ້ນໄປ (໑໘ ປີຂຶ້ນໄປ). ຫລັກຖານກໍຄືວ່າ ຄົນວັຍນີ້ບໍ່ສູ້ຈະຕ້ອງໂທດທາງອາດຍາ ດັ່ງກັບພວກວັຍນຸ່ມ ທັງນີ້ກໍເພາະວ່າ ພວກວັຍຣຸ່ນ ຍັງບໍ່ທັນເຂົ້າເຖິງຄຳສອນ ຂອງພຣະພຸທເຈົ້າເທື່ອ ຍ້ອນບໍ່ມັກເຂົ້າວັດຟັງທັມ ແລະບໍ່ຄອຍສົນໃຈນຳການຟັງທັມເທສນາ. ຜູ້ເຖົ້າຜູ້ແກ່ເຂົ້າວັດກໍເພື່ອຟັງທັມ ແລະຜູ້ນຸ່ມນ້ອຍເພື່ອຄວາມລື້ນເລີງ. ດັ່ງນີ້ວັດຫລືພຸທສາສນາ ຈຶ່ງເປັນຫົນທາງທີ່ດີທີ່ສຸດ ສຳລັບພັທນາຈິ.ໃຈຂອງຄົນວັຍແກ່ ແຕ່ສຳລັບວັຍນຸ່ມແລ້ວ ຈະຕ້ອງຕົກເປັນພາຣະຂອງພໍ່ແມ່ ແລະໂຮງຮຽນ.

໒. ການສາທາຣະນະສຶກສາ: ໄດ້ແກ່ການຝຶກແອບອົບຮົມເດັກນ້ອຍ ໂດຍເລີ້ມແຕ່ຂັ້ນອະນຸບານຂຶ້ນໄປເຖິງ ປະຖົມສຶກສາ ມັທຍົມສຶກສາ. ມະຫາວິທຍາລັຍແລະການສຶກສາຂອງຜູ້ໃຫຍ່. ນອກຈາກໂຮງຮຽນຂັ້ນ

ຕ່າງໆທີ່ກ່າວມາແລ້ວນີ້

ພາຫານະອັນສຳຄັນອີກອັນນຶ່ງ ທີ່ຈະຊ່ວຽໃຫ້ແຜນການ ສາທາຣະນະສຶກສາ ບັນລຸເຖິງເປົ້າໝາຍກໍຄື "ການຖແລງຂ່າວ ແລະໂຄສນາການ" ເພາະສນັ້ນກະຊວງສຶກສາທິການ ແລະຖແລງຂ່າວໂຄສນາການ ຈຶ່ງຕ້ອງຮ່ວມວາງແຜນການ ສາທາຣະນະສຶກສານີ້ ຢ່າງໃກ້ຊິດ ຫລັກສູດ ແລະບົດຮຽນຕ່າງໆ ທີ່ກ່ຽວກັບເຣື່ອງນີ້ ໃຫ້ຢູ່ພາຍໃຕ້ການຄວບຄຸມ ດູແລ ຂອງກະຊວງສຶກສາທິການ ສ່ວນການເຜີຍແຜ່ ຫລືການສື່ສານ ນຳຄວາມຮູ້ ໄປສູ່ສາທາຣະນະຊົນນັ້ນ ໃຫ້ເປັນພາຣະຂອງກະຊວງຖແລງຂ່າວໂຄສນາການ ຊຶ່ງມີພາຫານະສຳລັບສື່ສານ ຣາຍການສຶກສາຢູ່ຫລາຍແບບຫລາຍສນິດ ເປັນຕົ້ນ ໜັງສືພິມ ວິທະຍຸກະຈາຍສຽງ ໂທຣະທັດແລະອື່ນໆອີກ.

ທັງນີ້ກໍຍ້ອນເຫດຜົນທີ່ວ່າ ກຸ່ມມວນຊົນຂອງເຮົາສ່ວນໃຫຍ່ຍັງນິຍົມເພີດເພີນນຳພາຫານະດັ່ງກ່າວນີ້ຫລາຍຢູ່ ຈຶ່ງເຫັນສົມຄວນສວຍໂອກາດອົບໂຮມ ບົ່ມນິສັຍຂອງກຸ່ມມວນຊົນ ດ້ວຍວິທີການດັ່ງກ່າວ.

ເຖິງວ່າວິທີການດັ່ງກ່າວນີ້ ຈະເປັນພຽງລາຍການເພີ່ມເຕີມຈາກການສຶກສາທົ່ວໆໄປກໍຈິງ ແຕ່ເປັນວິທີການທີ່ຈະໃຫ້ໝາກ ໃຫ້ຜົນຫລາຍທີ່ສຸດຈຶ່ງຂໍຮຽນສເນີມາໃນທີ່ນີ້. ທີ່ກ່າວມາແລ້ວໆນີ້ ບໍ່ໄດ້ໝາຍຄວາມວ່າ ກະຊວງຖແລງຂ່າວ ໂຄສນາການ ແລະກະຊວງສຶກສາທິການ ບໍ່ໄດ້ເຄີຍປະຕິບັດການດັ່ງກ່າວມານີ້ເລີຍ. ແຕ່ວ່າການກະທຳດັ່ງກ່າວນີ້ ອາດຂາດການກົມກ່ຽວ ແລະ ປະສານງານກັນຢ່າງໃກ້ຊິດ ຈຶ່ງເປັນເຫດໃຫ້ລາຍການອັນນີ້ ບໍ່ປະກົດເປັນ

ປົກກະຕິ ບໍ່ເມື່ອງມົດ ແລະບໍ່ສມ່ຳສເມີ.

ນອກຈາກຣາຍການ ຂອງກະຊວງສຶກສາທິການແລ້ວ ກະຊວງຖແລງຂ່າວ ແລະໂຄສນາການ ເປັນກະຊວງທີ່ມີບົດບາດສຳຄັນທີ່ສຸດ ໃນການປັບປຸງ ການຝຶກຝົນ ແລະການຟື້ນຟູດ້ານຈິຕວິທຍາ ຫລືການອົບໂຮມຈິດໃຈຂອງກຸ່ມມວນຊົນໃຫ້ຈເຣີນກ້າວຫນ້າ.

ການອົບໂຮມໃນດ້ານນີ້ຈະຕ້ອງອາສັຍຄູ່ມືອັນລະອຽດ ຊຶ່ງກະຊວງສຶກສາທິການບົ່ງອອກ ໃຫ້ທົ່ວເຖິງກັນ ແລະຢ່າງກວ້າງຂວາງທີ່ສຸດ: ເຣື່ອງທີ່ຄວນນຳມາສອນກ່ອນຄື:

໔໑ * ຝຶກແອບຂັ້ນອະນຸບານສຶກສາ ແລະປະຖົມສຶກສາໃຫ້ຮູ້ເຖິງ (ຮວມທັງໂຮງຮຽນເອກຊົນດ້ວຍ)

* ສິລທັມ, ວັທນະທັມ: ຄວາມສັຕຊື່. ຄວາມອ່ອນຫວານ ແລະມາຣະຍາດຂອງສົມບັດຜູ້ດີ.

* ສິ່ງທີ່ຄວນສັກກາຣະບູຊາ: ພຣະພຸທເຈົ້າພ້ອມດ້ວຍທັມອັນປະເສີດ ປະເທດຊາດ. ທຸງຊາດແລະອົງປະມຸກຂອງຊາດ.

* ການຢູ່ຮ່ວມກັນໃນວົງສັງຄົມ:ຮູ້ຈັກສິດທິດຂອງຕົນແລະຂອງຄົນອື່ນ ການຊ່ວຍຮັກສາຜົນປໂຍດສ່ວນຮວມ, ການຊ່ວຍເຫລືອຕົວເອງ ຊ່ວຍເຫລືອເພື່ອນມະນຸດດ້ວຍກັນ ແລະຊ່ວຍຊາດ ດ້ວຍສິ່ງເລັກໆນ້ອຍໆ.

* ຄວາມເມດຕາກະຣຸນາ ແລະຄວາມກະຕັນຍູກະຕະເວທີ ຕໍ່ເພື່ອນ

24/VII

ມະນຸດຜູ້ຕົກທຸກໄດ້ຍາກ ຕໍ່ຜູ້ມີບຸນຄຸນ, ຕໍ່ຜູ້ທີ່ໄດ້ທຳຄຸນງາມຄວາມດີແກ່ປະເທດຊາດ ແລະຕໍ່ສິ່ງທີ່ຊາດໄດ້ນຳຜົນມາສູ່ຕົນ (ເຊັ່ນ ໂຮງໝໍ ໂຮງຮຽນເຫລົ່ານີ້ເປັນຕົ້ນ).

໔໘ . ອົບໂຮມຢູ່ໃນຂັ້ນມັທຍົມ ແລະມະຫາວິທະຍາລັຍ.

- ພູມີສາດ ແລະພົງສາວະດານຂອງລາວ ແລະຂອງໂລກ ເພື່ອໃຫ້ນັກສຶກສາໄດ້ຮູ້ເຖິງຖານະຄວາມເປັນຢູ່ຂອງຊາດ ແລະຂອງປະຊາຊົນຊາດອື່ນ (ໃນໂລກຢ່າງລະອຽດ).
- ສິດທິຂອງມະນຸດ ແລະກົດໝາຍ
- ການປົກຄອງໃນຣະບອບຕ່າງໆ
- ສາສນາພຸທ (ຟັງທັມເທສນາຂອງພຣະພຸທອົງອັນເລີກເຊິ່ງ)
- ສັງຄົມ ແລະວັທນະທັມຂອງລາວ ແລະຂອງຊາດອື່ນ
- ການຝຶກທຳງານ ເພື່ອຊ່ອຍຕົນເອງ ແລະຊ່ອຍຊາດ
- ການສ້າງຄວາມສາມັກຄີໃນວົງສັງຄົມ (ສິ່ງທີ່ຄວນປະຕິບັດຕໍ່ເພື່ອນມະນຸດໃນວົງສັງຄົມດຽວ)
- ການໃຫ້ກຽດແກ່ຊາດ, ພາສາ, ປະເພນີ, ວັທນະທັມຂອງຊາດ
- ການບຳເພັນຕົນຢູ່ໃນລັກສນະທີ່ຈະເປັນພົລະເມືອງດີ, ເປັນຜູ້ຮັບໃຊ້ຊາດ ແລະເປັນຜູ້ນຳຂອງຊາດທີ່ດີ ແລະອື່ນໆອີກ.

໔໙ . ສຳລັບການສຶກສາຂອງຜູ້ໃຫຍ່ນັ້ນ ຈະຕ້ອງເນັ້ນໜັກໄປໃນທາງການແນະນຳ, ທາງພາກວິຊາການຕ່າງໆ ອັນທີ່ກ່ຽວກັບການອອກຕົວຢ່າງອັນ

ດີແກ່ເຍົາວະຊົນ. ຫລັກສູດທີ່ກ່າວໄວ້ໃນຂໍ້ ໔໑ ແລະ ໔໔ ນີ້ຜູ້ໃຫຍ່ທຸກໆຄົນ ໂດຍສະເພາະນາຍຄູ, ຜູ້ນຳ, ຜູ້ເປັນພໍ່ເປັນແມ່ແລະຜູ້ໃຫຍ່ທຸກໆຄົນ ຈະຕ້ອງຮຽນ ຮູ້ຫລືຢ່າງນ້ອຍກໍຕ້ອງບັງຄັບໃຫ້ຮຽນຮູ້ໃນຂັ້ນປະຖົມສຶກສາ. ທັງນີ້ກໍເພື່ອຈະໄດ້ອອກຕົວຢ່າງອັນເດັດຂາດ ໃນການປະຕິບັດຕາມຫລັກສູດພົລະເມືອງດີ ຂອງກະຊວງສຶກສາທິການ. ພາຫານະສຳຄັນທີ່ຈະມາບັງຄັບໃຫ້ຜູ້ໃຫຍ່ປະຕິບັດຕົນ ເປັນຕົວຢ່າງອັນດີແກ່ເຍົາວະຊົນກໍຄື "ກົດບັງຄັບ" ໃຫ້ທຸກຄົນປະຕິບັດຊຶ່ງໄດ້ແກ່ການ ອອກກົດບັນຍັດຫລືກົດໝາຍກ່ຽວກັບການປະຕິບັດຕົວເປັນພົລະເມືອງດີຂອງຊາດ ຖືວ່າການລະເຫລີງໃນການປະຕິບັດຕາມບົດສຶກສາພົລະເມືອງດີນີ້ເປັນຄວາມຜິດ ແລະຄວນລົງໂທດຜູ້ກະທຳຜິດຢ່າງສົມສ່ວນ.

ການທີ່ເຮົາຈະປະຕິບັດເຣື່ອງນີ້ໄປໄດ້ສຳເຣັດ ກໍຕ້ອງອາໃສອຳນາດການບໍຣິຫານ ແລະຕຸລາການອັນເຂັ້ມແຂງ ກວ່າທີ່ເປັນຢູ່ໃນປັດຈຸບັນນີ້.

ຈະຢ່າງໃດກໍດີ, ທີ່ໄດ້ກ່າວມານີ້ເປັນພຽງທິສດີຊື່ໆ ສ່ວນພາກປະຕິບັດນັ້ນ ສຳລັບຣາຊອານາຈັກລາວຂອງເຮົາ ເຫັນວ່າເປັນການຍາກ ໂດຍສະເພາະໃນຂັ້ນມັທຍົມ ແລະມະຫາວິທະຍາລັຍ ເພາະນາຍຄູທີ່ສອນສ່ວນຫລາຍ ຍັງເປັນຊາວຕ່າງດ້າວຢູ່ ຊຶ່ງການສອນກໍໄດ້ເນັ້ນໄປແຕ່ໃນທາງວິຊາຄວາມຮູ້ທົ່ວໄປ ແລະ

ບໍ່ເຄີຍສົນໃຈຕໍ່ຄວາມເຣິະຮ້າຍ ທີ່ຝັງຢູ່ໃນຈິດໃຈຂອງເຍົາວະຊົນລາວເລີຍ. ແລະອີກຢ່າງນຶ່ງພວກເຮົາຍັງບໍ່ພຽງພ້ອມທີ່ຈະປະຕິບັດຕົນ ບໍ່ວ່າແຕ່ຈະເປັນຜູ້ນຳທີ່ດີ ແຕ່ເປັນພຽງພົລເມືອງດີກໍ່ຍັງຍາກ.

ຜົນທີ່ເຮົາໄດ້ຮັບຈາກການເມີນເສີຍໃນເຣື່ອງນີ້ກໍ່ຄື ເຍົາວະຊົນລາວບາງສ່ວນໄດ້ກາຍເປັນກຸ່ມມານໄປຫລາຍແລ້ວ ແລະສ້າງຄວາມລຳຄານໃຈແກ່ເຈົ້າໜ້າທີ່ ຜູ້ຮັກສາຣະບຽບ ແລະພໍ່ແມ່ຢ່າງເນືອງນິດ. ດັ່ງຈະບໍ່ມີໃຜປະເສດວ່າ ຜູ້ທີ່ເມົາເຣຣາອາຣະອາດ ຕາມສຖານທີ່ລົ້ນເລີງຕ່າງໆ, ກໍ່ການຄາຕກັມໃນເຊີງຕ່າງໆ, ໃຊ້ຍານພາຫານະຂອງພໍ່ແມ່ໄປທ່ຽວອຶ້ນອຶນສຳເລົາ, ໃຊ້ເງິນພໍ່ແມ່ໄປໃນທາງອັປໂຍດ, ຂີ່ຣົຖຈັກບໍ່ມີທໍ່ອອກທ່ຽວຣົບກວນ: ບາງລາຍກໍ່ລັກຜັກຈົກທີ່, ບາງພ່ອງກໍ່ປຸ້ນສະດົມ ແລະບາງພ່ອງກໍ່ທຳການອາດຍາກັມ ແລະອື່ນໆນັ້ນ ສ່ວນຫລາຍລ້ວນແຕ່ເປັນພວກນຸ່ມນ້ອຍວັຍຄນອງ ອາຍຸບໍ່ທັນເຖິງກະສຽນ ແລະຢູ່ໃນວັຍຮຽນທັງນັ້ນ.

ກຸ່ມມານພວກນີ້ ບາງສ່ວນກໍ່ເປັນເຖິງລູກເຈົ້າຫລານນາຍລູກເຈົ້າພໍ່ພໍ່ແມ່ ຄັນເມື່ອຖືກມືກົດໝາຍຈັບໄດ້ ບັນດາພໍ່ແມ່ແລະເຈົ້ານາຍເຫລົ່ານີ້ກໍ່ແລ່ນເຂົ້າຂ້າງຄົນຜິດ ໂດຍບໍ່ຍອມຟັງເຫດຟັງຜົນ ແລະໃຊ້ສິດຢຽບຢ່ຳຣະບຽບ ແລະກົດໝາຍຂອງບ້ານ

ເມືອງຢ່າງບັງອາດ ຫລືໂດຍຮູ້ເທົ່າບໍ່ເຖິງການ.

ຄ . ການປະຕິຮູບສັງຄົມ, ວັທນະທັມ ແລະການປົກຄອງ

ດັ່ງທີ່ໄດ້ກ່າວມາແລ້ວວ່າ ການພັທນາທາງດ້ານຈິດໃຈຂອງຄົນ ຈະຕ້ອງອາສັຍ :

໑)- ສາສນາ

໒)- ການສຶກສາ

໓)- ການປະຕິຮູບສັງຄົມ, ວັທນະທັມ ແລະການ ການປົກຄອງ ດັ່ງທີ່ຈະໄດ້ຂັນຍາຍຕໍ່ໄປນີ້ :

ກ . ດ້ານສັງຄົມ : ສັງຄົມອັນທີ່ພວກເຮົາກຳລັງຫລົງກັນວ່າ ເປັນຂອງດີໃນປັດຈຸບັນນີ້ ໄດ້ສ້າງຄວາມເສື່ອມເສັຽ ມາສູ່ປະເທດຊາດບ້ານເມືອງ ແລະສູ່ປະຊາຊົນລາວ ຢ່າງບໍ່ຮູ້ສຶກຕົວ. ສິ່ງລົກປົກທີ່ມີຢູ່ໃນວົງສັງຄົມ ຂອງເຮົາໃນປັດຈຸບັນນີ້ ມັນມີຫລາຍອັນຫລາຍແນວຈົນເຫລືອທີ່ຈະພັລນາ ແຕ່ເຮົາຈະໄດ້ກ່າວສເພາະ ແຕ່ເຣື່ອງທີ່ຄວນປະຕິຮູບ ຫລືດັດແປງໄວທີ່ສຸດກໍ່ຄື :

ກ ໑ . ການພະນັນ : ເມື່ອເຮົາໄປທ່ອງທ່ຽວ ຫລືສຶກສາ ຫລືປະກອບກິດການ ທີ່ຕ່າງປະເທດເຮົາເຄີຍເຫັນເຂົາ ຫລິ້ນພະນັນຢູ່ແຕ່ໃນກາຊີໂນ ແຕ່ການພະນັນບ້ານເຮົານີ້ ຫລິ້ນກັນຢູ່ທົ່ວທຸກຫົນແຫ່ງ, ຢູ່ຕາມເຮືອນດີ, ເຮືອນດອງ, ເຮືອນບຸນ ແລະໃນງານຕ່າງໆ ຖືວ່າການຫລິ້ນພະນັນໃນງານຕ່າງໆທີ່ກ່າວມານີ້ ເປັນປະເພນີຮີດຄອງທີ່ນິຍົມກັນຢ່າງອອກ

ໜ້າອອກຕາ, ເພາະຖ້າເຮືອນໃດ ຫລືສະຖານທີ່ໃດ ເຮັດງານໂດຍບໍ່ມີການຫລິ້ນພະນັນແລ້ວ ກໍຖືວ່າຫລ້າຫລັງ, ບໍ່ຄຶກຄື້ນ ແລະບໍ່ທັນສມັຍ. ນອກຈາກນີ້ແລ້ວ ຖ້າຜູ້ໃດບໍ່ຫລິ້ນການພະນັນກໍຖືວ່າ ເປັນຄົນຍໍ່ມີສັງຄົມດີ: ບໍ່ມີຜູ້ນັບໜ້າຖືຕາ ແລະກາຍເປັນຄົນຜູ້ທີ່ບໍ່ໄດ້ລັບກຽດ ແລະການຕ້ອນຮັບຈາກສັງຄົມ. ໃນທາງທິສດີແລ້ວ ການຫລິ້ນພະນັນ ເປັນສິ່ງທີ່ຜິດກົດໝາຍ, ແຕ່ໃນພາກການປະຕິບັດແລ້ວຖືວ່າເປັນການຊຸມນຸມຂອງພວກຜູ້ດີມີເງິນ (ຫລືພວກຂຸນນາງ). ກົດໝາຍຫລືຄຳສັ່ງທີ່ ອອກໃຊ້ສຳລັບປາບປາມການພະນັນທຸກປະເພດ (ໄພ້, ໝາກອີເຕົາ ລີໂນລັກ, ເບ້ຽ ຖົ່ວ ແລະອື່ນໆ)ໃຊ້ໄດ້ແຕ່ສຳລັບປາບເດັກນ້ອຍທີ່ຫລິ້ນ ໕ ຫລິ້ນ ໑໐. ສ່ວນພວກທີ່ຫລິ້ນເງິນໝື່ນເງິນແສນ ແລະເງິນລ້ານນັ້ນ ຫລິ້ນໄດ້ຕາມສບາຍ. ເພາະພວກນີ້ເປັນຄົນໆດຽວກັບຜູ້ທີ່ແຕ່ງກົດບັນຍັດແລະອອກຄຳສັ່ງ .

ທ່ານຜູ້ທີ່ມີຄວາມຮູ້ ຄວາມສລາດທັງຫລາຍ ລອງຊ່ວຍກັນຄິດເບິ່ງດູວ່າ ຕົ້ນຕໍທີ່ພາໃຫ້ການພະນັນ ແພ່ຜາຍຖາຍທອດກັນຢູ່ທຸກວັນນີ້ ໄດ້ກຳເນີດມາຈາກຜູ້ໃຫຍ່ຜູ້ໂຕຂອງບ້ານເມືອງຫລື ວ່າມາຈາກທ້າວ ກ ຫລືທ້າວ ຂ ທີ່ອ່ານບໍ່ອອກຂຽນບໍ່ໄດ້ ຢູ່ຕາມບ້ານໄຮ່ບ້ານນາ ? ການປາບປາມການພະນັນທີ່ ພວກເຮົາປະກົດເຫັນເພິ່ນ ປະຕິບັດກັນທຸກວັນນີ້ ເປັນພຽງສາກລະຄອນລິງ. ຜົນຮ້າຍທີ່ເກີດຈາກສັງຄົມພະນັນນີ້ ໄດ້ນຳຄວາມຫຽນໂຫດມາສູ່ຈິດໃຈຂອງຄົນໃນຊາດ

ອັນເປັນການກໍ່ໃຫ້ເກີດ ການອາດຍາກັນການປຸ້ນຣະດົມ ການຫລັກຫລືການລັກ ການສໍ້ຣາດບັງຫລວງແລະອື່ນໆອີກ

ກ ໖ . ເສຣີພາບສເມີພາບ ໃນບົດນຳຂອງຣັຖທັມມະນູນ ແຫ່ງຣາຊອານາຈັກລາວ ໄດ້ປະກັນໄວ້ວ່າພົລເມືອງລາວທຸກຄົນ ມີສິດເສຣີພາບແລະສເມີພາບ ຕໍ່ຫນ້າກົດຫມາຍ, ການຢູ່ກິນ, ການເຊື່ອຖືການລັບໃຊ້ຊາດ, ການປະກອບອາຊີບເພື່ອດຳຣົງຊີວິດ, ການສຶກສາການເຄົາຣົບ, ແລະອື່ນໆ. ແລະກ່າວຢ້ຳອີກໃນມາຕຣາ ໔໖ ຫມວດເຈັດບົດສຸດທ້າຍວ່າ: ສະພາແຫ່ງຊາດ ແລະກອງປະຊຸມຣາຊມົນຕຣີ ຮ່ວມເຂົ້າກັນເປັນ ກອງປະຊຸມຫລວງແຫ່ງຊາດ ມີສິດລົງມະຕິປ່ຽນ, ເພີ້ມເຕີມ ແລະແກ້ໄຂມາຕຣາຕ່າງໆໄດ້ດ້ວຍການອອກສຽງສ່ວນຫລາຍ ແຕ່ໃນຕອນສຸດທ້າຍ ກ່າວຢ້ຳວ່າ: ບໍ່ມີອຳນາດໃດໆທັງຫມົດຈະມີສິດແກ້ໄຂ ຫລືປ່ຽນແປງບົດບັນຍັດກ່ຽວ ເຣື້ອງການປົກຄອງແບບມີພຣະມະຫາກະສັດ, ການຮ່ວມປະເທດເປັນອັນນຶ່ງອັນດຽວ, ການປົກຄອງແບບປະຊາທິປະໄຕແລະຫລັກການແຫ່ງຄວາມເສຣີພາບ ແລະສເມີພາບຊຶ່ງຣັຖທັມມະນູນສບັບນີ້ ໄດ້ຮັບລອງໄວ້ແລ້ວເດັດຂາດ.

. ນອກຈາກນີ້ ກອງປະຊຸມໂລກ ຍັງໄດ້ປະກາດສິດທິຂອງມະນຸດທົ່ວໂລກ (*Droits de l'homme*) ເຊັນສັນຍາທີ່ປາຣີ ເມື່ອວັນທີ ໑໐ ທັນວາ ໑໙໔໘ ເພື່ອປະກັນສິດ ຂອງມະນຸດທົ່ວໂລກຢ່າງສມ່ຳສເມີ. ທັງທີ່ມີກົດບັນຍັດຂອງໂລກ ແລະກົດຫມາຍສູງສຸດຂອງຊາດຮັບຮູ້ ແລະປ້ອງກັນສິດທິຂອງຄົນ ກ່ຽວກັບເສຣີພາບ ແລະ

ສເມີພາບແຕ່ວ່າຜູ້ອາພັບສ່ວນຫລາຍ ຍັງບໍ່ໄດ້ຮັບສິດອັນນີ້ເທົ່າທຽມມະນຸດກະດຸມພີ ກົດບັນຍັດອັນສວຍງາມທີ່ພວກເພິ່ນຕົກແຕ່ງຂຶ້ນນີ້ ເປັນພຽງແຕ່ທິສດີທີ່ສວຍງາມໃນຫນ້າເຈັ້ຽ ສ່ວນການປະຕິບັດແລ້ວ ຍັງມີການລັດໂກງກັນຢູ່ເຊັ່ນວ່າ.

ກ ໒໑. ຕໍ່ຫນ້າກົດຫມາຍ: ດັ່ງທີ່ໄດ້ກ່າວມາແລ້ວໃນຂໍ້ ໒, ກົດຫມາຍເປັນບັນທັດແລະຂໍ້ກຳນົດ ສິດທິຂອງທຸກໆຄົນຢ່າງສມ່ຳສເມີ ແລະບໍ່ມີການຍົກເວັ້ນ ແຕ່ບໍ່ມີຄວາມຫມາຍສຳຫລັບພວກກະດຸມພີ ພວກນີ້ ມີເສຣີພາບເຫນືອກົດຫມາຍ ແລະກະທຳໄດ້ທຸກສິ່ງທຸກຢ່າງຕາມຊອບໃຈເຊັ່ນ

* ຕັ້ງໂຮງພະນັນເຖື່ອນ
* ຄ້າຂອງເຖື່ອນ ສໍ້ຣາດບັງຫລວງ ຫລືຍັກຍອກເອົາຂອງຣັຖມາເປັນຂອງໂຕ
* ໃຊ້ອິດທິພົນ ຫາລ້າຫາລວຍນຳຄົນຕ່າງດ້າວແລະອື່ນອີກຮ້ອຍແປດພັນປະການ ຊຶ່ງລ້ວນແລ້ວແຕ່ເປັນຄວາມຜິດຕໍ່ກົດຫມາຍ.

ແຕ່ຖ້າແມ່ນພວກກະດຸມພີກະທຳແລ້ວ ກໍ່ຢູ່ໄດ້ຢ່າງລອຍນວນແລະກັບກາຍເປັນຜູ້ຮັ່ງມີສີສຸກໄປອີກ. ແຕ່ຖ້າເປັນປະຊາຊົນສາມັນກະທຳແລ້ວ ອຳນາດບໍລິຫານ ຈະບໍ່ອາພັຍເດັດຂາດ. ແລ້ວຄຳວ່າສເມີພາບຕໍ່ກົດໝາຍນັ້ນມີຢູ່ໃສ? (ອາດມີຢູ່ອັງກິດຫລືອາເມຣິກາ ແລະປະເທດອື່ນໆແຕ່ສຳລັບຢູ່ຣາຊອານາຈັກລາວ ຍັງເປັນຄວາມຝັນຢູ່).

ກ ໒໔ . ດ້ານສຶກສາແລະຕໍາແໜ່ງໃນຣາຊການ:

ໂຮງຮຽນຂັ້ນມັທຍົມສຶກສາ ເປັນບ່ອນທີ່ອຶດແລະມີນ້ອຍທີ່ສຸດ ໃນຣາຊອານາຈັກລາວ, ແຕ່ລະປີມີຜູ້ເສັງເຂົ້າມັທຍົມປີທີ ໑ ທັງລາວແລະຕ່າງດ້າວປະມານ ໑໐ ຫາ ໑໔ ພັນຄົນ. ຖ້າບໍ່ມີການຄອບຄຸມດັ່ງແຕ່ຄາວກ່ອນ ຜູ້ທີ່ສອບເສັງໄດ້ ໘໐ ເປີເຊັນ ມັກຈະເປັນຊາວຕ່າງດ້າວ (ວຽດນາມຝຣັ່ງເສດ) ຄວາມພຍາຍາມຂອງເຈົ້າໜ້າທີ່ ຜູ້ລັບຜິດຊອບໃນເຣື່ອງນີ້ທີ່ຈະເຮັດໃຫ້ໂຮງຮຽນ ຂັ້ນມັທຍົມດັ່ງກ່າວນີ້ ເປັນຂອງລາວໂດຍແທ້ນັ້ນ ສ່ວນນຶ່ງໄດ້ຖືກທໍາລາຍລົງ ດ້ວຍຄົນຕ່າງດ້າວ ທີ່ຍັງຕ້ອງການຮັກສາຜົນປໂຍດຂອງຕົນຢູ່ ແລະສ່ວນທີສອງດ້ວຽອຶດທີ່ພົນເຖື່ອນ ຂອງເຈົ້ານາຍບາງຄົນທີ່ດີດ້ານ ຝືນກົດຣະບຽບຂອງໂຮງຮຽນ ໃຊ້ໜັງສືນ້ອຍຫລືສິນຈ້າງ ເອົາລູກຫລານຂອງຕົນທີ່ເສັງຕົກ ແລະບໍ່ມີຄຸນວຸດທິເຂົ້າຮຽນ ຈໍາເປັນລູກທ້າວສີທ້າວສາທັງຫລາຍທີ່ມີຄຸນວຸດທິ ແລະຄວາມຮູ້ດີຕ້ອງຜິດຫວັງ. ການໃຊ້ໜັງສືນ້ອຍແລະສິນຈ້າງດັ່ງກ່າວນີ້ບໍ່ມີ ສເພາະແຕ່ໃນການເຂົ້າວິທຍາລັຍເທົ່ານີ້ ແຕ່ຍັງມີໃຊ້ກັນໃນການ ໃຫ້ເງິນທຶນອອກໄປສຶກສາຕ່າງປະເທດ, ການເຂົ້າຮັບໃຊ້ຣາຊການການແລະຮັບຕໍາແໜ່ງຕ່າງໆ ຊຶ່ງຄວນຈະອັດແທກກັນດ້ວຍຄຸນວຸດທິ ບໍ່ແມ່ນດ້ວຍສິດອໍານາດ ແລະຄວາມຮັ່ງມີ.

ກ ໒໕ . ໃນວົງສັງຄົມ: ໂດຍທົ່ວໄປແລ້ວ ວົງສັງຄົມຂອງລາວເຮົາ ຍັງມີຍົມແບ່ງຊັ້ນວັນນະກັນຢູ່. ຈິງຢູ່ທີ່ວ່າສັງຄົມກໍຕ້ອງມີລະດັບຊັ້ນວັນນະ (ຊຶ່ງຕ້ອງຖືກັນວ່າເປັນກຽດຕິຍົດ ແລະຕໍາແໜ່ງຂອງຜູ້ນໍາທີ່ຄວນ

ເຄົາຣົບແລະນັບຖື) ແຕ່ວ່າກຽດແລະຕຳແໜ່ງເຫລົ່ານີ້ ກໍຕ້ອງມີຂອບເຂດຂອງມັນຢູ່ດີກັນ ແລະບໍ່ຄວນໃຫ້ຟຸ້ມເຟືອຍຈົນເກີນໄປ.ກ່າວຄືຈະຕ້ອງຮູ້ຈັກໃຫ້ກຽດ ແລະເຫັນໃຈຊຶ່ງກັນແລະກັນ ເພາະທຸກຄົນຕ້ອງການຢາກເປັນຜູ້ດີຜູ້ເດັ່ນ ແຕ່ວ່າຈະດີເດັ່ນໆດ້ວຍກັນໝົດທຸກຄົນນັ້ນເປັນໄປບໍ່ໄດ້ ດັ່ງນີ້ການຊີງດີຊີງເດັ່ນ ຊີງຮັ່ງຊີງມີຈຶ່ງຕ້ອງເປັນໄປຕາມກາລະເທສະຂອງມັນ ບໍ່ຄວນຈະຊອກເອົາ ແຕ່ປຽບເດັກນ້ອຍທັ້ງທາງຂຶ້ນແລະທາງລ່ອງ. ເປັນຕົ້ນວ່າຜູ້ຫລັກຜູ້ໃຫຍ່ ມີເງິນເດືອນຫລາຍມີເຮືອນຢູ່, ມີຣົຖຫລວງ ແລະຣົຖສ່ວນຕົວຕັ້ງຫລາຍຄັນ ມີເງິນມີເສດລຳລັບສາຣະພັດ ແລະສິດອື່ນໆອີກ. ເຫັນລູກນ້ອງມາການຊ້າດ້ວຍເຫດຜົນທາງຄອບຄົວ ແທນທີ່ຈະເຫັນອົກເຫັນໃຈ ຊ້ຳພັດຖືວ່າເປັນຄວາມຜິດ ໂດຍບໍ່ຄຳນຶງເຖິງວ່າ ຄວາມຕ້ອງການໃນທາງຮ່າງກາຍເພື່ອດຳຣົງຊີວິດຂອງນາຍກັບລູກນ້ອງມີເທົ່າກັນ. ແລະມັກລືມສເນີວ່າຖ້າຕົນມີເງິນເດືອນ ໑໐ ຫາ ໑໔ ພັນ ຊິເຂົ້າສານກະສອບນຶ່ງກໍທັງຍາກ. ຕ້ອງໄດ້ຍ່າງມາການ ຕ້ອງໄດ້ລ້ຽງລູກລ້ຽງເມັຽ ແລະຕ້ອງໄດ້ຮັບໃຊ້ຣາຊການເທົ່າຕົນ ຫລືຫລາຍກວ່າຕົນໆຈະປະຕິບັດໄດ້ດັ່ງເຂົາຫລືບໍ່? ໃນເມື່ອທຸກຄົນມີຄວາມຢາກເທົ່າກັນ ມີກຳລັງວັງຊາເທົ່າກັນແລະມີຄວາມຕ້ອງການ ໃນທາງຊີວິດຢ່າງດຽວກັນ ບໍ່ຄວນຈະເອົາປຽບກັນຢ່າງຫູດັບຕັບໄໝ້ ສິດທິທີ່ເພີ່ນໄດ້ເພື່ອຈາກຜູ້ນ້ອຍນັ້ນ, ຖ້າຈະປຽບກໍເທົ່າກັບຈຳນວນນ້ຳໜັກອາຫານ ທີ່ຕ້ອງນຳໄປລ້ຽງຊ້າງ

ໄດ້ ແລະຂອງຜູ້ອາພັບໄດ້ແຕ່ພຽງລ້ຽງແມວ (ຜູ້ກິນພໍຣາກຜູ້ຢາກໆພໍຕາຍ) ຜູ້ໃຫຍ່ມີແຕ່ທາງໄດ້ ແລະຜູ້ນ້ອຍມີແຕ່ທາງເສັຽ ຈະເຮັດຫຍັງທໍາຫຍັງ ຜູ້ນ້ອຍຕ້ອງເສັຽຄ່າທໍານຽມ ສ່ວນຜູ້ໃຫຍ່ມີແຕ່ການຍົກເວັ້ນ ແລະໄດ້ຟຣີທັງນັ້ນ.

ການທີ່ເວົ້າມານີ້ ເຮົາບໍ່ປະສົງຢາກໃຫ້ທຸກຄົນເທົ້າທຽມກັນ ດັ່ງກັບພ້າກອງໃຊ, ແຕ່ຄວນຈະດັດແປງ ແລະຄໍານວນເບິ່ງເຫດຜົນຂອງການເອົາປຽບອັນນີ້ ໃຫ້ພໍສົມຄວນໂດຍຕັ້ງຢູ່ພື້ນຖານຂອງຫລັກການທີ່ວ່າ ໃຫ້ທຸກຄົນມີຢູ່ມີກິນຕາມອັດຕຣາ ຄວາມຕ້ອງການທາງຮ່າງກາຍ.

ຂ. ດ້ານວັທນະທັມ :

ວັທນະທັມປະຈໍາຊາດ ເປັນຂໍ້ກໍານົດອັນນຶ່ງ ທີ່ຕ່າງປະເທດໃຊ້ວັດແທກເບິ່ງຄວາມຈເຣີນກ້າວໜ້າຂອງອີກປະເທດນຶ່ງ. ທຸກໆປະເທດໃນໂລກຈະມີສິລປະ ແລະວັທນະທັມເປັນຂອງເຂົາເອງ, ເພາະສົມສໍາລັບພູມີປະເທດ, ຄວາມນຶກຄິດຂອງປະຊາຊົນ ແລະຮີດຄອງປະເພນີຂອງເຂົາ. ສໍາລັບລາວເຮົາກໍມີວັທນະທັມອັນສູງ ແລະເກົ່າແກ່ບໍ່ນ້ອຍໄປກວ່າຂອງຕ່າງປະເທດ ແລະເຄີຍໄດ້ຮັບຄວາມຍົກຍ້ອງຈາກຕ່າງປະເທດມາຫລາຍຕໍ່ຫລາຍແລ້ວ. ແຕ່ປັດຈຸບັນນີ້ວັທນະທັມອັນດີງາມຂອງເຮົາກໍາລັງຈະເສື່ອມລົງທຸກຂນະ ໂດຍສະເພາະຢ່າງຍິ່ງ ຜູ້ໃຫຍ່ພາກັນປະປ່ອຍໃຫ້ເດັກນ້ອຍວັຍຣຸ່ນຮູ້ຈັກກັບ :

* ການລັກອອກທ່ຽວກັບຜູ້ຊາຍ ຂອງຍິງສາວວັຍຣຸ່ນ (ທີ່ຍັງເປັນນັກຮຽນຢູ່) ຕາມສຖານທີ່ເຕັ້ນລຳແບບຝຣັ່ງ ແລະຍ່າງເລາະເກາະແອມ ຫລືກອດຄໍກັບຜູ້ຊາຍ ແລະບໍ່ເລີກັນແບບຝຣັ່ງ.

* ການນຸ່ງຖືແບບເຢັ້ຽຟ້າທ້າດິນ ປຸກໃຈເສືອປ່າ ອັນເປັນເຫດໃຫ້ເດັກນຸ່ມ ຫລືເດັກແກ່ຕົກເປັນອາດຍາກອນ ຫລືຖືກຄະດີຖານຂົ່ມຂືນສຳເລົາ ມາແລ້ວຫລາຍຕໍ່ຫລາຍ (ໜ້າເຫັນໃຈລູກຜູ້ຊາຍແທ້ໆ ອາກາດບ້ານເຮົາມັນຮ້ອນໄປໝົດທຸກດ້ານ ເມື່ອມີສິ່ງມາລໍ້ທ້າທາຍກໍເປັນຂອງທັມມະດາ ທີ່ຜູ້ຊາຍທຸກຄົນຕ້ອງເກີດຄວາມກະຫາຍ).

* ການຈິ້ງຜົມຍາວແບບຜີຫລອກກາງເວັນ (ຫິບປີ້) ຂອງເດັກຊາຍຈົນບໍ່ຮູ້ຈັກວ່າມັນຜູ້ຍິງຫລືຜູ້ຊາຍ ເພາະທັງຍິງທັງຊາຍ ລ້ວນແຕ່ມີຜົມຕັ້ງບ່າ ແລະສົ້ງຂາປັດດ້ອຍກັນທັ້ງນັ້ນ.

* ການກະທຳແບບລາມົກ ຢ່າງປະເຈີດປະເຈີຂອງເດັກນຸ່ມໃນທີ່ຊຸມນຸມຊົນ. ການກະທຳທັງໝົດນີ້ ເຫັນວ່າຜິດຕໍ່ປະເພນີຮີດຄອງຂອງລາວເຮົາຢ່າງຮ້າຍແຮງ ຜູ້ຂຽນເຄີຍທັກທາຍກັບລູກເຈົ້ານາຍຜູ້ນຶ່ງ ທີ່ກັບຈາກຝຣັ່ງເສດມາພັກຫລັງສຶກສາ ແລະກ່າວເຕືອນໃຫ້ຕັດຜົມເພື່ອໃຫ້ມີ

ຄວາມຈົບງາມ ເຂົາເລີຍກ່າວຕອບວ່າ ເອົາຢ່າງເຂົາງາມກວ່າ, ປະຢັດດີບໍ່ຕ້ອງເສັຽເງິນ ປ່ອຍໃຫ້ມັນເກີດຕາມທັມມະຊາດຂອງມັນ. ຕາມທັສນະຂອງຂ້າພະເຈົ້າແລ້ວຄົງຈະບໍ່ເປັນເຣື້ອງຂອງການປະຢັດ ເພາະພໍ່ແມ່ຄອບຄົວສາມາດສົ່ງໄປສຶກສາທີ່ຕ່າງປະເທດໄດ້ ເຊື່ອແນ່ວ່າຄົງຈະບໍ່ມີບັນຫາທາງການເງິນ ເພື່ອໃຫ້ລູກໄດ້ຕັດຜົມ, ນອກຈາກວ່າເດັກນຸ່ມເຫລົ່ານີ້ ໄດ້ໄປຝຶກແອບເອົາຄວາມປະພຶດອັນບໍ່ດີຈາກຕ່າງປະເທດ ແລ້ວມາແຜ່ຜາຍໃນບ້ານເກີດເມືອງນອນຂອງຕົນ. ຈິງຢູ່ເຮົາຕ້ອງຍອມຮັບເອົາວັທນະທັມອັນດີ ຈາກຕ່າງປະເທດເຂົ້າມາຮຽນແບບຢູ່ໃນລາວ ແຕ່ບໍ່ແມ່ນຈະນຳເອົາສິ່ງລາມົກ ດັ່ງທີ່ໄດ້ກ່າວມາແລ້ວນີ້. ເປັນຫຍັງຈຶ່ງບໍ່ຮຽນແບບເອົາວັທນະທັມອັນສູງ ໃນທາງມາຣະຍາດ, ຄວາມດຸໝັ່ນອົດທົນ, ຄວາມຮັກຊາດ, ນ້ຳໃຈເສັຽສລະ ເພື່ອຜົນປໂຍດສ່ວນຮວມ ແລະການປະຕິບັດຕົນໃຫ້ເປັນຜູ້ດີຕໍ່ສັງຄົມ ແລະອື່ນໆຂອງເຂົາເຈົ້າມາແຜ່ຜາຍບ້ານເຮົາ.

ມັນເປັນພາຣະຂອງຜູ້ຮັບຜິດຊອບ ແລະພວກເຮົາທຸກຄົນທີ່ເປັນພໍ່ແມ່ຕ້ອງຊ່ວຍກັນສັ່ງສອນ, ກີດກັນ ແລະຫ້າມປາມບໍ່ໃຫ້ລູກຫລານໄດ້ກະທຳສິ່ງທີ່ຜິດຕໍ່ຮີດຄອງປະເພນີຂອງເຮົາ ດັ່ງທີ່ໄດ້ກ່າວ

ມາແລ້ວນີ້ ແລ້ວຊ່ວຍກັນສນັບສນູນ ປ້ອງກັນວັທນະທັມອັນດີງາມທີ່ບັນພະບຸຣຸດຂອງລາວປົກປັກຮັກສາມາແລ້ວ ຈົນຕົກທອດມາເຖິງພວກເຮົາໃນປັດຈຸບັນ. ການຝຶກແອບເດັກນ້ອຍທີ່ດີທີ່ສຸດສຳລັບເຣື່ອງນີ້ກໍຄື "ການອອກຕົວຢ່າງຂອງຜູ້ໃຫຍ່ນັ້ນເອງ".

ຄ. ດ້ານການປົກຄອງ :

ຖ້າຈະກ່າວເຖິງການປົກຄອງ ກໍຕ້ອງກ່າວເຖິງຂ້າຣາຊການຄຽງຄູ່ກັນໄປ. ອຳນາດການປົກຄອງໄດ້ແກ່ຣັຖບານ ຊຶ່ງມີຂ້າຣາຊການ, ທະຫານ, ຕຳຣວດ ເປັນຜູ້ຮັບໃຊ້. ໜ້າທີ່ຂອງຜູ້ຮັບໃຊ້ຣາຊການກໍຄືອຸທິດຈິດໃຈແລະເຣື່ອແຮງ ເພື່ອຮັບໃຊ້ຊາດແລະປະຊາຊົນ. ແຕ່ເທົ່າທີ່ເປັນມາຈົນເຖິງທຸກວັນນີ້ ບໍ່ວ່າໃນທາງອຸດົມການ ແລະພາກປະຕິບັດ ຜູ້ຮັບໃຊ້ຣາຊການສ່ວນຫລາຍ ບໍ່ໄດ້ປະຕິບັດຕົນໃຫ້ເປັນທີ່ເພິ່ງແກ່ຊາດ ແລະປະຊາຊົນພໍປະມານ. ອຳນາດບໍຣິຫານຄວນຈະວາງແນວທາງຄັກແນ່ ວ່າຊາດຕ້ອງຮັບໃຊ້ຣາຊການ ຫລືຂ້າຣາຊການຕ້ອງຮັບໃຊ້ຊາດ? ຫລືເວົ້າອີກແນວນຶ່ງກໍຄືວ່າ ນະໂຍບາຍຂອງຣັຖນັ້ນຈະເນັ້ນໜັກແລະເຈາະຈົງໄປໃນທາງລັຽງດູ ຫລືເຫັນອົກເຫັນໃຈຜູ້ຮັບໃຊ້ຣາຊການຫລາຍກວ່າການຮັບໃຊ້ຊາດແລະປະຊາຊົນບໍ? ຖ້າເຫັນວ່າການຮັບໃຊ້ຊາດແລະປະຊາຊົນສຳຄັນກວ່າ ກໍຄວນຈະປະຕິບັດຕາມຫລັກການທີ່ກ່າວໄວ້ຂ້າງເທິງນີ້ ໂດຍຍຶດໝັ້ນຢູ່ໃນອຸດົມການທີ່ວ່າ "ຕົວຕາຍຊາດຢູ່" ໝາຍຄວາມວ່າຮັບໃຊ້ໂດຍປາສຈາກຄວາມ

ຫ່ວງໃຍນຳຄ່າຈ້າງຣາງວັນ, ການປະຕິບັດຕາມນະໂຍບາຍອັນນີ້ ໃນເບື້ອງຕົ້ນອາດຈະຍາກແດ່ ແຕ່ເຊື່ອແນ່ວ່າຈະຕ້ອງເປັນໄປໄດ້ແນ່ນອນ ຖ້າຫາກວ່າ :

໑ . ເປັນນະໂຍບາຍອັນເດັດຂາດຂອງຣັຖບານ

໒ . ບຸກຄົນຜູ້ທີ່ສັງກັດຢູ່ໃນອຳນາດການ ມີຄວາມບໍຣິສຸດ ແລະ ຂາວສອາດ

໓ . ປະຕິບັດຕາມຫລັກການປະຕິຮູບທາງສັງຄົມ ວັທນະທັມ ແລະການປົກຄອງດັ່ງທີ່ໄດ້ບັລຍາຍມາແລ້ວ.

ຖ້າບໍ່ດັ່ງນັ້ນກໍ່ບໍ່ມີບຸກຄົນວິເສດຜູ້ໃດຈະສາມາດ ເຮັດໃຫ້ວຽກການຂອງຣັຖດີຂຶ້ນ. ປັດຈຸບັນນີ້ຜູ້ຮັບໃຊ້ຣາຊການສ່ວນຫລາຍ ມີແຕ່ຄິດຫາຕົວເອງຫລາຍກວ່າຊາດ ແລະປະຊາຊົນ, ແທນທີ່ຈະຮັບໃຊ້ປະຊາຊົນ, ແທ້ ຈິງແມ່ນປະຊາຊົນຮັບໃຊ້ຕົນ ແລະແທນທີ່ຈະຮັບໃຊ້ຊາດ ກໍ່ເລີຍເປັນຝາກໄມ້ເກາະກິນຊາດ ຢ່າງເລືອດເຢັນເປັນຕົ້ນວ່າ:

* ອອກໄຖເອົາເງິນນຳວົງໄມ້ວົງໄປ, ນຳພໍ່ຄ້າຊາວຂາຍທີ່ຜິດຕໍ່ຣະບຽບ
* ອອກຮົບກວນຣາສດອນໃນເວລາຢ້ຽມຢາມຊົນບົດ
* ສໍ້ໂກງບັນຊີ ແລະກອບໂກຍເອົາເງິນ ແລະຂອງຣັຖ
* ຫລິ້ນເລ້ຫລ່ຽມໃສ່ປະຊາຊົນ ຜູ້ທີ່ມາປະກອບກິຈການຕ່າງໆ ເພື່ອຫາທົນທາງໄຖເງິນເຂົ້າກະເປົາ.

* ຖ້າບໍ່ມີແນວໂກງກໍໂກງເວລາ ປ່ອຍໃຫ້ລ້າການຊັກຊ້າ ຫລືປຸດຊຽກ ຫລືບໍ່ກໍປ່ອຍໃຫ້ຜູ້ມີວຽກກ່ຽວຂ້ອງຕ້ອງຜິດຫວັງເສັຽເວລາແລະອື່ນໆ.

* ຫລືຖ້າບໍ່ປະຕິບັດໃນທາງຜິດ ກໍມາການ ມົ້ງໝໍ່ແຕ່ຮອດໂມງ ໂດຍບໍ່ຄິດຫາວຽກ ແລະປັບປຸງຣາຊການຂອງຕົນໃຫ້ກ້າວໜ້າ ແລະນອກຈາກນີ້ກໍຍັງມີການບໍ່ເອົາໃຈໃສ່ຕໍ່ໜ້າທີ່ ອັນເປັນການເຮັດໃຫ້ວົງການໄດ້ລັບຄວາມຫຍຸ້ງຍາກຕ່າງໆ ນາໆ ເພາະມາເຮັດການພໍໃຫ້ແລ້ວນີ້ ເພື່ອເອົາແຕ່ເງິນ.

ເຮົາຈະແກ້ຂໍ້ບົກພ່ອງເຫລົ່ານີ້ດ້ວຍວິທີໃດ? ກ່ອນອື່ນຈະຕ້ອງອາສັຍອໍານາດທາງ ບັງຄັບ, ສນັບສນູນ ແລະລົງໂທດຜູ້ກະທໍາຜິດ, ບໍາເນັດຫລືສົ່ງເສີມຜູ້ກະທໍາດີ, ກອດກາໃຫ້ທົ່ວເຖິງເພື່ອໃຫ້ຮູ້ວ່າ ຜູ້ໃດທໍາດີ ແລະຜູ້ໃດທໍາຊົ່ວ ແລະປະການທີ່ສອງກໍຄື ປະຕິບັດນະໂຍບາຍແບບຄິດເຫັນຊາດຫລາຍກວ່າຕົນເອງ ດ້ວຍການສ້າງຄວາມສມ່ຳສເມີ (ສເມີພາບ) ໃນວົງການແລະສັງຄົມ. ກ່າວຄືປາບປາມການລັດເຄົາ ປຽບຊຶ່ງກັນແລະກັນ: ມີນ້ອຍຫລາຍປານໃດກໍແບ່ງເປັນສ່ວນໃຫ້ສເມີຕົ້ນສເມີປາຍ ດີກ່ວາຈະຂຶ້ນເງິນເດືອນຜູ້ນ້ອຍ ໑໐ ເປັນ ໑໔ ພັນ ແລະຜູ້ໃຫຍ່ ໑໐໐ ເປັນ ໑໔໐ ພັນ ກໍຈະບໍ່ມີຫຍັງດີຂຶ້ນ ເພາະອັຕຣາການເອົາປຽບຍັງມີຢູ່ ໑໐໐ ເປີເຊັນ ແລະຄວາມບໍ່ພໍອົກພໍໃຈກໍຄົງມີຢູ່ຄືເກົ່າ ຄວາມຕ້ອງການທາງຮ່າງກາຍ ແລະທາດບໍາຣຸງຊີວິດຕ່າງກໍມີທີ່ໆກັນບໍ່ສົມຄວນເອົາປຽບກັນເຖິງ ໑໐ ຕໍ່. ຈິງຢູ່ ຜູ້ໃຫຍ່ຕ້ອງມີ

ລາຍຈ່າຍຫລາຍ, ແຕ່ເປັນລາຍຈ່າຍສຳລັບບຳເລີ ຄວາມຕ້ອງການພາຍນອກ (ຟຸ່ມເຟືອຍ) ແລະຄວນຈະແບ່ງເອົາສ່ວນ ທີ່ຟຸ່ມເຟືອຍນີ້ໄປບຳຣຸງຜູ້ນ້ອຍ ໃຫ້ພໍຢູ່ພໍກິນ.

໗. ຂໍ້ສະຣູບກ່ຽວກັບການພັທນາທາງດ້ານຈິດໃຈ:

ການອົບໂຣມສຶກສາໃນທາງດ້ານຈິດໃຈ ຕາມວິທີການຕ່າງໆ ດັ່ງທີ່ໄດ້ກ່າວມາແລ້ວນີ້ ຖ້າຕ່າງຄົນຕ່າງເຮັດ ກໍຄົງຈະບໍ່ໄດ້ຜົລຢ່າງແນ່ນອນ ເພາະສະນັ້ນ ກະຊວງສຶກສາ, ປັບປຸງໝູ່ບ້ານ, ສາທາຣະນະສຸກ, ເສຖກິດ, ຖແລງຂ່າວ, ມະຫາດໄທ ແລະອື່ນໆ ຕ້ອງຮ່ວມວາງແຜນສຳລັບການ ສາທາຣະນະສຶກສາຂອງຊາດ ໃຫ້ສອດຄ່ອງກັນ.ຍ້ອນວ່າຜູ້ໃຫຍ່ (ນອກຈາກໂຮງຮຽນແລະນັກຮຽນ) ຫລືຜູ້ທີ່ຍັງຫລ້າຫລັງ ທີ່ບໍ່ເຄີຍໄດ້ເຂົ້າໂຮງຮຽນ ແລະລັບການສຶກສາມາກ່ອນນັ້ນ ຍັງບໍ່ທັນຈະເຣີນ ແລະກ້າວໜ້າ. ຖ້າຣັຖບານຫາກບໍ່ຈັດແຕ່ງໃຫ້ ພວກນີ້ກໍຈະບໍ່ມີໂອກາດໄດ້ຮ່ຳຮຽນ ແລະຝຶກຝົນຕົນເອງ ແລະຈົ່ງຢ່າລືມວ່າ ແມ່ນພວກນີ້ແລທີ່ຈະນຳພາລູກຫລານຂອງຕົນ ທີ່ໄດ້ຮັບຄຳສອນຈາກໂຮງຮຽນ ໃຫ້ປະຕິບັດແບບຫລ້າຫລັງຢ່າງດຽວກັບໄຕ. ສະນັ້ນຈຶ່ງຈຳເປັນຕ້ອງໃຫ້ບົດສອນ ທີ່ສອນຢູ່ໂຮງຮຽນ ສອດຄ່ອງກັນກັບການປະຕິບັດຢູ່ທາງບ້ານ (ພໍ່ແມ່) ແລະເຮົາຕ້ອງເຂົ້າໃຈຢູ່ເລື້ອຍໆວ່າ ເດັກນ້ອຍຈະຮຽນແບບຕາມ ພາກປະຕິບັດຂອງສິ່ງແວດລ້ອມ ຫລາຍກ່ວາຄຳສອນທີ່ເປັນທິສດີຊ້ຳຊາກ. ດັ່ງນີ້ ການທີ່ຈະໃຫ້ການສຶກສາທີ່ໂຮງຮຽນ ໄດ້ຮັບຜົນກໍຈະຕ້ອງມີສາທາຣະນະສຶກສາ ໂດຍທົ່ວເຖິງ ທຸກໆບ້ານ ແລະຕາ

ແສງ ຕລອດຈົນຮອດຂັ້ນເມືອງ ແຂວງ ແລະປະເທດ. ແຕ່ລະຂັ້ນມີຜູ້ຮັບຜິດຊອບດູແລ, ຄອບຄຸມ, ອຳນວຍການ ແລະປະສານງານຢ່າງສອດຄ່ອງ (ຂັ້ນບ້ານກໍ່ອາດມີນາຍຄູ, ພໍ່ບ້ານ, ສມຽນ ແລະອື່ນໆ).

ພວກເຮົາສ່ວນຫລາຍມັກຈະຄິດວ່າ: ການທີ່ຕົນສົ່ງລູກເຂົ້າໂຮງຮຽນແລ້ວ ເປັນການປັດເປົ່າຄວາມຫຍຸ້ງຍາກ ໃນການຝຶກແອບລູກຢ່າງສິ້ນເຊີງ, ຖືວ່າລູກຈະດີ ຫລືຊົ່ວ ຂຶ້ນຢູ່ກັບນາຍຄູຫລືໂຮງຮຽນແຕ່ຝ່າຍດຽວ. ນີ້ເປັນຄວາມຄິດທີ່ພວກເຮົາຄວນປະຕິຮູບແລະປ່ຽນແປງໃຫມ່ ແລ້ວມາຖືຢູ່ໃນຫລັກການທີ່ວ່າ "ເບິ່ງຊ້າງໃຫ້ເບິ່ງຫາງ ເບິ່ງນາງໃຫ້ເບິ່ງແມ່" ພໍ່ແມ່ຄອບຄົວມີສ່ວນສຳຄັນໃນການຝຶກແອບລູກ ບໍ່ນ້ອຍໄປກວ່ານາຍຄູ ຫລືໂຮງຮຽນ.

ຫລັກການພັທນາໃນທາງດ້ານຈິດໃຈຈະຕ້ອງອາສັຍ:

໑ ສາສນາ (ຄຳສອນຂອງອົງສັມມາສັມພຸທເຈົ້າ)

໒ ການສຶກສາໃນທຸກໆຂັ້ນ ຮວມທັງການສາທາຣະນະສຶກສາ ຊຶ່ງຫມາຍຄວາມວ່າສຶກສາຢູ່ໃນຂັ້ນຄອບຄົວ ແລະຝຶກແອບຜູ້ຫລ້າຫລັງໃຫ້ກ້າວຫນ້າ.

໓ ການປະຕິຮູບສັງຄົມ, ວັທນະທັມ ແລະການປົກຄອງ ຊຶ່ງໄດ້ແກ່ການບັງຄັບຈິດໃຈ ແລະພາກປະຕິບັດຂອງຄົນ ໃຫ້ຢູ່ຮ່ວມກັນຢ່າງສັນຕິ (ກ່າວຄືປາສຈາກການກຽດຊັງ, ການອິດສາບັງບຽດຊຶ່ງກັນແລະກັນ).

ວັກ ໔

ການພັທນາທາງດ້ານວັດຖຸ

ບັນຫາຕ່າງໆທີ່ກີດຂວາງການພັທນາ ທາງດ້ານວັດຖຸ ທີ່ພວກເຮົາເຄີຍໄດ້ຍິນຈົນເບື່ອຫູກໍ່ຄື: "ຂາດເງິນ ແລະຜູ້ຊ້ຽວຊານ" ໃນທາງວິຊາການຕ່າງໆ (ລາວ) ນອກຈາກບັນຫາທາງດ້ານວັດຖຸ ໒ ຢ່າງທີ່ໄດ້ກ່າວມາແລ້ວນີ້ ສິ່ງນຶ່ງອີກ (ສຳຄັນທີ່ສຸດ) ທີ່ລາວເຮົາຍັງຂາດສຳລັບພັທນາຊາດກໍ່ຄື: "ຄວາມຈິງໃຈ ຫລືຄວາມບໍຣິສຸດໃຈ" ຂອງຜູ້ຮັບຜິດຊອບໃນດ້ານຕ່າງໆ. ແຕ່ເຖິງຢ່າງໃດກໍ່ດີ ການພັທນາຊາດໃນດ້ານນີ້ ກໍ່ໄດ້ດຳເນີນມາແບບຄ່ອຍໆເປັນຄ່ອຍໄປ ໂດຍໄດ້ເລີ້ມມາແຕ່ວັນທີ ໑໙ ກໍຣະກະດາ ໑໙໔໙ ຫລືວັນທີ ໒໐ ກໍຣະກະດາ ໑໙໕໔ ຊຶ່ງເປັນວັນທີ່ລາວໄດ້ລັບເອກຣາດ.

ນັບແຕ່ນັ້ນມາ ການພັທນາຊາດ ກໍ່ໄດ້ເລີ່ມມີຂີດຂາດ ແລະຂຍັບຂຍາຍອອກຢ່າງປະຈັກຕາ, ການບູຣະນະສ້າງສາກໍ່ໄດ້ເລີ້ມຂຶ້ນເປັນຕົ້ນ ເປັນຕົວ ແລະຄວາມກ້າວໜ້າໃນດ້ານຕ່າງໆ ກໍ່ມີຂຶ້ນທະວີເປັນຮ່ອງຮອຍຂຶ້ນມາ.

໑. **ດ້ານການສຶກສາ.** ການສຶກສາໄດ້ຂຍາຍຈາກ ໑໙໕໕ ທີ່ທີ່ມີນັກຮຽນໃນຂັ້ນປະຖົມສຶກສາ ຈຳນວນ ໑໑.໐໐໐ ຄົນ ໃນປີ ໑໙໕໔ ໃນຣະຍະ ໑໐ ປີ ມີນັກຮຽນເພີ້ມຂຶ້ນເຖິງ ໔໐.໐໐໐ ຄົນ ໂຮງຮຽນມັທຍົມປາວິຖີກດັດແປງ ແລະຂຍັບຂຍາຍ ຈາກຈຳນວນນັກຮຽນ ໒໐໐

ຄົນໃນປີ ໑໙໔໕ ມາເປັນ ໕໘໐ ຄົນໃນປີ ໑໙໕໕ ແລະໃນປີ ໑໙໕໙ ຫ້ອງຮຽນມັທຍົມປີທີ ໕ ແລະທີ ໖ (*Classe de Seconde et de première*) ກໍໄດ້ຖືກຈັດຕັ້ງຂຶ້ນທີ່ວຽງຈັນເອງ. ແຕ່ວ່າການສອບເສັງປະກາສນິຍະບັດ ມັທຍົມພາກປາຍ (*Baccalaureat*) ກໍຍັງຕ້ອງໄປເສັງທີ່ໄຊ່ງ່ອນ ຫລືຮາໂນຍ, ໃນປີດຽວກັນ ໂຮງຮຽນຂັ້ນມັທຍົມພາກຕົ້ນ ກໍຖືກຈັດຂຶ້ນທີ່ປາກເຊ, ສວັນນະເຂັຕແລະຫລວງພຣະບາງ, ຕໍ່ມາໃນປີ ໑໙໕໖ ທີ່ທ່າແຂກ ແລະໃນປີ ໑໙໕໕ ທີ່ຊຽງຂວາງ. ຄວາມພຍາຍາມຂອງຣັຖບານທີ່ຢາກພັທນາ ທາງດ້ານສຶກສາ ພາຍຫລັງໄດ້ເອກຣາດ ຊຶ່ງຕ້ອງໄດ້ໃຊ້ງົບປະມານເຖິງ ໑໖% ແລະພໍເມື່ອແສງສວ່າງແຫ່ງຄວາມເປັນເອກຣາດ ເລີ້ມຟົ້ນຕົວຂຶ້ນເມື່ອ ໑໙໕໗ ໂດຍບໍ່ລໍຊ້າ ຣັຖບານໄດ້ຕັ້ງວິທະຍາລັຍອົບໂຮມຄູ ທີ່ວຽງຈັນໃນປີນີ້ໂລດ.

ຄວາມພຍາຍາມທີ່ຈະຂຍັບຂຍາຍ ດ້ານການສຶກສາຂອງຣັຖບານໄດ້ດຳເນີນມາເປັນລະດັບ ຊຶ່ງປັດຈຸບັນນີ້ ລາວເຮົາກໍມີເຖິງຂັ້ນອຸດົມສຶກສາ ຊຶ່ງປະກອບດ້ວຍສະຖາບັນກົດໝາຍ ແລະປົກຄອງຕັ້ງຂຶ້ນເມື່ອປີ ໑໙໕໘, ໂຮງຮຽນການແພດ ໑໙໖໔-໑໙໖໘ ແລະສາຖາບັນອົບໂຮມຄູຊັ້ນສູງ ໑໙໖໔. ນອກຈາກນີ້ຍັງມີໂຮງຮຽນການຊ່າງລາວ ເຢັຽຣະມັນ ທີ່ວຽງຈັນຫລັກ ໖ (໑໙໖໔) ການຊ່າງວຽງຈັນປາກປາສັກ (໑໙໕໖) ແລະການຊ່າງທີ່ສວັນນະເຂດ (໑໙໖໑)

ການຂຍາຍຕົວໃນດ້ານການສຶກສາ ແຕ່ສມັຍເປັນຫົວເມືອງຂຶ້ນກັບສມັຍນີ້ ໄດ້ຊີ້ບອກໃຫ້ພວກເຮົາສຳນຶກໄດ້ວ່າ ຜູ້ຄອບຄອງຫົວເມືອງຂຶ້ນ

ໄດ້ພຍາຍາມອັດທອັດຕາມອກເຮົາ ໄວ້ນານກວ່າ ໑ ສັຕະວັດ.

ຕາຕລາງຂ້າງລຸ່ມນີ້ ຈະຊີ້ໃຫ້ເຫັນການຂຍາຍຕົວ ໃນດ້ານສຶກສາທິການ ຈາກປີ ໑໙ ໕ ເຖິງ ໑໙໗໔ ຊຶ່ງຈະໄດ້ສແດງເປັນຕົວເລກຂອງນາຍຄູ, ນັກຮຽນ ແລະໂຮງຮຽນທົ່ວພຣະຣາຊອານາຈັກລາວ ດັ່ງຕໍ່ໄປນີ້.

(ຕາມສະຖິຕິຂອງກະຊວງສຶກສາທິການ)

ຂັ້ນການສຶກສາ	໑໙໔໕			໑໙໗໔		
	ນັກຮຽນ	ນາຍຄູ	ໂຮງຮຽນ	ນັກຮຽນ	ນາຍຄູ	ໂຮງຮຽນ
໑. ປະຖົມສຶກສາ	11.000	319	34	238.167	6.945	3.234
໒. ມັທຍົມສຶກສາ	200	10ທ125	1	7.917	370	22(1)
໓. ອຸດົມສຶກສາ						
. ການແພດ	0	0	0	220	30	1
. ກົດໝາຍ	0	0	0	171	59	1
. ຄຣູ (ຊັ້ນສູງ)	0	0	0	806	62	1
໔. ການຊ່າງ	-	-	-	1.124	207	3(2)
໕. ອົບຮົມຄຣູ	0	0	0	2.978	236	໘(3)

(໑) ໂຮງຮຽນມັທຍົມ ສ່ວນໃຫຍ່ແລ້ວ ມີຢູ່ແຂວງລະແຫ່ງ ແລະມີວິທະຍາລັຍຟ້າງຸ່ມ ຢູ່ທີ່ວຽງຈັນ, ໂພນໂຮງ, ສວັນນະເຂດ ແລະຫລວງພະບາງ. ສ່ວນວິທຍາລັຍທີ່ມີຫ້ອງຮຽນແຕ່ປີທີ ໑ ເຖິງທີ ໖ ມີຢູ່ວຽງຈັນ, ຫລວງພະບາງ, ສວັນນະເຂດ ແລະປາກເຊ.

24 / VII
ห้ามจำหน่าย

(໒) ໂຮງຮຽນການຊ່າງມີຢູ່ວຽງຈັນ ໒ ແຫ່ງ ຄືປາກປາສັກ ແລະລາວເຢັຽຣະມັນ ທີ່ຫລັກ ໓ ແລະທີ່ສວັນະເຂດ.

(໓) ໂຮງຮຽນອົບໂຮມຄູມັທຍົມ ໔ ປີ ແລະ ໒ ປີ ມີຢູ່ວຽງຈັນ, ຫລວງພະບາງ, ສວັນະເຂດ ແລະປາກເຊ. ມັທຍົມ ໒ ປີທີ່ບ້ານເກີນ, ວັງວຽງ, ຊຳທອງ ແລະແກ່ນທ້າວ.

ນອກຈາກນີ້ຍັງມີໂຮງຮຽນເອກຊົນອີກ ຄື ຂັ້ນອານຸບານສຶກສານີ ໔ ແຫ່ງ ມີນັກຮຽນ ໑໙໘໔ ຄົນ. ຂັ້ນປະຖົມສຶກສາໂຮງຮຽນ ໗໙ ແຫ່ງ ນາຍຄູ ໗໘໘ ຄົນ ແລະນັກຮຽນ ໒໖.໒໔໔ ຄົນ. ຂັ້ນມັທຍົມ ໑໔ ແຫ່ງ ນາຍຄູ ໑໔໖ ແລະນັກຮຽນ ໓໙໙໒ ຄົນ.

ໂດຍອ້າງຕາມຕົວເລກທີ່ກ່າວຂ້າງເທິງນີ້, ເຫັນວ່າການພັທນາດ້ານປະຖົມສຶກສາ ມີຄວາມກ້າວໜ້າດີ ແລະໄດ້ຂຍັບຂຍາຍກິຈການອອກຢ່າງກວ້າງຂວາງ, ຊຶ່ງປັດຈຸບັນນີ້ ປະຊາຊົນທີ່ຢູ່ຕາມຊົນບົດເກືອບ ໘໐ ສ່ວນຮ້ອຍໄດ້ຮັບການສຶກສາໃນຂັ້ນນີ້. ນີ້ແລ່ ຄືຫລັກຖານທີ່ສະແດງໃຫ້ພວກເຮົາເຫັນໄດ້ຊັດວ່າ ເປັນຜົນງານອັນຍິ່ງໃຫຍ່ທີ່ໄດ້ຮັບລຸມາຈາກ ຄວາມພຍາຍາມຂອງລາວທີ່ຢາກຟື້ນຟູຊາດຂອງຕົນໃນດ້ານນີ້. ຖ້າເຮົາຫັນໜ້າກັບໄປເບິ່ງຕົວເລກກ່ຽວກັບການປະຖົມສຶກສາໃນສມັຍຝຣັ່ງປົກຄອງ ພວກເຮົາຈະເກີດຄວາມພາກພູມໃຈ ບໍ່ຫລາຍກໍນ້ອຍ!

ຄວາມສຳເຣັດອັນນີ້ ເປັນຄວາມສຳເຣັດ ອັນຍິ່ງໃຫຍ່ຂອງລາວ ແລະສົມຄວນທີ່ຈະໄດ້ຮັບຄວາມຍົກຍ້ອງ ຈາກຣັດແລະປະຊາຊົນ ຖ້າທຸກໆກະຊວງທະບວງກົມ ຫາກກ້າວໜ້າຢ່າງກັບກົມປະຖົມສຶກສານີ້ ບ້ານເມືອງຂອງເຮົາ ກໍຄົງຈະຈເຣີນກ້າວໜ້າໄປຫລາຍແລ້ວ. ໃນປະຖົມສຶກສາ ຖ້າຈະໄລ່ສະເລັ່ຽແລ້ວ ລາວເຮົາມີນາຍຄູປະມານ ໒ ຄົນຕໍ່ປະຊາຊົນ ໑໐໐໐ ຄົນ. ຖ້າປຽບໃສ່ກັບປະເທດມະຫາອຳນາດຈະເຫັນໄດ້ດັ່ງນີ້ ສະຫະພາບໂຊວຽດ ນາຍຄູ ໑໑ ຄົນ, ອັງກິດ ໖ ຄົນ ແລະອີຕາລີ ໕ ຄົນ ຕໍ່ປະຊາຊົນ ໑໐໐໐ ຄົນ. ສຳລັບລາວເຮົາ ສະເລັ່ຽໄດ້ນັກຮຽນປະມານ ໓໕ ຄົນ ຕໍ່ນາຍຄູຜູ້ນຶ່ງ ທີ່ສະຫະພາບໂຊວຽດ ໑໙ ຄົນ ແລະມີສະຫະຣັຖອາເມຣິກາ ໒໐ ຄົນ ຕໍ່ນາຍຄູຜູ້ນຶ່ງ. ເຖິງຈະບໍ່ທຽບທັນບັນດາປະເທດມະຫາອຳນາດເຫລົ່ານັ້ນກໍຕາມ ແຕ່ການປະຖົມສຶກສາຂອງລາວກໍສາມາດນຳຫລັງຕ່າງປະເທດໄປໄດ້ຢ່າງໄກ້ຊິດ.

ສ່ວນມັທຍົມສຶກສາເຫັນວ່າຍັງບໍ່ກ້າວໜ້າເທົ່າທີ່ຄວນ, ໃນຣະຍະ ໒໗ ປີ (໑໙໔໕–໑໙໗໒) ການຂຍາຍໂຮງຮຽນມັທຍົມທັງໝົດ ໄດ້ພຽງ ໒໐ ແຫ່ງ. ໃນປີນຶ່ງໆ (໕ ປີ ຂ້າງຫລັງນີ້) ມີນັກຮຽນສມັກ ເຂົ້າຮຽນຊັ້ນມັທຍົມປີທີ ໑ (*Classe de 6ème*) ບໍ່ຕ່ຳກ່ວາ ໑໐ ຫາ ໑໒ ພັນຄົນ (ທົ່ວພຣະຣາຊອານາຈັກ) ທີ່ສອບເສັງເຂົ້າໄດ້ ມີພຽງ ໒໐໐໐ ກວ່າຄົນ. ນີ້ເປັນ

ຕົວເລກສະເພາະແຕ່ຜູ້ທີ່ເຂົ້າສອບເສັງຕາມໂຮງຮຽນຕ່າງໆ ທົ່ວພະຣາຊອານາຈັກ. ສ່ວນໂຮງຮຽນອົບໂຮມຄູນັ້ນ ມີຜູ້ສມັກເຂົ້າປະມານ ໕ ພັນກວ່າ ແລະເສັງໄດ້ພຽງພັນກວ່າ. ສຣຸບແລ້ວມີຈຳນວນເດັກນ້ອຍທີ່ເສັງເຂົ້າຂັ້ນມັທຍົມບໍ່ໄດ້. ລຳພັງແຕ່ພຽງສອງປະຖູມ໌ ກໍ່ເກືອບເຖິງ ໘໐ ພັນຄົນແລ້ວ ໂດຍບໍ່ນັບ ການຊ່າງແລະອື່ນໆ. ໃນຈຳນວນ ໗໘ ເປີເຊັນ ທີ່ເສັງເຂົ້າມັທຍົມບໍ່ໄດ້ນັ້ນ ຈະຕ້ອງຕົກຢູ່ຖານະຈົນຕາແຈ ບໍ່ມີບ່ອນຮຽນ,ໝາຍຄວາມວ່າ ການສຶກສາຂອງເຂົາເຈົ້າໝົດ ພຽງທ່ນີ້ ຄືຮອດແຕ່ພຽງແຊກທັ້ງໆທີ່ພວກເຂົາເຫລົ່ານັ້ນ ຕັ້ງໃຈຢາກຈະຮຽນຕໍ່, ພໍ່ແມ່ຄອບຄົວມີຖານະພຽງພໍ ທີ່ຈະສົ່ງເສີມລູກ ແຕ່ກໍ່ບໍ່ມີທົນທາງອອກ (ມີແຕ່ໂຮງຮຽນເອກຊົນ ຊຶ່ງລັບໄດ້ບໍ່ເກີນ ໘ ເປີເຊັນ) ພວກເຮົາເຊື່ອແນ່ວ່າຄົງຈະບໍ່ເປັນເຈຕນາຜູກຂາດ ໃນດ້ານການສຶກສາ ຫລືແກ້ງທຳເພື່ອຜົນປໂຍດແນວອື່ນ ແຕ່ເທົ່າທີ່ທຸກຄົນຮູ້ໄດ້ຢ່າງຈະແຈ້ງກໍ່ຄື ການສຶກສາຂັ້ນມັທຍົມລ້າຊ້າ, ບໍ່ກ້າວໜ້າ ແລະບໍ່ທັນກັບຄວາມຕ້ອງການຂອງປະເທດ ທັງນີ້ອາດເນື່ອງມາຈາກສາເຫດສອງປະການ ຄື:

ສະຖານທີ່ ແລະຄູສອນກ່ຽວກັບສາຖານທີ່ຫລືງົບປະມານກໍ່ສ້າງເພື່ອຂຍາຍໂຮງຮຽນນັ້ນ ກໍ່ຄົງຈະເປັນພຽງແຕ່ບັນຫາຝຶດເຄືອງ ອັນນຶ່ງທີ່ສຳຄັນແຕ່ຖ້າຜູ້ຮັບຜິດຊອບ ຫາກມີຄວາມພຍາຍາມຢ່າງສຸດຂີດຄົງສາມາດເອົາຊນະບັນຫານີ້ໄດ້ແລະເຊື່ອແນ່ວ່າ ຄົງຈະບໍ່ເປັນການເຫລືອບ່າກວ່າແຮງ

ຈົນເຮັດໃຫ້ກິຈການກ່ຽວກັບເຣື່ອງນີ້ຫລ້າຫລັງ ຈົນເກືອບຢຸດຊະງັກ, ສ່ວນທີ່ກ່ຽວກັບຄູສອນ ຫລືອາຈານນັ້ນ ກໍເປັນໜ້າເຫັນໃຈຢູ່ບໍ່ນ້ອຍ ເພາະເທົ່າທຸກວັນນີ້ ການສຶກສາຂັ້ນມັທຍົມຂອງລາວ ຕົກຢູ່ໃນກຳມືຂອງຕ່າງດ້າວເກືອບ ໔໐ ເປີເຊັນ ໃນຈຳນວນຄູສອນ ຫລືອາຈານທັງໝົດ ມີ໔໑ ຄົນ ເປັນຄົນລາວ ໒໖ ແລະຕ່າງດ້າວ ໑໕ ຄົນ ຊຶ່ງໃນຈຳນວນນີ້ ມີຝຣັ່ງເສດເຖິງ ໑໑ ຄົນ ສ່ວນເຫລືອ ມີ໔ ຄົນ ນັ້ນເປັນອາເມຣິກັນແດ່, ອັງກິດແດ່, ການາດາແດ່. ໄທແດ່, ຍີ່ປຸ່ນແດ່, ເຢັຽຣະມັນແດ່ ແລະອົສຕຣາລຽນແດ່.

ຕົ້ນເຫດແຫ່ງຄວາມຫລ້າຊ້າໃນດ້ານມັທຍົມສຶກສານີ້ ສ່ວນນຶ່ງມາຈາກຕ່າງດ້າວທີ່ຍັງຕ້ອງການຮັກສາຜົນປໂຍດຂອງຕົນໄວ້ ໂດຍບໍ່ຄຳນຶ່ງເຖິງອານາຄົດຂອງລາວ ແລະເປັນການເຫັນແກ່ໂຕຈົນເກີນໄປ ແລະອີກສ່ວນນຶ່ງອາດເນື່ອງມາມາຈາກພວກເຮົາເອງ ທີ່ບໍ່ເລັ້ງລັດສຸດຂີດເພື່ອເອົາຈິງເອົາຈັງກ່ຽວກັບການສັບປ່ຽນຕ່າງດ້າວນີ້ອອກ ເທື່ອລະເລັກເທື່ອລະນ້ອຍ ຫລືຈະຫາທາງອອກແບບປະສົມຟ້າງູ່ມ ກໍຄົງເປັນອີກນຶ່ງທີດີ ແລະຄົງຈະດີກວ່າທີ່ຈະປ່ອຍປະໃຫ້ເປັນໄປຕາມເປັນ ຕາມເກີດ ດັ່ງທຸກວັນນີ້. ພວກເຮົາຊາບດີຢູ່ແລ້ວວ່າ ຈະເຮັດຫຍັງ ທຳຫຍັງ ກໍຕ້ອງມີບັນຫາ ແລະອຸປສັກຂວາງກັ້ນ, ແຕ່ບໍ່ຄວນຈະຍອມແພ້ອຸປສັກເຫລົ່ານັ້ນ ຢ່າງສິ້ນເຊີງ ແລະເມີນເສີຍຕໍ່ການ ສ້າງສັນຄວາມເປັນເອກຣາດ ແລະກຽດຂອງເຮົາ.

ມັນສົມຄວນແລ້ວ ບໍ່ ທີ່ຕ້ອງຖືມຄວາມຮັບຜິດຊອບ ໃນດ້ານນີ້ໄວ້ແຕ່ໃນກຳມືຂອງຕ່າງດ້າວ, ຈິງຢູ່ ພວກເຂົາເຫລົ່ານັ້ນລ້ວນແຕ່ເປັນຜູ້ຫວັງດີຕໍ່ລາວ ແຕ່ກໍ່ຢ່າລືມວ່າ ຢູ່ເບື້ອງຫລັງນັ້ນ ມີສ່ວນພົວພັນໃນຜົນປໂຍດຂອງເຂົາ ບໍ່ຫລາຍກໍ່ນ້ອຍ ຢູ່ໃນໂລກມະນຸດນີ້ ບໍ່ມີໃຜດອກທີ່ຈະຊ່ວຍເຫລືອຜູ້ອື່ນ ໂດຍບໍ່ຫວັງຜົນຕອບແທນ, ເຖິງບໍ່ເປັນການຕອບແທນ ດ້ວຍວັດຖຸກໍ່ຕ້ອງເປັນໃນທຳນອງ ໃຊ້ອຳນາດ, ອິດທິພົລ, ການຄ້າ, ວັທນະທັມ, ພາສາ ແລະອື່ນໆ.

ເພາະສະນັ້ນ ລາວເຮົາຄວນຈະຕັ້ງສະຕິຣະວັງຕົວໃຫ້ດີ ແລະພຍາຍາມເປັນຕົວຂອງຕົວເອງ ໃຫ້ຫລາຍກວ່າທີ່ຈະໃຫ້ຜູ້ອື່ນຄ້ຳຊູ. ປະເທດທີ່ໃຫ້ການຊ່ວຍເຫລືອແກ່ລາວຫລາຍ ໃນດ້ານການສຶກສາ ກໍ່ຄືສະຫະຣັດອາເມຣິກາ ແລະຝຣັ່ງເສດ ແຕ່ສຳລັບດ້ານມັທຍົມສຶກສາ ທັງຝຣັ່ງ ແລະອາເມຣິກາ ບໍ່ໄດ້ໃຫ້ ຄວາມສົນໃຈພໍປະມານ ທັ້ງໆທີ່ຝຣັ່ງເສດໄດ້ໃຊ້ພາສາ ຂອງຕົນສອນຢູ່ເກືອບ ໘໐ ເປີເຊັນ. ສຳລັບອາເມຣິການັ້ນໄດ້ໃຫ້ການຊ່ວຍເຫລືອໜັກໄປໃນການກໍ່ສ້າງ ໂຮງຮຽນປະຖົມສຶກສາ. ມັທຍົມສຶກສາແບບຟ້າງ່ມ ແລະໂຮງຮຽນອົບໂຮມຄູ ຊຶ່ງເປັນການກໍ່ສ້າງແບບພື້ນຖານຖາວອນ. ນັບວ່າແຜນການພັທນາການສຶກສາສ່ວນໃຫຍ່ ເຮົາລໍຖ້າຕ່າງດ້າວເປັນຜູ້ຊ່ວຍເຫລືອສຳລັບລາວເຮົາເອງແລ້ວ ບໍ່ເຫັນມີບົດບາດໃນດ້ານການກໍ່ສ້າງໂຮງຮຽນຕ່າງໆຕາມລຳພັງ ສົມກັບວ່າເປັນຜູ້ຮັບຜິດຊອບ, ທັງນີ້ມັກຈະອ້າງວ່າ ບໍ່ມີງົບປະມານ. ສຳລັບບັນຫາການຜລິດອາຈານ ເພື່ອມາສັບປ່ຽນຕ່າງດ້າວນັ້ນ ປັດຈຸ

ບັນນີ້ຕົກຢູ່ໃນຂັ້ນກຶນບໍ່ເຂົ້າຄາຍບໍ່ອອກ, ເພາະວ່າແຜນການນັ້ນ ໄດ້ວາງໄວ້ຮຽບຮ້ອຍແລ້ວ ແຕ່ປະຕິບັດບໍ່ໄດ້, ຍ້ອນວ່າຜູ້ທີ່ມີປຣິນຍາມາຈາກເມືອງໃນແລະເມືອງນອກ ບໍ່ຢາກເປັນນາຍຄູ, ເພາະເປັນອາຊີພທີ່ບໍ່ລ້າບໍ່ລວຍ, ແລະບໍ່ມີກຽດໃນວົງສັງຄົມ. ສະນັ້ນ ຜູ້ທີ່ຍັງບໍ່ທັນເປັນນາຍຄູ ຈຶ່ງພຍາຍາມຫລີກ ແລະຜູ້ທີ່ເຄີຍເປັນມາແລ້ວ ກໍ່ຊອກຫາໜົນທາງອອກ. ໃນທາງທິສດີແລ້ວ ນາຍຄູກໍຄືພໍ່ພິມ ແມ່ພິມຂອງຊາດ ແຕ່ໃນພາກປະຕິບັດແລ້ວ ນາຍຄູບໍ່ໄດ້ຮັບຄວາມຍົກຍ້ອງ ຫລືໃຫ້ຄຸນງາມຄວາມດີ ຈາກພວກຂຸນນາງພໍ່ປານໃດ. ຕາບໃດຫາກພວກເຮົາຍັງນິຍົມ ເມົາມົວຢູ່ໃນສັງຄົມລີງແບບນີ້ແລ້ວ ກໍ່ເປັນອັນວ່າ ຍາກທີ່ສຸດທີ່ຈະສັບປ່ຽນ ອາຈານຕ່າງດ້າວນີ້ອອກໄດ້. ເຣື່ອງນີ້ຈະລຸລ່ວງໄປໄດ້ ກໍ່ຕ້ອງອາສັຍອຳນາດການ ອັນເດັດຂາດແລະການຮ່ວມໄມ້ຮ່ວມມືຈາກຫມົດທຸກຄົນ ຊຶ່ງຕ້ອງສນັບສນູນ ແລະໃຫ້ຄວາມສຳຄັນ ໃນດ້ານມັທຍົມສຶກສາຢ່າງພ້ອມພຽງ.

໔. **ດ້ານການເງິນ ແລະການຄ້າ:** ນັບແຕ່ນີ້, ຣາຊອານາຈັກລາວເຮົາ ມືນຕາຂຶ້ນມາເຫັນຄວາມເປັນເອກຣາດຂອງຕົນ ຣັຖບານແຕ່ລະສມັຍ ໄດ້ພຍາຍາມຢ່າງລົ້ມລຸກຄຸກຄານ ເພື່ອປັບປຸງການເງິນ ແລະການຄ້າຂອງຊາດ ໃຫ້ກ້າວໜ້າ ແຕ່ບໍ່ບັງເກີດຜົລ ຍ້ອນວ່ານະໂຍບາຍການເງິນແລະເສຖກິດ ດຳເນີນມາຢູ່ບົນພື້ນຖານແຫ່ງການຊ່ວຍເຫລືອ ຈາກຕ່າງປະເທດ ການຜລິດຜົນໄດ້ນ້ອຍແລະການຊື້ຫລາຍຂາຍນ້ອຍ.

ພາຍຫລັງທີ່ຝຣັ່ງເສດ ໄດ້ຍົກໜີອອກຈາກອິນດູຈີນ ຕາມສັນຍາເຊີແນວ ໑໙໕໔, ອາເມຣິກັນກໍໄດ້ຊ່ວຍເຫລືອຣັຖບານລາວ ດ້ວຍການທຸ້ມ

ເທເງິນໂດລາ ກ້ອນມະຫາສານມາໃຫ້ ຊຶ່ງໃນເວລານັ້ນການແລກປ່ຽນເງິນຕຣາຕ່າງປະເທດ ໃນປີ ໑໙໕໕-໕໖ ໂດລານຶ່ງຕໍ່ ໓໕ ກີບ, ໑໐ ຟຣັ່ງຕໍ່ກີບ, ໔໖ ບາດຕໍ່ຮ້ອຍກີບ ແລະ ໑໐໐ ກີບຕໍ່ ໑ ປອນ. ເລີມຕົ້ນດ້ວຍອັຕຣາການແລກປ່ຽນທີ່ສູງທີ່ສຸດ ຖ້າຈະປຽບໃສ່ການແລກປ່ຽນໃນທຸກວັນນີ້. ແຕ່ວ່າອັຕຣາການແລກປ່ຽນດັ່ງກ່າວນີ້ ກໍເລີມຖືກເກາະກິນຈົນດັບແນວເລື້ອຍໆມາ, ກ່າວຄືມີການສໍ້ໂກງ, ອະນຸຍາດໃຫ້ມີການແລກປ່ຽນໂດລາໃນຣາຄາທາງການ ໓໕ ກີບຕໍ່ນຶ່ງໂດລາ ໄປຂາຍ ໗໐ ກີບຕໍ່ນຶ່ງໂດລາ ດ້ວຍການສົມຮູ້ຮ່ວມຄິດຂອງ ພວກຂ້າຣາຊການບາງຄົນ ກັບພວກພໍ່ຄ້າຕ່າງດ້າວ. ຕລາດການຄ້າເງິນໂດລາ ໃນເມືອງລາວໃນຄາວນັ້ນ ໄດ້ຂຍາຍຕົວຂຶ້ນຈາກການແລກປ່ຽນທາງການ ໓໕ ກີບຕໍ່ ໑ ໂດລາ-ຕລາດມືດ ໗໐ ກີບຕໍ່ ໑ ໂດລາ, ມາເປັນ ໑໐໐ ກີບໃນປີ ໑໙໕໗ ແລະ ໑໔໐ ກີບ ໃນປີ ໑໙໕໘ ຈົນດັງດັ່ງໄປເຖິງສະຫະຣັຖອາເມຣິກາ ຜູ້ໃຫ້ການຊ່ວຍເຫລືອ ແລະສ້າງຄວາມໜັກໃຈແກ່ຣັຖບານ ສະຫາຣັຖເປັນອັນມາກ. ໃນວັນທີ ໑໐ ຕຸລາ ໑໙໕໘ ຈຶ່ງໄດ້ມີການປະຕິຮູບ ຣາຄາເງິນໂດລາໃໝ່ ຈາກ ໓໕ ກີບມາເປັນ ໘໐ ຕໍ່ນຶ່ງໂດລາ ໂດຍເປີດໃຫ້ມີການແລກປ່ຽນຢ່າງເສຣີ ຈົນມາເຖິງວັນທີ ໙ ສິງຫາ ໑໙໖໐ ຊຶ່ງເປັນວັນທີ່ກອງແລ ປະຕິວັດທີ່ນະຄອນວຽງຈັນ ຄ່າຂອງເງິນກີບກໍຕົກຕ່ຳລົງອີກ ແລະຄ່າຄອງຊີບໄດ້ຖີບຕົວຂຶ້ນຫລາຍກວ່າ ໕໐ ເປີເຊັນ ໃນວັນທີ ໔ ກໍຣະກະດາ ໑໙໖໑ ຣັຖບານເຈົ້າບຸນອູ້ມ ພູມີໜໍ່ສວັນ ຂຶ້ນກຳອຳນາດ ໄດ້ປະກາສແລກປ່ຽນເງິນຕຣາຕ່າງປະເທດ ຕາມອັຕຣາເກົ່າຄື

໘໐ ກີບຕໍ່ ໑ ໂດລາ ເພື່ອເປັນການປອບໃຈປະຊາຊົນ ໃນການໂຄສນາ ແຕ່ໃນທີ່ສຸດກໍ່ຕ້ອງສັງງົດອີກ ໃນວັນທີ່ ໔/໑/໑໙໖໒ ເນື່ອງຈາກພຍາດ ຕົວເກົ່າໄດ້ບ້ອນຂື້ນມາ ທຳລາຍອີກ ໃນຂນະນັ້ນຣັຖບານສເດັດເຈົ້າບຸນອູ້ມ ພູມີ ໜ່ສວັນ ກຳລັງຖືກບີບບັງຄັບຈາກສຫະຣັຖ ໃຫ້ຮັບເອົາເງື່ອນໄຂ ຕ່າງໆ ທີ່ກອງປະຊຸມເຊີເນວ ແລະພຍາຍາມຢືນຕົວຢູ່ດ້ວຍຕົນເອງຈຶ່ງໄດ້ ຢືມເງິນທະນາຄານແຫ່ງຊາດ ອອກຈ່າຍລ່ວງໜ້າ ແລະພິມເງິນອອກຈຳ ນ່າຍຕື່ມ ເພື່ອໃຫ້ພຽງພໍກັບລາຍຈ່າຍ ຄ່າຂອງເງິນກີບຕົກມາເປັນ ໑໔໐ ກີບຕໍ່ ໑ ໂດລາ ໃນວັນທີ ໔/໑/໑໙໖໑ ລາວໄດ້ເຂົ້າເປັນສມາຊິກອົງ ການເງິນສາກົນ ຣັຖບານປະສົມເປັນກາງຂອງສເດັດເຈົ້າສຸວັນະພູມາ ໄດ້ຕັ້ງ ຂຶ້ນເມື່ອວັນທີ ໒໔/໖/໑໙໖໒ ໃນທ້າຍປີດຽວສຫະຣັຖອະເມຣິກາ ກໍໄດ້ ປະກາດຊ່ວຍເຫລືອລາວຕື່ມອີກ. ພໍຕົກມາໃນກາງປີ ໑໙໖໓ ໂດລາກໍ່ ຫລິບຂຶ້ນຈາກ ໑໔໐ ມາເປັນ ໔໐໐ ກີບຕໍ່ ໑ ໂດລາ ແລະໃນທ້າຍ ປີດຽວກັນໄດ້ຖີບຂຶ້ນເປັນ ໖໐໐ ກີບຕໍ່ ໑ ໂດລາ ແຕ່ຣັຖບານຍັງຄົງ ຮັກສາການແລກປ່ຽນທາງການເປັນ ໘໐ ກີບ ຕໍ່ໜຶ່ງໂດລາ ຄ່າຄອງຊີບກໍ່ ໄດ້ຕິດຕາມຂຶ້ນເປັນເງົາຕາມຕົວຈົນບໍ່ສາມາດແກ້ໄຂໄດ້ດ້ວຍຕົນເອງ ຈຶ່ງໄດ້ ຮ້ອງຂໍໄປຍັງອົງການເງິນສາກົນ ຊ່ວຍແກ້ໄຂ ແລະໃນທີ່ສຸດກໍ່ມີການເຊັນ ສັນຍາ ຄ້ຳປະກັນເງິນກີບ ໃນວັນທີ ໒໔/໑໒/໑໙໖໓ ຊຶ່ງມີປະເທສຕ່າງໆ ຊ່ວຍຖອກເງິນປະກັນໄວ້ ແຕ່ລະປີປະມານດັ່ງນີ້:

– ສຫະຣັຖອາເມຣິກາ	1971 - 28,1	ລ້ານໂດລາ	1972 - 16,1	ລ້ານໂດລາ
– ຍີ່ປຸ່ນ	" 2,3	"	" 2,6	"
– ຝຣັ່ງເສດ	" 1,7	"	" 1,7	"
– ອັງກິດ	" 1,7	"	" 1,7	"
– ອົສຕຣາລີ	" 0,7	"	" 0,8	"

ໂດຍຍຶດຖືເອົາຕາມຄ່າຂອງໂດລາ ເງິນກີບຈຶ່ງປ່ຽນຄ່າຈາກ ໒໐ ກີບມາເປັນ ໘໔໐ ກີບຕໍ່ນຶ່ງໂດລາ ແລະປະກາດໃຫ້ມີການແລກປ່ຽນຢ່າງເສຣີ. ສິນຄ້າກໍ່ຫລັ່ງໄຫລເຂົ້າມາດິນລາວອີກ ແລະມີການແລກປ່ຽນເງິນໂດລາ ຢ່າງກັບແຜ່ນດິນໄຫວ ມີການສໍ້ໂກງ ເຊັ່ນລີຊັງຊື້ສິນຄ້າຈາກຕ່າງປະເທດ ເພື່ອຫາລ້າຫາລວຍໃນວົງການທ່ອໆໄປ ຈົນເປັນເຫດໃຫ້ຣັຖບານຕ້ອງງົດອັຕຣານີ້ໄວ້ ໃຫ້ມີແຕ່ທາງການເທົ່ານັ້ນ ນັບແຕ່ວັນທີ /໓/໑ ໑໙໗໔. ເວລານັ້ນໂດລາໃນຕລາດມືດຊື້ຂາຍກັນ ໔໐໐ ກວ່າກີບ. ຈົນຕົກມາເຖິງປີ ໑໙໗໕ ອັຕຣາ ໘໔໐ ກີບ (ທາງການ) ກໍ່ຖືກຍົກເລີກ. ພໍ່ຄ້າກໍ່ສວຍໂອກາດຂາຍຂອງເກົ່າ ໂດຍອ້າງເອົາພື້ນຖານໂດລາລະ ໔໐໐. ຄ່າຄອງຊີພກໍ່ນັບມື້ແພງຂຶ້ນຢ່າງບໍ່ເຊົາ ຣັຖບານຕ້ອງໄດ້ຂຶ້ນເງິນເດືອນໃຫ້ຂ້າຣາຊການ, ທະຫານແລະຕຳຣວດ ແລະຊອກຫາຊ່ອງທາງຄ້ຳປະກັນເງິນກີບ ໃຫ້ຫູ່ມທ່ຽງຢູ່ໃນອັຕຣາ ໔໐໐ ກີບຕໍ່ນຶ່ງໂດລາ ແລະມີການແລກປ່ຽນກັນຢ່າງເສຣີ ຈົນຕົກມາເຖິງ ໑໙໗໒–໗໙ ການເງິນຂອງໂລກຈຶ່ງປ່ຽນແປງ ໂດຍສະເພາະຢ່າງຍິ່ງເງິນໂດລາອາເມຣິກາຖືກລົດຄ່າ ຈຳເປັນເງິນກີບຊຶ່ງຖືກປະກັນ

໗໐ ສ່ວນຮ້ອຍຈາກໂດລາ ຕ້ອງໄດ້ລົດຄ່າລົງອີກຕາມໆກັນ ຄືຢູ່ໃນເກນ ໖໐໐ ກີບຕໍ່ນຶ່ງໂດລາ ນັບແຕ່ວັນທີ່ ໒໖-໙-໗໒ ເປັນຕົ້ນໄປ ແລະ ຂາຍກັນຢູ່ຕລາດມືດ ໙໔໐ ກີບຈົນເທົ່າທຸກວັນນີ້.

ການທີ່ເງິນກີບຂອງລາວ ໄດ້ລົ້ມລຸກລົ້ມຍືນຕລອດມາ ນັບແຕ່ວັນໄດ້ຮັບເອກຣາຊນີ້ ກໍ່ເນື່ອງມາຈາກວ່າ :

໑ . ມີການສໍ້ໂກງເຊັນໂດລາອອກໃຫ້ພໍ່ຄ້າ ແທນທີ່ຈະໄປຊື້ເຄື່ອງຂອງສິນຄ້າທີ່ຈຳເປັນ ຊ້ຳພັດເອົາໂດລາໄປຂາຍກິນກຳໄລ.

໒ . ແທນທີ່ຈະປະຢັດແຍງເອົາເງິນໂດລາ ໄວ້ຊື້ແຕ່ເຄື່ອງປະກອບທີ່ເປັນປໂຍດມາສ້າງພື້ນຖານ ອັນຖາວອນສຳລັບພັທນາດ້ານເສຖກິຈ ຊ້ຳໄປໃຊ້ໃນທາງຟູມເຟືອຍ ຫລືຍັກຍອກເອົາເຂົ້າຖົງ.

໓ . ມີການແລກປ່ຽນຖານເຫັນອົກເຫັນໃຈພໍ່ກອງ, ເຈົ້ານາຍແລະຄອບຄົວໃນອັຕຣາທາງການ ໂດຍບໍ່ຄິດເຫັນຜົນປໂຍດຂອງຊາດ (ເຊັ່ນອອກໄປປົວໂຕ ຫລືທ່ອງທ່ຽວຫລືເປັນທຶນສຶກສາ ທີ່ຕ່າງປະເທດ),

໔ . ມີການລົດຣາຄາເງິນໂດລາ ແລະຂອງໂລກ.

ຫົນທາງທີ່ດີທີ່ສຸດ ສຳລັບຄ້ຳປະກັນເງິນກີບຂອງເຮົາ ໃນອະນາຄົດນີ້ ກໍ່ຄືປ້ອງກັນໂດລາທີ່ມິດປະເທດຊ່ວຍເຫລືອບໍ່ໃຫ້ຮົ່ວໄຫລ, ຍຸດໃຊ້ຈ່າຍຟູມເຟືອຍ ໃນການສັ່ງຊື້ສິນຄ້າຕ່າງປະເທດ, ແລະສນັບສນູນການຜລິດຜົນພາຍ

ໃນປະເທດ ເພື່ອໃຫ້ເຮົາສາມາດກຸ້ມປາກກຸ້ມທ້ອງເສັຽກ່ອນ. ແຕ່ຈະຕ້ອງອາສັຍຕົນໃນຊາດ, ໃຫ້ມີຫົວຣັກຊາດ ຫລືຊາດນິຍົມແດ່ບາງເລັກນ້ອຍ ຈຶ່ງຈະບັງເກີດຜົນ.

ນອກຈາກຄວາມເລີະເຊີະແລະສິ່ງແວດລ້ອມທີ່ໄດ້ກ່າວມານີ້ ສາເຫດຕົວນຶ່ງອີກ ທີ່ມີສ່ວນພົວພັນຢູ່ກັບຄ່າຂອງເງິນກີບກໍ່ດີ ລາຍໄດ້ແລະລາຍຈ່າຍຂອງຣັຖບານ ແລະການຄ້າ ຊຶ່ງຈະໄດ້ກ່າວບັນຍາຍດັ່ງຕໍ່ລົງໄປນີ້

໖໑ . ລາຍໄດ້ຂອງຣັດ : (ສະຖິຕິຂອງກະຊວງແຜນຜັງ)

ການເກັບຣາຍໄດ້ຂອງຣັຖບານ ແຕ່ລະປີສະເລັ່ຽແລ້ວປະມານຫົກພັນກວ່າລ້ານກີບ (ເພາະບາງປີ ໕ ພັນລ້ານກີບ ແລະບາງປີ ໗ ພັນລ້ານ) ຕົວຢ່າງລາຍໄດ້ສົກປີ ໑໙໗໐–໗໑ ມີຢູ່ດັ່ງນີ້. ປ່າໄມ້ແລະນ້ຳ ໗໖.໓໖໓.000 ກີບ ໑% ທະບຽນຕ່າງໆ ໑໙໒.໕໒໖.000 ກີບ ໓% ໄທຣະຄົມນາຄົມ ໕໑໔.໒໒໖.000 ກີບ ໙% ສ່ວຍສາອາກອນ ໒.໖໙໐ ໙໙໗.000 ກີບ ໔໒% ແລະພາສີອາກອນ ໓.00໑.໒໔໒.000 ກີບ ໔໖% ລວມທັງໝົດ ໖.໔໕໕.໒໕໔.000 ກີບ ຫົກພັນສີ່ຮ້ອຍຫ້າສິບຫ້າລ້ານ ສອງຮ້ອຍຫ້າສິບສີ່ພັນກີບ ແລະຄາດວ່າລາຍໄດ້ສົກ ໗໑–໗໒ ຈະໄດ້ ໙.໙໑໖.000.000 ກີບ ແລະ ໗໒–໗໓ ຈະໄດ້ ໙.໓໐໙.000.000 ກີບ.

໖໒ . ລາຍຈ່າຍຂອງຣັດ : (ສະຖິຕິຂອງກະຊວງແຜນຜັງ)

ແຕ່ລະປີຣັຖບານຕ້ອງຈ່າຍກອງທັບແຫ່ງຊາດ, ຕຳຣວດ ພົລເຮືອນ ແລະນັກລົບເກົ່າໃນ.

* ສົກ ໗໐–໗໑ ໑໘.໙໙໓.000.000 ກີບ
* ສົກ ໗໑–໗໒ ໑໙.໕໑໖.000.000 ກີບ
* ສົກ ໗໒–໗໓ ໒໒.໘໐໘.000.000 ກີບ

ຣັຖບານຕ້ອງສ້າງຫລຸມງົປມານໄວ້ທຸກໆປີ ຄືດັ່ງນີ້ :

* ສົກ ໗໐–໗໑ ໑໒.໒໐໒.000.000 ກີບ
* ສົກ ໗໑-໘໒ ໙ ໕໐໐.000.000 ກີບ
* ສົກ ໗໒-໗໓ ໑໕.໕໐໐.000.000 ກີບ

ຫລຸມງົປມານແຕ່ລະປີນັ້ນ ຖືກຖົມດ້ວຍເງິນທຶນຊ່ວຍເຫລືອແລກປ່ຽນ *(Fond Operations de changes)* ຊຶ່ງມີ ໕ ປະເທດອອກໃຫ້ດັ່ງທີ່ໄດ້ກ່າວມາແລ້ວ (ສຫະຣັຖອະເມຣິກາ, ຍີ່ປຸ່ນ, ຝຣັ່ງເສດ, ອັງກິດ ແລະ ອົສຕຣາລີ). ແມ່ນທະນາຄານແຫ່ງຊາດເປັນຜູ້ຈ່າຍອອກໃຫ້. ສົກ ໖໗ ໖໘–໑໑.໕໕໕ ລ້ານກີບ ສົກ ໖໘–໖໙–໑໐ ໐໙໕ ລ້ານກີບ, ສົກ ໖໙ ໗໐–໘.໘໖໖ ລ້ານກີບ ແລະສົກ ໗໐–໗໑ ໘.໓໘໗ ລ້ານກີບ.

* ສະຖິຕິອັນນີ້ ໄດ້ຊີ້ໃຫ້ເຫັນວ່າ ແຕ່ລະປີ ຣັຖບານຕ້ອງຈ່າຍເກີນລາຍໄດ້ໄປບໍ່ຕໍ່າກວ່າ ໙ ຫາ ໑໕ ພັນລ້ານກີບ. ເປັນການຫລຸບທຶນທີ່ຫລາຍກວ່າ ໕໐% ຂອງລາຍໄດ້ຂອງຣັຖ, ຈໍາຕ້ອງໄດ້ອາສັຍເງິນທຶນຊ່ວຍເຫລືອຈາກຕ່າງປະເທດມາທົດແທນ. ນີ້ຄືຈຸດອ່ອນຂອງພວກເຮົາ. ອັນໝາຍເຖິງຄວາມເປັນຄວາກຕາຍ ແລະຄວາມບໍ່ແນ່ນອນຂອງຊາດໂດຍແທ້ ທັງນີ້ກໍເພາະວ່າຫາກມື້ນຶ່ງ ບັນດາປະເທດທີ່ໃຫ້ການຊ່ວຍເຫລືອ ບໍ່ຊ່ວຍເຮົາ

ອີກຕໍ່ໄປ ຢ່າງກະທັນຫັນ. ພວກເຮົາຈະບໍ່ພາກັນນຳເອົາພື້ນແຜ່ນດິນອັນເປັນທີ່ຮັກແລະຫວງແຫນ ຂອງເຮົາໄປຂາຍກິນບໍ? ພວກເຮົາຈະຍອມຢູ່ແບບເສືອນອນກິນຢ່າງນີ້ຕລອດໄປບໍ? ຖ້າບໍ່ກໍ່ສົມຄວນແລ້ວ ທີ່ພວກເຮົາຕ້ອງເລີມປະເສີມໜ້າກັບຜົນສະທ້ອນ ອັນທີ່ຈະເກີດຂຶ້ນຈາກການຣັດສາຍແອວເຂົ້າຈົນກວ່າຈະສາມາດຢູ່ດ້ວຍຕົນເອງໄດ້. ແຕ່ລະປີບັນດາປະເທດທີ່ໃຫ້ການຊ່ວຍເຫລືອເຮົາ ໃນດ້ານນີ້ໄດ້ຖົກຖຽງ, ຕໍ່ຮ້ອງແລະຕໍ່ວ່າຕໍ່ຂານກັນຢ່າງດຸເດືອດເພື່ອຫລຸດເງິນທຶນຄ່າປະກັນອັນນີ້ ຂອງໃຜຂອງລາວອອກໃຫ້ນ້ອຍເທົ່າທີ່ຈະທຳໄດ້ (ຍົກເວັ້ນແຕ່ອົສຕຣາລີ ປະເທດດຽວທີ່ສມັກເພີ່ມຂຶ້ນເປັນ ໖໐໐.໐໐໐ ໂດລາ ສຳລັບສົກ ໑໙໗໔) ສ່ວນລາວເຮົາອາດບໍ່ມີຄວາມຮູ້ສຶກສທັກສທ້ອນຫລືຫວັ່ນອິຕົກແຕ່ຢ່າງໃດ ເພາະເປັນຜູ້ໄດ້ຟຣີ

ເຖິງວ່າແຕ່ລະຄັ້ງ ບັນດາປະເທດທີ່ໃຫ້ການຊ່ວຍເຫລືອ ຈະຕໍ່ຮ້ອງກັນຈັກພຽງໃດກໍ່ຕາມ ໃນທີ່ສຸດກໍ່ຕົກລົງກັນໄດ້ ແຕ່ລາວເຮົາກໍ່ຄວນຈະຊອກຫາທາງອອກ, ດ້ວຍການປະຍັດລາຍຈ່າຍ ອັນຟູມເຟືອຍ (ເຊັ່ນຣົດເຕົາ ເຄື່ອງປັບອາກາດ, ຕູ້ເຢັນແລະອື່ນໆ) ປາບປາມການຮົ່ວໄຫລຂອງເງິນແລະພັສດຸທີ່ເປັນຂອງຣັຖ, ລົບລ້າງຫລືຍົກເລີກອົງການຫລືພແນກການທີ່ບໍ່ຈຳເປັນ ແລ້ວມອບພາຣະການໃຫ້ພແນກອື່ນເພີ່ມຕື່ມ, ປົດປ່ອຍຂ້າຣາຊການທະຫານຕຳຣວດ ທີ່ໃຊ້ການບໍ່ໄດ້ອອກ, ຍົກເລີກການຊຸມນຸ່ມທີ່ຕ້ອງໃຊ້ເງິນຣັຖ ທີ່ບໍ່ຈຳເປັນແລະອື່ນໆອີກ, ກໍ່ຄົງຈະປະຍັດລາຍຈ່າຍໄວ້ໄດ້ບໍ່ຫລາຍກໍ່ນ້ອຍ ແລ້ວໃຊ້ເງິນສ່ວນນີ້ເປັນທຶນພັທນາໄປໃນການສ້າງພື້ນຖານທາງເສຖ

ກິດ ແລະການເງິນໃຫ້ໝັ້ນຄົງແລະທຸ່ນທ່ຽງ. ບໍ່ດັ່ງນັ້ນລາວເຮົາກໍຈະກາຍເປັນທາດແຫ່ງການຂໍທານຢູ່ຢ່າງນີ້ຕລອດໄປ ຊຶ່ງເຫັນວ່າເປັນການເອົາຄວາມຄົງຢູ່ຂອງເຮົາ ໄປຕັ້ງໄວ້ແຄມເຫວ ແລະເປັນການເສັຽສັກສີຂອງປະເທດເອກຣາດ. ຈະທຸກຍາກຫລືອຶດຢາກຈັກພຽງໃດກໍຕາມ ເຮົາກໍຕ້ອງອົດສາບາກບັ່ນ ເພື່ອບຶກບຶນຕົວເຮົາຂຶ້ນໃຫ້ເປັນຕົວຂອງເຮົາເອງ. ເຊື່ອແນ່ວ່າບໍ່ໄດ້ຂີ່ຣົດເບັນ, ຢູ່ຫ້ອງເຢັນ, ກິນເຫລົ້າວິສກີ້ ແລະແນວຟຸ່ມເຟືອຍອື່ນໆ ເຮົາຄົງຈະສາມາດດຳຣົງຊີວິດຢູ່ໄດ້.

໑໖ . **ການຄ້າ** : ທີ່ຢ່າງດຽວກັນກັບການເງິນ, ທຸກຄົນກໍຊາບດີຢູ່ແລ້ວວ່າ ລາວເຮົາເປັນປະເທດທີ່ຊື້ຫລາຍຂາຍນ້ອຍ. ໃນປີນຶ່ງເຮົາຕ້ອງຫລຸບທຶນໄປແຕ່ ໑໐ ພັນລ້ານ ຫາ ໘໐ ພັນລ້ານກີບ ສຖິຕິຂອງກະຊວງແຜນຜັງໄດ້ແຈ້ງໄວ້ດັ່ງນີ້. ໃນປີ ໑໙໗໐: ເປັນປີທີ່ການຄ້າຂອງເຮົາຫລຸບທຶນຫລາຍທີ່ສຸດ, ມີສິນຄ້າເຂົ້າເຖິງ ໖໓໗.໐໗໘ ໂຕນຕົກເປັນເງິນ
໘໗.໖໘໙.໑໐໕.໐໐໐ ກີບ ແລະສິນຄ້າອອກພຽງ ໖໖.໔໐໘ ໂຕນ.

ຕົກເປັນເງິນ. ໑.໗໘໕.໗໐໔.໐໐໐ ກີບ

ຫລຸບທຶນໄປຕັ້ງ: ໘໔.໕໐໘.໔໐໑.໐໐໐ ກີບ

ໃນປີ ໑໙໗໑ ສິນຄ້າເຂົ້າ ໖໕໘.໙໔໗ ໂຕນ

ຕົກເປັນເງິນ ໑໙.໗໖໙.໗໑໕.໐໐໐ ກີບ

ສິນຄ້າອອກ ໔໖.໑໓໔ ໂຕນ

ຕົກເປັນເງິນ ໑.໔໓໔.໔໔໖.໐໐໐ ກີບ

ຫລຸບທຶນ- ໑໓.໘໔໔.໘໗໖.໐໐໐ ກີບ

ສິນຄ້າເຂົ້າແບ່ງສ່ວນເປີເຊັນດັ່ງນີ້; ວັດຖຸມາຈາກທາດບໍ່ແຮ່ ໒໖% ອາຫານ ໒໒% ເຄື່ອງຈັກ ໑໒% ພາຫານະຂົນສົ່ງ ໑໐% ແລະເຄື່ອງສຳເຣັດຮູບຕ່າງໆ ໓໐%.

ສິນຄ້າອອກມີດັ່ງນີ້: ກົ່ວ ໕໑% ໄມ້ ໔໑% ກາເຟ ໑% ແລະວັດຖຸດິບອື່ນໆ ໗%

* ວິທີການເພື່ອຫຼຸດເລົາການຊື້ຫລາຍຂາຍນ້ອຍນີ້ກໍຄືຕ້ອງ.

໑. ຜລິດແລະສົ່ງເສີມການຜລິດເຄື່ອງໃຊ້ ແລະອາຫານທີ່ຈຳເປັນແກ່ຊີວິດ(ໂດຍສະເພາະຢ່າງຍິ່ງສິ່ງທີ່ຜລິດດ້ວຍວັດຖຸດິບຂອງລາວ ໃຫ້ຫລາຍເທົ່າທີ່ຈະທຳໄດ້).

໒. ງົດ ຫລືຜ່ອນເບົາການຊື້ເຄື່ອງໃຊ້ ແລະອາຫານທີ່ຟຸ່ມເຟືອຍແລະບໍ່ຈຳເປັນອອກ ໃຫ້ນ້ອຍລົງ ຫລືໝົດສິ້ນ.

໓. ບັງຄັບໃຫ້ຄົນໃນຊາດ ໃຊ້ເຄື່ອງອຸປໂພກ ແລະບໍຣິໂພກ ຊຶ່ງຜລິດຂຶ້ນໄດ້ຢູ່ບ້ານເຮົາ.

໔. ບັງຄັບແລະສົ່ງເສີມໃຫ້ ໂຮງງານຜລິດຜົນຕ່າງໆ ປັບປຸງສິນຄ້າຂອງຕົນ ມີຄຸນພາບດີຂຶ້ນເລື້ອຍໆ (ແລະປ້ອງກັນໂຮງງານເຫລົ່ານີ້ໄວ້ບໍ່ໃຫ້ສິນຄ້າຕ່າງປະເທດມາຕີຕລາດ)

໕. ຮຽກຮ້ອງໃຫ້ອົງການຕ່າງປະເທດ ທີ່ປະຈຳການຢູ່ໃນຣາຊອານາຈັກລາວ ຊື້ເຄື່ອງສິນຄ້າທຸກປະເພດທີ່ລາວເຮົາຜລິດຂຶ້ນໄດ້.

໖. ເພີ້ມປະຣິມານໃນການຂາຍສິນຄ້າ ອອກນອກປະເທດ (ໂດຍ

ສເພາະເຄື່ອງທີ່ຜລິດ ດ້ວຍວັດຖຸດິບທີ່ເປັນຂອງລາວ) ແລະວັດຖຸດິບຕ່າງໆ ທີ່ເຮົາມີ.

໘໔ _ ການຄົມບາຄົມແລະຂົນສົ່ງ:

ຄວາມດ້ອຍພັທນາ ຂອງຣາຊອານາຈັກລາວຂອງເຮົາ ໃນດ້ານສາຍທາງຄົມນາຄົມນີ້ ນັບວ່າຕ່ຳສຸດຈົນບໍ່ມີປະເທດໃດ ໃນໂລກທຽບທັນ. ສາຍທາງຄົມມາຄົມທີ່ພໍນັບໄດ້ ໃນຣາຊອານາຈັກລາວ ກໍມີເສັ້ນທາງເລກທີ່ ໑໓ ແຕ່ຫລີ່ຜີ. ປາກເຊ. ສວັນະເຂດ, ວຽງຈັນ ເຖິງຫລວງພະບາງ. ເສັ້ນທີ່ ໘ ແມ່ນເລກທີ ໙ ແຕ່ສວັນະເຂດ–ເຊໂປນເຖິງດົງຮ່າ ແລະອີກເສັ້ນນຶ່ງທາງພາກເໜືອ ແຕ່ຊຽງຂວາງເຖິງວິນ (ວຽດນາມເໜືອ) ນອກຈາກນີ້ຍັງມີເສັ້ນທາງທີ່ຕັດຂຶ້ນໃໝ່ ພາຍຫລັງເອກຣາດຊຶ່ງນັບລວມທັງໝົດ (ເສັ້ນທາງອາຊີ ທາງຫລວງ ເສັ້ນທາງປະຈຳແຂວງ ແລະທ້ອງຖິ່ນ ແລະເທສບາລກຳແພງນະຄອນດ້ວຍ) ມີຢູ່ປະມານ ໗໐໐໐ ກິໂລແມດ. ໃນຈຳນວນທັງໝົດນີ້. ສ່ວນທີ່ຈະນັບໄດ້ວ່າ ເປັນເສັ້ນທາງຫລວງ (ປູຢາງແບບເຮົານີ້ແລ) ມີປະມານ ໗໐໐ ກິໂລແມດ ສ່ວນທີ່ເຫລືອປະມານ ໖ ພັນກິໂລແມດນັ້ນ ຕ່າງປະເທດເຂົາເອີ້ນວ່າທາງດິນ (*Chemin de terre*) ໃນຈຳນວນ ໕໐% ໃຊ້ການບໍ່ໄດ້ໃນຣະດູຝົນ ແລະພວກເຮົາຖືວ່າເປັນທາງຫລວງ (*route Nationale*).ໃນຈຳນວນ ໕໐໐ ກມ. ທີ່ກ່າວວ່າແມ່ນທາງຫລວງຂນາດດີຂອງເຮົາ, ຖ້າຈະຣ້ອງໃຫ້ຖືກຕາມຄວາມໝາຍ ຂອງຝຣັ່ງເສດ ແລະອາເມຣິກາກໍເປັນພຽງເສັ້ນທາງທ້ອງຖິ່ນ (*départementales*). ເທົ່ານັ້ນ

ແລະທີ່ເຂົາຮ້ອງວ່າເປັນທາງຫລວງນັ້ນ ຂອງເຮົາກໍຈະມີພຽງ ໑໔ ກິໂລແມດ ຄືຈາກວຽງຈັນຫາທ່າເດື່ອ ເພາະວ່າທີ່ເປັນ (*Route Nationale*)ຂອງ ເຂົາແລ້ວຢ່າງນ້ອຍ ກໍຂນາດເສັ້ນທາງທ່າເດື່ອວຽງຈັນ (ອາເມຣິກາສ້າງໃຫ້ ປີ ໑໙໕໑). ນອກນັ້ນໂດຍສເພາະເສັ້ນທາງທີ ໑໓ ແລະທີ 9 ກໍຈະເປັນພຽງ (*départementale*). ເສັ້ນທາງປະຈຳທ້ອງຖິ່ນຂອງເຂົາ.

ສ່ວນເສັ້ນທາງຣົຖໄຟນັ້ນ ເຮົາບໍ່ທັນມີຈັກແມດເລີຍ. ສຳລັບເສັ້ນທາງໃນກຳແພງເມືອງຕ່າງໆນັ້ນ (*rues municipales*) ກໍຕົກຢູ່ໃນສພາບເປັນອຸມ, ເປັນຝຸ່ນຍາມແລ້ງ ແລະເປັນຕົມຍາມຝົນ ມີຢູ່ປະມານ ໓໐໐ ກ.ມ. (ສ່ວນນີ້ໄດ້ນັບເຂົ້າໃນຈຳນວນ ໗ ພັນ ກ.ມ.ແລ້ວ).ຖ້າຈະປຽບໃສ່ກັບຕ່າງດ້າວແລ້ວ ຈະເຫັນຕົວເລກດັ່ງນີ້

ສຫະຣັດ: ທາງຣົຖໄຟ ມີ໔໐.໐໐໐ ກ.ມ ເສັ້ນທາງຣົດຫລາຍກວ່າ ມີ ທົບ ສຫະພາບໂຊວຽດທາງຣົດໄຟ ໑໔໑.໐໐໐ ກ.ມ ແລະທາງຣົດ ໔໐໐-໐໐໐ ກ.ມ ໃນຈຳນວນທາງຣົດທີ່ກ່າວນີ້ ມີຄຸນພາບຢ່າງນ້ອຍທີ່ສຸດ ກໍເທົ່າກັບທາງວຽງຈັນທ່າເດື່ອ ຂອງເຮົານີ້ແລ. ບາດນີ້ເຮົາລອງມາເວົ້າ ເຣື່ອງຣົຖທີ່ແລ່ນຢູ່ຕາມຖນົນ ຕາບຊ້າຍຕາບຂວາຂອງເຮົາລອງເບິ່ງ. ພອກທີ່ມີຣົຖ ໔ ລໍ້ທັງໝົດ ໑໔.໑໑໔ ຄັນ ແລະຣົດ ໘ ລ້ ໑໑.໐໕໗ ຄັນ ລວມ ໘໔.໑໗໘ ຄັນ (ໃນປີ ໑໙໗໑) ແລ້ວເອົາມາຕໍ່ລຽນໄວ້ ຕາມຖນົນແລດຢາງປະມານ ໗໐໐ ກ.ມ ນັບທັງເສັ້ນທີ່ມີຢູ່ເຫສບານຕ່າງໆ ທົ່ວຣາຊອານາຈັກຂອງເຮົາ ຈະໄດ້ປະມານ ມີ໔ ຄັນຕໍ່ ໑ ກິໂລແມດ ຖ້າທຽບໃສ່ ສຫະພາບໂຊວຽດ ຊຶ່ງມີຣົຖ

ທັງໝົດປະມານ ໗.໐໐໐.໐໐໐ ຄັນ ຕໍ່ເສັ້ນທາງປູຢາງ ຫລືລາດຊີມັງປະມານ ໔໐໐,໐໐໐ ກ.ມ ກໍຈະໄດ້ພຽງ ໑໘ ຄັນຕໍ່ ໑ ກິໂລແມດ. ເປັນອັນວ່າເຮົາກ້າວໜ້າກ່ອນ ມະຫາອຳນາດຕັ້ງສາມເທົ່າ.

ແຕ່ວ່າເປັນຄວາມກ້າວໜ້າໃນ ທາງທາຍະນະ ຄືຕ້ອງຊື້ຣົຖມາຂີ່ຕຳກັນຕາຍ ຈົນບໍ່ມີຖນົນຫົນທາງຈະໃຫ້ແລ່ນ ໃຊ້ເງິນຊື້ນ້ຳມັນມາເຜົາຖິ້ມ ໃນຈຳນວນຣົຖ ໘໔.໐໐໐ ກວ່າຄັນນັ້ນ ທີ່ເປັນຣົຖຂົນສົ່ງມີພຽງ ໘.໐໐໐ ຄັນ ນອກນັ້ນເປັນຣົຖເພີດເພີນ (*Voitures de tourisme et moto*).

ນ້ . ການສາທາຣະນະສຸກ:

ໃນດ້ານສາທາຣະນະສຸກນີ້, ນັບແຕ່ປີ ໑໙໕໔ ເປັນຕົ້ນມາ ເຫັນວ່າມີຄວາມກ້າວໜ້າຢູ່ບໍ່ນ້ອຍ. ກ່າວຄືເຮົາມີສຖານທີ່ ແລະບຸຣຸດພະຍາບານ ດັ່ງຕໍ່ໄປນີ້ (ຕາມສຖິຕິ ໑໙໒໑)ໂຮງພະຍາບານ ໑໒ ແຫ່ງ ໂຮງໝໍນ້ອຍ (*Infirmerie*) ໓ ແຫ່ງ ແລະບ່ອນແຈກຢາ(*Dispensaires*) ໑໖໔ ແຫ່ງ ມີນາຍແພດຂັ້ນດອກເຕີ້ ໔໙ ຄົນ (ທະຫານ ໘໔ ພົລເຮືອນ ໘໔) ແພດຊ່ວຍ ໑໘໑ (ທະຫານ ໔໐ ພົລເຮືອນ ໓໑), ດອກເຕີ້ເພສັຊກອນ(*DR Pharmaciens*) ໖ (ພົລເຮືອນ ໕, ທະຫານ ໑) ແພດເພສັຊກອນ (*Med- phar.*) ໙, ດອກເຕີທັນຕະແພດ (*dentiste*) ໑ ທັນຕະແພດຊ່ວຍ ໑໙ ນາງພະດຸງຄັນແພດ (*Sage femmes*) ໑໙໖ ນາງພະຍາບາລ (*Infir*)໒໐໙ ແລະນາງພະດຸງຄັນປະຈຳທ້ອງຖິ່ນ (*Accoucheuses rurales*) ໘໖໑.

ເຖິງວ່າປະຣິມານຂອງສຖານທີ່ ແລະຂອງບຸຣຸດພະຍາບານຈະບໍ່ທັນພຽງ

ພໍກັບ ຄວາມຕ້ອງການກໍຕາມ ໂດຍທົ່ວໄປແລ້ວ ປະຊາຊົນສ່ວນໃຫຍ່ກໍອາສັຍສຖານທີ່ ພຍາບານຕາມຂັ້ນຕ່າງໆ ບັນເທົາຄວາມເຈັບປ່ວຍຂອງຕົນ ພໍເປັນການພຍາບານທຸເລົາໄດ້ (ເວັ້ນແຕ່ປະຊາຊົນ ຜູ້ທີ່ຢູ່ຮ່າງໄກຈາກທ້ອງຖິ່ນພັທນາ) ແຕ່ວ່າສິ່ງທີ່ຄວນດັດແປງຮີບດ່ວນທີ່ສຸດນັ້ນ ກໍຄືຄຸນພາບຂອງສະຖານທີ່ ແລະບຸຣຸດພຍາບານທຸກໆຂັ້ນ ໂດຍສະເພາະຢ່າງຍິ່ງ ຂັ້ນໂຣງພຍາບານ (*Hopitaux*) ຄືຈະຕ້ອງປັບປຸງໃຫ້ເປັນ ໂຣງພຍາບານທີ່ມີຄຸນພາບເຖິງບໍ່ທຽບເທົ້າ ກັບຂອງປະເທດເພື່ອນບ້ານຢ່າງເຕັມປ່ຽມ ກໍໃຫ້ພຽງບ່າຄຽງໄຫລ່ກັບຂອງເຂົາ. ໂດຍຈັດໃຫ້ມີຂັ້ນທີ ໑ ຢູ່ທີ່ວຽງຈັນແຫ່ງດຽວ ພຍາບານຢ່າງສຸດຂີດ ເພື່ອໃຫ້ຂັ້ນນີ້ທຽບເທົ້າກັບຂອງປະເທດເພື່ອນບ້ານ ໃນທຸກດ້ານ ເຖິງຈະມີອຸປສັກ ແລະບັນຫາສັກພຽງໃດ ກໍຕ້ອງເອົາຊະນະໃຫ້ໄດ້ ທັງນີ້ກໍເພື່ອໄວ້ ຣັກສາພຍາບານຄົນສຳຄັນຂອງຊາດ ບໍ່ໃຫ້ອອກໄປປົວຕົວທີ່ ຕ່າງປະເທດ ອັນຈະເປັນແນວທາງສິ້ນເປືອງເງິນຕຣາຕ່າງປະເທດ (ແຕ່ລະປີຣັຖຕ້ອງຈ່າຍສຳລັບຄົນອອກໄປປົວ ຕ່າງປະເທດຕົກເປັນເງິນຫລາຍໆລ້ານເຊັ່ນສົກ ໑໙໗໗–໗໘ ບໍ່ຕ່ຳກວ່າ ໑໗ ລ້ານໂດລາ) ແລະຈະເປັນການຊ່ວຍສ້າງເສຖກິດຂອງຊາດໄປໃນຕົວ.

ໂຣງພຍາບານຂັ້ນທີສອງໄວ້ຢູ່ທີ່ຫລວງພະບາງ ສວັນນະເຂດ ແລະປາກເຊ ທັງສາມສຖານທີ່ຈະຕ້ອງປັບປຸງໃຫ້ເປັນໂຣງພຍາບານທີ່ສົມບູນ ໃນທຸກດ້ານ ສາມາດຮັບປິ່ນປົວຄົນເຈັບໄດ້ທຸກປະເພດ ໂດຍບໍ່ຕ້ອງສົ່ງໄປປົວຕ່າງປະເທດ ຫາກວ່າເປັນການເຫລືອບ່າກວ່າແຮງ ຈຶ່ງຈັດສົ່ງຂຶ້ນວຽງຈັນ ເພາະ

ເທົ່າທີ່ເປັນຢູ່ປັດຈຸບັນນີ້ ປະຊາຊົນທີ່ຢູ່ຕາມແຂວງສວັນນະເຂດ ແລະປາກເຊ ມັກຈະໄປປົວໂຕທີ່ຕ່າງແຂວງຂອງປະເທດໄທ ແມ່ນຈະເປັນອາການເຈັບປວດເລັກໆນ້ອຍໆ ທັງນີ້ກໍຍ້ອນວ່າ ໂຮງພຍາບານຂອງເຮົາໃນທີ່ນັ້ນ ຍັງດ້ອຍກວ່າຂອງເຂົາຫລາຍ ເພາະສນັ້ນຈຶ່ງສົມຄວນຫາທາງອອກ ດ້ວຍການປັບປຸງເອົາຂອງເຮົາເອງພຽງ ໔ ແຫ່ງ ທົ່ວຣາຊອານາຈັກ ໃຫ້ມີຄຸນພາບດີ ກໍຄົງຈະບໍ່ເປັນສິ່ງທີ່ເຫລືອບ່າກວ່າແຮງ

ບໍ່ດັ່ງນັ້ນ ເຮົາກໍຈະໄດ້ອາສັຍແຕ່ຕ່າງດ້າວ ແລະໃຊ້ເງິນຕຣາຕ່າງປະເທດ ຢູ່ແບບເທົ່ານີ້ຕລອດໄປ.

໔. ພື້ນຖານທາງເສຖກິດ:

ຕໍ່ໜ້າສພາບການ ທີ່ເປັນຢູ່ໃນປັດຈຸບັນນີ້ ຫົນທາງອອກທີ່ດີທີ່ສຸດ ເພື່ອແກ້ໄຂບັນຫາທາງເສຖກິດ ແລະການເງິນ ກໍຄືຕ້ອງຜລິດຜົນຂຶ້ນເອງ ດ້ວຍການສນັບສນູນ ແລະຊຸກຍູ້ດ້ານ:

- ການກະສິກັມ
- ການອຸດສາຫະກັມ
- ເສັ້ນທາງຄົມມະນາຄົມ ຕິດຕໍ່ກັບຕ່າງປະເທດ.

ລັກສນະສາມຢ່າງທີ່ກ່າວນີ້ ເປັນພື້ນຖານອັນໝັ້ນຄົງ ທີ່ສຸດສຳລັບປະກັນຄວາມເປັນເອກຣາດ ບໍ່ວ່າແຕ່ໃນດ້ານເສຖກິດເທົ່ານັ້ນ, ແຕ່ຍັງເປັນມູນຖານຄ້ຳປະກັນໃນທາງການເມືອງ, ການທະຫານແລະອື່ນໆອີກດ້ວຍ.

ຣັຖບານສມັຍປັດຈຸບັນນີ້ ໄດ້ມອງເຫັນຄວາມສຳຄັນໃນດ້ານເສຖະ

ກັນຫລາຍຂຶ້ນ ໂດຍໄດ້ເລັ່ງລັດຈັດປູພື້ນຖານອັນໝັ້ນຄົງຂຶ້ນຫລາຍແຫ່ງ ເຊັ່ນ ໂຮງຮຽນກະເສດ, ການອົບໂຮມຊາວກະສິກອນ ຢູ່ຕາມທ້ອງຖິ່ນຕ່າງໆ, ໂຄງການປັບປຸງລຸ່ມແມ່ນ້ຳຂອງ ໂຄງການຊົນປະທານ ເພື່ອສົ່ງເສີມການກະເສດແລະລ້ຽງສັດ ແລະອື່ນໆອີກ. ໂຄງການຕ່າງໆທີ່ກ່າວມາແລ້ວນີ້ ລ້ວນແຕ່ເປັນໂຄງການທີ່ເໝາະສົມທີ່ສຸດ ສຳລັບສພາບການທາງເສຖກິດຂອງລາວເຮົາໃນປັດຈຸບັນນີ້ ຄວນທີ່ຈະໄດ້ຮັບການສນັບສນູນ ແລະອຸທິດກຳລັງຊັບແລະຈິດໃຈຈາກຣັຖບານແລະປະຊາຊົນຢ່າງເຕັມທີ່. ເພາະຖ້າຈະປ່ອຍໃຫ້ແຕ່ແຜນການອັນງາມໆເຫລົ່ານັ້ນ ດຳເນີນງານໄປແຕ່ຢູ່ໃນເຈັ້ຽສ່ ໂດຍຂາດການເອົາໃຈຊ່ວຍ ໃນທາງພາທານະແລະພາກປະຕິບັດແລ້ວ ກໍຄົງຈະບໍ່ບັງເກີດຜົນອີກຕາມເຄີຍ. ພວກເຮົາຍັງຄົງຈຳແຜນການ ໔ ປີ ທີ່ທາງຣັຖບານຄາດໄວ້ໃນປີ ໑໙໕໔–໕໕ ວ່າລາວຈະສົ່ງເຂົ້າອອກຂາຍຕ່າງປະເທດປີລະເທົ່ານັ້ນເທົ່ານີ້ພັນໂຕນ ແຕ່ແຜນການອັນນີ້ໄດ້ຜ່ານກາຍມາແລ້ວຈົນເຖິງ ໑໙໖໔ (໙ ປີແລ້ວ) ລາວກໍຍັງຕ້ອງໄດ້ຊື້ເຂົ້າຈາກຝັ່ງໄທປີລະປະມານ ໗໐.໐໐໐ ໂຕນ ຕົກເປັນເງິນຫລາຍກວ່າ ໙.໐໐໐.໐໐໐ ໂດລາ ຫລືກວ່າ ໙໐໐.໐໐໐.໐໐໐ ກີບ ດັ່ງນີ້ຈຶ່ງເຫັນໄດ້ວ່າ ການທີ່ຈະຂີດແຕ້ມແຜນຄຳນວນຕົວເລກຢູ່ແຕ່ໃນໜ້າໂຕະ ໂດຍຂາດການອຸທິດກຳລັງຊັບ ພາຫະນະ ແລະບໍ່ຄິດເຖິງຄວາມຍຸ້ງຍາກທີ່ອ້ອມຮອບ ການປະຕິບັດແລ້ວໂຄງການນັ້ນໆກໍບໍ່ມີຄວາມຫມາຍ ເພາະວ່າການຄຳນວນແລະວາງແຜນອາດເຫັນທຸກສິ່ງຢ່າງໄປໃນແງ່ດີໝົດ ສ່ວນການປະຕິບັດຢູ່ພື້ນທົ່ງໄຮ່ທົ່ງນານັ້ນ ອາດພົບກັບຟ້າຝົນບໍ່ດີ,

ຄວາມແຫ້ງແລ້ງ ນ້ຳຖ້ວມ ແມງໄມ້ລົງຣະບາດ ທຳລາຍເຄື່ອງປູກຂອງຝັງ ດັ່ງນີ້ເປັນຕົ້ນ. ເພາະສະນັ້ນການວາງແຜນໃນທາງກະເສດນີ້ ຈະຕ້ອງຄຳນວນ ເຫດຮ້າຍເຫລົ່ານີ້ຢູ່ເລື້ອຍໆ ແລະຣັຖບານຕ້ອງລັບພາຣະໃນການປ້ອງກັນ ສັດຕຣູຫລືເຫດຮ້າຍຂອງພືດ ຊ່ວຍກະສິກອນ. ບໍ່ແມ່ນຈະຊຸກຊວນໃຫ້ແຕ່ ທຳການປູກຝັງ ແບບນ້ຳຖ້ວມມາເກືອບທຸກໆປີ ດັ່ງກັບຊາວກະສິກອນໃນ ເຂດບ້ານທ້ອມ ສີຖານໃຕ້ແລະເຂດອື່ນໆ ໂດຍບໍ່ມີຜູ້ໃດເອົາຫົວຊານຳການ ປ້ອງກັນນ້ຳຖ້ວມ (ດ້ວຍການຄູນຖນົນສາຍບໍ່ໂອ, ບ້ານທ້ອມແລະສີຖານໃຕ້)

ໃນດ້ານອຸດສາຫະກັມ ເຫັນວ່າຣາຊອານາຈັກລາວຂອງເຮົາ ໄດ້ ຕິດຕັ້ງແລະຂຍັບຂຍາຍໂຮງງານຂນາດເບົາຂຶ້ນຫລາຍແຫ່ງ ເປັນຕົ້ນ ໂຮງ ງານຢາດູດ, ເກີບ, ໄມ້ຂີດໄຟ, ເຄື່ອງດື່ມ, ອາຫານ ແລະອື່ນອີກຫລາຍ ແນວ ປັດຈຸບັນນີ້ ໂຮງງານວັດຖຸກໍ່ສ້າງ ກໍກຳລັງເລີ່ມມີບົດບາດຂຶ້ນມາແດ່ ແລ້ວ ເຊັ່ນ ໂຮງງານສັງກະສີ, ປູນຊີມັງ, ກະເບື້ອງມຸງ, ແລະອື່ນໆ ລາວເຮົາຍັງຂາດວັດຖຸກໍ່ສ້າງຫລາຍ ຈຳເປັນຈະຕ້ອງເລັ່ງລັດດ້ານອຸດສະຫະ ກັມ ຊນິດນີ້ຂຶ້ນໃຫ້ພຽງພໍກັບຄວາມ ຕ້ອງການພາຍໃນ (ໂຮງງານເຫລັກ ເສັ້ນຊຶ່ງຫາກໍມີແຜນ) ແລະທີ່ລາວຕ້ອງການອັນຮີບດ່ວນອີກອັນນຶ່ງ ກໍຄື ໂຮງງານເຣັດເຈັຽ ເພາະເຈັຽເປັນສິນຄ້າສນິດທີ່ຈຳເປັນທີ່ສຸດ ທີ່ເຮົາຕ້ອງ ຊື້ຈາກຕ່າງປະເທດ ປີນຶ່ງເປັນເງິນຫລາຍ ລ້ານໂດລາ. ນອກຈາກນີ້ກໍ ຄວນຈະມີໂຮງງານແກ້ວ, ໂຮງງານຜລິດຝຸ່ນ ວິທຍາສາດແລະອື່ນໆ,

ເທົ່າທີ່ເປັນມາ ຈົນເຖິງທຸກວັນນີ້ ໂຮງງານຂນາດເບົາດັ່ງກ່າວນີ້ ລ້ວນແຕ່

ເປັນຂອງເອກຊົນ ຊຶ່ງສ່ວນມາກບໍ່ໄດ້ໃຊ້ວັດຖຸດິບກັບບ້ານເຮົາເອງ ແລະຍັງຕ້ອງສັ່ງຊື້ຫາດວັດຖຸ ປະກອບມາຈາກຕ່າງປະເທດຢູ່ ສິ່ງທີ່ພວກເຮົາຄວນສນັບສນູນຢ່າງເຕັມທີກໍດີ ໂຮງງານທີ່ຜລິດດ້ວຍວັດຖຸດິບ ຈາກບ້ານຂອງເຮົາເອງ ແລ້ວຊ່ວຍປ້ອງກັນໂຮງງານພວກນີ້ໄວ້ໃຫ້ຫມັ້ນຄົງ ດ້ວຍການຈັດຊື້ສິນຄ້າຊນິດ ທີ່ຜລິດຂື້ນໄດ້ຢູ່ບ້ານເຮົາ.

* ໂຮງງານອີກອັນນຶ່ງທີ່ລາວເຮົາໄດ້ຮັບການຊ່ວຍເຫລືອ ຈາກມິດປະເທດນັ້ນຄື ເຄື່ອນໄຟຟ້ານ້ຳງື່ມ ແລະເຊລະບຳ (ນ້ຳເຊໂດນ) ເຄື່ອນນ້ຳງື່ມເປັນໂຄງການທີ່ຍິ່ງໃຫຍ່ ແລະສຳຄັນທີ່ສຸດ ໃນປະວັດສາດຂອງລາວ ໂຄງການອັນທຳອິດໄດ້ສຳເຣັດໄປແລ້ວ ໃນເດືອນທັນວາ ໑໙໗໑ ຊຶ່ງມີສ່ວນປະກອບດັ່ງຕໍ່ໄປນີ້:

* ຂົວຂ້າມນ້ຳງື່ມ (ຂົວເບຕົງອາກເມ)ຣາຄາ ໔,໙໕໐,໐໐໐ ໂດລາ
* ການຕິດຕັ້ງສາຍໄຟເຮງສູງ ໒,໘໕໐,໓໒໐ "
* ເຮືອນພັກຈຳນວນ ໑໗ ຫລັງ ໓.໗໖໐.໐໐໐ "
* ຕົວເຄື່ອນເອງ ໑໔.໔໓໐.໔໗໐ "
* ເຄື່ອງຈັກຜລິດໄຟຟ້າ ໒ ເຄື່ອງ ໒.໘໕໐.໐໐໐ '

ຕົກເປັນເງິນທັງຫມົດ ໒໙.໙໓໐ ໘໙໐ "

ເງິນຈຳນວນທັງຫມົດນີ້ ໄດ້ຮັບການຊ່ວຍເຫລືອຈາກປະເທດຕ່າງໆ ດັ່ງນີ້:

* ອົສຕຣາລີ ໖໒໙.໔໔໑ ໂດລາ
* ການາດາ ໒.໐໐໐.໐໐໐ "

* ຝຣັ່ງເສດ	໙໐໗.໖໔໓	ໂດລາ
* ສຫະຣັຖອະເມຣິກາ	໑໕.໔໐໐.໐໐໐	"
* ແດນມາກ	໗໓໐.໐໐໐	"
* ຍີ່ປຸ່ນ	໔.໓໙໘.໐໐໐	"
* ນູແວນເຊລັງ	໔໖໘.໐໐໐	"
* ໂຮນລັງ	໖.໗໗໐.໐໐໐	"
* ຣາຊອານາຈັກໄທ	໑.໘໔໐.໐໐໐	" (໑)

(໑) ການຮ່ວມສົມທົບທຶນ ຂອງຣາຊອານາຈັກໄທນີ້ ບໍ່ໄດ້ອອກເປັນເງິນ ແຕ່ເປັນວັດຖຸກໍ່ສ້າງ ເຊັ່ນເຫລັກແລະຊີມັງ ຊຶ່ງລາວຕ້ອງໃຊ້ທົດແທນດ້ວຍກະແສໄຟຟ້າ

ເດື່ອນດັ່ງກ່າວນີ້ ສາມາດຜລິດໄຟຟ້າ (໘ ເດື່ອງ ເດື່ອງລະ ໑໕ ພັນ) ໄດ້ ໖໐.໐໐໐ ກລ,ວັດ ນອກຈາກໄດ້ກຳລັງໄຟແຮງສູງແລ້ວ ເຮົາຍັງໄດ້ຜົນປໂຍດແນວອື່ນອີກດີ; ສົ່ງເສີມການກະສິກັມ, ອຳນວຍການເດີນເຮືອ, ເປັນອ່າງລ້ຽງປາ ແລະຫາປາທີ່ສຳຄັນ ສດວກໃນການທ່ອງທ່ຽວ ແລະສາມາດປ້ອງກັນນ້ຳຖ້ວມ. ການທີ່ຣາຊອານາຈັກລາວເຮົາ ໄດ້ເດື່ອນໄຟຟ້ານ້ຳງື່ມ ຊຶ່ງມິດປະເທດທີ່ຫວັງດີຊ່ວຍເຫລືອນີ້ ປະຊາຊົນລາວຖືວ່າ ເປັນມຸນມໍຣະດົກອັນລ້ຳຄ່າ ສຳລັບປູ້ພື້ນຖານ ທາງເສຖກິດຂອງຕົນແລະຂໍສແດງຄວາມເຄົາຣົບ ຄວາມກະຕັນຍູ ກະຕາເວທີ ຕໍ່ເພື່ອນມິດປະເທດເຫລົ່ານັ້ນ ດ້ວຍຄວາມເຕັມໃຈ ແຕ່ມັນເປັນຫນ້າເສັຽດາຍເຫລືອທີ່ຈະທົນຕໍ່ຄວາມລະອາຍ ທີ່ລາວເຮົາບໍ່ໄດ້ຮ່ວມແຮງຮ່ວມທຶນເຂົ້າສົມ

ທັບເທົ່າທີ່ຕົນມີ ພໍໃຫ້ເປັນພິທີການທູດ ຫລື ເພື່ອມາຣະຍາດຂອງຜູ້ຈເຣີນການທີ່ເຮົາມັ່ງມີກອດເອີກຕໍ່ໜ້າມິດທີ່ມາອອກຊັບອອກແຮງ ເພື່ອຜົລປະໂຍດຂອງເຮົານັ້ນ ມັນສົມຄວນແລ້ວບໍ ? ເພື່ອນບ້ານຜູ້ມາຊ່ວຍເຂົາເຈົ້າຈະເບິ່ງເຮົາໄປໃນຮູບໃດ ? ຂໍໃຫ້ທ່ານຜູ້ມີຄວາມຮູ້ ຄວາມສລາດທັງຫລາຍ ຊ່ວຍກັນຄິດແດ່. ທາດແທ້ຂອງຄົນໂງ່ນັ້ນ ມັກງ່າຍ ມັກສບາຍ ແລະຢາກໄດ້ໂດຍບໍ່ຕ້ອງເສັຽຊັບ ແລະເຫື່ອແຮງ ແລະເປັນສັນຊາດຍານຂອງຜູ້ດ້ອຍພັທນາ. ແຕ່ຄົນລາວເຮົາບໍ່ໄດ້ເປັນດັ່ງທີ່ວ່ານີ້ໝົດທຸກຄົນ, ກົງກັນຂ້າມຊາວລາວເປັນຊົນຊາດທີ່ມີກຽດ ມີວັທນະທັມອັນສູງ ມາແຕ່ດຶກດຳບັນ ແລ້ວເປັນຫຍັງເຮົາຈຶ່ງບໍ່ສແດງຈຸດເດັ່ນຂອງພວກເຮົາອອກໃຫ້ໂລກຮູ້ແດ່.?

ດັ່ງນີ້ຈຶ່ງຂໍຊັກຊວນຄົນລາວທຸກເຜົ່າ ທຸກເພດ ທຸກວັຍ ຈົ່ງພາກພູມໃຈຮັກສາກຽດແລະວັທນາທັມອັນດີງາມຂອງເຮົາໄວ້ ແລະຊ່ວຍກັນສ້າງສາເສຖກິດຂອງຊາດໂດຍສະເພາະຢ່າງຍິ່ງຜູ້ທີ່ຢູ່ຕາມຄອງນ້ຳງື່ມ ຈົ່ງສວຽໂອກາດພັທນາຫາລາຍໄດ້ຈາກເຂື່ອນນ້ຳງື່ມຂອງເຮົາ ດ້ວຍການປູກຝັງ, ລ້ຽງສັດ, ຫາປາ, ແລະອື່ນໆ.

ສຳລັບເຂື່ອນນ້ຳງື່ມອັນທີສອງນັ້ນ ກອງປະຊຸມບັນດາມິດປະເທດທີ່ຈະໃຫ້ການຊ່ວຍເຫລືອໄດ້ປະຊຸມກັນທີ່ມະນິລາ (ຟີລິຟປິນ) ວັນທີ ໒໓-໒໔ ຕຸລາ ໑໙໗໓ ໄດ້ຕົກລົງກັນດຳເນີນການກໍ່ຕັ້ງ ເຂື່ອນນ້ຳງື່ມອັນສອງ ສ່ວນໃຫຍ່ກໍ່ຄືການຕິດຕັ້ງເຄື່ອງຜລິດໄຟຟ້າ ໒ ເຄື່ອງ ໆ ລະ ໔໐.໐໐໐ ກ.ລ ວັດ ຕື່ມອີກ ເມື່ອເສັດແລ້ວເຂື່ອນນີ້ຈະສາມາດ ຜລິດໄຟຟ້າໄດ້ທັງໝົດປະ

ມານ ໑໑໐ ໐໐໐ ກິໂລວັດ ມີດປະເທດທີ່ຕົກລົງຊ່ອຍເຫລືອກໍມີ. ອົສຕຣາລີ ໕໐໐.໐໐໐ ໂດລາ- ອິນເດັຽ ໑໓໗.໐໐໐ ໂດລາ- ຍີ່ປຸ່ນ ໑໑.໙໕໐,໐໐໐ ໂດລາ (໕໐% ຂອງຣາຄາທັງໝົດ) -ເນເທີແລນ ໑໕໕.໕໕໕ ໂດລາ -ນູແວນເຊລັງ ໕໐໐.໐໐໐ ໂດລາ -ອັງກິດ ໒໐໖.໐໐໐ ໂດລາ- ສຫະຣັຖອາເມຣິກາ ໕.໐໐໐.໐໐໐ ໂດລາ -ການາດາ ໒.໕໙໗.໐໐໐ ໂດລາ ແລະເຍຣະມັນຕາເວັນຕົກ ໓.໑໕໖.໐໐໐ ໂດລາ ເທື່ອນີ້ ຫວັງວ່າຣັຖບານຄົງຈະເຂົ້າຮ່ວມສົມທົບ ນຳມີດປະເທດຂອງເຮົາ ບໍ່ຫລາຍກໍນ້ອຍ ຫລືວ່າຈະມີຂັດຫລັງເບິ່ງຕໍ່ໄປອີກ ຈົນກວ່າຈະໄດ້ຊື່ວ່າ ເປັນແຊມປ້ຽນແຫ່ງການຂໍຟຣີ.

* ດັ່ງທີ່ໄດ້ກ່າວມາແລ້ວວ່າ ເສັ້ນທາງຄົມມາຄົມ ກໍເປັນສ່ວນປະກອບອັນນຶ່ງ ຂອງພື້ນຖານທາງເສຖກິດ, ເພາະສາຍທາງເປັນກົນໄກອັນສຳຄັນໃນການລຳລຽງຂົນສົ່ງ ບໍ່ວ່າແຕ່ຢູ່ພາຍໃນ ຫລືກັບຕ່າງປະເທດ. ໂຄງການຄົມມາຄົມ ທີ່ປະຊາຊົນລາວກຳລັງໄຝ່ຝັນ ກໍຄືທາງອອກສູ່ທະເລທີ່ດານັງ (ວຽດນາມໃຕ້) ຖ້າແຜນການອັນນີ້ບັນລຸລົງມືໃດ ລາວເຮົາກໍຈະມີປະຕູຣະບາຍສິນຄ້າ ຂອງຕົນອອກຫລືເຂົ້າອີກປະຕູນຶ່ງ ເສຖກິດຂອງເຮົາກໍຈະດີຂຶ້ນບໍ່ຫລາຍກໍນ້ອຍ.

ສະນັ້ນເຮົາຈິ່ງຂໍອຸທິດຈິດໃຈພາວັນນາໃຫ້ໂຄງການທີ່ເປັນ ພຽງຄວາມຝັນເກີດເປັນຄວາມຈິງ ໃນອະນາຄົດອັນໃກ້ນີ້. ແລະຂໍສະແດງຄວາມພິຕິຍິນດີແລະຄວາມກະຕັນຍູຕໍ່ວຽດນາມໃຕ້ ທີ່ເຫັນອົກເຫັນໃຈລາວ. ແຕ່ວ່າລາວເຮົາຈະ

ສາມາດປະຕິບັດ ໂຄງການອັນນີ້ໄດ້ນ້ອຍຫລາຍພຽງໃດນັ້ນກໍຍັງເປັນບັນຫາ. ສຳລັບສາຍທາງທີ່ລາວເຮົາມີຢູ່ໃນປັດຈຸບັນນີ້ ໄດ້ກ່າວມາແລ້ວ ໃນອັກພັທມາດ້ານຄົມມາຄົມ ທີ່ກ່າວຊ້ຳຕື່ມໃນທີ່ນີ້ ກໍເພື່ອເນັ້ນໃຫ້ເຫັນວ່າເສັ້ນທາງຄືສາຍເລືອດ. ເລືອດຄືເສດຖກິດ, ເພາະເສດຖກິດກັບເສັ້ນທາງເປັນສິ່ງພົວພັນກັນຢ່າງແຍກບໍ່ໄດ້.

ດັ່ງນັ້ນ ເຮົາຈຶ່ງຄວນພຍາຍາມ ເລັ່ງລັດເພີ້ມພູນ ເສັ້ນທາງຄົມມາຄົມຂອງເຮົາໃຫ້ຫລາຍຂຶ້ນ ແລະປັບປຸງຄຸນພາບຂອງມັນ ໃຫ້ມາຕຖານ. ຖ້າຈະກ່າວເຖິງຄຸນພາບແລ້ວ ເສັ້ນທາງທີ່ລາວພໍອ້າງໄດ້ກໍມີພຽງ ໑໔ ກ.ມ. ຄືທາງທ່າເດື່ອວຽງຈັນ. ແຕ່ປັດຈຸບັນເສັ້ນທາງດັ່ງກ່າວ ຕົກຢູ່ໃນສະພາບຫລຸບ ໂພນຫລາຍແລ້ວ ເນື່ອງຈາກເທວະດາບໍ່ເອັນດູລາວ ເປັ່ງນ້ຳຖ້ວມໃນປີ ໑໙໖໖ ແລະ ໑໙໗໑ ເຮັດໃຫ້ເສັ້ນທາງເສັ້ນນີ້ ຕ້ອງເສັຽຫາຍບາງຕອນ ໂຍທາຈຳຕ້ອງໄດ້ຕາບຈຸ່ມ ໃຫ້ຮາບພຽງຢ່າງກັບລື້ນທະເລ ເທັກນິກໃນການຕາບທາງແບບແຂ້ວເລື່ອຍນີ້ ແຜ່ພາຍກັນຫລາຍທີ່ສຸດ ບໍ່ວ່າໃນກຳແພງນະຄອນ ຫລືກອງໂຍທາທົ່ວໆໄປ. ກຸລີຕາບທາງນັ້ນ ຈັກວ່າຈົບມາແຕ່ໃສ ແລະປ່ອຍໃຫ້ກຸລີຜູ້ອາພັບພວກນີ້ ຈຸລະ ໘–໙ ຄົນ ເຮັດກັນໄປຢ່າງບໍ່ມີການດູແລ ຄວບຄຸມເບິ່ງຄຸນພາບເລີຍ. ຈິງຢູ່ ທີ່ວ່າການຕາບທາງເປັນງານທີ່ງ່າຍ ແລະທຸກຄົນເຮັດໄດ້ ແຕ່ກໍຕ້ອງມີສິລປະ ແລະຄຸນພາບອັນດີດີກັນ ດັ່ງບູຮານກ່າວວ່າໝົກປາແດກຕ້ອງມີຄູ, ຈີ່ປີ້ຕ້ອງມີອາດ. ດັ່ງນັ້ນ ການຕາບທາງກໍຕ້ອງມີອາດຂອງມັນຢູ່ຄືກັນ ດັ່ງຈະໄດ້ສເນີຕໍ່ລົງໄປນີ້:

໑. ຕ້ອງມີນາຍຈຸຜູ້ນຶ່ງຄອບຄຸມດົມງານຢ່າງໃກ້ຊິດ ເພື່ອຄຸມພາບ ອັນດີ.

໒. ກ່ອນອື່ນຈະຕ້ອງທຳຄວາມສະອາດຂອງຫລຸມ ດ້ວຍການຂຸດຫວະ ອອກ ໃຫ້ເປັນຮູບສີ່ຫລ່ຽມຍາວ ຫລືມົນທົນ ນ້ອຍໃຫຍ່ ແລ້ວແຕ່ຂນາດຂອງຂຸມ. ເມື່ອຂຸດລົງໄດ້ເລິກປະມານ ໘ ຫາ ໑໐ ຊ.ມ. ແລ້ວ ແປງຂຸມໃຫ້ຮາບສເມີກັນ. ເມື່ອຮາບ ພຽງດີແລ້ວ ໃຫ້ເອົາເຫລັກຕີນຊ້າງຕຳໃຫ້ແໜ້ນ. (ແຄມຂຸມ ນັ້ນຕ້ອງແປງໃຫ້ຕັ້ງຊັນດີ).

໓. ເມື່ອພື້ນຂອງຂຸມຫາກຕຳແໜ້ນດີແລ້ວ ຕົ້ມຢາງໃຫ້ເປື່ອຍລະ ອຽດເສັຽກ່ອນ ຈຶ່ງນຳເອົາຢາງທີ່ເປື່ອຍແລ້ວມາທົດໜ້າພື້ນ ຂອງຂຸມ ໃຫ້ໜາປະມານ ໒ ຫາ ໕ ຊ.ມ.

໔. ເມື່ອລາດພື້ນຂຸມຮຽບຮ້ອຍແລ້ວ ໃຫ້ເອົາຫີນບົດມາໂຮຍເຕັງ ໜ້າຢາງ ຈົນກວ່າຈະເຕັມປາກຂຸມ ໂດຍໃຫ້ຢູ່ໃນຣະດັບດຽວ ກັບໜ້າພຽງເດີມ ຂອງທາງ.

໕. ເມື່ອໂຮຍຫີນໃສ່ຂຸມແລ້ວ ໃຫ້ເອົາລໍ້ເຕັງ (*rouleau*) ຢຽບ ຫີນລົງໃຫ້ແໜ້ນ, ເວລານັ້ນຢາງຢູ່ທາງລຸ່ມກໍເລີ່ມຟູຂຶ້ນມາ ຖ້າ ເປັນຍາມອາກາດຮ້ອນ ແລະມີຣົຖທ່ອງທ່ຽວຢຽບຫລາຍ ຢາງ ກໍຈະຂຶ້ນມາເຖິງໜ້າພຽງ ຂອງຫົນທາງໃນເວລາ ໕ ຫາ ໑໕ ວັນ.

ຝ. ຖ້າຢາງຫາກຂຶ້ນມາ ບົນຫນ້າພຽງຫລາຍຈົນກາຍເປັນນ້ຳມັນ, ຖ້າຫນ້າພຽງຫາກພໍດີຢູ່ໃນລະດັບຫົນທາງ ໃຫ້ເອົາຊາຍເມັດໃຫຍ່ໂຮຍຫນ້າ. ຫລືຖ້າຫາກຫນ້າພຽງຂອງຂຸມທີ່ແປງໃຫມ່ຍັງຢູ່ໃນຣະດັບຕ່ຳ ກໍໃຫ້ເອົາຫີນບົດມາໂຮຍໃສ່ຕື່ມອີກ ຈົນກະທັ້ງປາກຂຸມຂຶ້ນສູ່ຣະດັບດຽວກັບທາງເດີມ. ກົງກັນຂ້າມ ຖ້າຫາກໃສ່ຫີນຫລາຍໂພດ ຈົນສອດຂຸມຂຶ້ນມາ ເປັນແຂ້ວເລື່ອຍດັ່ງທີ່ເຮົາເຄີຍເຫັນຢູ່ທຸກວັນນີ້ ກໍບໍ່ມີທາງແກ້ໄຂ ນອກຈາກຈະຂຸດມ້າງເຮັດໃຫມ່. ຫລືປະໄວ້ໃຫ້ເປັນແຂ້ວເລື່ອຍ ເປັນການຫາເອົາເປີເຊັນນຳ ພໍ່ຄ້າຂາຍເຄື່ອງອາໄຫລ່ຣົຖ ໂດຍສະເພາະຢາງ. ແນບ ອາມອກຕິສເຊີ້ ແລະອື່ນໆ ຄົງໄດ້ຂາຍດີເປັນພິເສດ.

໕. ສຣຸບຜົນການພັທນາທາງດ້ານວັດຖຸ :

ດັ່ງທີ່ໄດ້ກ່າວມາແລ້ວຢ່າງຍືດຍາວ ວ່າການພັທນາຊາດທາງດ້ານວັດຖຸ ເປັນປັດຈັຍສຳຄັນໃນການດຳຣົງຊາດ, ການຮັກສາໄວ້ຊຶ່ງຄວາມເປັນເອກຣາດ ເອກພາບ ແລະວັທນາຖາວອນ. ການວິຈານຫລືຕ້ອງຕິຄວາມຂາດຕົກບົກພ່ອງ ໃນການພັທນາຊາດດ້ານວັດຖຸນີ້ ເຮົາຮູ້ສຶກແລະຮັບຮູ້ວ່າເປັນຂອງງ່າຍກວ່າການປະຕິບັດໃນສພາບຕົວຈິງ ເພາະວ່າເປັນຂອງທັມມະດາທີ່ຕ້ອງປະເຊີນໜ້າກັບອຸປະສັກນາໆປະການ ເຊັ່ນເສິກສົງຄາມ ຂາດເງິນງົບປະມານ ສພາບການທາງພູມີສາດ (ລາວບໍ່ມີທາງອອກສູ່ທະເລ) ແຕ່ວ່າບັນຫາ

ເຫລົ່ານີ້ ບໍ່ເປັນສິ່ງກີດຂວາງການພັທນາຊາດ ຈົນບໍ່ມີທາງອອກ. ເສິກສົງ
ຄາມໃນລາວເປັນເສິກເຢັນ ການທຳລາຍລ້າງຜານ ກໍຄ່ອຍໆເປັນຄ່ອຍໄປ
ແລະການຍຶດຄອງພ້າດິນຈາກກຳລັງທັບແຫ່ງຊາດ ກໍລ້ວນແຕ່ຢູ່ໃນເຂດພັທນາ
ການເກັບເກນຊາຍໝຸ່ມເຂົ້າເປັນທະຫານກໍໄດ້ບໍ່ເຖິງ ໓໐% ສ່ວນຄ່າໃຊ້ຈ່າຍ
ອາວຸດ ລູກກະສູນ ແລະພັສດຸສົງຄາມໆ ກໍລ້ວນແລ້ວແຕ່ເປັນພາຣະຂອງ
ມະຫາອຳນາດທັງສອງຄ້າຍ ການເບິ່ງແຍງໃນດ້ານສວັດດີການ ແລະຄວາມ
ເປັນຢູ່ຂອງນັກຮົບຜູ້ກ້າຫານ ກໍຕົກຢູ່ໃນສະພາບນ້ຳຕາຕົກ ແລ້ວແມ່ນເພິ່ນ
ເອົາເຫດຜົນອັນໃດມາເວົ້າວ່າ ພັທນາບໍ່ໄດ້ຍ້ອນເສິກສົງຄາມ ສົງຄາມອາດ
ເປັນອຸປະສັກສ່ວນນຶ່ງ ແຕ່ບໍ່ແມ່ນສິ່ງກີດຂວາງຈົນບໍ່ມີທາງອອກກ່ຽວກັບງົປ
ມານນັ້ນມີຫລືບໍ່ ກໍລ້ວນແຕ່ພວກເຮົາສ້າງຂຶ້ນເອງ.ຖ້າທຸກຄົນມີຄວາມບໍຣິ
ສຸດໃຈ, ຢາກເຮັດແທ້ທຳຈິງ ແລະຖ້າຫາກເປັນນະໂຍບາຍຂອງອຳນາດການ
ອັນເດັດຂາດແລ້ວກໍຄົງຈະແກ້ບັນຫາເລື່ອງເງິນຕົກ ຊຶ່ງປັດຈຸບັນນີ້ໄດ້ຮົ່ວ
ໄຫລອອກທຸກກ້າທຸກທາງ ດັ່ງກັບຖອກນ້ຳໃສ່ກະຕ່າ, ດ້ວຍຖ່ ໔ ຖ່, ຖ່
ເຂົ້າກໍຮົ່ວ ຖ່ອອກກໍຮົ່ວ. ບໍ່ວ່າແຕ່ຖ່ນ້ອຍຫລືໃຫຍ່ ລ້ວນແຕ່ເປັນຖ່ທີ່ລຸ
ເປັນຮູທັງນັ້ນ ແລ້ວຈະໃຫ້ນ້ຳໄຫລໄປເຖິງຈຸດໝາຍຂອງມັນໄດ້ຢ່າງໃດ ການ
ເງິນຂອງເຮົາກໍສັນນັ້ນ.

* ກົງກັນຂ້າມ ຖ້າເຮົາຫາກພຍາຍາມຢາຮູຮົ່ວໃຫ້ຮຸນແຮງກວ່ານີ້ຈັກ
ສາມເທົ່າ ຫລື ໑໐ ເທົ່າ ແລະຊ່ວຍກັນປະຍັດ (ຍົກເລີກສິ່ງຟູມເຟືອຍ
ທັງຫມົດ ລາວເປັນປະເທດທີ່ທຸກ ແທນທີ່ຈະໃຊ້ແມກເຊີ່ແດສ ໔໘໐ ຫລື

໓໐໐ ມາພາກັນໃຊ້ ໘ ຫລື ໓ ແຮງມ້າ ຫລືໂຕໂຍຕາ, ໄດຫາສຊູກໍ່ພໍແລ້ວ, ລາວເຮົາເຮັດຣົດບໍ່ເປັນ ບໍ່ຈຳເປັນຕ້ອງເຮັດແບບເສດຖີຂໍທານລະອາຍເຂົາ) ກໍ່ຄົງຈະໄດ້ເງິນກ້ອນນີ້ໄວ້ບໍ່ຫລາຍກໍນ້ອຍ. ສ່ວນທີ່ວ່າເຮັດຫຍັງບໍ່ໄດ້ຍ້ອນລາວບໍ່ມີແຜ່ນດິນຕິດກັບທະເລ, ຂໍ້ນີ້ເປັນເຣື່ອງຂອງສວັນບໍ່ຊົງປານີ ແລະເປັນເຣື່ອງຂອງທັມມະຊາດ ຊຶ່ງຈະຖືວ່າເປັນສິ່ງກີດຂວາງ ແລະນັ້ງຍອມຈຳນົນບໍ່ໄດ້ເດັດຂາດ.

ມັນເປັນການດີເຫລືອທີ່ສຸດແລ້ວ ທີ່ພວກເຮົາໄດ້ມີບຸນວາສນາ ເປັນເຈົ້າຂອງແຜ່ນດິນຕອນນີ້. ໜ້າທີ່ຂອງພວກເຮົາກໍຄື ຕ້ອງປົກປັກຮັກສາແຜ່ນດິນຕອນນີ້ໄວ້ໃຫ້ເປັນສົມບັດຂອງລາວຊົ່ວຟ້າກາລນານ ແລ້ວສ້າງສາບູຣະນະເຂດໃດ ແດນໃດ ທີ່ເປັນມາຣົກ ໃຫ້ເປັນແດນສວັນ, ຈົ່ງເຂົ້າໃຈວ່າມັນບໍ່ມີແຕ່ລາວເຮົາດອກ ທີ່ບໍ່ມີດິນຕໍ່ໃສ່ທະເລ, ພວກເຂົາກໍ່ຍັງສ້າງຄວາມມັ່ງຄັ່ງ ສົມບູນແລະ ມີຄວາມຈເຣີນກ້າວໜ້າ ເທົ່າທຽມກັບປະເທດຕ່າງໆ ທີ່ມີຂອບແດນຕິດກັບທະເລ ເຊັ່ນ: ປະເທດສວິສ, ຫົງກຣີ, ເຊັກໂກສະໂລວາກີ, ໂອຕຣິສ, ກົງໂກ, ນີເຊ, ຊາດ, ມາລີ, ອຸກັງດາ, ອີຣັກ, ອັບການີສຕັງ, ເນປານ, ມົງໂກລີ, ໂບໂລວີ, ປາຣາກວຍ, ແລະອື່ນໆອີກຫລາຍປະເທດ ລ້ວນແຕ່ບໍ່ມີຊາຍແດນຕິດກັບທະເລທັງນັ້ນ.

ລາວເຮົາກໍ່ຕົກຢູ່ໃນຖານະ ທາງພູມີສາດ ອັນດຽວກັນກັບເຂົາ, ຕ່າງແຕ່ວ່າ ເຮົາຍັງບໍ່ຍອມເຮັດ ດັ່ງເຂົາ ຍ້ອນມົວແຕ່ຄິດນ້ອຍເນື້ອຕ່ຳໃຈ ແລະຍອມຈຳນົນຕໍ່ສິ່ງກີດຂວາງເຫລົ່ານີ້. ການທີ່ລະດັບຄອງຊີບຂອງພວກເຮົາຕ່ຳ,

ລາຍໄດ້ສ່ວນສເລັ່ຽແຕ່ລະຄົນປະມານ ໔໐ ໂດລາ ຕໍ່ປີ ແລະທີ່ຊາວຕາເວັນຕົກ ຫລືປະຊາຊົນໃນປະເທດທີ່ກ້າວຫນ້າເຂົາເຈົ້າໄດ້ເຖິງ ໒໐໐ ໂດລາຕໍ່ປີ ນັ້ນມັນບໍ່ແມ່ນຄວາມຜິດຂອງສວັນ ຫລືພຣະຜູ້ເປັນເຈົ້າແຕ່ຢ່າງໃດ ແຕ່ມັນເປັນຄວາມຜິດ ຂອງພວກເຮົາເອງ ທີ່ນິຍົມນອນເວັນ, ຫລິ້ນເບັ້ຽ ຫລິ້ນໄພ້, ກຽດງານ ຂາດຄວາມຂຍັນຕໍ່ວຽກການ ແລະອື່ນໆອີກຕ່າງຫາກ, ສວັນແລະພຣະຜູ້ເປັນເຈົ້າໄດ້ກະທຳຢ່າງຍຸຕິທັມແລ້ວ ຄືທ່ານຈຶ່ງໄຜດໃຫ້ພວກເຮົາມີແຂນຂາ ແລະສ່ວນປະກອບທາງຮ່າງກາຍຄົບຖ້ວນ ຢ່າງກັບເພື່ອນມະນຸດຊາດອື່ນໆ ແລະຂ້ສຳຄັນຄືສວັນໄດ້ແບ່ງ ພື້ນແຜ່ນດິນຕອນນີ້ໃຫ້ເຮົາແລ້ວຢ່າງພຽງພໍ ເຮົາຈະເອົາເຫດຜົນອັນໃດອີກ ມາເປັນຂ້ອ້າງຕໍ່ສວັນແລະພຣະຜູ້ເປັນເຈົ້າ.

ວັກ ໕

ການສະສາງສ້ຽນໜາມພາຍໃນປະເທດ

ການທີ່ຈະຟື້ນຟູຊາດໃຫ້ໝັ້ນຄົງ ແລະວັທນາຖາວອນນັ້ນ ຈະຕ້ອງອາສັຍການພັທນາ ໃນທາງດ້ານວັດຖຸແລະຈິດໃຈ ການພັທນາໃນທັງສອງດ້ານນີ້ ຈະດຳເນີນໄປໄດ້ສະດວກ ແລະໄດ້ຜົນດີ ກໍແຕ່ເມື່ອສ້ຽນຫນາມທີ່ຂວາງກັ້ນ ຫາກຖືກປັດເປົ່າໝົດສິ້ນ. ສ້ຽນຫນາມຕົວສຳຄັນ ແລະຮ້າຍກາດທີ່ສຸດ ທີ່ປະເຊີນໜ້າກັນກັບການພັທນາໃນຍຸກປັດຈຸບັນ ຂອງລາວເຮົາກໍຄື:

- ຄໍຣັບຊັນ ຫລືການສ້ຣາຊບັງຫລວງ.
- ການບໍຣິຫານ ດ້ວຍລັດທິຄອບຄົວ.

ນອກຈາກນີ້ ອາດຈະມີອຸປສັກສິ່ງອື່ນໆອີກຫລາຍຕໍ່ຫລາຍ, ແຕ່ໃນທີ່ນີ້ເຮົາຈະໄດ້ກ່າວບັນຍາຍແຕ່ພຽງ ໒ ຂໍ້ເທົ່ານັ້ນ.

໕໑. **ພາບສາບສູບ ຄໍຣັບຊັ່ນ:** ເປັນທີ່ຊາບກັນໝົດທຸກຄົນແລ້ວວ່າ ໃນວົງການຕ່າງໆ ຂອງຣາຊອານາຈັກລາວເຮົາ ເຄີຍໄດ້ມີ, ຍັງມີຢູ່ໃນປັດຈຸບັນ ແລະອາດຈະມີໃນອະນາຄົດ ການສ້ຣາດບັງຫລວງ ຊຶ່ງເປັນສັດຕຣູຕົວສຳຄັນ ຂອງແຜ່ນດິນ. ມານສັງຄົມປະເພດນີ້ ໄດ້ເຄີຍຖືກປະນາມຢ່າງຮ້າຍແຮງ ຈາກປະຊາຊົນຜູ້ຮັກຊາດ ແລະຣັຖບານທຸກຍຸກທຸກ

ສມັຍ ໄດ້ພຍາຍາມປາບປາມຕລອດມາ ແຕ່ການສໍ້ໂກງດັ່ງ ກ່າວນີ້ ກໍຍັງຄົງຕົວຢູ່ໄດ້ຢ່າງລອຍນວນ. ທັງນີ້ ກໍອາດຈະເປັນຍ້ອນສາເຫດຕ່າງໆ ມາໆ ຊຶ່ງເຮົາຈະບໍ່ຂໍກ່າວຕວງລ່ວງໜ້າກ່ອນ ທີ່ຈະສຶກສາຄົ້ນຄວ້າຫາສາເຫດ ໃຫ້ພຽງພໍເສັຽກ່ອນ, ການສໍ້ຣາດບັງຫລວງໃນບ້ານເຮົາອາດແບ່ງອອກເປັນ ມີ ປະເພດໃຫຍ່ ໓ ຄື;

- ຫມາຍເລກນຶ່ງໄດ້ແກ່ການ; ຍັກຍອກເອົາເງິນຫລວງໂດຍທາງກົງ ແລະທາງອ້ອມ.
- ຫມາຍເລກສອງໄດ້ແກ່ການ; ລັກລອບຫລືຊູກເຊື່ອງ ເອົາເຄື່ອງຂອງຣັດ.
- ຫມາຍເລກສາມໄດ້ແກ່ການ; ໃຊ້ອຳນາດໃນຕຳແຫນ່ງຫາລວຍໃນທາງຜິດກົດຫມາຍ,

ການສໍ້ໂກງຫມາຍເລກນຶ່ງນີ້ ເປັນໂຣກຣະບາດຊນິດນຶ່ງ ຂອງຣາຊອານາຈັກລາວ ທີ່ຮ້າຍກາດທີ່ສຸດ, ການເຄື່ອນໄຫວຂອງພຍາດຊນິດນີ້ກໍຄື:

ກ. ການໃຊ້ເລ້ກົນ ຈັດທຳລາຍການຈ່າຍ ເພື່ອເປັນຫລັກຖານ ອ້າງເອົາເງິນເຂົ້າກະເປົາຫມົດສິ້ນ ຫລືຈ່າຍຕາມຈຸດຫມາຍຂອງມັນພຽງເລັກນ້ອຍ.

ຂ. ໃຊ້ເອກສານໂດຍການປອມແປງຕົວເລກ ໃຫ້ເກີນຂອງຈິງແລ້ວ ທັກເອົາສ່ວນເກີນນີ້ເຂົ້າກະເປົາ: ເຊັ່ນວ່າ ຊື້ເຄື່ອງມາໃຊ້ແທ້ໆ

ພຽງ ໔ ອັນ ແຕ່ໃນບັນຊີວ່າ ໕ ອັນ ແລ້ວທັກເອົາຣາຄາຂອງສາມອັນເຂົ້າກະເປົາ ຫລື ຈ່າຍຄົນງານພຽງ ໔ ຄົນ ແຕ່ໃນບັນຊີອ້າງເອົາເງິນມີ ໕ ຄົນເຫລົ່ານີ້ເປັນຕົ້ນ.

ຄ. ລັກຫລວງໃນການເກັບເງິນເຂົ້າຣັດ ດ້ວຍການສົມຮູ້ຮ່ວມຄິດກັບພໍ່ຄ້າ, ນັກທຸຣະກິຈ ແລະຜູ້ບໍ່ຊື່ທັງຫລາຍ.

ງ. ໂລບຕັດເອົາເງິນງົບປະມານຕ່າງໆອອກໄວ້ ໂດຍອ້າງວ່າ ຈະໃຊ້ເປັນທຶນສ້າງນັ້ນ ເຮັດນີ້ ແຕ່ແທນທີ່ຈະປະຕິບັດ ຕາມຂໍ້ອ້າງ ກໍ່ຍັກຍອກເຂົ້າກະເປົາ.

ຈ. ສົມຮູ້ຮ່ວມຄິດກັບພໍ່ຄ້າຕ່າງດ້າວ ເຫລັກົນ ດ້ວຍການເຊັນສັ່ງຊື້ສິນຄ້າ ຈາກຕ່າງປະເທດ (ແທນທີ່ຈະຊື້ເຄື່ອງເຂົ້າປະເທດຢ່າງແທ້ຈິງ ແຕ່ເສືອກຂາຍເງິນໂດລາ)

ສ. ລັກເອົາເງິນອອກຈາກຄັງຫລວງ ຢ່າງເຢີ້ຍຟ້າທ້າດິນ (ຢ່າງກັບຄະດີ ໑໑ ລ້ານ : ເທສບານນຶ່ງ) (ແລະ ໘໐ ລ້ານ ຈາກຄັງປະຈຳແຂວງນຶ່ງ ໑໙໗໑-໗໔)

ນອກຈາກວິທີການໂກງ ທີ່ກ່າວອ້າງເຖິງນີ້ແລ້ວ ຍັງມີວິທີອື່ນໆອີກຫລາຍແນວ ຊຶ່ງບໍ່ສາມາດບັນຍາຍຈົນຫມົດສິ້ນ ແຕ່ໂດຍມາກແລ້ວ ແມ່ພຍາດຊນິດນີ້ ມັກໃຊ້ວິທີການ ໖ ຢ່າງທີ່ກ່າວມານີ້ ຫລາຍທີ່ສຸດ. ຊຶ່ງການເຄື່ອນໄຫວ ດ້ວຍວິທີການຢ່າງນີ້ ມັກຣະບາດຢູ່ໃນທຸກຂັ້ນຣາຊການ (ຈາກຂັ້ນກະຊວງລົງມາກົມການຕ່າງໆ ລົງມາພແນກການຕ່າງໆ ຈົນເຖິງຂັ້ນຫ້ອງການຕ່າງ.ໆ)

ສຳລັບຄໍຣັບຊັ່ນ ປະເພດທີ່ສອງກໍໄດ້ແກ່ ການເຄື່ອນໄຫວດັ່ງນີ້: ການຫລັກ ຫລືລັກລອບເອົາເຄື່ອງຂອງໆຣັດ ໄປເປັນກັມສິດສ່ວນຕົວຫລືໄປຂາຍເອົາເງິນເຂົ້າກະເປົາ ເຊັ່ນໃຊ້ສິດໃນໜ້າທີ່ການໂກງເອົາ;

ກ. ເຄື່ອງໃຊ້ສອຍ ປະຈຳອົງຣາຊການຂອງຕົນ ທຸກປະເພດ.

ຂ. ເຄື່ອງວັດຖຸກໍ່ສ້າງ ເພື່ອພັທນາທີ່ຣັດສັ່ງຊື້ມາ.

ຄ. ເຄື່ອງບໍຣິໂພກ ທີ່ນຳມາບັນເທົາທຸກ ຫລືຊູບລ້ຽງຂ້າຣາຊການທະຫານ, ແລະຕຳຣວດ ຫລືທີ່ນຳມາຊ່ວຍເຫລືອ ພອກອົພຍົກ ຫລື ຜູ້ທຸກຈົນ.

ງ. ເຄື່ອງອຸປໂພກ ບໍຣິໂພກຕ່າງໆ ທີ່ມິດປະເທດນຳມາຊ່ວຍເຫລືອ ແລະເຄື່ອງຂອງຊນິດອື່ນໆອີກ.

ການລັກລອບເອົາເຄື່ອງຂອງຣັດໄປຂາຍນີ້ກໍອາຈມີຢູ່ສອງຫົນທາງ ຄື ຂາຍພາຍໃນປະເທດ ແລະນອກປະເທດ ຊຶ່ງເປັນປະເທດໃກ້ຄຽງ

ສ່ວນຄໍຣັບຊັ່ນປະເພດທີ່ສາມນັ້ນ ກໍອາດເຄື່ອນໄຫວດັ່ງນີ້:

ກ. ຕັ້ງອົງການພນັນເຖື່ອນ ເພື່ອເກັບຣາຍໄດ້ ໃນການຕົງເງິນເຂົ້າກະເປົາ.

ຂ. ຄ້າເຄື່ອງຂອງຕ່າງໆ ທີ່ຜິດກົດໝາຍ(ຝິ່ນ,ທອງກະສູນຣົຖຟຸ່ມແລະອື່ນໆ)

ຄ. ເປັນນາຍໜ້າແກ່ພໍ່ຄ້າຕ່າງດ້າວ ແລ້ວໃຊ້ອິດທິພົນ ຜູກຂາດການຄ້າ,

ງ. ໃຊ້ວັດຖຸແລະພາຫານະຂອງຣັດ ໄປພົວພັນກັບການຄ້າ.

ຈ. ຄ້າຂອງສິນຄ້າທັມມະດາ ໂດຍບໍ່ຕ້ອງເສັຽຄ່າທໍານຽມ ພາສີ ແລະສ່ວຍສາອາກອນ.

ສ. ຄ້າເຄື່ອງຂອງທີ່ຣັຖບານເກືອດຫ້າມ ບໍ່ໃຫ້ນໍາເຂົ້າ ແລະອອກນອກປະເທດ ໂດຍບໍ່ຕ້ອງເສັຽພາສີ,

ຊ. ຊູດໄຖແລະຊັກເປີເຊັນ ໂດຍບໍ່ມີເຫດຜົນນໍາພໍ່ຄ້າ ອັນເປັນເຫດໃຫ້ພໍ່ຄ້າຕ້ອງຂຶ້ນຣາຄາສິນຄ້າຕື່ມ (ຄ່າແປະເຈັຽະ) ແລະອື່ນໆອີກ.

ເຖິງວ່າການກະທໍາ ຂອງນານປະເພດທີສາມນີ້ ບໍ່ໄດ້ແຕະຕ້ອງເງິນໃນຄັງຫລວງ ຈັກກີບດຽວກໍຕາມແຕ່ການກະທໍາດັ່ງກ່າວນີ້ ມີສ່ວນເຮັດໃຫ້ຣາຍໄດ້ຂອງຣັຖ ບໍ່ແນ່ນອນ, ປະຊາຊົນໄດ້ຮັບຄວາມກະທົບກະເທືອນ, ຣະບຽບກົດໝາຍຖືກຢຽບຢໍ່າ ແລະສ້າງຄວາມເປື້ອນ ະປິະ ກ່ວງການຂອງຕົວ ຈຶ່ງນັບວ່າການເຄື່ອນໄຫວດັ່ງກ່າວນີ້ ເປັນການສໍ້ຣາຊບັງຫລວງ ເຊັ່ນດຽວກັນ.

ດັ່ງນີ້ ຈຶ່ງພໍສະຣຸບໄດ້ວ່າ ການສໍ້ຣາຊບັງຫລວງນີ້ ໄດ້ແບ່ງອອກເປັນສາມປະເພດ, ປະເພດໃດຈະໜັກຫລືເບົາ ແລ້ວແຕ່ກົດໝາຍ ຫລືປະຊາຊົນເປັນຜູ້ຊີ້ຂາດ. ແລະຈົ່ງຢ່າລືມອີກວ່າ ການຮົ່ວໄຫລຂອງເງິນນັ້ນ ມີຢູ່ສອງປະຕູຄື: ປະຕູເຂົ້າ (ຊຶ່ງໄດ້ແກ່ກຣົມ ຫລືພະແນກການທີ່ຫາລາຍໄດ້ເຂົ້າຣັດ) ແລະປະຕູອອກ. ຈະເປັນປະຕູເຂົ້າ ຫລືປະຕູອອກກໍດີ ການຮົ່ວໄຫລຂອງເງິນ, ນ້ອຍຫລືຫລາຍ ຜູ້ໂກງມັກໃຊ້ວິທີການເຄື່ອນໄຫວ

ດັ່ງທີ່ໄດ້ກ່າວມາແລ້ວ ເປັນສ່ວນຫລາຍ.

ຕໍ່ຫນ້າສະພາບການ ດັ່ງທີ່ກ່າວມາແລ້ວນີ້ ວິທີການທີ່ດີທີ່ສຸດ ໃນການປາບຄໍຣັບຊັ່ນນີ້ກໍຄື:

ກ. ຈັດຕັ້ງອົງການປາບປາມທີ່ມີພລັງອຳນາດ ບໍຣິຫານແລະຕຸລາການສູງສຸດ ຊຶ່ງປະກອບດ້ວຍບຸກຄົນຂັ້ນນຳ ແລະຂາວສອາດ.

ຂ. ຍົກເລີກຣະບົບສັງຄົມເລີເຊີ ຟຸ່ມເຟືອຍ ອັນເປັນສິ່ງປຸກໃຈຜູ້ຣັບໃຊ້ຣາຊການ ໃຫ້ເກີດຄວາມຕ້ອງການ ແລະຄວາມໂລບມາກຂຶ້ນ (ເຊັ່ນ, ການກ່າວດູມິ່ນຜູ້ບໍ່ຫລິ້ນໄພ້, ບໍ່ເຂົ້າບາຣ໌, ບໍ່ຂຶ້ນຮ້ານອາຫານໃຫຍ່ໆ ບໍ່ເອົາເມັຽນ້ອຍ ແລະອື່ນໆ ວ່າເປັນຄົນບ້ານນອກ ບໍ່ມີສັງຄົມ, ເປັນຄົນໂງ່ເຫລົ່ານີ້, ໃນເມື່ອຖືກດູຖູກຢຽບຢ່ຳ ເຊັ່ນນີ້ ທຸກຄົນກໍຕ້ອງມີມານະ ແລະເກີດຄວາມກະຫາຍ ເພື່ອຢາກເປັນຄົນດີ ຄືຫມູ່ ຜົລທີ່ສຸດກໍຕ້ອງຄິດຫາເງິນ, ຜູ້ຣັບໃຊ້ຣາຊການມີລາຍໄດ້ຢູ່ຢ່າງດຽວຄື ເງິນເດືອນ,ເມື່ອຫມົດເງິນເດືອນແລ້ວ ກໍຕ້ອງຄິດຫາເງິນຫລວງ.)

ຄ. ຊອກຕົວຄົນໂກງ ດ້ວຍການອອກກວດເບິ່ງຜົນການໃຊ້ຈ່າຍ ວ່າສົມເຫດສົມຜົນບໍ່. ກວດເບິ່ງວົງຣາຊການຂອງອົງການນັ້ນໆ ວ່າມັນກ້າວຫນ້າບໍ່, ດຳເນີນງານໄປສົມກັບງົບປະມານ ທີ່ອະນຸມັດໃຫ້ບໍ່. ແນ່ນອນ ຖ້າວົງການໃດ ບໍ່ກ້າວຫນ້າ ຫລືຊຸດໂຊມ ຫາກສືບເບິ່ງເບື້ອງຫລັງ ເຫັນສົມບັດສ່ວນຕົວເກີນລາຍໄດ້ຂອງເຂົາ ໂດຍບໍ່ມີເຫດຜົນແລ້ວ ກໍເປັນອັນວ່າ ບໍ່ຈຳເປັນຈະຊອກຫາຫລັກຖານອັນໃດອີກ ເພື່ອມາປະ

ກອບສຳນວນ. ທີ່ວ່າເຮັດຫຍັງບໍ່ໄດ້ ເພາະບໍ່ມີຫລັກຖານພຽງພໍ ຄືຂໍ້ແກ້ຕົວແບບນົກເຄົ້າບໍ່ກ້າຫ້ອງຕາແມ່. ທັງນີ້ກໍເພາະວ່າຜູ້ໂກງ ລ້ວນແຕ່ເປັນຄົນສລາດ ແລະມີຄວາມຮູ້ສູງທັງນັ້ນ ມີເທັກນິກໃນການໂກງເກັ່ງເປັນພິເສດ ພວກເຂົາບໍ່ເຄີຍທຳບັນທຶກ ລົງລາຍເຊັນເປັນລາຍອັກສອນ ກ່ຽວກັບການໂກງຂອງເຂົາໄວ້ ເພື່ອເປັນຫລັກຖານຈັກເທື່ອ ແລ້ວເຮັດຈັ່ງໃດ? ແລະຄົນປານໃດ? ເຮົາຈຶ່ງຈະໄດ້ຫລັກຖານ ນອກຈາກແຕ່ຈະ ປະຕິບັດດັ່ງທີ່ກ່າວມານີ້.

* ຄວາມຈິງແລ້ວ ການທີ່ພວກເຮົາບໍ່ຍອມ ລົງມືປະຕິບັດເອົາຈິງ ເອົາຈັງນີ້ ຄົງຈະບໍ່ແມ່ນເຣື່ອງຫລັກເຣື່ອງຖານ ແຕ່ຄົງເປັນເຣື່ອງຂອງຄວາມ "**ບໍ່ຈິງໃຈ**" ຕ່າງຫາກ ເພາະຕ່າງຄົນ ຕ່າງເຫັນອົກເຫັນໃຈກັນ (ເຈົ້າເຫັນຕີນຂ້ອຍ, ຂ້ອຍເຫັນມືເຈົ້າ) ກໍເລີຍພາກັນ ສາວໄດ້ ສາວເອົາເລື້ອຍໆໄປ ຢ່າງກັບຫມີກິນເຜິ້ງ.

໗. ລົງໂທດຜູ້ກະທຳຜິດ ທີ່ມີຫລັກຖານຢືນຢັນພຽງພໍຢ່າງຫນັກ ແລະຢ່າງບໍ່ໄວ້ຫນ້າ ໂດຍຍຶດຖືຢູ່ໃນຫລັກທີ່ວ່າ ເສັຽໃຈ ຄົນກຸ່ມນຶ່ງ ຫລືຄອບຄົວນຶ່ງເພື່ອແລກກັບຄວາມຄົງຢູ່ຂອງຊາດ(ຄິດວ່າຄົງສົມກັບຄ່າ) ສຳລັບຜູ້ທີ່ເຫັນວ່າ ເປັນຜູ້ໂກງແນ່ນອນ ແຕ່ເອົາຫລັກຖານບໍ່ໄດ້, ກໍຈະຕ້ອງລົງໂທດໃນທັນທີ ດ້ວຍການຍົກຍ້າຍຫລື ປົດຕຳແຫນ່ງ ແລ້ວເອົາຜູ້ສາມາດເຂົ້າແທນ.

* ການເຫັນອົກເຫັນໃຈຖານມິດ ແລະຄອບຄົວ ແລ້ວປ່ອຍໃຫ້ຜູ້

ໂກງດຳຣົງຕຳແໜ່ງຢູ່ໄດ້ຢ່າງລອຍນວນ ມັນເປັນການທຳລ້າຍຊາດຢ່າງໃຫ້ອະໄພບໍ່ໄດ້ ທັງໆທີ່ທຸກຄົນຮັບຮູ້ວ່າ ບ້ານເຮົາມີຄໍຣັບຊັ່ນດົກໜາຢູ່ ກໍຍັງປະປ່ອຍໄວ້ຢ່າງເລືອດເຢັນ ໆ ເມື່ອຖືກສພາຊັກຟອກຫລືປະຊາຊົນປະທ້ວງກໍອ້າງວ່າ ບໍ່ມີຫລັກຖານພຽງພໍ ຈຶ່ງເປັນການໃຫ້ທ້າຍແກ່ໝູ່ມານ ຫາກວ່າເພີ່ນມີຄວາມຈິງໃຈແທ້ໆ ທີ່ສເນີໄວ້ຢູ່ໃນຂໍ້ ຄ ກໍຄົງຈະໃຊ້ເປັນຫລັກຖານໄດ້ ສຳລັບເຣື່ອງນີ້ຢູ່ບໍ່ນ້ອຍ.

໕໖. ການຍົກເລີກລັດທິຄອບຄົວ; (*NEPOTISME*)

ລັດທິຄອບຄົວນີ້ ກໍເປັນໂຣກຣະບາດອີກຊນິດໜຶ່ງທີ່ຂັດຕໍ່ການພັທນາຊາດທັງນີ້ກໍຍ້ອນວ່າການຈັດຄົນ ຫລືແຕ່ງຄົນເຂົ້າຮັບໜ້າທີ່ການໂດຍມາກບໍ່ໄດ້ຖືກຄັດເລືອກ ຕາມພື້ນຖານຄວາມຮູ້ ຄວາມສາມາດແຕ່ເລືອກເອົາຕາມຄວາມພໍໃຈ ໃນຖານຄອບຄົວ ພີ່ນ້ອງຫລືມິດສຫາຍ ເປັນການຊ່ວຍກັນຫາລ້ຳລອຍຫລາຍກວ່າ ຄວາມເໝາະສົມໃນທາງວິຊາການ ການເຂົ້າຮັບຕຳແໜ່ງຕ່າງໆ ໃນຖານພີ່ນ້ອງ ແລະຄອບຄົວນີ້ ຖ້າຖືກຜູ້ມີຄວາມນຶກຄິດດີ ມີອຸດົມຄະຕິສູງ ແລະຄວາມສາມາດຕໍ່ໜ້າທີ່ການຂອງຕົນ ກໍນັບວ່າມີຄວາມຍຸຕິທັມໄດ້ແຕ່ຖ້າວ່າຖືກຜູ້ທີ່ຂາດທັງຄວາມຮູ້ ທັງຄວາມສາມາດນອກຈາກຈະເປັນການຖ່ວງຄວາມກ້າວໜ້າຂອງຣາຊການແລ້ວ ຍັງສ້າງຄວາມທໍ້ຖອຍກຳລັງໃຈແກ່ຜູ້ທີ່ຫວັງ ຢາກທຳຄວາມດີແກ່ຊາດອີກດ້ວຍ ຕາມທີ່ເຄີຍໄດ້ພົບເຫັນມາ ຄົນປະເພດນີ້ ບໍ່ແຕ່ຈະເຮັດ

ໃຫ້ອົງການຂອງຕົນ ຊຸດໂຊມລົງເທົ່ານັ້ນ ແຕ່ຍັງເຮັດໃຫ້ງານຂອງ ອົງການອື່ນໆ ຄອຍພັງທະລາຍລົງດ້ວຍ.

ທັງນີ້ກໍເພາະວ່າ ອົງການປົກຄອງ ຕ້ອງມີການປະສານງານ ກັນ ແລະອຳນວຍການແລກປ່ຽນ ຊຶ່ງກັນແລະກັນ. ຖ້າບ່ອນນຶ່ງ ຫາກຢຸດນິ້ງ ກໍອາດເຮັດໃຫ້ທັງໝົດຢູ່ນິ້ງຢູ່ດ້ວຍ ຊຶ່ງໝາຍເຖິງ ການທຳລາຍຊາດແບບ ປາຕົວດຽວເໝົ່າໝົດຂ້ອງ ນອກຈາກ ປະເພດພີ່ນ້ອງ ດັ່ງທີ່ກ່າວນີ້ແລ້ວ ຍັງມີບຸກຄົນນອກຄອບຄົວ (ບໍ່ ເປັນພີ່ນ້ອງ) ຊຶ່ງມີລັກສນະດຽວກັນກັບທີ່ກ່າວນີ້ຖືກແຕ່ງຕັ້ງເຂົ້າ ຮັບຕຳແໜ່ງຍ້ອນຍອມຮັບໃຊ້ແຜນການ ສ້າງຜົນປະໂຍດສ່ວນ ຕົວ ບຸກຄົນປະເພດນີ້ ບໍ່ມີອຸດົມຄະຕິ ແລະຄວາມນຶກຄິດເປັນ ຂອງຕົວເອງເລີຍ ພຽງແຕ່ເປັນຕຸກຕາລັບໃຊ້ເຈົ້ານາຍໄປໃນທາງ ສ່ວນຕົວຫລາຍກວ່າ ອີກປະເພດນຶ່ງ ໄດ້ແກ່ຈຳພວກທີ່ເອົາແຕ່ປະ ກາສນີຍະບັດ ຫລືປຣິນຍາ ມາແອບອ້າງເອົາໜ້າທີ່ ແລະສິດທິ ໃນທາງສ່ວນຕົວ ໂດຍມາກເປັນບຸກຄົນ ທີ່ມີຄວາມຮູ້ ຖ່ວມຫົວ ເອົາຕົວບໍ່ລອດ ຊຶ່ງມີຄຸນລັກສະນະແບບດຽວ ກັບທີ່ໄດ້ກ່າວມາ ແລ້ວນີ້.

ເຖິງແມ່ນວ່າຄົນຈຳພວກນີ້ ຈະຖ່ວງຄວາມກ້າວໜ້າ ຂອງອົງການ ຈັກພຽງໃດ ສ້າງຄວາມເໜົ່າເໝັນແລະຄວາມກະທົບກະເທືອນຈັກ ພຽງໃດ ພໍ່ໂປ່ກໍຫລັບຫູ ຫລັບຕາຢູ່ ປ່ອຍປະໃຫ້ພວກຮັບໃຊ້

ເຫລົ່ານີ້ເກາະກິນຢ່າງບໍ່ຫວັ່ນເກງ ຊ້າບໍ່ມໍ ຍັງເອົາໜ້າທີ່ການເພີ່ມຕື່ມໃຫ້ເປັນ ໒ ເປັນ ໓ ໜ້າທີ່ໂດຍບໍ່ຄຳນຶງເບິ່ງ ຜູ້ທີ່ຍັງຫວ່າງການຢູ່, ທີ່ຫວັງສ້າງຄວາມດີ ແລະທີ່ມີຄວາມຮູ້ຄວາມສາມາດເໜືອກວ່າ ການຄັດເລືອກຄົນໃສ່ໜ້າທີ່ ຈະຕ້ອງວັດແທກກັນດ້ວຍຄວາມຮູ້ຄວາມສາມາດໂດຍບໍ່ເລືອກຊັ້ນວັນນະ ແລະວົງຕະກູນ ໃນຂັ້ນຕໍ່ມາ ຈະຕ້ອງສອບເບິ່ງຜົນງານ ເພື່ອຢືນຢັນຄວາມສາມາດຂອງຜູ້ກ່ຽວ ຖ້າຜົນງານຫາກບໍ່ເປັນທີ່ ເພິ່ງພໍໃຈກໍຄວນລົງຄະແນນວ່າຜູ້ກ່ຽວໃຊ້ການບໍ່ໄດ້ ແມ່ນຈະມີປະກາສນີຍະບັດ ຫລືປຣິນຍາກໍຕາມ ຕ້ອງສັບປ່ຽນໃຫ້ຜູ້ໃໝ່ເລື້ອຍໄປ ບາງທີຜູ້ບໍ່ມີ ປະກາສນີຍະບັດຫລືປຣິນຍາສາມາດ ສ້າງຜົນງານໄດ້ດີກວ່າ ກໍຕ້ອງຖືວ່າໃຊ້ໄດ້ ແລະບັນຈຸເຂົ້າຕຳແໜ່ງສຳຄັນ ແລະຢ່າລືມວ່າຢູ່ໃນເມືອງລາວເຮົາ ກໍອາດມີບຸກຄົນຂັ້ນນຳ ທີ່ສາມາດສ້າງຜົນງານໄດ້ດີ ໂດຍບໍ່ມີປະກາດ ຫລືປຣິນຍາ ດັ່ງຜູ້ທີ່ເດັ່ນຂອງໂລກຊຶ່ງເຮົາຄວນໃຊ້ເປັນຕົວຢ່າງກໍຄື ທ່ານອາບຣາຫຳ ລິນຄອນ(*ABRAHAM LINCOLN*) ເກີດທີ່ແຄນເຕິກກີ (ສຫະຣັຖອະເມຣິກາ) ໑໘໐໙ ໄດ້ຮັບເລືອກຕັ້ງເປັນ ປະທານາທິບໍດີຂອງ ສຫະຣັຖຄົນທີ ໑໖ ໃນປີ ໑໘໖໐ ແລະໄດ້ຮັບເລືອກຕັ້ງເທື່ອທີ ໒ ອີກໃນ ໑໘໖໔ ແລະຖືກຄາດຕະກັມ ໑໘໖໕ ວີຣະບຸຣຸດຜູ້ນີ້ ບໍ່ແຕ່ຈະໄດ້ຮັບການຍົກຍ້ອງ ແລະມີຊື່ສຽງໃນສຫະຣັດເທົ່ານັ້ນ ແຕ່ຍັງໄດ້ຮັບການຍົກ

ຍ້ອງ ຈາກທົ່ວໂລກອີກດ້ວຍ ທ່ານຜູ້ນີ້ບໍ່ເຄີຍໄດ້ເຂົ້າໂຮງຮຽນແມ້ແຕ່ປີດຽວ ແຕ່ກໍສາມາດບຸກປ່າດົງ ຜ່ານຄວາມທຸກທໍຣະມານ ບຶນຂຶ້ນສູ່ທຳນຽບຂາວໄດ້ທັງ ໘ ສມັຍ ທັງນີ້ກໍຍ້ອນຄວາມສາມາດພິເສດຂອງທ່ານ ຝຶກຝົນເອົາດ້ວຍຕົນເອງ ຈົນຂຶ້ນສູ່ຕຳແໜ່ງອັນສູງສຸດ ຂອງປະເທດມະຫາອຳນາດ. ໃນຣາຊອານາຈັກລາວຂອງເຮົາ ຄົງບໍ່ມີບຸກຄົນດີ ປະເພດລິນຄອນ ແຕ່ວ່າອາດມີຄົນທີ່ບໍ່ມີປະກາສນີຍະບັດ ຫລືປຣິນຍາ ແຕ່ມີຄວາມສາມາດ ສແດງຜົນງານອອກມາໄດ້ດີກວ່າ ຜູ້ທີ່ມີປະກາສຫລືປຣິນຍາ ກໍຄວນຈະສົ່ງເສີມແລະບັນຈຸເຂົ້າໃນຕຳແໜ່ງ ຍ່າງເທົ້າທຽມ ຫລື ພຽງບ່າພຽງໄຫລ.

ວັກ ໖

ການກູ້ຫນ້າ ປະເທດຊາດຂອງເຮົາ

ເຖິງແມ່ນວ່າໂລກຈະຮູ້ ຣາຊອານາຈັກລາວ ວ່າເປັນປະເທດນຶ່ງ ທີ່ລ້າຫລັງ ແລະດ້ອຍພັທນາ ແຕ່ລາວເຮົາກໍ່ມີແນວດີຫລາຍອັນ ແຝງຢູ່ເບື້ອງຫລັງ. ຈົນເຮົາກ້າອ້າງໄດ້ວ່າ ມີຜູ້ນຳບາງປະເທດ ບັນດານັກການທູດ ແລະນັກທ່ອງທ່ຽວຕ່າງດ້າວທີ່ ເຄີຍໄດ້ມາຢ້ຽມຢາມ ຫລືຣັບຣາຊການທູດ ໃນຣາຊອານາຈັກລາວ ໄດ້ຊົມແລະກ່າວຍົກຍ້ອງ ສັຣເສີນ ວັທນາທັມ ແລະຂນົມທັມນຽມອັນສູງຂອງເຮົາ.

ພວກເຂົາເຈົ້າໄດ້ສຶກສາຮຽນຮູ້ ນິສັຍໃຈຄໍຂອງຄົນລາວວ່າ ເປັນຜູ້ໃຫ້ການຕ້ອນຮັບ ທີ່ເຕັມໄປດ້ວຍອັທຍາສັຍໄມຕຣີຈິດ ອັນດີເລີດ ແລະມີນ້ຳໃຈເພື່ອແຜ່ອັນກວ້າງຂວາງຈົນລືມຄວາມທຸກຂອງຕົວເອງ. ນີ້ຄືສົມບັດສິ່ງດຽວທີ່ໂລກຍ້ອງ ນອກຈາກສັນຊາດຍານທາງທັມມະຊາດອັນນີ້ແລ້ວ ລາວເຮົາບໍ່ມີສິ່ງໃດອີກ ພໍທີ່ຈະນຳເອົາມາອວດໄດ້ ໂດຍສະເພາະແມ່ນບູຮານສຖານ ແລະວັດຖຸປະຈຳຊາດ ທີ່ພວກເຮົາສ້າງຂຶ້ນເອງ ທັງໆທີ່ວ່າຄົນລາວເຮົາເປັນຄົນ ຈຽມເນື້ອຈຽມຕົວ ແລະມີຄວາມຮູ້ສຶກລະອາຍໃຈ ຕໍ່ຖານະອັນຕ່ຳຕ້ອຍຂອງຕົນ ທຸກຄົນຮູ້ຈັກສ້າງຖານະ ຂອງຕົນໃຫ້ດີຂຶ້ນ ບໍ່ສະເພາະ ເພື່ອສ້າງອານາຄົດຂອງຄອບຄົວເທົ່ານັ້ນ ແລະຍັງໄວ້ເພື່ອແກ້ຫນ້າໃນຄວາມ ຕ່ຳຕ້ອຍຂອງຕົນອີກດ້ວຍ

ຄວາມຕ້ອງການຢາກມີເຮືອນກໍຫລັງໃຫຍ່ໆງາມໆ ຢາກມີຣົຖເບັນຂີ່ ເພື່ອອວດອ້າງໝູ່ເພື່ອນ ຫລືແຂກຕ່າງດ້າວທ້າວຕ່າງແດນ ທີ່ມາຢ້ຢາມຖາມຂ່າວ ຮູ້ຈັກຈັດການຕ້ອນຮັບ ດ້ວຍເຫລົ້າຢາອາຫານທີ່ມີຣາຄາສູງ ມາຈາກເມືອງນອກ ຕ້ອງຍົມຂວຍເອົາແຕ່ເຄື່ອງແຊບຂອງດີ ອອກມາສແດງໃຫ້ແຂກຮັບປະທານຫລືດູຊົມ ເຮັດແນວໃດ ທໍາແນວໃດ ກໍຄືວ່າຢ້ານແຕ່ບໍ່ສົມໜ້າສົມຕາເຫລົ່ານີ້ ລ້ວນແຕ່ເປັນການເຊີດໜ້າຊູຕາ ແລະກູ້ໜ້າໂຕເອງທັງນັ້ນ ແຕ່ວ່າການກູ້ໜ້າປະເພດນີ້ ເປັນການກະທໍາສ່ວນບຸກຄົນ ສ່ວນການກູ້ໜ້າລາວທັງຊາດນັ້ນ ບໍ່ສູ້ຈະເຫັນໃພ ພະແນກແລະກະຊວງໃດ ໄດ້ສແດງອອກມາໃຫ້ເຫັນໄດ້ຊັດ ຢ່າງກັບການກູ້ໜ້າ ປະເພດອັດຕະບຸຄົນ ພວກເຮົາທັງຫລາຍກໍຊາບດີຢູ່ແລ້ວວ່າ ກ່ອນຊາດອື່ນຈະນັບຖື ໃຫ້ກຽດແລະຢໍາເກງພວກເຮົາ ນ້ອຍຫລາຍປານໃດນັ້ນ ຂຶ້ນຢູ່ກັບຄວາມຈເຣີນຄວາມໝັ້ງຄັ່ງສົມບູນ ແລະຖານະຄວາມເປັນຢູ່ ຂອງຊາດນັ້ນເອງ ເຮົາອາດສັງເກດເຫັນໃນເວລາເຮົາອອກນອກປະເທດ ບໍ່ວ່າແຕ່ຢູ່ໃນຢຸໂຣບຫລືອາເມຣິກາ ມີການແບ່ງແຍກຖານະ ໃນການນັບຖືແລະຢໍາເກງ.

ກ່າວຄືຖ້າເປັນຊາວອາຊີແລ້ວ ຊາວຍີ່ປຸ່ນແລະຈີນ ຈະໄດ້ຮັບກຽດສູງກວ່າຊາດອື່ນໆ ທັງນີ້ກໍເພາະວ່າ ຖານະຄວາມເປັນຢູ່ ຂອງທັງສອງປະເທດນີ້ເທົ່າທຽມກັບເຂົາ ທີ່ກ່າວມານີ້ ບໍ່ໄດ້ຮວມທັງນັກການທູຕ ທີ່ເຂົາເຈົ້າໃຫ້ກຽດທຽບເທົ່າ ແລະຄຽງບ່າຄຽງໄຫລ່ກັນ ແຕ່ວ່າໃນສ່ວນເລິກຂອງຫົວໃຈແລ້ວເຂົາກໍຕ້ອງແບ່ງຊັ້ນວັນນະຢູ່ດີກັນ ທີ່ເຂົາປະພຶດອອກໃຫ້ເຫັນວ່າ ເປັນການ

ເທົ່າທຽມກັນນັ້ນ ກໍພຽງແຕ່ເປັນເຣື່ອງທາງການທູດຊື່ໆ ດັ່ງນີ້ ຈຶ່ງພໍສຣູບໄດ້ວ່າ ຕ່າງດ້າວຈະເຊີດໜ້າຊູຕາ ແລະໃຫ້ກຽດແກ່ຊົນຊາດອື່ນໆນ້ອຍຫລາຍພຽງໃດ ຂຶ້ນຢູ່ກັບຖານະຂອງປະເທດຊາດນັ້ນ ແມ່ນແຕ່ຖານະສ່ວນຕົວ ຂອງບຸຄຄົນຜູ້ນັ້ນ ຈະສູງສົ່ງເທົ່າໃດ ກໍຈະໄດ້ຮັບກຽດສເມີດຽວ ກັນກັບກຸ່ມຊົນສ່ວນຫລາຍ ຂອງປະເທດ.

ດັ່ງນັ້ນຈຶ່ງສົມຄວນແລ້ວທີ່ ລາວທັງຊາດຕ້ອງສ້າງຖານະ ຂອງເຮົາໃຫ້ດີຂຶ້ນເພື່ອເປັນການກູ້ໜ້າ ໝົດທຸກຄົນພາຍໃນຊາດ ບໍ່ດັ່ງນັ້ນພວກເຮົາກໍຈະບໍ່ໄດ້ ຮັບກຽດຈາກຊາດອື່ນເທົ່າທີ່ຄວນ ແລະຈະຖືກຕີຣາຄາຕ່ຳ ດັ່ງທີ່ຊາວອະເມຣິກັນ ຈ້າງຄົນຕ່າງດ້າວມາຊ່ວຽເຂົາດ້ວຍຣາຄາບໍ່ຄືກັນ ເຊັ່ນ ຖ້າເປັນຊາວຈີນໃຕ້ຫວັນ ຫລືຟີລິຟປິນ ເຂົາຕ້ອງຈ່າຍເດືອນລະ ຕັ້ງພັນໆໂດລາ ຫລືກວ່າ ຖ້າເປັນຄົນໄທກໍ ປະມານ ໘ ຫາ ໙ ພັນບາດ ແລະຖ້າເປັນຄົນລາວ ບໍ່ເກີນ ໕໐ ພັນກີບ ທັ້ງໆທີ່ວ່າ ພນັກງານພວກນີ້ ມີຄວາມຮູ້ຄວາມສາມາດເທົ່າທຽມ ຫລືໄລ່ເລັ້ຽກັນ ແລະໃຫ້ທຳງານອັນດຽວກັນ ອັນນີ້ບໍ່ໄດ້ໝາຍຄວາມວ່າ ຊາວອະເມຣິກັນຂາດ ຄວາມຍຸຕິທັມ ພວກເຂົາ ອາດມີເຫດຜົນ ຫລາຍແນວ ຊຶ່ງອາດຈະອັດແທກກັນດ້ວຍຄຸນພາບຂອງງານຫລືດ້ວຍຂໍ້ບົກຜ່ອງອື່ນໆ.

ເຮົາຮູ້ຕົວດີແລ້ວວ່າ ຈະເຮັດໃຫ້ຣາຊອານາຈັກລາວຂອງເຮົາກ້າວໜ້າ ທຽບທັນປະເທດທີ່ສົມບູນ ໃນທຸກໆດ້ານ ໃນຣະຍະເວລາອັນສັ້ນ ບໍ່ໄດ້ຢ່າງເດັດຂາດ ແຕ່ວ່າເຮົາຄວນຊອກຫາວິທີທາງກູ້ໜ້າ ຂອງເຮົາໄວ້ເປັນບາງສ່ວນ ກໍຄົງຈະດີກວ່າບໍ່ເຮັດຫຍັງເລີຍ.

໒໑. ການບູຣະນະປະດັບປະດານະຄອນຫລວງ:

ນະຄອນຫລວງເປັນເຄື່ອງວັດແທກ ອັນນຶ່ງຂອງຊາວຕ່າງດ້າວ ຜູ້ໄດ້ພົບເຫັນວ່າ ປະເທດນັ້ນມີຄວາມຈເຣີນ ມີຄວາມເປັນຣະບຽບຣຽບຣ້ອຍ ແລະຄວາມມັ່ງຄັ່ງສົມບູນ ນ້ອຍຫລາຍພຽງໃດ ນອກຈາກນີ້ ນະຄອນຫລວງ ຍັງເປັນສູນກາງການຍ້ຽມຢາມ ຂອງຜູ້ນຳຕ່າງປະເທດ ແລະນັກທ່ອງທ່ຽວ ແລະຍັງເປັນທີ່ປະຈຳການຂອງບັນດາທູຕານຸທູດອີກດ້ວຍ. ເພາະສະນັ້ນ ການແກ້ບັນຫາສະເພາະໜ້າສຳລັບກູ້ໜ້າລາວທັງຊາດ ກໍຄືຕ້ອງສ້ອມແຊມນະຄອນຫລວງ ຂອງເຮົາໃຫ້ສວຍງາມ ຫລາຍຄົນອາດຈະໂຕ້ວ່າ ການພັທນາຊົນບົດແລະດ້ານອື່ນໆ ກໍມີຄວາມສຳຄັນຄືກັນ, ຈະມົວແຕ່ສ້າງນະຄອນຫລວງໂດຍບໍ່ເອົາຫົວຊານຳຊົນບົດ ແລະເຣື່ອງເຂົ້າໃສ່ທ້ອງ. ທຸກສິ່ງທຸກຢ່າງມີຄວາມສຳຄັນດ້ວຍກັນທັງນັ້ນ ແຕ່ຄວາມສຳຄັນນັ້ນກໍມີນ້ຳໜັກແຕກຕ່າງກັນ. ຍ້ອນເຫດຜົນໃນທາງການທູດ, ການຄ້າ, ວັທນະທັມ, ກຽດຂອງປະເທດຊາດ, ການປົກຄອງ, ແລະການຕິດຕໍ່ກັບຕ່າງປະເທດ ຈຶ່ງເຫັນວ່າການບູຣະນະສ້ອມແຊມນະຄອນຫລວງ ເປັນຄວາມຕ້ອງການເລັ່ງລັດອັນນຶ່ງຂອງຊາດ.

ເຮົາເຮັດທຸກສິ່ງທຸກຢ່າງພ້ອມກັນບາດດຽວບໍ່ໄດ້ ກໍຕ້ອງເລືອກເຮັດເທື່ອລະອັນ ໂດຍເລີ້ມເຮັດແຕ່ອັນສຳຄັນ.

ສຳລັບຣາຊອານາຈັກລາວເຮົານີ້, ເຫັນວ່າການທີ່ຈະສ້າງສານະຄອນຫລວງວຽງຈັນ ໃຫ້ເປັນນະຄອນທີ່ສວຍງາມນັ້ນກໍເປັນບັນຫານຶ່ງທີ່ກິນບໍ່ເຂົ້າຄາຍບໍ່ອອກ. ທັງຢາກເຮັດທັງບໍ່ມີເງິນ. ພໍເອົາເຣື່ອງເງິນມາເທື່ອໃດກໍຕ້ອງຈົບລົງພຽງນັ້ນແລະຕ້ອງຍອມແພ້ຢ່າງຊື້ນເຊິງ. ເຖິງຢ່າງໃດກໍດີຫາກວ່າຣັຖບານວາງນະໂຍບາຍອັນເດັດຂາດລົງໄປ, ຜູ້ຮັບຜິດຊອບຂັ້ນປະຕິບັດມີຄວາມກະຕືລືລົ້ນ ແລະບໍຣິສຸດໃຈຢາກເຮັດຢາກທຳຢ່າງແທ້ຈິງ ແລ້ວກໍຈະພໍເປັນໄປໄດ້ບໍ່ຫລາຍກໍນ້ອຍ. ຖນົນຫົນທາງໃນຕົວນະຄອນມີບໍ່ເກີນ ໔໐ ກິໂລແມດ, ຖ້າໄດ້ເລີ້ມມາແຕ່ປີ ໑໙໔໗/໔໙. ຫລື ໔໔ ຄືຫລັງໄດ້ເອກຣາດ ຖນົນຫລວງພຣະບາງແລະລ້ານຊ້າງ ກໍຄົງໄດ້ລາດຊີມັງກັນໝົດແລ້ວແລະເສັ້ນອື່ນໆກໍຄົງຈະຖືກປູຢາງຢ່າງແໜ້ນໜາໝົດແລ້ວ. ຖ້າຈະກ່າວຄວາມຈິງແລ້ວ ຖນົນໃຫຍ່ໃນນະຄອນຫລວງຂອງເຮົາ ສາຍທີ່ນຶ່ງກໍຄືຖນົນລ້ານຊ້າງຍາວປະມານ ໙໐໐ ແມດ ແລະຖນົນຫລວງພຣະບາງຍາວປະມານ ໔ ກິໂລແມດ ເປັນຖນົນນ້ຳເບີນຶ່ງ ຊຶ່ງມີແຕ່ຮອຍຕາບຮອຍຈູມເປັນຄື້ນທະເລສ່ວນລວງກວ້າງຂອງຖນົນທັງສອງສາຍນີ້ ກໍເຫັນວ່າພໍສົມມາສົມຄວນ. ສຳລັບຮ່ອງຣະບາຍນ້ຳກໍຍິ່ງເປັນໜ້າເວທນາ:

ນ້ຳເໝົາບໍ່ມີບ່ອນໄຫລ, ເໝັນສເອືອນທົ່ວເມືອງ ພໍຝົນຕົກມາຮ່າໃຫຍ່ແດ່ຣົດໂອໂຕທຸກຄັນຕ້ອງປ່ຽນສພາບ ມາເປັນສະເທືອນນ້ຳສເທືອນບົກ. ມັນເປັນເຣື່ອງທີ່ເຫລືອເຊື່ອ ແຕ່ມັນກໍເປັນຢູ່ແລ້ວເທົ່າທຸກມື້ນີ້ ແລະຈະເປັນໄປຮອດມື້ໃດອີກ. ໃນກາງປີ ໑໙໗໖ ຊາວຍີ່ປຸ່ນທີ່ມເບິ່ງເຫລນິກສເທືອນນ້ຳ

ສະເທືອນບົກບໍ່ໄຫວ ຈຶ່ງຍື່ນມືເຂົ້າມາວາງແຜນສ້າງຮ່ອງຣະບາຍນ້ຳໃຫ້ແຕ່ຈະໄດ້ຜົນສ່ຳໃດນັ້ນຂໍໃຫ້ພວກເຮົາຈົ່ງລໍຄອຍກັນຕໍ່ໄປ. ນອກຈາກນີ້ແລ້ວຍັງມີບ່ອນນຶ່ງອີກ ທີ່ຄວນຈັດສ້າງຢ່າງຮີບດ່ວນ ສິ່ງນັ້ນກໍຄືຖນົນແຄມຂອງ (ຖນົນຟ້າງູ່ມ) ຊຶ່ງມີຄວາມຍາວປະມານ ໓ ກິໂລແມດກວ່າ, ຖນົນສາຍນີ້ເປັນສຖານທີ່ພັກຜ່ອນແລະຕາກອາກາດຂອງຄົນທົ່ວໄປ ແລະມີພຣະຣາຊວັງສຖິດຢູ່ດ້ວຍ ; ສົມຄວນທີ່ຈະໄດ້ຮັບການບູຣະນະສ້ອມແຊມໃຫ້ສວຍງາມ. ກ່ອນອື່ນຄວນຈະສະສາງກອງຂີ້ເຫຍື້ອທີ່ຊາວບ້ານໃກ້ຄຽງ ນຳເອົາມາຖອກປະໄວ້, ຈົນເໜົ່າບູດຢູ່ຕາມແຄມທາງແລະຣິມຕາຝັ່ງ. ສຳລັບເນີນຝັ່ງຂອງທີ່ເລາະລຽບຕາມຫາດຊາຍດອນຈັນກໍຄວນຖາກຖາງ ແລະດັດແປງໃຫ້ເປັນທີ່ສອາດ ແລະງາມຕາ, ຖ້າພໍເປັນໄປໄດ້ກໍຄວນຈະແນບໂບກດ້ວຍຫີນຫລືຊີມັງ ໂດຍສເພາະຢ່າງຍິ່ງຕໍ່ໜ້າພຣະຣາຊວັງ, ລົງເຖິງປາກປາສັກ. ສ່ວນຄູກັ້ນນ້ຳທີ່ເລາະຕາມຖນົນສາຍນີ້. ກໍຄວນປັບປຸງໃຫ້ເປັນທີ່ແໜ້ນໜາຖາວອນສຳລັບຜູ້ຄົນທ່ອງທ່ຽວໄປມາໃນແຖວນີ້, ໂດຍສະເພາະຢ່າງຍິ່ງໃນເວລາມີງານວິສາຂະບູຊາ ບູນຊ່ວງເຮືອ ແລະງານອື່ນໆ ຊຶ່ງມີຄົນໜາແໜ້ນ, ຄູກັ້ນນ້ຳກໍເລີຍເປັນສິ່ງກີດຂວາງ ບາງຄົນໄດ້ຮັບບາດເຈັບຍ້ອນຝາເຫວຊັນຈົນເກີນໄປນັບວ່າຖນົນຟ້າງູ່ມເປັນສຖານທີ່ຊຸມນຸມທັງລາວແລະຕ່າງປະເທດ ທີ່ສຳຄັນທີ່ສຸດໃນນະຄອນວຽງຈັນ. ເມື່ອສຣູບແລ້ວຄວາມເຣີຣ້າຍ ແລະຄວາມບໍ່ເປັນຣະບຽບຮຽບຮ້ອຍ ຂອງນະຄອນວຽງຈັນຂອງເຮົາເປັນປອມດ້ອຍອັນນຶ່ງຊຶ່ງລາວທັງຊາດຮູ້ສຶກລະອາຍໃຈ ຫາກລົງທຶນສ້າງສາບູຣະນະໃຫ້ສົມກັບວ່າເປັນ

ເມືອງເອກຂອງຊາດນັ້ນແລ້ວຄົງຈະກຸ້ມຄ່າ ແລະຈະສາມາດກູ້ໜ້າລາວທັງຊາດໄວ້ໄດ້ບໍ່ຫລາຍກໍນ້ອຍ.

໗໒ . ການສົ່ງເສີມກິລາຣະຫວ່າງຊາດ :

ກິລາກໍເປັນເຄື່ອງຊີ້ອີກອັນນຶ່ງ ສຳລັບວັດແທກຄວາມເຂັ້ມແຂງ, ຄວາມອົດທົນ, ສຸຂພາບແລະພລັງກາຍຂອງຄົນໃນຊາດ ລາວເຮົາກໍເປັນເຊື້ອຊາດນຶ່ງທີ່ມີສຸຂພາບ, ຮ່າງກາຍແລະຄວາມເຂັ້ມແຂງ ດັ່ງດຽວກັບຊາວອາຊີທົ່ວໄປ. ແຕ່ວ່າທຸກຄັ້ງທີ່ລາວເຮົາເຂົ້າຮ່ວມກິລາຣະຫວ່າງຊາດ ໃນຈຳນວນ ໑໐ ເທື່ອ ເຮົາຕ້ອງໂຈກເກືອບທຸກເທື່ອ. ທຸກຄັ້ງທີ່ໄດ້ຮັບຂ່າວວ່າລາວຈະເຂົ້າຮ່ວມກິລາຣະຫວ່າງຊາດ ທຸກຄົນຕ້ອງມີຄວາມນ້ອຍເນື້ອຕ່ຳໃຈ ເພາະບໍ່ຢາກໃຫ້ຊາດອື່ນ ເຫັນຄວາມຂີ້ຮ້າຍຂອງເຮົາຫລາຍເກີນໄປ ແລະບໍ່ຢາກເຫັນການຄອງທີ່ໂຈກຂອງລາວຢ່າງບໍ່ຢຸດຢັ້ງ.

ຖ້າມີລາວເຂົ້າຮ່ວມຄັ້ງໃດ ບັນດາປະເທດສມາຊິກຕ້ອງໄລ່ງໃຈໄວ້ລ່ວງໜ້າ ເພາະວ່າມີຜູ້ອາສາອົດທ້າຍໄວ້ແລ້ວ ດັ່ງຫລັກຖານການແຂ່ງກິລາແຫລມທອງດັ່ງຕໍ່ໄປນີ້:

* ຄັ້ງທີ ໑ ທີ່ບາງກອກ (ວັນທີ ໑໒/໑໗ ທັນວາ ໑໙໕໙) ຜົນທີ່ໄດ້ຮັບ ລາວບໍ່ໄດ້ຈັກຫລຽນ ແລະຄອງທີໂຈກ
* ຄັ້ງທີ ໒ ທີ່ຢ້າງກຸ້ງ (ວັນທີ ໑໑/໑໖ ທັນວາ ໑໙໖໑) ຜົນທີ່ໄດ້ລັບລາວບໍ່ໄດ້ຈັກຫລຽນແລະຄອງທີໂຈກ.
* ຄັ້ງທີ ໓ ທີ່ກົວລາລຳເປີ ວັນທີ ໑໔/໒໑ ທັນວາ ໑໙໖໕

ຜົນທີ່ໄດ້ລັບລາວບໍ່ໄດ້ຈັກຫລຽນ ແລະຄອງທີໂຈກ.

* ຄັ້ງທີ ໔ ທີ່ບາງກອກ (ວັນທີ ໙/໑໖ ທັນວາ ໑໙໖໗) ຜົນທີ່ໄດ້ຮັບລາວບໍ່ໄດ້ຈັກຫລຽນ ແລະຄອງທີໂຈກ.

* ຄັ້ງທີ ໕ ທີ່ຢ້າງກຸ້ງ (ວັນທີ ໖/໑໓ ທັນວາ ໑໙໖໙) ຜົນທີ່ໄດ້ລັບລາວໄດ້ຫລຽນທອງແດງ ໔ ຫລຽນໃນປະເພດເຕະບານ ແລະເທນິສແລະຄອງທີໂຈກ.

* ຄັ້ງທີ ໖ ທີ່ກົວລາລຳເປີ (ວັນທີ ໑໑–໑໘ ທັນວາ ໑໙໗໑) ຜົນທີ່ໄດ້ຮັບ ລາວໄດ້ຫລຽນທອງແດງ ໑ ຫລຽນ ປະເພດເທນິສ ແລະຄອງທີໂຈກ.

* ຄັ້ງທີ ໗ ທີ່ສິງກະໂປ (ວັນທີ ໑–໘ ກັນຍາ ໑໙໗໓) ຜົນທີ່ໄດ້ລັບ ລາວໄດ້ລຽນເງິນ ໔ ຫລຽນ ໃນປະເພດຢູໂດຫມົດ.

ຫລຽນທອງແດງ ໕ ຫລຽນຕາມປະເພດຕ່າງໆດັ່ງນີ້

- ໂວໄລບານ ໑ ຫລຽນ
- ຍິງປືນ ໓ "
- ເທນິສ ໑ "

ລວມທັງຫມົດ ໙ ຫລຽນ

ແລະຄອງທີໂຈກຕາມຣະບຽບ ຢ່າງສເມີຕົ້ນສເມີປາຍ, ເຖິງວ່າລາວເຮົາ ໄດ້ຄອງຕຳແໜ່ງທີໂຈກຕລອດມາ ແຕ່ຄັ້ງທີ ໑ ເຖິງຄັ້ງທີ ໗ ກໍ່

ຕາມ ແຕ່ວ່າເທື່ອຫລ້າສຸດນີ້ ເຫັນວ່າມີຄວາມກ້າວໜ້າ ເປັນປະວັດການ ທັງໆທີ່ວ່ານັກກິລາລາວຂອງເຮົາ ທີ່ອອກໄປແຂ່ງຂັນຕ່າງປະເທດ ຕົກຢູ່ໃນຖານະບໍ່ມາຕຖານ ແລະບໍ່ພຽງພ້ອມທຸກສິ່ງທຸກຢ່າງ ແຕ່ກໍ່ຍັງສາມາດດຶງຫລຽນເງິນ ແລະຫລຽນທອງແດງ ເພື່ອກູ້ໜ້າລາວທັງຊາດໄວ້ໄດ້ ຢ່າງໜ້າສັຣເສີນ ໂດຍສະເພາະຢ່າງຍິ່ງໃນການແຂ່ງຂັນ ຄັ້ງທີ ໓ ທີ ໔ ແລະທີ ໕ (ຄືສາມຄັ້ງຫລັງນີ້) ດັ່ງນີ້ ເຮົາຈຶ່ງຂໍຍົກຍ້ອງນັກກິລາລາວຜູ້ທີ່ສາມາດດຶງຫລຽນກູ້ໜ້າອັນນີ້ ແລະຖືວ່າພວກທ່ານເປັນວິຣະບູຣຸດລາວຜູ້ນຶ່ງທີ່ໄດ້ທຳຄຸນງາມຄວາມດີແກ່ລາວທັງຊາດ. ປະຊາຊົນລາວທັງຊາດ ໄດ້ພ້ອມພຽງກັນທຸກຫົວໜ້າເອົາໃຈຊ່ວຍທ່ານ ສົ່ງເສີມ ແລະສນັບສນູນທ່ານຢ່າງສຸດຊຶ້ງ.

ພວກເຮົາຜູ້ຢູ່ເບື້ອງຫລັງ ໄດ້ພາກັນພາວັນນາ ວິງວອນ ໃຫ້ສິ່ງສັກສິດທີ່ມີຢູ່ໃນສາກົລໂລກ ໄດ້ດົນບັນດານແດ່ພວກທ່ານມີພລັງກາຍ ແລະພລັງໃຈອັນມະຫາສານ ສຳລັບດຶງເອົາຫລຽນກູ້ໜ້າຂອງເຮົາ ໃຫ້ຫລາຍເທົ່າທີ່ຈະຫລາຍໄດ້ ພວກເຮົາຫວັງວ່າ ໃນວັນນຶ່ງ ຄັ້ງໜ້ານີ້ ວິຣະບຸຣຸດກິລາລາວ ຂອງເຮົາຄົງສາມາດທຳລາຍຄຳວ່າ "ລາວທີໂຈກ" ນີ້ລົງເພື່ອແຍ້ງຄອງ ລະດັບສູງຂຶ້ນໄປເລື້ອຍໆ,

ທີ່ເປັນມາແລ້ວໆນັ້ນ ວົງການກິລາລາວໄດ້ເຮັດກັນ ແບບຕາມເປັນຕາມເກີດ, ຂາດສັດທາ ແລະປັດຈັຍຈາກອຳນາດການ ຂາດການຈັດຕັ້ງອັນເໝາະສົມ ແລະຖາວອນ ແລະໃນທີ່ສຸດກໍ່ມາຈົບລົງດ້ວຍຄຳວ່າ ບໍ່

ມີເງິນ ພວກເຮົາຮູ້ຈັກແຕ່ຢາກໄດ້ຊັຍຊນະ ແບບໜ້າໄຫວ້ຫລັງຫລອກ ນັກກິລາຜູ້ກ້າຫານຂອງລາວ ໄດ້ຮັບແຕ່ຄຳວ່າ " ເອົາເດີ. ເອົາເດີ." ໂດຍບໍ່ມີຜູ້ໃດອຸທິດເງິນຄຳ ແລະພາຫານະອັນຈຳເປັນໃນການຈັດສັນ ຝຶກແອບການສົ່ງເສີມ ແລະການໃຊ້ຈ່າຍຕ່າງໆ ກ່ຽວກັບກິລາ ນັກກິລາລາວລ້ວນແຕ່ເປັນນັກກິລາສມັກຫລິ້ນ ແລະບໍ່ໄດ້ຖືກສົ່ງເສີມຈາກຂັ້ນນຳ ຢ່າງເອົາຈິງເອົາຈັງ ແຕ່ປານນັ້ນກໍຍັງສາມາດ ຕໍ່ສູ້ກັບນັກກິລາຕ່າງປະເທດ ທີ່ມີຄຸນພາບສູງກວ່າຕັ້ງຫລາຍເທົ້າ. ຖ້າຫາກວ່າ ໄດ້ຮັບ ການສນັບສນູນ ອອກທຶນຢ່າງຈິງຈັງແລ້ວ ເຊື່ອແນ່ວ່າ ລາວເຮົາຄົງບໍ່ໄດ້ເປັນທີໂຈກຕລອດມາ, ຕົວຢ່າງກິລາປະເພດຢູໂດ ແລະເທນິສ ຊຶ່ງມີການຈັດຕັ້ງ ແລະການຝຶກດີ ແມ້ຈະຂາດເງິນຄຳ ແລະພາຫະນະ ກິລາລາວ ໘ ປະເພດນີ້ ຍັງສາມາດເດີນຄຽງບ່າຄຽງໄລ່ ກັບຂອງຕ່າງປະເທດ ແລະເປັນປະເພດທີເຄີຍໄດ້ກູ້ໜ້າລາວຕລອດມາ. ຖ້າຫາກເປັນໄປດັ່ງທີ່ກ່າວມານີ້ໝົດທຸກປະເພດ ເຊື່ອແນ່ວ່າກິລາລາວເຮົາຄົງບໍ່ຕົກຕ່ຳ ຢ່າງກັບທີ່ເປັນຢູ່ໃນປັດຈຸບັນນີ້.

ສມັ້ນຈຶ່ງສົມຄວນແລ້ວທີ່ ຜູ້ນຳ ຫລືຜູ້ຮັບຜິດຊອບໃນເຣື່ອງກິລາ ຈະຫັນໜ້າມາໃຫ້ຄວາມສນັບສນູນວົງການກິລາຂອງເຮົາ ແລ້ວປັບປຸງໃຫ້ເຂັ້ມແຂງດ້ວຍການເສັຽສລະ ເພີ່ມພູນງົບປະມານໃຫ້ສົມມາສົມຄວນ ມັນຈະບໍ່ເປັນການໃຊ້ຈ່າຍທີ່ເສັຽຖິ້ມລ້າໆ ດັ່ງກັບບາງຄົນຄິດ. ດີກວ່າຈະໄປແນມເຫັນຄວາມສຳຄັນນຳການຂີ່ຣົດເປັນ ໓໐໐-໔໐໐ ກິນລ້ຽງຊຸມແຊວ ຢ່າງຟຸມເຟືອຍ ເທື່ອລະເປັນລ້ານໆນັ້ນ ມັນຈະມີຫຍັງດີໄປກວ່າ ການກູ້ໜ້າລາວທັງຊາດ ດ້ວຍການປັບປຸງກິລາຂອງເຮົາ.

ການບູຣະນະ ນະຄອນຫລວງ ແລະການສົ່ງເສີມກິລາທີ່ໄດ້ກ່າວມາແລ້ວຢ່າງຍືດຍາວນີ້ ຈະສາມາດກູ້ໜ້າ ແລະລະບາຍຄວາມອາຍຂອງເຮົາໄດ້ໝົດສິ້ນບໍ່? ເປັນໄປບໍ່ໄດ້ເດັດຂາດ ກຸງໂຣມແລະປາຣີບໍ່ໄດ້ສ້າງຂຶ້ນໃນມື້ນຶ່ງຍາມດຽວ ກໍເຊັ່ນດຽວກັນກັບທີ່ເຮົາຕ້ອງກູ້ໜ້າ ຊາດຂອງເຮົາໄປເທື່ອລະນ້ອຍ ໂດຍເລີ່ມຕົ້ນຈາກຈຸດເດັ່ນໆ ທີ່ສຳຄັນ ດັ່ງທີ່ກ່າວມາແລ້ວດີກວ່າເຮົາຈະນອນນິ້ງເສີຍ ໂດຍບໍ່ມີຄວາມກະຕືລືລົ້ນ ແລະທົນທວາຍຕໍ່ຄວາມລະອາຍໃນສິ່ງທີ່ເຣິະຮ້າຍ ຊຶ່ງມີຢູ່ທົ່ວພື້ນແຜ່ນດິນຂອງເຮົາ.

ດັ່ງນີ້ເຮົາຈຶ່ງເຫັນວ່າ ຄວນຈະປັບປຸງແກ້ໄຂສອງຈຸດເດັ່ນ ຂ້າງບົນນີ້ເສັຽກ່ອນ ພໍທຸເລົາຄວາມອາຍຂອງເຮົາລົງ ບາງເລັກນ້ອຍ ແລ້ວຈຶ່ງເລີ່ມເວົ້າເຣື່ອງອື່ນໆອີກຕໍ່ໄປ.

ວັກ ໗

ການສ້າງສັນຕິພາບແລະຄວາມຖືກຕ້ອງປອງດອງຊາດ

ເສິກສົງຄາມຣະຫວ່າງລາວຕໍ່ລາວ ທີ່ຕ່າງດ້າວເປັນຜູ້ຍຸຍົງສົ່ງເສີມ ໄດ້ດອບງໍາ ແຜ່ນດິນລາວມາໄດ້ ໔໐ ກວ່າປີແລ້ວ ການທີ່ລາວເຮົາຈະຕໍ່ດ້ານ ດໍາເນີນການຂ້າຟັນລັນແທງກັນອີກຕໍ່ໄປນັ້ນ ເປັນການຂ້າຕົວຕາຍຢ່າງງົມງາຍ. ປະຊາຊົນລາວທັງຊາດ ໄດ້ອຸທິດກໍາລັງຈິດ ກໍາລັງກາຍແລະຊີວິດເພື່ອສ້າງສັນ ສັນຕິພາບເທື່ອຫລ້າສຸດນີ້ ໃຫ້ສໍາເຣັດ ປະນາມການກະທໍາ ຫລືການເຄື່ອນໄຫວຕ່າງໆ ອັນທີ່ຈະມ້າງເພ ຫລືທໍາລາຍການສ້າງສັນຕິພາບ ແລະຄວາມຖືກຕ້ອງປອງດອງຊາດເທື່ອນີ້ ຢ່າງເດັດດ່ຽວ ບົດຮຽນອັນເຈັບແສບ ທີ່ລາວທັງຊາດໄດ້ປະສົບມາຕັ້ງ ໔໐ ກວ່າປີ ໄດ້ເຮັດໃຫ້ພວກເຮົາຕ້ອງເລືອດຕາອອກ.

ຈາກປີ ໑໙໔໔ ເຖິງ ໑໙໔໙-໕໐ ນັ້ນພວກເຮົາທໍາສົງຄາມເພື່ອກູ້ເອກຣາດ ຊຶ່ງການກະທໍາດັ່ງກ່າວນີ້ ສົມຄວນທີ່ຈະໄດ້ ລັບຄວາມຍົກຍ້ອງແລະສັຣເສີນ ແຕ່ວ່າການທໍາສົງຄາມແບບລາວ ຂ້າລາວພາຍຫລັງເອກຣາດນີ້ ເປັນການກະທໍາທີ່ໄຮ້ປະໂຍດ ແລະເຫຕຜົນ ສົມຄວນແລ້ວທີ່ລາວທຸກຝ່າຍທີ່ເປັນຄູ່ປໍຣະປັກ ໄດ້ຫັນໜ້າເຂົ້າມາລ່ວມວົງສາຄະນາຍາດ ແລະເສີມ

ສ້າງ ເອກຣາດ ເອກພາບ ແລະຄວາມອຸດົມສົມບູນ ແກ່ປະເທດຊາດອັນເປັນທີ່ຫວງແຫນຂອງພວກເຮົາ ພາຍໃຕ້ພະບໍຣົມະໂພທິສົມພານ ຂອງພະຣາຊບັນລັງ ການທີ່ພວກເຮົາຈະເຊື່ອຟັງ ແຕ່ຄວາມຕົວະຍົວະຫລອກລວງຂອງຊົນຕ່າງດ້າວ ທ້າວຕ່າງແດນ ເອົາອາວຸດຖິ້ມໃສ່ມື ໃຫ້ພວກເຮົາຂ້າກັນເອງ ແລ້ວພວກເຂົາພາກັນຮັບຜົນປະໂຍດໃນທາງການເມືອງ ເສຖກິດ ສັງຄົມແລະອື່ນໆນັ້ນ ກໍມີແຕ່ຈະເຮັດໃຫ້ລາວເຮົາເດີນເຂົ້າໃກ້ກັບຄວາມ ວອດວາຍທໍ່ນັ້ນເອງ ຣາຊອານາຈັກລາວ ເປັນປະເທດທີ່ໄດ້ຮັບເອກຣາດແລ້ວ ປະຊາຊົນລາວມີເຊື້ອຊາຕ ພື້ນແຜ່ນດິນ ພາສາ ວັທນະທັມອັນດີງາມເປັນຂອງຕົວເອງ ແລະມີຄວາມສາມາດພຽງພໍ ທີ່ຈະຮັບຜິດຊອບຕໍ່ໂຊກຊາຕາ ແລະອານາຄົດຂອງຕົນ ຈຳເປັນອີຫຍັງອີກທີ່ຕ້ອງໄປຍອມຮັບໃຊ້ຄຳບົງການຈາກ ຕ່າງດ້າວຜູ້ທີ່ຫວັງ ທຳລາຍເຮົາທັງທາງກົງ ແລະທາງອ້ອມ ການທີ່ພວກລາວເຮົາເຄີຍໄດ້ສ້າງວີຣະກັມ ໃນການຫວງແຫນຊາດ ແຕ່ສມັຍອະດີດແລະເຄີຽໄດ້ເຮັດໃຫ້ ສັຕຣູຄູ່ອາຄາດຂອງເຮົາປຣາຊັຍຢ່າງເຈັບແສບມາແລ້ວ ຈົນສາມາດປົກປັກຮັກສາແຜ່ນດິນຕອນນີ້ໄວ້ເຖິງທຸກວັນ ກໍສແດງໃຫ້ເຫັນໄດ້ແລ້ວວ່າ ລາວເຮົາກໍມີ ຊັ້ນເຊີງໃນການຕໍ່ສູ້ບໍ່ນ້ອຍໜ້າໄປກວ່າປະເທດເພື່ອນບ້ານ ຫລືສັຕຣູຂອງເຮົາ. ນີ້ແລ ຄືເຫດຜົນອັນສຳຄັນທີ່ລາວເຮົາຕ້ອງຫັນໜ້າເຂົ້າສູ່ວົງສາຄນາຍາດ ຊຶ່ງສເດັດເຈົ້າສຸວັນນະພູມາ ນາຍົກຣັຖມົນຕຣີຂອງເຮົາໃນປັດຈຸບັນ ພຍາຍາມຢ່າງສຸດຂີດ ເພື່ອປະຕິບັດພາຣະກິດ ສັກສິດອັນນີ້ໃຫ້ສຳເຣັດ ສເດັດບໍ່ໄດ້ນິ້ງນອນໃຈໃນການທີ່ຈະ ລະງັບ

ເສິກເສືອອັນໄຮ້ປໂຍດ ແລະສິນທັນ ແມ່ນແຕ່ຈະປະສົບກັບຄວາມຫຍຸ້ງຍາກ ແລະຄວາມຫລົ້ມເຫລວ ສະເດັດກໍ່ບໍ່ຍອມລົດລະປະຖິ້ມ ຄວາມພຍາຍາມ ອັນນີ້.

ສເດັດໄດ້ເຄີຍສຳເຣັດຜົນເປັນເທື່ອທຳອິດ ໃນການໂຮມລາວໃນປີ ໑໙໕໗ ໂດຍໄດ້ຊັກດຶງເອົາຄນະປະເທດລາວ ເຂົ້າມາຮ່ວມອົງສາຄນາຍາດ ອັນມີຣັຖມົນຕຣີ ໒ ທ່ານຄື: ສເດັດເຈົ້າສຸພານຸວົງເປັນ ຣ.ມ.ຕ. ອຸດສາຫະກັມ ແລະພູມີ ວົງວິຈິດ ເປັນ ຣ.ມ.ຕ. ທັມມະການ ແລະສິລປະກັມ ແຕ່ບໍ່ເປັນຈັ່ງບຸນ ການໂຮມລາວຂອງສະເດັດໃນຄັ້ງນັ້ນ ຕ້ອງພັງທະລາຍລົງຢ່າງໜ້າເສັຽດາຍ ຍ້ອນວ່າກຸ່ມການເມືອງ ທີ່ແຕກປ່ອກບາງກຸ່ມຖືກຕ່າງດ້າວທ້າວຕ່າງແດນ ຍຸຍົງສົ່ງເສີມ ສ້າງສຖານະການ ໃຫ້ລາວເຮົາແຕກແຍກ ແລະຂ້າຟັນກັນຕໍ່ໄປ ເພື່ອຜົນປະໂຍດຂອງເຂົາ ພາຍຫລັງທີ່ສເດັດຖືກບີບບັງຄັບໃຫ້ສເດັດອອກຈາກຕຳແໜ່ງນາຍົກ ໃນປີ ໑໙໕໘ ເສິກລາວຂ້າລາວກໍ່ເລີ່ມຂຶ້ນອີກ ແລະທະວີຄວາມດຸເດືອດ, ຮ້າຍແຮງເປັນລະດັບຂຶ້ນສູ່ຈຸດສູງສຸດໃນປີ ໑໙໖໑ ຈົນເປັນເຫດໃຫ້ມະຫາອຳນາດທັງສອງຄ້າຍທີ່ເອົາອາວຸດໃຫ້ຮູ້ສຶກເຫັນອົກເຫັນໃຈ ຫລືຄິດເອັນດູຕົນຈຶ່ງໄດ້ຈັດໃຫ້ມີການປະຊຸມແກ້ບັນຫາລາວທີ່ເຈີແນວ ໃນວັນທີ ໑໖ ພຶສພາ ໑໙໖໑ ແລະສິ້ນສຸດລົງດ້ວຍການເຊັນສັນຍາ ຮັບຮູ້ຄວາມເປັນກາງຂອງລາວ ໃນວັນທີ ໑໒ ກໍຣະກະດາ ໑໙໖໒ ຊຶ່ງມີ ໑໔ ປະເທດ ເປັນຜູ້ລົງລາຍເຊັນຄື :

ທາງຝ່າຍໂລກເສຣີມີ :

໑ . ສຫະຣັຖອະເມຣິກາ

໓ . ອັງກິດ

໔ . ຝຣັ່ງເສດ

໕ . ການາດາ

໙ . ຣາຊອານາຈັກໄທ

໑໐ . ວຽດນາມໃຕ້

ທາງຝ່າຍສັງຄົມນິຍົມມີ :

໒ . ສຫະພາບໂຊວຽດ

໔ . ສາທາຣະນະຣັດປະຊາຊົນຈີນ

໖ . ໂປໂລຍ

໘ . ວຽດນາມເໜືອ

ຝ່າຍ ກາງ ມີ

໑໑ . ອິນເດັຽ

໑໒ . ພະມ້າ

໑໓ . ຂະເມນ

ສັນຍາຄ້ຳປະກັນຄວາມເປັນກາງຂອງຣາຊອານາຈັກລາວທີ່ເຈີແນວ ໃນປີ ໑໙໖໒ ນີ້ເປັນຜົນສທ້ອນອີກອັນນຶ່ງໃນຄວາມພຍາຍາມທີ່ຢາກໂຮມລາວຂອງສເດັດເຈົ້າສຸວັນນະພູມາ ແລະເປັນການໂຮມລາວເທື່ອທີສອງຂອງສເດັດໄດ້ຣວມເອົາລາວທັງສາມຝ່າຍ ເຂົ້າຮ່ວມວົງສາຄະນາຍາດ ດ້ວຍການປະກອບຣັຖບານປະສົມສາມຝ່າຍ, ຈຳນວນ ໑໖ ຕຳແໜ່ງໃນຣັຖບານຖືກແບ່ງປັນໃຫ້ຝ່າຍເປັນກາງ ຊຶ່ງສເດັດເອງເປັນຜູ້ນຳຈຳນວນ ໘ ບ່ອນ, ຝ່າຍຂວາ ໔ ບ່ອນ ແລະຝ່າຍແນວລາວ ໔ ທ່ານຄື ດັ່ງນີ້ :

໑ . ສເດັດເຈົ້າສຸພານຸວົງ ເປັນຮອງນາຍົກ ຣ.ມ ຕ. ເສຖກິດ

ແລະແຜນຜັງ,

໔. ທ່ານໜູມີ ວົງວິຈິດ ເປັນ ຣມຕ ແຖລງຂ່າວ ແລະ ໂຄສນາການ ແລະທ່ອງທ່ຽວ.

໕. ເຈົ້າສຸກ ວົງສັກ ເປັນ ຣ.ມ.ຕ. ຊ່ວຍໂຍທາ ແລະຂົນ ສົງ.

໖. ທ່ານຄຳເຜື່ອນ ຕຸນາລົມ ເປັນ ຣ.ມ.ຕ. ຊ່ວຍເສຖກິຈ ແລະແຜນຜັງ.

ການໂຮມລາວເທື່ອທີສອງຂອງສະເດັດນີ້ ກໍໄດ້ພົບພໍກັບບັນຫາປະເພດເກົ່າອີກ ຄືພາຍຫລັງການຕັ້ງຣັຖບານຊຸດນີ້ແລ້ວ ກໍເກີດມີການຜິດຂ້ອງຕ້ອງຖຽງກັນອີກ ໂດຍສະເພາະໃນປີ ໑໙໕໙ ການຕຶງຄຽດກໍຍິ່ງທະວີຄວາມຮຸນແຮງຂຶ້ນ. ພ.ອ. ເກສມາ ສັ່ງກັດກຳລັງຝ່າຍກາງ, ທ່ານກີນິມ ພົນເສນາ ຣັຖມົນຕຣີວ່າການກະຊວງຕ່າງປະເທດ ຂອງຣັຖບານປະສົມສາມຝ່າຍ ແລະນາຍທະຫານຜູ້ສຳຄັນອີກຫລາຍຄົນ ຖືກຄາຕະກັມ. ສເດັດເຈົ້າສຸພານຸວົງ ພ້ອມດ້ວຍຄນະໂດດກັບເຂົ້າປ່າອີກ. ການສູ້ກັນດ້ວຍກຳລັງກໍທະວີຄວາມຮ້າຍແຮງຂຶ້ນ. ການໂຮມລາວເທື່ອທີສອງນີ້ ເມື່ອວິໃຈເບິ່ງສ່ວນເລິກ ກໍເປັນເຊັ່ນດຽວກັນກັບເທື່ອທຳອິດ ຄືແຕ່ລະກຸ່ມຖືກຍົວະຍົງ ແລະຍຸແຍ່ຈາກຕ່າງດ້າວ ໃຫ້ເກາະຜິດເກາະແນ່ນກັນ ຈົນແຕກສລາຍໃນທີ່ສຸດ. ທັງນີ້ກໍເພາະວ່າປະເທດເພື່ອນບ້ານໃກ້ຄຽງຂອງເຮົາ ພຍາຍາມທຸກວິທີທາງທີ່ໃຫ້ລາວເຮົາວຸ້ນວາຍແຕກແຍກ ເພື່ອຜົນປະໂຍດໃນທາງດ້ານການເມືອງ

ການທະຫານ ແລະເສຖກິດຂອງຕົນ. ກ່າວຄືປະເທດວຽດນາມ ມີບັນຫາໃນທາງຮ່ວມວົງສາຄນາຍາດເຂົ້າເປັນອັນນຶ່ງອັນດຽວ ແລະປະເທດໄທມີບັນຫາໃນທາງປ້ອງກັນຄອມມຸນິສ ແລະອິດທິພົນທາງການຄ້າ. ສຳລັບຣາຊອານາຈັກລາວເຮົາ ກໍມີບັນຫາການສ້າງສັນຕິພາບ ແລະຄວາມຖືກຕ້ອງປອງດອງຊາດ ທຸກໆຄັ້ງທີ່ສັນຕິພາບກຳລັງຈະເລື່ອນລອຍເຂົ້າມາສູ່ກຳມື ກໍຖືກເພື່ອນມິດປະເທດ ທີ່ມີບັນຫາຊຶ່ງບໍ່ກ່ຽວກັບລາວເຂົ້າແຊກແຊງ ໃນທີ່ສຸດລາວກໍແຕກກັນຈົນໄດ້, ຍ້ອນວ່າປະເທດໃກ້ຄຽງແອບອ້າງ ຫາແຕ່ຜົນປະໂຍດຂອງຕົນ ໂດຍປາສຈາກຄວາມເມດຕາກະຣຸນາລາວ ຊຶ່ງຕ້ອງການຢາກເປັນຊາດທີ່ມີເອກຣາດ ເອກພາບ ແລະຄວາມສງົບສຸກ ດັ່ງດຽວກັນກັບບັນດາປະເທດອື່ນໆ.

ກໍຣະນີຜິດພາດຣະຫວ່າງລາວຕໍ່ລາວນີ້, ຖ້າໄປຖິ້ມຄວາມຜິດໃສ່ແຕ່ຕ່າງດ້າວ ແຕ່ຝ່າຍດຽວກໍຄົງບໍ່ຖືກ, ທັງນີ້ກໍເພາະວ່າການທີ່ຕ່າງດ້າວຈະກະທຳສິ່ງໃດລົງໄປໄດ້ ໃນດິນລາວກໍຍ້ອນລາວເຮົາເອງສົມຮູ້ຮ່ວມຄິດ ຄືເປັນຜູ້ຫູເບົາແລະໃຈໝ່ຈົນເກີນໄປ ດັ່ງນີ້ ຈຶ່ງສົມຄວນທີ່ສຸດທີ່ພວກເຮົາຕ້ອງຄຳນວນເບິ່ງຄວາມຜິດຂອງພວກເຮົາ ຢ່າງຄັກແນ່ເສັຽກ່ອນ ຈຶ່ງກ່າວປະທ້ວງຕ່າງດ້າວ ຕາບໃດເຮົາຫາກບໍ່ເປັນຕົວຂອງເຮົາເອງ ຕາບໃດຄົນໃນຊາດຫາກຂາດຄວາມສຳນຶກໃນຄວາມເປັນຊາດແລ້ວ ພວກເຮົາກໍຈະຖືກຕ່າງດ້າວຍົວະຍົງໃຫ້ພວກເຮົາ ແຕກແຍກກັນຢູ່ຢ່າງນີ້ຕລອດໄປ ເພື່ອນຮ່ວມຊາດທັງຫລາຍແສງສວ່າງແຫ່ງຄວາມຝັນ ໃນສັນຕິພາບຂອງພວກເຮົາ ໄດ້ເລີ່ມສົ່ງປະກາຍ

ແລະຣັສມີອອກມາເທື່ອໃໝ່ອີກແລ້ວ ນັ້ນກໍ່ຄື :

* ສັນຍາສັນຕິພາບ ແລະສ້າງຄວາມຖືກຕ້ອງປອງດອງຊາດລາວ ທີ່ໄດ້ເຊັນກັນເມື່ອວັນທີ່ ໒໑ ກຸມພາ ໑໙໗໓.
* ອະນຸສັນຍາຂອງສັນຍາສັນຕິພາບ ແລະສ້າງຄວາມຖືກຕ້ອງປອງດອງຊາດ ລົງລາຍເຊັນເມື່ອວັນທີ ໑໔ ກັນຍາ ໑໙໗໓.

ນີ້ຄືຊັຍຊນະຂອງປະຊາຊົນລາວໃນສົກປີ ໑໙໗໓ ແລະເປັນການໂຮມລາວເທື່ອທີສາມ ຂອງສເດັດເຈົ້າສຸວັນນະພູມາອີກ ຊຶ່ງເທື່ອນີ້ເປັນອີກເທື່ອນຶ່ງ ທີ່ລາວກັບລາວທຳຄວາມເຂົ້າໃຈກັນ ແລະໄດ້ເຊັນສັນຍາກັນຢູ່ກັບດິນລາວເອງ.

* ໂດຍອ້າງອີງເອົາຕາມບົດຮຽນໃນສອງເທື່ອກ່ອນ ຫວັງວ່າການສ້າງສັນຕິພາບແລະຄວາມຖືກຕ້ອງປອງດອງຊາດ ເທື່ອນີ້ຄົງຈະບັນລຸເຖິງຜົນສຳເຣັດ ຕາມຄວາມປາຖນາຂອງປະຊາຊົນລາວ. ການສແດງອອກເຖິງຄວາມຮູ້ສຶກໃນຄວາມເປັນລາວໃນສມັຍ ໑໙໔໕– ໑໙໕໔ ແລະ ໑໙໗໓ ຈາກລາວທຸກກ້າທຸກຝ່າຍ ໄດ້ຊີ້ບອກໃຫ້ເຫັນຢ່າງຈະແຈ້ງແລ້ວວ່າ ພວກເຮົາຮັກຄວາມສງົບສຸກ, ຮັກເຊື້ອຊາດຂອງຕົນ ແລະຮັກພືນແຜ່ນດິນອັນຄົບຖ້ວນຂອງຕົນ ແຕ່ເທົ່າທີ່ລາວເຮົາບໍ່ສາມາດເຂົ້າລວມກັນໄດ້ຢ່າງສນິດ ແລະແໜ້ນແຟ້ນຕາມທີ່ຄວນ ກໍຍ້ອນປະເທດໃກ້ຄຽງ ບາງປະເທດບີບບັງຄັບເພື່ອຜົນປະໂຍດຂອງເຂົາ. ພາຣະກິດຂອງລາວທຸກຄົນ ໃນປັດຈຸບັນນີ້ກໍ່ຄືຕ້ອງຮ່ວມມືກັນ ຊ່ວຍຊັກດຶງເອົາກຸ່ມລາວ ທີ່ຕົກຢູ່ກ້ອງແອກຂອງຕ່າງດ້າວ

ອອກໃຫ້ຫວິດຈາກຄວາມເປັນທາດແບບໃໝ່ອັນນີ້ທັນທີ ບໍ່ດັ່ງນັ້ນການຮ່ວມວົງສາຄະນາຍາດຂອງເຮົາ ກໍຈະພັງທະລາຍລົງດັ່ງກັບທີ່ເຄີຍເປັນມາແລ້ວ.

ເຊື່ອແນ່ວ່າ ລຳພັງແຕ່ລາວເຮົາເອງແລ້ວ ຄົງຈະບໍ່ມີການວິວາດຜິດຖຽງກັນ ຈົນເກີດເປັນເສິກການເມືອງ, ເພາະພວກເຮົາບໍ່ໄດ້ມີຂໍ້ຂັດແຍ້ງກັນໃນທາງລັດທິ, ລາວທຸກກ້າທຸກຝ່າຍກໍຍັງຈົງຮັກພັກດີຕໍ່ຊາດ ແລະຣາຊບັນລັງຢູ່. ຖ້າທຽບໃສ່ກັບມິດປະເທດ ເພື່ອນບ້ານທີ່ທຳສົງຄາມທາງລັດທິ ຊຶ່ງມີແນວທາງແລະອຸດົມການແຕກຕ່າງກັນເປັນຄົນລະແນວ ຈົນໄດ້ແບ່ງແຍກຊາດ ແລະຜືນແຜ່ນດິນອອກເປັນ ໒ ຄ້າຍ ປົກຄອງດ້ວຍຣະບົບການເມືອງແຕກຕ່າງກັນ ແລະເປັນຄູ່ກໍຣະນີພິພາດກັນຕລອດມາ ເຊັ່ນປະເທດເຢັຽຣະມັນ, ເກົາຫລີ ແລະວຽດນາມ ຊຶ່ງເປັນເພື່ອນບ້ານເຮົາເອງ ແລະໄດ້ຮັບເອກຣາດໃນທ່າມອງດຽວກັນກັບເຮົາ. ວຽດນາມເປັນປະເທດນຶ່ງທີ່ເກີດເສິກສົງຄາມ ແລະວິວາດຜິດຖຽງກັນຢ່າງຮ້າຍແຮງ, ເລີ້ມແຕ່ ໑໙໕໔ ເປັນຕົ້ນມາ ທົ່ວໂລກໄດ້ວິພາກວິຈານ, ຫວັ່ນວິຕົກ ແລະກ່າວປະນາມຄວາມຮ້າຍກາດ ທີ່ເຜົາຜານແຜ່ນດິນຕອນນີ້ບໍ່ໄດ້ເວັ້ນແຕ່ລະວັນ. ນັບວ່າບັນຫາວຽດນາມ ເປັນຈຸດຮ້ອນທີ່ສຸດຂອງໂລກ. ຄວາມດຸເດືອດໃນການຂ້າຟັນລັນແທງໄດ້ຟົດເດືອດທົ່ວແຜ່ນດິນ, ມະຫາອຳນາດທັງສອງຄ້າຍ ໄດ້ເລີ້ມໃກ່ເກັ້ຽກັນ ນິກສັນຢ້ຽມຢາມປັກກິ່ງ ເດືອນກຸມພາ ໑໙໗໒ ແລະມູສກູ ໃນເດືອນມິຖຸນາ ໑໙໗໒) ການເຈຣະຈາທີ່ປາຣີ ເພື່ອແກ້ໄຂບັນຫາວຽດນາມ ກໍໄດ້ບັນລຸຜົນສຳເຣັດ ດ້ວຍການເຊັນສັນຍາສງົບເສິກ ເມື່ອວັນທີ ໒໗ ເດືອນ

ກໍຣະກະດາ ໑໙໗໓ ເປັນອັນວ່າໂລກທັງໂລກຕ້ອງໂລ່ງໃຈ ແລະເອົາໃຈຊ່ວຍຕໍ່ຜົນສຳເຣັດອັນນີ້ ຢ່າງພ້ອມພຽງບໍ່ວ່າຈະເປັນຄ້າຍສັງຄົມນິຍົມ ຫລືໂລກເສຣີ.

ແຕ່ວ່າສັນຍາສບັບນີ້ ບໍ່ໄດ້ຖືກປະຕິບັດໄປຕາມຄວາມມຸ້ງຫວັງຂອງມັນເລີຍ, ໂດຍສະເພາະຢ່າງຍິ່ງ ຄູ່ພິພາດພາຍໃນ (ວຽດນາມໃຕ້, ວຽດນາມເໜືອ ແລະວຽດກົງ) ຍັງຄົງຣະເມີດສັນຍາ ທີ່ເຊັນກັນໄປແລ້ວເລື້ອຍໆມາ, ທັງສອງຄ້າຍຕ້ອງດຳເນີນການປະທັດປະຫານກັນຕໍ່ໄປອີກຢ່າງບໍ່ລົດລະ. ຄວາມພຍາຍາມທີ່ຈະເອົາຊນະກັນ ດ້ວຍກຳລັງພາຍຫລັງການເຊັນສັນຍາ ສງົບເສິກ ຊຶ່ງມີຜົນບັງຄັບໃຊ້ແຕ່ວັນທີ່ ໒໘ ກໍຣະກະດາ ໑໙໗໓ ໄດ້ປາກົດການຮ້າຍແຮງຍິ່ງຂຶ້ນທຸກວັນ. ການເສັຍຫາຍທັງສອງກ້າສອງຝ່າຍທາງຊີວິດ ແລະຊັບສິນ ພາຍໃນ ໑໑ ເດືອນຫລັງຈາກການຢຸດຍິງໄດ້ປາກົດຜົນດັ່ງນີ້: ການລະເມີດຢຸດຍິງທີ່ວຽດນາມໃຕ້ ບັນທຶກໄວ້ໄດ້ກວ່າ ມີ໒.໐໐໐ ເທື່ອ. ທະຫານວຽດນາມໃຕ້ເສັຽຊີວິດ ໑໓.໗໘໖ ຄົນ ບາດເຈັບ ໔໙. ໘໙໙ ຄົນ, ຫາຍສາບສູນ ໔.໓໔໑ ຄົນ ແລະຈັບສເລີຍເສິກຄອມມຸນິດໄດ້ ໔.໖໑໔ ຄົນ. ສ່ວນຝ່າຍກົງກັນຂ້າມຖືກຂ້າຕາຍ ໔໑ ໔໑໖ ຄົນ ວຽດກົງປະທ້ວງການລະເມີດຢຸດຍິງ ວ່າມີຫລາຍກວ່າ ມີ໐໐.໐໐໐ ເທື່ອ.

ພົລເຮືອນຜູ້ບໍ່ມີຄວາມຜິດ ຕ້ອງເສັຽຊີວິດກວ່າ ໒.໐໐໐ ຄົນ, ບາດເຈັບ ໔.໔໐໐ ກວ່າຄົນ ແລະຖືກລັກພາຕົວເຖິງ ໒.໐໐໐ ຄົນ.

ວຽດນາມເໜືອສົ່ງກຳລັງ ລົງສູ່ວຽດນາມໃຕ້ເຖິງ ໑໐໐.໐໐໐ ຄົນ

ຣົຖຖັງ ໖໐໐ ຄັນ ແລະປືນໃຫຍ່ ໖໐໐ ບອກ. ໂດຍອ້າງອີງຕາມຕົວເລກທີ່ກ່າວ ຂ້າງເທິງນີ້ ກໍ່ຮູ້ແລ້ວວ່າ ບັນຫາວຽດນາມ ຄົງຈະແກ້ໄຂ ບໍ່ຕົກໄປໃນມື້ນີ້ ຫລືມື້ອື່ນ ແລະເປັນຕົວຢ່າງອັນບໍ່ດີ ສຳລັບນຳເອົາມາລຽນແບບ ໃນດິນລາວ. ວຽດນາມທັງເໜືອ ແລະໃຕ້ ມີສັມພັນທາງທູດ ຢ່າງແໜ້ນແຟ້ນ ກັບຣາຊອານາຈັກລາວ ແຕ່ມີຖານະໃນທາງພູມີສາດ, ການເມືອງ ແລະການປົກຄອງ ແຕກຕ່າງກັນເຫລືອທີ່ສຸດ. ມັນເປັນການສະແດງອອກໃຫ້ເຫັນຄວາມໂງ່ງ່າວ ອັບປັນຍາຂອງຄົນກຸ່ມນຶ່ງ ທີ່ໄດ້ຊັກດຶງເອົາຣາຊອານາຈັກລາວ ຂອງເຮົາໄປຫຍຸ້ງກ່ຽວ ແລະພົວພັນກັບການແກ້ບັນຫາ ຂອງວຽດນາມ. ທັງນີ້ ກໍເພາະວ່າ ຣາຊອານາຈັກລາວມີເອກຣາດ ເອກພາບແລະຄວາມເປັນກາງ ຢ່າງເຕັມສ່ວນ ແລ້ວຈຳເປັນຫຍັງຕ້ອງໄປກ່ຽວຂ້ອງກັບເຣື່ອງຂອງຄົນອື່ນ ທັງໆທີ່ວ່າລາວເຮົາມີນະໂຍບາຍເປັນກາງ. ເປັນປະເທດນ້ອຍ ແລະດ້ອຍພັທນາ ຖ້າຈະເອົາອີກແນວນຶ່ງ ກໍຄືວ່າ ໄຟໃຫມ້ບ້ານໂຕ ໄປນອນໂສຍູ່ບ້ານຫມູ່ ມັ້ນມັນສົມຄວນແລ້ວບໍ່? ປະຊາຊົນລາວຜູ້ຮັກຊາດທຸກຄົນ ຮູ້ດີວ່າ ພວກທ່ານຖືກບີບບັງຄັບ ໃຫ້ກະທຳຕາມຄວາມປະສົງຂອງເຂົາ ແລະທ່ານເອງຕ້ອງຂົມໃຈປະຕິບັດ ຍ້ອນວ່າທ່ານຕິດໜີ້ບຸນຄຸນຂອງເຂົາ ແຕ່ວ່າໜີ້ທີ່ທ່ານໄດ້ສ້າງໄວ້ນັ້ນ ມັນບໍ່ມີປໂຍດອັນໃດທັງໝົດແກ່ຣາຊອານາຈັກລາວ ນອກຈາກຄວາມດັບອາຍ. ການທີ່ເຂົາເຈົ້າໄດ້ທຸ້ມເທລູກກະສຸນ, ລູກລະເບີດ, ອາວຸດຮ້າຍຕ່າງໆ ພັສດຸສົງຄາມ ແລະສິ່ງກຳລັງເຂົ້າມາຊ່ວຍທ່ານນັ້ນ ອາດຕົກເປັນເງິນຫລາຍໆໂກດ ແລະເປັນການ

ໃຊ້ຈ່າຍທີ່ແພງທີ່ສຸດ ຂອງເຂົາ, ແຕ່ວ່າມັນເປັນອາວຸດ ແລະກຳລັງ ສຳລັບສົ່ງເຂົ້າມາຂ້າພວກເຮົາເອງ, ມາທຳລາຍພື້ນຖານປະເທດຊາດຂອງເຮົາ, ແລະມຸ້ງຫວັງຍາກດັບສູນຄົນລາວຂອງເຮົາ ເພື່ອຊອກຫາໂອກາດຍຶດເອົາພືນແຜ່ນດິນຂອງເຮົາໄປເປັນຂອງເຂົາ.

ນີ້ແລ ! ຄືພົນສະທ້ອນມາຈາກການຊ່ວຍເຫລືອ ຂອງບັນດາປະເທດທີ່ມຸ້ງຫວັງທຳລາຍລາວຢ່າງເລືອດເຢັນ ຊຶ່ງລາວຜູ້ຫລົງຜິດ ກຳລັງຖືວ່າເປັນການຊ່ວຍເຫລືອທີ່ດີ ແລະຍອມເປັນຫມີ້ຜູ້ຮ້າຍ ທີ່ຫວັງທຳລາຍຕົວເອງ

ດັ່ງນີ້ ປະຊາຊົນລາວຜູ້ຮັກຊາດທຸກຄົນ ຈຶ່ງຮຽກຮ້ອງມາຍັງລາວທຸກກ້າທຸກຝ່າຍ ທີ່ຫລົງຜິດ ຈົ່ງໄດ້ພຍາຍາມຕື່ນຕົວ ອອກຫ່າງຄົນຕ່າງດ້າວທ້າວຕ່າງແດນ ທີ່ກຳລັງຫລອກລວງ, ຍຸຍົງ ແລະຈອບອອຍໃຫ້ທ່ານແຕກປອກ. ກ່ອນທີ່ມັນຈະຫລ້າສວຍຈົນເກີນໄປ ຂໍໃຫ້ພວກເຮົາຫັນຫນ້າເຂົ້າມາສ້າງ ຄວາມເປັນຊາດໃຫ້ຫມັ້ນຄົງ. ປັດຈຸບັນ ຊາດຂອງເຮົາກຳລັງຮ້ອງໃຫ້ ແລະລໍຖ້າການລ່ວມມືຈາກທ່ານ ຈົນໃຈເກືອບຈະຂາດຢູ່ແລ້ວ, ທ່ານຈະນິ້ງເສີຍຢູ່ໄດ້ ແລະບໍ່ມີຄວາມຮູ້ສຶກ ເມຕຕາຊາດຂອງເຮົາ ກໍ່ເທົ້າກັບທ່ານທໍຣະຍົດຕໍ່ຊາດ ແລະພືນແຜ່ນດິນອັນເປັນສິ່ງ ທີ່ມີບຸນຄຸນ ຢ່າງຫາອັນປຽບບໍ່ໄດ້.

ແຜ່ນດິນຕອນນີ້ແລ ຄືພູມລຳເນົາອັນແທ້ຈິງຂອງພວກເຮົາ, ໃຫ້ກຳເນີດເຮົາ, ລ້ຽງດູເຮົາ, ເປັນສົມບັດຂອງເຮົາ, ເຮົາມີສິດຈັບຈ່ອງແລະຄອບຄອງເປັນອານາຈັກ ຂອງພວກເຮົາມາ ແຕ່ດຶກດຳບັນ ນີ້ແລ ຄື

ໜີ້ຕົວຈິງ ທີ່ລາວເຮົາທຸກຄົນຕ້ອງລັບໃຊ້,

* ໃນຂນະທີ່ ລາວທຸກກ້າທຸກຝ່າຍ ກຳລັງອວ່າຍໜ້າເຂົ້າຫາກັນ ມັນເປັນໂອກາດທີ່ຫາໄດ້ຍາກສຳລັບເຮົາ ທີ່ຕ້ອງແລ່ນມາປູ້ມລຸມ ສ້າງສັນຕິພາບ, ເອກຣາດ ແລະອະທິປະໄຕຂອງເຮົາໃຫ້ຍືນຍົງ. ການສ້າງສັນຕິພາບຂອງລາວ ໃນເທື່ອນີ້ ໄດ້ຣັບຄວາມປີຕິຍິນດີ ແລະການສົ່ງເສີມທັງທາງພາຍໃນ ແລະພາຍນອກ, ຈຶ່ງຂໍໃຫ້ລາວທຸກຝ່າຍ ໃຊ້ຄວາມຈິງໃຈ ສ້າງສັນຕິພາບເທື່ອນີ້ໃຫ້ສຳເຣັດ. ລາວຈະໄດ້ເປັນປະເທດທຳອິດຂອງໂລກ ທີ່ພາຍຫລັງການຕໍ່ສູ້ກັນດ້ວຍກຳລັງ ໄດ້ເຂົ້າຮ່ວມເປັນອັນນຶ່ງອັນດຽວ. ເພາະວ່າຄວາມຂັດແຍ້ງຣະຫວ່າງລາວຕໍ່ລາວ ເປັນບັນຫາພຽງສ່ວນດຽວ ໃນການແກ້ໄຂບັນຫາ, ລາວຈຶ່ງສາມາດລົງລອຍ ແລະເຫັນພ້ອມກັນວ່າ ປະເທດຊາດຈະຕ້ອງສຖິດຢູ່ເໜືອສິ່ງໃດໆທັງສິ້ນ. ມັນເປັນຜົນສະທ້ອນມາຈາກຄວາມຮູ້ສຶກໃນເຣື່ອງຊາດຢ່າງນຶ່ງ ທີ່ລາວທຸກໆຝ່າຍ ກຳລັງສແດງອອກມາສູ່ໂລກ, ແລະຊີ້ໃຫ້ສັຕຣູຂອງເຮົາເຫັນວ່າ ເລືອດລາວທີ່ແຕກກະຈັດກະຈາຍມາດົນນານແລ້ວ ກຳລັງເລື່ອນລອຍເຂົ້າມາທ້ອນໂຮມກັນ ເປັນພລັງອຳນາດອັນເຂັ້ມແຂງ, ເພື່ອໄວ້ເປັນຕົວຢ່າງອັນດີແກ່ເຍົາວະຊົນລາວໃນຍຸກຕໍ່ໄປ ແລະຖືວ່າເປັນການສ້າງວິຣະກັມອັນຍິ່ງໃຫຍ່ ແກ່ຣາຊອານາຈັກລາວໃນສັດວັດ.

* ເຖິງແມ່ນວ່າ ການຈັດຕັ້ງຣັຖບານ ປະສົມຊື່ວຄາວແຫ່ງຊາດ ທ່ານກາງການລໍຄອຍ ຂອງລາວທັງຊາດຈະບໍ່ທັນສຳເຣັດໄວທັນໃຈ ຍ້ອນບັນ

ຫາປົກຍ່ອຍເລັກນ້ອຍກໍຕາມ, ປະຊາຊົນລາວທັງຊາດ ເຊື່ອແນ່ວ່າຈະຕ້ອງ ບັນລຸຜົນສຳເຣັດ ຢ່າງແນ່ນອນ ແລະຫວັງວ່າລາວທຸກຝ່າຍ ຈະໃຊ້ຄວາມ ພຍາຍາມຫາຫົນທາງ ຕົກລົງກັນໄດ້ໃນໄວໆນີ້.

ການຈັດຕັ້ງຣັຖບານປະສົມແຫ່ງຊາດເທື່ອນີ້ ບໍ່ສຳເຣັດລົງໃນເວລາ ອັນສັ້ນ ຢ່າງທັນໃຈນັ້ນ ກໍຍ້ອນວ່າທຸກຝ່າຍຕ້ອງໃຊ້ ຄວາມຮອບຄອບ ແລະອົດທົນກ່ອນຈະຕັດສິນໃຈ ແລະລົງມືປະຕິບັດ ທັງນີ້ກໍເພື່ອຫລີກເວັ້ນ ຈາກ ເຫດຮ້າຍນາໆປະການ ອັນທີ່ອາດເກີດຂຶ້ນຈາກຄວາມເລີນເລີ້ ແລະ ມັກງ່າຍຈົນເກີນໄປ. ສະນັ້ນ ຈຶ່ງຂໍໃຫ້ລາວຜູ້ຮັກສັນຕິພາບ ຈົ່ງອົດໃຈລໍຖ້າ ອີກຕໍ່ໄປ ເຊື່ອແນ່ວ່າ ຄວາມສງົບສຸກຄົງຈະເປັນຂອງພວກເຮົາໃນອະນາຄົດ ອັນໃກ້ນີ້

ດັ່ງນີ້ ໜ້າທີ່ຂອງພວກເຮົາທີ່ຄວນປະຕິບັດໃນຂັ້ນຕໍ່ໄປ ກໍຄື ປ້ອງກັນສັນຕິພາບຂອງເຮົາ ເທື່ອນີ້ໄວ້ບໍ່ໃຫ້ແຕກສລາຍເຫມືອນດັ່ງ ໔ ເທື່ອ ທຳອິດ. ທຸກຄົນຈະຕ້ອງປະຕິບັດຕົນ ໃຫ້ເປັນພົລເມືອງດີຂອງຊາດ, ຮ່ວມ ໄມ້ຮ່ວມມື ແລະສນັບສນຸນ ເຈົ້າໜ້າທີ່ຝ່າຍຣັຖບານ ດ້ວຍການຊ່ວຍເປັນ ຫູເປັນຕາສອດແນມເບິ່ງວິທີການ ປອງທຳລ້າຍທີ່ມາຈາກພາຍນອກ. ພວກ ເຮົາຈະຕ້ອງໝັກແໜ້ນ ແລະຍຶດໝັ້ນຢູ່ໃນເອກຣາດ, ເອກພາບ ແລະ ຄວາມໝັ້ນຄົງ ຂອງເຮົາຢ່າງເດັດດ່ຽວ. ຢ່າໄດ້ລັ່ງເລ, ເບົາໃຈ ແລະເຊື່ອ ຟັງຄວາມໂຄສະນາ, ຫລອກລວງທີ່ມຸ້ງຫວັງ ໃຫ້ພວກເຮົາແຕກແຍກກັນອີກ. ປະວັດສາດຮ້າຍໄດ້ເຄີຍຊ້ຳຮອຍມາຫລາຍຄັ້ງຕໍ່ຫລາຍແລ້ວ ຈົນພວກເຮົາເບື່ອ

ຫມ່າຍຕໍ່ ເຫດຮ້າຍອັນບໍ່ເພິ່ງປາຖນາເຫລົ່ານັ້ນມາພໍແຮງແລ້ວ. ຖ້າທຸກຄົນສລະຖິ້ມຄວາມເຫັນແກ່ຕົວ ຈົນລືມຊາດ, ບໍ່ຍອມຮັບສິນຈ້າງຈອບອອຍຈາກຕ່າງດ້າວ ທີ່ຫວັງມ້າງເພການສ້າງສັນຕິພາບຂອງເຮົາ ແລະລະຖິ້ມຄວາມຫູເບົາໃຈ ງ່າຍເຊື່ອແນ່ວ່າ ການສ້າງສັນຕິພາບຂອງລາວເທື່ອນີ້ ຄົງສຳເຣັດ, ຫມັ້ນຄົງ ແລະວັທນາຖາວອນ ຕລອດຊົ່ວກາລນານ ຢ່າງບໍ່ຕ້ອງສົງສັຍ.

ແ ປ ງ ຄ ວ າ ມ ຜິ ດ

-:-:-:-:-:-:-:-

ວັກທີ ກ: ໜ້າ ໑໒໑ ແລະໜ້າ ໑໒໒.

ຄນະຣັຖມົນຕຣີ ແລະຣັຖມົນຕຣີຊ່ວຍວ່າການ ຝ່າຍແນວລາວຮັກຊາດ ໃນຣັຖບານປະສົມ ທີ່ປະກອບຂຶ້ນຕາມສັນຍາເຊີແນວ ວັນທີ ໒໓ ມິຖຸນາ ໑໙໖໒ ນັ້ນ ເຮົາແຈ້ງໄວ້ວ່າ :

໑* ສະເດັດເຈົ້າສຸພານຸວົງ ເປັນຮອງນາຍົກ ແລະ ຣ.ມ.ຕ.ເສຖກິດ ແລະແຜນຜັງ.

໒* ທ່ານ ພູມີ ວົງວິຈິດ ເປັນ ຣ.ມ.ຕ. ແຖລງຂ່າວ ໂຄສະນາການ ແລະທ່ອງທ່ຽວ.

໓* ເຈົ້າສຸກ ວົງສັກ ເປັນ ຣ.ມ.ຕ. ຊ່ວຍໂຍທາ ແລະຂົນສົ່ງ.

໔* ທ່ານຄຳເຜີ່ອນ ຕຸນາລົມ ເປັນ ຣ.ມ.ຕ. ຊ່ວຍເສຖກິດ ແລະແຜນຜັງ.

<u>ເຫັນວ່າຍັງບໍ່ຄົບຕາມຈຳນວນ ຈຶ່ງຂໍເພີ້ມອີກດັ່ງນີ້</u> :

໕* ດຣ. ຄຳສຸກ ແກ້ວລາ ຣ.ມ.ຕ. ສາທາຣະນະສຸກ ແລະ

໖* ທ່ານ ຄຳເພັງ ບຸບຜາ ຣ.ມ.ຕ. ຊ່ວຍປັບປຸງໝູ່ບ້ານ.

ຄື : ເປັນຣັຖມົນຕຣີ ໓ ທ່ານ (໔ ຕຳແໜ່ງ), ແລະ ຣ.ມ.ຕ. ຊ່ວຍວ່າການ ໓ ທ່ານ ຮວມທັງໝົດ ໖ ທ່ານ.

ຈຶ່ງຮຽນມາໃຫ້ຊາບຕາມນີ້ ແລະຫວັງວ່າ ທ່ານຜູ້ອ່ານຄົງໃຫ້ອາພັຍໂທດ ແກ່ຂ້າພະເຈົ້າດ້ວຍ.